# ພຣະທັມເອເຊກຽນ



| | | | | | | | |
|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 |
| 9 | 10 | 11 | 12 | 13 | 14 | 15 | 16 |
| 17 | 18 | 19 | 20 | 21 | 22 | 23 | 24 |
| 25 | 26 | 27 | 28 | 29 | 30 | 31 | 32 |
| 33 | 34 | 35 | 36 | 37 | 38 | 39 | 40 |
| 41 | 42 | 43 | 44 | 45 | 46 | 47 | 48 |



## ເອເຊກຽນ

EZEKIEL

### 1 ເອເຊກຽນເຫັນພຣະຣາຊບັນລັງຂອງພຣະເຈົ້າທາງນິມິດ

The Vision of the Chariot

1 ເມື່ອວັນທີຫ້າ ເດືອນສີ່ປີທີສາມສິບ ຂນະທີ່ຂ້າພະເຈົ້າຢູ່ກັບພວກຊະເລີຍຊາວຢູດາ ທີ່ແມ່ນ້ຳເຄບາຣ໌ ໃນປະເທດບາບິ
ໂລນ ທ້ອງຟ້າໄດ້ຍະອອກ ແລ້ວຂ້າພະເຈົ້າກໍເຫັນພຣະເຈົ້າທາງນິມິດ
2 ໃນເວລານັ້ນພໍດີກົງກັບເວລາທີ່ກະສັດເຢຣີວອາຄິນຖືກຈັບໄປເປັນຊະເລີຍໄດ້ຫ້າປີ
3 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າຄື ເອເຊກຽນບຸດຂອງປະໂຣຫິດບູຊີ ຢູ່ແຄມແມ່ນ້ຳເຄບາໃນປະເທດບາບິໂລນ
ໃນທີ່ນັ້ນຣິດທານຸພາບຂອງພຣະອົງໄດ້ຖືກຕ້ອງຕົວຂ້າພະເຈົ້າ
4 ຂ້າພະເຈົ້າໄດ້ເງີຍຫນ້າຂຶ້ນ ແລ້ວເຫັນລົມພະຍຸພັດມາແຕ່ທາງເຫນືອ ມີແສງສວ່າງສ່ອງຮຸ່ງເຮືອງອອກມາຈາກ
ເມກກ້ອນໃຫຍ່ ແລະທ້ອງຟ້າກໍລຸກເປັນໄຟອ້ອມຮອບເມກນັ້ນ ຢູ່ທີ່ນັ້ນແສງສວ່າງສ່ອງແສງເຫລື້ອມເຫມືອນທອງສຳ
ຣິດໃນຖ້າມກາງພະຍຸນັ້ນ
5 ຂ້າພະເຈົ້າໄດ້ເຫັນສິ່ງນຶ່ງເຫມືອນສັດສີ່ຕົວ ມັນມີຮູບຮ່າງເຫມືອນມະນຸດ
6 ແຕ່ລະຕົວມີສີ່ຫນ້າ ແລະສີ່ປີກ ຂາຂອງມັນຊື່ ແຕ່ຕີນຂອງມັນມີເລັບເຫມືອນເລັບງົວ
7 ສັດທັງສີ່ນັ້ນມີແສງເຫລື້ອມເຫມືອນທອງສຳຣິດ
8 ຢູ່ລຸ່ມປີກທັງສີ່ຂອງມັນ ຍັງມີມືສີ່ມືເຫມືອນມືມະນຸດ
9 ປີກທັງສອງຂອງແຕ່ລະຕົວ ໄດ້ພືອອກໄປຈຸກັນກັບປີກສັດຕົວອື່ນເປັນຮູບສີ່ຫລ່ຽມ ແລ້ວບິນໄປທາງດຽວກັນໂດຍບໍ່
ຫັນເຫໄປຕ່າງທິດທາງກັນ
10 ຫນ້າທັງສີ່ຂອງສັດແຕ່ລະຕົວບໍ່ຄືກັນ ຄືຫນ້າຢູ່ຂ້າງຫນ້າເຫມືອນມະນຸດ ຫນ້າຂ້າງຂວາເຫມືອນຫນ້າສິງ ຫນ້າຂ້າງ
ຊ້າຍເຫມືອນຫນ້າງົວ ແລະຫນ້າຂ້າງຫລັງເຫມືອນຫນ້ານົກອິນຊີ
11 ປີກທັງສອງຂອງສັດແຕ່ລະຕົວພືອອກໄປຈຸກັບປາຍປີກຂອງຕົວອື່ນ ແລະອີກປີກສອງປີກໄດ້ປົກຫຸ້ມຕົວມັນໄວ້
12 ສັດທຸກຕົວໄດ້ປິ່ນຫນ້າໄປສູ່ທິດທັງສີ່ ເມື່ອມັນປະສົງຈະໄປທາງໃດ ກໍບິນໄປພ້ອມກັນບໍ່ປິ່ນຫນ້າໄປທາງອື່ນເລີຍ
13 ຢູ່ໃນສັດເຫລົ່ານັ້ນ ມີສິ່ງນຶ່ງເບິ່ງຄ້າຍຄື ໂຄມໄຟເຄື່ອນໄຫວຢູ່ເປັນນິດ ເປັນສຸກໃສ ແລະມີແສງຟ້າແມບເຫລື້ອມ
14 ສັດເຫລົ່ານັ້ນພຸ່ງໄປມາເຫມືອນຟ້າແມບເຫລື້ອມ
15 ຂນະທີ່ຂ້າພະເຈົ້າຫລຽວເບິ່ງສັດທັງສີ່ຕົວນັ້ນ ຂ້າພະເຈົ້າໄດ້ເຫັນກົງລໍ້ສີ່ອັນຢູ່ເທິງດິນແປະຢູ່ຂ້າງສັດແຕ່ລະຕົວ
16 ລໍ້ແຕ່ລະອັນສ່ອງແສງເຫມືອນເພັດເບິ່ງເຫມືອນກັນຫມົດທັງສີ່ລໍ້ ແຕ່ລະລໍ້ມີລໍ້ອີກອັນນຶ່ງຕັດຜ່ານທາງກາງ

17 ເພື່ອວ່າພວກມັນຈະຍ້າຍໄປໄດ້ໃນທຸກທີ່ທຸກທາງ
18 ແລະລໍ້ນັ້ນໃຫຍ່ເປັນຕາຢ້ານ ມີໜ່ວຍຕາຕິດຢູ່ອ້ອມຮອບ
19 ເມື່ອໃດສັດເຫລົ່ານັ້ນຍ້າຍໄປ ລໍ້ກໍຍ້າຍໄປນຳ ເມື່ອສັດນັ້ນເຫາະຂຶ້ນຈາກພື້ນດິນ ລໍ້ກໍເຫາະຂຶ້ນນຳ
20 ເມື່ອສັດເຫລົ່ານັ້ນໄປທີ່ໃດ ລໍ້ກໍໄປນຳທັນທີ ເພາະວ່າສັດເປັນຜູ້ຄວບຄຸມລໍ້
21 ທຸກໆເວລາທີ່ສັດນັ້ນເຄື່ອນຍ້າຍໄປ ເມື່ອຢຸດເຊົາຫລືເຫາະຂຶ້ນເທິງອາກາດ ລໍ້ກໍເຄື່ອນຍ້າຍໄປນຳທັນທີ
22 ຢູ່ເທິງຫົວຂອງສັດມີສິ່ງນຶ່ງເບິ່ງຄ້າຍຍອດຊໍ່ຟ້າແກ້ວຜລຶກສີສຸກໃສຢູ່ລຸ່ມຍອດຊໍ່ຟ້ານັ້ນ
23 ສັດແຕ່ລະຕົວໄດ້ພືສອງປີກອອກໄປຈຸກັບປາຍປີກຕົວອື່ນ ແຕ່ອີກສອງປີກໄດ້ປົກຫຸ້ມຕົວມັນໄວ້
24 ເມື່ອສັດເຫລົ່ານີ້ບິນໄປ ຂ້າພະເຈົ້າໄດ້ຍິນສຽງປີກຂອງມັນດັ່ງເຫມືອນສຽງຄື້ນທະເລ ເຫມືອນສຽງກອງທັບໃຫຍ່ເດີນ
ໄປ ແລະເຫມືອນພຣະສຸຣະສຽງຂອງພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່
25 ເມື່ອພວກມັນເຊົາບິນມັນກໍຫຸບປີກໄວ້ ແຕ່ຍັງມີສຽງອີກຢ່າງນຶ່ງດັງມາຈາກຍອດຊໍ່ຟ້າເຫນືອຫົວຂອງສັດນັ້ນ
26 ຢູ່ເທິງຍອດຊໍ່ຟ້າ ມີສິ່ງນຶ່ງເບິ່ງຄ້າຍບັນລັງແກ້ວນໍຣະກົດ ແລະມີຮູບຮ່າງອັນນຶ່ງເບິ່ງຄືມະນຸດນັ່ງຢູ່ເທິງບັນລັງ
27 ເທິງແອວຂອງຮູບຮ່າງນັ້ນສ່ອງແສງເຫລື້ອມເຫມືອນທອງສຳຣິດຢູ່ໃນກາງກອງໄຟ ແລະລຸ່ມແອວລົງມາມັນສ່ອງແສງ
ເຫລື້ອມເຫມືອນໄຟໄປທົ່ວທຸກແຫ່ງ
28 ລັກສະນະແສງສວ່າງນີ້ສ່ອງແສງເຫມືອນຮຸ້ງກິນນໍ້າຢູ່ໃນເມກເມື່ອຝົນຕົກ ລັກສະນະແຫ່ງພຣະຣັສມີຄວາມຍິ່ງໃຫຍ່
ຂອງພຣະຜູ້ເປັນເຈົ້າເປັນດັ່ງນີ້ແຫລະ ແລະເມື່ອຂ້າພະເຈົ້າເຫັນແລ້ວ ຂ້າພະເຈົ້າກໍກົ້ມຫນ້າລົງເຖິງດິນ ແລະຂ້າພະ
ເຈົ້າໄດ້ຍິນສຽງທ່ານຜູ້ນຶ່ງກ່າວ

## 2 ການຊົງເອີ້ນເອເຊກຽນ

The Vision of The Scroll

1 ພຣະອົງກ່າວກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ຢືນຂຶ້ນ ເຮົາຈະເວົ້າກັບເຈົ້າ”
2 ແລະເມື່ອພຣະອົງກ່າວກັບຂ້າພະເຈົ້າພຣະວິນຍານໄດ້ເຂົ້າໄປໃນຂ້າພະເຈົ້າແລະຕັ້ງຂ້າພະເຈົ້າໃຫ້ຢືນຂຶ້ນ ແລະຂ້າ
ພະເຈົ້າໄດ້ຍິນ ພຣະອົງນັ້ນຜູ້ກ່າວກັບຂ້າພະເຈົ້າ
3 ແລະພຣະອົງກ່າວແກ່ຂ້າພະເຈົ້າວ່າ, “ມະນຸດເອີຍ, ເຮົາຈະສົ່ງເຈົ້າໄປຫາອິສຣາເອນ ຜູ້ເປັນກະບົດຕໍ່ສູ້ເຮົາ ພວກເຂົາ
ຍັງເປັນກະບົດເຊັ່ນດຽວກັບບັນພະບຸຣຸດຂອງເຂົາເທົ່າທຸກວັນນີ້
4 ພວກເຂົາເປັນຄົນຫົວດື້ ແລະບໍ່ໂຄຣົບນັບຖືເຮົາ ເຮົາຈະສົ່ງເຈົ້າໄປບອກສິ່ງທີ່ເຮົາຈະເວົ້າກັບເຂົາ
5 ພວກເຂົາຈະຟັງຫລືບໍ່ຟັງກໍຕາມ ແຕ່ເຂົາກໍຈະຮູ້ວ່າ ມີຜູ້ປະກາດພຣະທັມຄົນນຶ່ງຢູ່ຖ້າມກາງເຂົາ
6 ແຕ່ເຈົ້າຜູ້ເປັນມະນຸດເອີຍ, ຢ່າຢ້ານເຂົາຫລືຢ້ານສິ່ງທີ່ເຂົາເວົ້າ ເຖິງແມ່ນເຂົາຈະເປັນເຫມືອນຫນາມປິດລ້ອມເຈົ້າ
ແລະເປັນເຫມືອນແມງງອດຢູ່ອ້ອມຮອບເຈົ້າ ກໍຢ່າຢ້ານພວກກະບົດເຫລົ່ານັ້ນ ຫລືຢ້ານຄຳເວົ້າຂອງເຂົາເລີຍ
7 ຈົ່ງບອກເຂົາສິ່ງທີ່ເຮົາບອກ ຢ່າເປັນກະບົດເຫມືອນເຂົາ ຈົ່ງອ້າປາກແລ້ວກິນສິ່ງທີ່ເຮົາຈະໃຫ້ເຈົ້ານີ້”
8 “ບຸດແຫ່ງມະນຸດເອີຍ, ຈົ່ງຟັງສິ່ງທີ່ເຮົາບອກ ຢ່າເປັນກະບົດເຫມືອນພວກເຂົາ ຈົ່ງອ້າປາກແລ້ວກິນສິ່ງທີ່ເຮົາຈະໃຫ້
ເຈົ້ານີ້”
9 ຕໍ່ມາ ຂ້າພະເຈົ້າໄດ້ເຫັນມືເບື້ອງນຶ່ງ ຖືຫນັງສືມ້ວນຢຽດອອກມາທາງຂ້າພະເຈົ້າ
10 ມືນັ້ນໄດ້ພືຫນັງສືມ້ວນ ແລ້ວຂ້າພະເຈົ້າກໍໄດ້ເຫັນຄຳຂຽນໄວ້ທັງສອງຫນ້າແລະອ່ານໄດ້ຄວາມວ່າ, “ມີບົດຄໍ່າຄວນ
ຄຳໄວ້ທຸກ ແລະຄຳວິບັດຂຽນຢູ່ເທິງນັ້ນ”

Chapter 3

1 ພຣະອົງຊົງກ່າວກັບຂ້າພະເຈົ້າວ່າ, "ບຸດແຫ່ງມະນຸດເອີຍ, ຈົ່ງຮັບປະທານສິ່ງທີ່ເຈົ້າໄດ້ພົບ ຈົ່ງຮັບປະທານຫນັງສືມ້ວນ
ນີ້ແລ້ວ ໄປເວົ້າກັບປະຊາຊົນອິສຣາເອນ"
2 ດັ່ງນັ້ນ ຂ້າພະເຈົ້າຈຶ່ງໄດ້ອ້າປາກກິນຫນັງສືມ້ວນ ທີ່ພຣະອົງຊົງຍື່ນໃຫ້ ພຣະອົງຊົງກ່າວອີກວ່າ,
3 "ບຸດແຫ່ງມະນຸດເອີຍ, ຈົ່ງກິນຫນັງສືມ້ວນທີ່ເຮົາໄດ້ໃຫ້ເຈົ້ານັ້ນໃຫ້ອີ່ມ" ຂ້າພະເຈົ້າກໍກິນຫນັງສືມ້ວນນັ້ນ ມັນມີຣົດ
ຫວານເຫມືອນນໍ້າເຜີ້ງ
4 ຕໍ່ມາພຣະເຈົ້າຊົງກ່າວວ່າ, "ບຸດແຫ່ງມະນຸດເອີຍ, ຈົ່ງໄປບອກສິ່ງທີ່ເຮົາບອກແກ່ເຈົ້າແກ່ປະຊາຊົນອິສຣາເອນ
5 ເຮົາຈະບໍ່ສົ່ງເຈົ້າໄປຫາຊົນຊາດທີ່ເວົ້າພາສາຕ່າງປະເທດແລະພາສາທີ່ຍາກ ແຕ່ຈະສົ່ງໄປຫາພວກອິສຣາເອນ
6 ຖ້າສົ່ງໄປຫາປະເທດໃຫຍ່ຊຶ່ງເວົ້າພາສາທີ່ຍາກ ໂດຍທີ່ເຈົ້າບໍ່ເຂົ້າໃຈຊົນຊາດນັ້ນອາດຟັງເຈົ້າຢູ່
7 ແຕ່ຈະບໍ່ມີປະຊາຊົນອິສຣາເອນຄົນໃດມີນໍ້າໃຈຢາກຟັງເຈົ້າ ແມ່ນແຕ່ເຮົາເຂົາກໍຈະບໍ່ຟັງຄືກັນ ເພາະວ່າເຂົາເປັນຄົນ
ຫົວດື້ແລະໃຈແຂງ
8 ບັດນີ້ ເຮົາຈະທຳໃຫ້ເຈົ້າເປັນຄົນຫົວດື້ແລະໃຈແຂງເຫມືອນເຂົາ ຈະທຳໃຫ້ແຂງກວ່າຫີນແລະເພັດ
9 ສະນັ້ນ ເຈົ້າຢ່າຢ້ານ ພວກກະບົດເຫລົ່ານີ້ເລີຍ
10 ພຣະເຈົ້າຊົງກ່າວຕໍ່ໄປວ່າ, "ບຸດແຫ່ງມະນຸດເອີຍ, ຈົ່ງຈົດຈຳ ແລະເອົາໃຈໃສ່ຢ່າງແທ້ຈິງ ໃນສິ່ງທີ່ເຮົາໄດ້ບອກນັ້ນ
11 ແລ້ວໃຫ້ໄປຫາຊົນຊາດຂອງເຈົ້າທີ່ຕົກເປັນຊະເລີຍ ແລະໃຫ້ບອກເຂົາເຖິງສິ່ງທີ່ເຮົາຈະບອກເຈົ້າ ເຖິງເຂົາຈະຟັງຫລືບໍ່
ຟັງກໍຕາມ"

Ezekiel at the River Chebar

12 ຕໍ່ມາ ພຣະວິນຍານຂອງພຣະເຈົ້າໄດ້ຍົກຂ້າພະເຈົ້າຂຶ້ນ ແລ້ວມີພຣະສຽງຢ່າງນຶ່ງດັງກ້ອງອອກມາເຫມືອນສຽງແຜ່ນ
ດິນໄຫວຢູ່ ທາງຫລັງຂ້າພະເຈົ້າສຽງນັ້ນ
13 ຂ້າພະເຈົ້າໄດ້ຍິນສຽງປີກສັດດັງໃນອາກາດ ແລະສຽງລໍ້ດັງກ້ອງເຫມືອນແຜ່ນດິນໄຫວ
14 ຂນະພຣະວິນຍານຂອງພຣະເຈົ້າຊົງຍົກຂ້າພະເຈົ້າຂຶ້ນນັ້ນ ຂ້າພະເຈົ້າຮູ້ສຶກຂົມຂື່ນ ແລະຄຽດແຄ້ນ ເພາະວ່າຣິດທານຸ
ພາບຂອງ ພຣະອົງໄດ້ຊົງບັງຄັບຢູ່
15 ຂ້າພະເຈົ້າໄດ້ໄປເຖິງບ່ອນພວກຊະເລີຍອາສັຍຢູ່ທີ່ເມືອງເທນອາບິບ ແຄມແມ່ນໍ້າເຄບາທີ່ປະເທດບາບີໂລນ ແລະໄດ້
ພັກຢູ່ທີ່ນັ້ນດ້ວຍຄວາມຕົກຕະລຶງເປັນເວລາເຈັດວັນ

**ພຣະເຈົ້າຊົງແຕ່ງຕັ້ງເອເຊກຽນເປັນຄົນຍາມອິສຣາເອນ**

16 ພໍຄົບເຈັດວັນແລ້ວ ພຣະຄຳຂອງພຣະຜູ້ເປັນເຈົ້າກໍມາເຖິງຂ້າພະເຈົ້າວ່າ,
17 "ບຸດແຫ່ງມະນຸດເອີຍ, ເຮົາຈະແຕ່ງຕັ້ງເຈົ້າໃຫ້ເປັນຄົນຍາມຊົນຊາດອິສຣາເອນ ຈົ່ງຕັກເຕືອນເຂົາດ້ວຍຖ້ອຍຄຳທີ່ເຮົາ
ໄດ້ບອກເຈົ້າ
18 ຖ້າເຮົາປະກາດວ່າ ຄົນຊົ່ວຜູ້ນຶ່ງຈະຕ້ອງຕາຍ ແຕ່ຖ້າເຈົ້າບໍ່ຕັກເຕືອນໃຫ້ເຂົາປ່ຽນທາງເພື່ອຊ່ອຍຊີວິດເຂົາໄວ້ ຄົນຊົ່ວ
ຜູ້ນັ້ນກໍຈະຕາຍເສັຽຍ້ອນບາບຂອງຕົນເອງ ແລ້ວເຮົາຈະຖືວ່າການຕາຍຂອງຜູ້ນັ້ນເປັນຄວາມຜິດຂອງເຈົ້າ
19 ຖ້າວ່າເຈົ້າໄດ້ຕັກເຕືອນຄົນຊົ່ວຮ້າຍແລ້ວ ແຕ່ເຂົາບໍ່ເຊົາເຮັດບາບ ເຂົາກໍຈະຕາຍຍ້ອນບາບນັ້ນ ແຕ່ຊີວິດຂອງເຈົ້າຈະ
ປອດພັຍ
20 ຖ້າຄົນດີມີສິນທັມຜູ້ນຶ່ງເລີ້ມເຮັດບາບ ເຮົາຈະທຳໃຫ້ເຂົາຕົກຢູ່ໃນອັນຕະຣາຍ ແລະຖ້າເຈົ້າບໍ່ເຕືອນເຂົາ ເຂົາກໍຈະ
ຕາຍຍ້ອນການ ເຮັດບາບນັ້ນ ເຮົາຈະບໍ່ລະນຶກເຖິງຄຸນງາມຄວາມດີທີ່ເຂົາໄດ້ເຮັດມາ ແຕ່ຈະຖືວ່າເປັນຄວາມຜິດຂອງ
ເຈົ້າ
21 ຖ້າເຈົ້າຫາກຕັກເຕືອນບໍ່ໃຫ້ເຂົາເຮັດບາບ ເຂົາກໍຈະເຊື່ອຟັງບໍ່ເຮັດບາບນັ້ນ ແລະຊີວິດຂອງເຈົ້າແລະຊີວິດຂອງເຂົາກໍ
ຈະປອດພັຍ"

### ເອເຊກຽນປາກບໍ່ໄດ້

Ezekiel Isolated and Silenced

22 ເມື່ອຕົກຢູ່ໃນອຳນາດຂອງພຣະຜູ້ເປັນເຈົ້ານັ້ນ ຂ້າພະເຈົ້າໄດ້ຍິນພຣະອົງຊົງກ່າວວ່າ, “ຈົ່ງລຸກຂຶ້ນ ແລ້ວອອກໄປຍັງ
ຮ່ອມພູ ເຮົາຈະເວົ້າກັບເຈົ້າຢູ່ທີ່ນັ້ນ”
23 ດັ່ງນັ້ນ ຂ້າພະເຈົ້າຈຶ່ງອອກໄປໃນທີ່ນັ້ນ ຂ້າພະເຈົ້າໄດ້ເຫັນພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າ ເປັນຢ່າງ
ດຽວກັນກັບຄາວທີ່ເຫັນຢູ່ແຄມແມ່ນ້ຳເຄບາ ແລະຂ້າພະເຈົ້າໄດ້ໝູບລົງດິນ
24 ແຕ່ພຣະວິນຍານໄດ້ສະເດັດເຂົ້າສິງໃນຕົວຂ້າພະເຈົ້າແລະເຮັດໃຫ້ຢືນຂຶ້ນ ພຣະວິນຍານນັ້ນຊົງບອກຂ້າພະເຈົ້າວ່າ,
“ຫລັບເມືອບ້ານສາ ແລ້ວລີ້ຢູ່ໃນເຮືອນຂອງເຈົ້າ
25 ເຈົ້າ ບຸດແຫ່ງມະນຸດເອີຍ, ເບິ່ງແມ, ເຈົ້າຈະຖືກມັດດ້ວຍເຊືອກໄປໃສບໍ່ໄດ້
26 ແລະເຮົາຈະເຮັດໃຫ້ລີ້ນຂອງເຈົ້າແຂງຈົນປາກບໍ່ໄດ້ ເພື່ອບໍ່ໃຫ້ຕັກເຕືອນພວກກະບົດເຫລົ່ານັ້ນໄດ້
27 ເມື່ອເຮົາຈະເວົ້າກັບເຈົ້າອີກ ເຮົາກໍຈຶ່ງຈະໃຫ້ເຈົ້າເວົ້າໄດ້ ແລ້ວເຈົ້າຈຶ່ງບອກເຂົາວ່າ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້
“ພວກເຂົາບາງຄົນຈະເຊື່ອຟັງເຮົາ ແຕ່ບາງຄົນຈະບໍ່ເຊື່ອຟັງເຮົາ ເພາະວ່າພວກເຂົາເປັນຊົນຊາດກະບົດ”

## 4 ສະແດງພາບການລ້ອມກຸງເຢຣູຊາເລັມ

The Siege of Jerusalem Portrayed

1 “ເຈົ້າ, ບຸດແຫ່ງມະນຸດເອີຍ, ເຈົ້າຈົ່ງເອົາກ້ອນຫີນມາວາງໄວ້ຂ້າງໜ້າເຈົ້າ ແລະແກະຮູບເມືອງນຶ່ງໄວ້ເທິງນັ້ນຄືນະ
ຄອນເຢຣູຊາເລັມ
2 ຈົ່ງລ້ອມນະຄອນນັ້ນໄວ້ ແລະກໍ່ກຳແພງລ້ອມໄວ້ຮອບນະຄອນນັ້ນດ້ວຍ ແລະຖູບດິນໄວ້ສູງສູ້ນະຄອນນັ້ນ ແລະຕັ້ງ
ຄ້າຍຮອບນະຄອນໄວ້ ແລະຕັ້ງເຄື່ອງເຈາະກຳແພງໄວ້ຮອບນະຄອນ
3 ຈົ່ງຫາເຫລັກແຜ່ນມາ ແລະວາງເຫລັກແຜ່ນນັ້ນຕ່າງເປັນກຳແພງເຫລັກລະຫວ່າງເຈົ້າກັບນະຄອນນັ້ນ ແລະເຈົ້າ
ຈົ່ງຫັນໜ້າສູ່ນະຄອນນັ້ນ ໃຫ້ນະຄອນນັ້ນຖືກລ້ອມ ແລ້ວເຈົ້າເອງເປັນຜູ້ປິດລ້ອມເມືອງ ນີ້ເປັນໝາຍສຳຄັນສຳລັບ
ເຊື້ອສາຍອິສຣາເອນ
4 “ແລ້ວເຈົ້າຈົ່ງນອນຕະແຄງຂ້າງຊ້າຍ ແລະເຮົາຈະວາງການລົງໂທດເຊື້ອສາຍອິສຣາເອນໄວ້ເໜືອເຈົ້າ ເຈົ້ານອນທັບ
ຢູ່ຈັກມື້ ເຈົ້າຈະແບກການລົງໂທດຂອງນະຄອນນັ້ນເທົ່ານັ້ນມື້
5 ເພາະເຮົາໄດ້ກຳນົດວັນໃຫ້ແກ່ເຈົ້າແລ້ວ ຄືສາມຮ້ອຍເກົ້າສິບວັນເທົ່າກັບຈຳນວນປີແຫ່ງການລົງໂທດຂອງເຂົາ ເຈົ້າ
ຈະຕ້ອງແບກ ການລົງໂມເຊື້ອສາຍອິສຣາເອນນານເທົ່ານັ້ນ
6 ແລະເມື່ອເຈົ້າກະທຳເຊັ່ນນີ້ຄົບວັນແລ້ວ ເຈົ້າຈະຕ້ອງນອນລົງເປັນຄັ້ງທີສອງ ແຕ່ນອນຕະແຄງຂ້າງຂວາ ແລະແບກ
ການລົງໂທດເຊື້ອສາຍຂອງຢູດາ ເຮົາກຳນົດໃຫ້ເຈົ້າສີ່ສິບວັນ ວັນແທນປີ
7 ແລະເຈົ້າຕ້ອງຕັ້ງໜ້າເຈົ້າສູ່ການລ້ອມເຢຣູຊາເລັມໄວ້ດ້ວຍແຂນເປືອຍເປົ່າ ແລະເຈົ້າຈົ່ງປະກາດພຣະທັມສູ້ນະຄອນ
ນັ້ນ
8 ເບິ່ງແມ, ເຮົາຈະເອົາເຊືອກມັດເຈົ້າໄວ້ ເຈົ້າຈະພິກຈາກຂ້າງນີ້ໄປຂ້າງນັ້ນບໍ່ໄດ້ຈົນກວ່າເຈົ້າຈະຄົບການລ້ອມນະຄອນ
ຕາມກຳນົດວັນຂອງເຈົ້າ
9 “ເຈົ້າຈົ່ງເອົາເຂົ້າເດືອຍ ເຂົ້າບເລ ໝາກຖົ່ວຂຽວ ແລະໝາກຖົ່ວແດງ ເຂົ້າຟ່າງ ແລະເຂົ້າບເລແຂງ ຈົ່ງປົນສິ່ງທັງ
ໝົດເຂົ້າກັນແລະເຮັດເຂົ້າຈີ່ໃຫ້ເຈົ້າ ລະຫວ່າງທີ່ເຈົ້ານອນຕະແຄງຕາມກຳນົດວັນສາມຮ້ອຍເກົ້າສິບວັນນັ້ນ ເຈົ້າຈົ່ງ
ຮັບປະທານອາຫານນີ້
10 ແລະອາຫານທີ່ເຈົ້າກິນຈະຕ້ອງຊັ່ງ ເປັນວັນລະຊາວເຊເກລ ເຈົ້າຈົ່ງຮັບປະທານຕາມເວລາກຳນົດ
11 ແລະນ້ຳເຈົ້າຕ້ອງຕວງດື່ມ ຄືນຶ່ງໃນຫົກຂອງຮິນນຶ່ງ ເຈົ້າຈົ່ງດື່ມນ້ຳຕາມເວລາກຳນົດ

12 ແລະເຈົ້າຈະຕ້ອງຮັບປະທານເຂົ້າຈີ່ ເຂົ້າບເລ ໂດຍໃຊ້ໄຟດັງດ້ວຍອາຈົມຂອງມະນຸດທີ່ແຫ້ງແລ້ວປີ້ງ ຕໍ່ຫນ້າຕໍ່ຕາເຂົາ
ທັງຫລາຍ”
13 ແລະພຣະຜູ້ເປັນເຈົ້າກ່າວວ່າ, “ປະຊາຊົນອິສຣາເອນຈະຕ້ອງຮັບປະທານເຂົ້າຈີ່ຂອງເຂົາທີ່ເປັນມົນທິນຢ່າງນີ້ແຫລະ
ໃນຖ້າມກາງປະຊາຊາດ ຊຶ່ງເຮົາຈະຂັບໄລ່ເຂົາໄປຢູ່”
14 ແລ້ວຂ້າພະເຈົ້າຈຶ່ງກ່າວວ່າ, “ພຣະເຈົ້າຂ້າ ອະນິຈາ ຂ້າພຣະອົງບໍ່ເຄີຍກະທຳຕົວໃຫ້ເປັນມົນທິນເລີຍ ຕັ້ງແຕ່ຍັງຫນຸ່ມ
ມາຈົນບັດນີ້ ຂ້າພຣະອົງບໍ່ເຄີຍຮັບປະທານສິ່ງທີ່ຕາຍເອງ ຫລືທີ່ຖືກສັດຈິກກັດຕາຍ ບໍ່ມີຊີ້ນສັດມົນທິນເຂົ້າໄປໃນ
ປາກຂອງຂ້າພຣະອົງ”
15 ແລ້ວພຣະອົງຈຶ່ງກ່າວກັບຂ້າພະເຈົ້າວ່າ, “ເອົາເຖີດ ເຮົາຈະຍອມໃຫ້ເຈົ້າໃຊ້ຂີ້ງົວແທນອາຈົມຊຶ່ງເຈົ້າຈະໃຊ້ຕຽມເຂົ້າຈີ່
ຂອງເຈົ້າ”
16 ພຣະອົງກ່າວກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ເບິ່ງແມ, ເຮົາຈະທຳລາຍອາຫານຫລັກໃນເຢຣູຊາເລັມເສັຽ
ເຂົາຈະຕ້ອງຊັ່ງເຂົ້າຈີ່ຮັບປະທານ ທັງຮັບປະທານດ້ວຍຄວາມຢ້ານກົວ ແລະເຂົາຈະຕວງນ້ຳດື່ມ ທັງດື່ມດ້ວຍອາການ
ທີ່ຢ້ານກົວ
17 ເພື່ອໃຫ້ຂາດເຂົ້າຈີ່ແລະນ້ຳ ໃຫ້ຕ່າງຄົນຕ່າງຢ້ານກົວ ແລະຊູບຜອມໄປເພາະໂທດບາບຂອງເຂົາທັງຫລາຍ

## 5

### A Sword against Jerusalem

1 “ເຈົ້າ, ບຸດແຫ່ງມະນຸດເອີຍ, ເຈົ້າຈົ່ງເອົາດາບຄົມເຫລັ້ມນຶ່ງ ຈົ່ງໃຊ້ດາບນັ້ນເຫມືອນດັ່ງມີດໂກນຂອງຊ່າງຕັດຜົມ ຈົ່ງ
ແຖຫົວແລະແຖຫນວດຂອງເຈົ້າ ເອົາຕາຊັ່ງສຳລັບຊັ່ງມາແບ່ງຜົມນັ້ນອອກ
2 ເມື່ອວັນການລ້ອມຄົບຖ້ວນແລ້ວ ເຈົ້າຈົ່ງເຜົານຶ່ງໃນສາມສ່ວນເສັຽໃນໄຟທີ່ກາງເມືອງ ແລະເອົານຶ່ງໃນສາມສ່ວນນຶ່ງ
ມາ ເອົາດາບຟັນໃຫ້ຮອບເມືອງ ແລະນຶ່ງໃນສາມອີກສ່ວນນຶ່ງນັ້ນ ເຈົ້າຈົ່ງໃຫ້ລົມພັດກະຈາຍໄປ ແລະເຮົາຈະຊັກດາບ
ອອກຕາມໄປ
3 ແລະເຈົ້າຈົ່ງເອົາເສັ້ນຜົມນັ້ນມາຫນ້ອຍນຶ່ງມັດຕິດໄວ້ທີ່ເສື້ອຄຸມຂອງເຈົ້າ
4 ແລະເຈົ້າຈົ່ງເອົາຜົມເຫລົ່ານີ້ມາອີກຈົ່ງໂຍນເຂົ້າໄປໃນໄຟໃຫ້ໄຫມ້ເສັຽໃນໄຟນັ້ນ ຈາກທີ່ນັ້ນຈະມີໄຟເຂົ້າໄປໃນເຊື້ອ
ສາຍອິສຣາເອນທັງຫມົດ
5 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ນີ້ຄືເຢຣູຊາເລັມ ເຮົາຕັ້ງນາງໄວ້ໃນຖ້າມກາງປະຊາຊາດທັງຫລາຍ ມີຫລາຍປະເທດຢູ່
ອ້ອມຮອບ
6 ແລະເຢຣູຊາເລັມໄດ້ກະບົດຕໍ່ກົດຫມາຍຂອງເຮົາຢ່າງຮ້າຍກາດຍິ່ງກວ່າປະຊາຊາດໃດໆ ແລະກະບົດຕໍ່ກົດເກນຂອງ
ເຮົາຫລາຍຍິ່ງກວ່າປະເທດທີ່ຢູ່ອ້ອມຮອບ ໂດຍປະຕິເສດບໍ່ຮັບກົດຫມາຍຂອງເຮົາ ແລະບໍ່ດຳເນີນຕາມກົດເກນຂອງ
ເຮົາ
7 ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະເຫດວ່າເຈົ້າດື້ດ້ານຍິ່ງກວ່າປະຊາຊາດທີ່ຢູ່ຮອບເຈົ້າ ແລະບໍ່ໄດ້ດຳ
ເນີນຕາມກົດເກນ ຫລືຮັກສາກົດຫມາຍຂອງເຮົາ ແຕ່ໄດ້ປະພຶດຕາມກົດຫມາຍຂອງປະຊາຊາດທີ່ຢູ່ຮອບເຈົ້າ
8 ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາ ເຖິງວ່າເຮົານີ້ແຫລະເປັນປໍຣະປັກກັບເຈົ້າ ເຮົາຈະພິພາກສາ
ລົງໂທດຖ້າມກາງເຈົ້າຕໍ່ຫນ້າປະຊາຊາດທັງຫລາຍ
9 ແລະເພາະສິ່ງຫນ້າກຽດຊັງທັງສິ້ນຂອງເຈົ້າ ເຮົາຈະກະທຳ ແລະເຮົາຈະກະທຳແກ່ເຈົ້າຢ່າງທີ່ເຮົາບໍ່ເຄີຍກະທຳ ແລະ
ເຮົາຈະບໍ່ກະທຳຢ່າງນັ້ນຕໍ່ໄປອີກ
10 ເຫດສັນນັ້ນພໍ່ຈະກິນລູກຂອງຕົນຖ້າມກາງເຈົ້າທັງຫລາຍ ແລະບັນດາລູກຈະກິນບັນດາພໍ່ຂອງເຂົາທັງຫລາຍ ແລະ
ເຮົາຈະພິພາກສາລົງໂທດເຈົ້າ ຜູ້ໃດໃນພວກເຈົ້າທີ່ເຫລືອຢູ່ ເຮົາຈະໃຫ້ກະຈັດກະຈາຍໄປຕາມລົມທຸກທິດ

11 ເຫດສັນນັ້ນພຣະຜູ້ເປັນເຈົ້າຈຶ່ງກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເພາະເຈົ້າໄດ້ກະທຳໃຫ້ສະຖານນະມັສການຂອງເຮົາ ເປັນມົນທິນໄປດ້ວຍສິ່ງທີ່ຫນ້າລັງກຽດທັງສິ້ນຂອງເຈົ້າ ແລະດ້ວຍສິ່ງທີ່ຫນ້າກຽດຊັງທັງສິ້ນຂອງເຈົ້າ ເຫດສັນນັ້ນເຮົາຈະຕັດເຈົ້າລົງ ຕາຂອງເຮົາຈະບໍ່ປານີ ເຮົາຈະບໍ່ສົງສານເຫມືອນກັນ

12 ພວກເຈົ້ານຶ່ງໃນສາມສ່ວນຈະລົ້ມຕາຍເພາະໂຣກລະບາດ ແລະຖືກຜານດ້ວຍຄວາມອຶດຢາກ ໃນຫມູ່ພວກເຈົ້າ ອີກນຶ່ງໃນສາມສ່ວນຈະລົ້ມຕາຍດ້ວຍດາບຢູ່ຮອບເຈົ້າ ແລະອີກນຶ່ງໃນສາມສ່ວນເຮົາຈະໃຫ້ກະຈັດກະຈາຍໄປຕາມລົມທຸກທິດແລະເຮົາຈະຊັກດາບອອກໄລ່ຕາມເຂົາທັງຫລາຍໄປ

13 “ເຊັ່ນນີ້ແຫລະ ຄວາມກິ້ວຂອງເຮົາຈະມອດລົງ ແລະເຮົາຈະລະບາຍຄວາມພິໂຣດຂອງເຮົາຈົນຫມົດ ແລະພໍໃຈແລ້ວເຂົາທັງຫລາຍຈະໄດ້ຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າໄດ້ກ່າວເຊັ່ນນີ້ດ້ວຍຄວາມຫວງແຫນ ເມື່ອຄວາມພິໂຣດຂອງເຮົາຕໍ່ເຂົາມອດລົງແລ້ວ

14 ເຮົາຈະກະທຳໃຫ້ເຈົ້າຮ້າງເປົ່າ ແລະເປັນທີ່ເຂົາປະນາມກັນຖ້າມກາງປະຊາຊາດທີ່ຢູ່ອ້ອມຮອບເຈົ້າແລະໃນສາຍຕາຂອງຜູ້ທີ່ຜ່ານໄປ

15 ເຈົ້າຈະເປັນທີ່ເຂົາປະນາມແລະເຍີ້ຍຫຍັນ ເປັນຄຳເຕືອນ ແລະເປັນທີ່ຫນ້າລັງກຽດແກ່ປະຊາຊາດທີ່ຢູ່ອ້ອມຮອບເຈົ້າ ເມື່ອເຮົາຈະພິພາກສາລົງໂທດເຈົ້າ ດ້ວຍຄວາມພິໂຣດ ແລະຄວາມກ້ຽວກາດ ແລະການຕີສອນຢ່າງໂກດຮ້າຍຂອງເຮົາ ເຮົາພຣະຜູ້ເປັນເຈົ້າໄດ້ ຊົງກ່າວເຊັ່ນນີ້ແລ້ວ

16 ເມື່ອເຮົາປ່ອຍລູກທະນູແຫ່ງຄວາມອຶດຢາກ ຄືລູກທະນູແຫ່ງການທຳລາຍໃນຖ້າມກາງເຈົ້າ ຊຶ່ງເຮົາຈະປ່ອຍໄປທຳລາຍເຈົ້າ ແລະເມື່ອເຮົາເພີ້ມຄວາມອຶດຢາກໃຫ້ເຈົ້າ ແລະທຳລາຍອາຫານຫລັກຂອງເຈົ້າເສັຽ

17 ເຮົາຈະສົ່ງຄວາມອຶດຢາກແລະສັດປ່າຮ້າຍມາສູ້ເຈົ້າ ແລະມັນຈະເອົາລູກຫລານຂອງເຈົ້າໄປເສັຽ ໂຣກລະບາດ ແລະເລືອດຈະຜ່ານເຈົ້າ ແລະເຮົາຈະນຳດາບມາເຫນືອເຈົ້າ ເຮົາຄືພຣະຜູ້ເປັນເຈົ້າໄດ້ກ່າວເຊັ່ນນີ້ແລ້ວ”

## 6 ພຣະຜູ້ເປັນເຈົ້າກ່າວໂທດບັນດາພູຂອງອິສຣາເອນ

Judgment on Idolatrous Israel

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

2 “ບຸດແຫ່ງມະນຸດເອີຍ, ຈົ່ງມຸ້ງຫນ້າຂອງເຈົ້າຊື່ພູທັງຫລາຍຂອງອິສຣາເອນ ແລະຈົ່ງປະກາດພຣະທັມກ່າວໂທດພູນັ້ນ

3 ແລະກ່າວວ່າ, “ພູທັງຫລາຍຂອງອິສຣາເອນເອີຍ, ຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແກ່ພູທັງຫລາຍ ແລະແກ່ເນີນພູ ແລະຫ້ວຍແລະຮ່ອມພູທັງຫລາຍວ່າ ເບິ່ງແມ, ເຮົາຈະນຳດາບມາເຫນືອເຈົ້າ ແລະເຮົາຈະທຳລາຍບ່ອນສູງຕ່າງໆທີ່ປະຊາຊົນຂາບໄຫວ້ເສັຽ

4 ແທ່ນບູຊາຂອງເຈົ້າຈະຮ້າງເປົ່າ ແລະແທ່ນບູຊາເຄື່ອງຫອມຂອງເຈົ້າຈະພັງທະລາຍ ແລະຄົນທີ່ຖືກຂ້າເທິງເຈົ້ານັ້ນເຮົາຈະແກວ່ງລົງຕໍ່ຫນ້າຮູບໂຄຣົບຂອງເຈົ້າ

5 ເຮົາຈະວາງສົບຄົນອິສຣາເອນໄວ້ຫນ້າຮູບໂຄຣົບຂອງເຂົາ ແລະເຮົາຈະກະຈາຍກະດູກຂອງເຈົ້າຮອບແທ່ນບູຊາຂອງເຈົ້າ

6 ເຈົ້າອາສັຍຢູ່ທີ່ໃດ ເມືອງຂອງເຈົ້າຈະຮ້າງ ແລະບ່ອນສູງທັງຫລາຍຂອງເຈົ້າຈະພັງທະລາຍ ດັ່ງນັ້ນແຫລະ ແທ່ນບູຊາຂອງເຈົ້າຈະຮ້າງແລະຖືກທຳລາຍ ຮູບໂຄຣົບຂອງເຈົ້າຈະຫັກແລະຖືກທຳລາຍ ແທ່ນບູຊາເຄື່ອງຫອມຂອງເຈົ້າຈະຖືກຕັດລົງ ແລະການງານຂອງເຈົ້າຈະຖືກກວາດຖິ້ມເສັຽສິ້ນ

7 ແລະຄົນທີ່ຖືກຂ້າຈະລົ້ມລົງຖ້າມກາງເຈົ້າ ແລະເຈົ້າຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ

8 “ແຕ່ເຮົາຈະໃຫ້ເຈົ້າເຫລືອຢູ່ບາງຄົນ ເມື່ອເຈົ້າມີບາງຄົນຖ້າມກາງປະຊາຊາດທີ່ຫນີພົ້ນດາບໄປ ແລະເມື່ອເຈົ້າກະຈາຍໄປຢູ່ໃນປະເທດຕ່າງໆ

9 ແລ້ວຄົນໃນພວກເຈົ້າທີ່ຫນີໄປໄດ້ນັ້ນ ຈະຣະລຶກເຖິງເຮົາຖ້າມກາງປະຊາຊາດ ຊຶ່ງເຂົາຖືກກວາດໄປເປັນຊະເລີຍນັ້ນ
ເມື່ອເຮົາທຳລາຍໃຈອິດສາຊຶ່ງໄດ້ພາກຈາກເຮົາໄປນັ້ນແລ້ວ ແລະທຳລາຍຕາທີ່ຫລຽວເບິ່ງຮູບໂຄຣົບຢ່າງໃຈອິດສາ
ນັ້ນເສັຽ ແລະເຂົາຈະກຽດຕົວເອງ ເຫດດ້ວຍຄວາມຊົ່ວຊຶ່ງເຂົາໄດ້ກະທຳ ແລະສິ່ງທີ່ຫນ້າກຽດຫນ້າຊັງທັງສິ້ນຂອງເຂົາ
ດ້ວຍ
10 ເຂົາຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ ເຮົາບໍ່ໄດ້ເວົ້າລ້າໆວ່າ ເຮົາຈະກະທຳການຮ້າຍນີ້ແກ່ເຂົາ”
11 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ຈົ່ງຕົບມືແລະກະທືບຕີນຂອງເຈົ້າ ແລະກ່າວວ່າ ອະນິຈາເອີຍ ເພາະຄວາມຊົ່ວທີ່ຫນ້າ
ກຽດຫນ້າຊັງແຫ່ງເຊື້ອສາຍອິສຣາເອນຫນໍ ເຫດວ່າເຂົາທັງຫລາຍຈະລົ້ມລົງດ້ວຍດາບ ດ້ວຍຄວາມອຶດຢາກແລະ
ດ້ວຍໂຣກລະບາດ
12 ຜູ້ທີ່ຢູ່ຫ່າງໄກອອກໄປຈະຕາຍດ້ວຍໂຣກລະບາດ ຜູ້ທີ່ຢູ່ໃກ້ກໍຈະລົ້ມຕາຍດ້ວຍດາບ ແລະຜູ້ທີ່ເຫລືອຢູ່ຍັງບໍ່ຕາຍຈະ
ຕາຍດ້ວຍຄວາມອຶດຢາກ ເຮົາຈະໃຫ້ຄວາມຮ້າຍກາດຂອງເຮົາມີເຫນືອເຂົາຈົນກວ່າຈະມອດລົງ ເຊັ່ນນີ້ແຫລະ
13 ແລະເຈົ້າຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ ເມື່ອຄົນທີ່ຖືກຂ້ານອນຢູ່ຖ້າມກາງຮູບໂຄຣົບຂອງເຂົາຮອບແທ່ນບູຊາຂອງ
ເຂົາເທິງເນີນພູສູງທຸກແຫ່ງເທິງຍອດພູທັງຫລາຍ ທີ່ໃຕ້ຕົ້ນໄມ້ຂຽວທຸກຕົ້ນ ແລະໃຕ້ຕົ້ນກໍ່ຫລວງໃບດົກທຸກຕົ້ນບໍ່ວ່າຢູ່ທີ່
ໃດໆ ທີ່ເຂົາຖວາຍກິ່ນທີ່ພໍໃຈແກ່ຮູບໂຄຣົບທັງສິ້ນຂອງເຂົາ
14 ແລະເຮົາຈະຍື່ນມືຂອງເຮົາອອກຕໍ່ສູ້ເຂົາ ແລະກະທຳໃຫ້ແຜ່ນດິນນັ້ນຮ້າງເປົ່າ ແລະຖິ້ມຮ້າງຕລອດທີ່ອາສັຍທັງສິ້ນ
ຂອງເຂົາ ຄືຕັ້ງແຕ່ຖິ່ນກັນດານເຖິງດິບລາ ແລ້ວເຂົາຈຶ່ງຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ”

## 7 ທີ່ສຸດປາຍມາເຖິງ

Impending Disaster

1 ຖ້ອຍຄຳຂອງພຣະເຈົ້າມາເຖິງຂ້າພະເຈົ້າອີກວ່າ,
2 “ເຈົ້າ, ບຸດແຫ່ງມະນຸດເອີຍ, ພຣະເຈົ້າກ່າວກັບແຜ່ນດິນອິສຣາເອນດັ່ງນີ້ວ່າ ອາວະສານ ຄວາມສິ້ນສຸດໄດ້ມາເຖິງທັງສີ່
ມຸມຂອງແຜ່ນດິນແລ້ວ
3 ບັດນີ້ຄວາມສິ້ນສຸດກໍມາເຖິງເຈົ້າ ແລະເຮົາຈະປ່ອຍໃຫ້ຄວາມກິ້ວຂອງເຮົາມາເຫນືອເຈົ້າທັງຫລາຍ ແລະຈະພິພາກ
ສາເຈົ້າໃຫ້ສົມກັບທາງປະພຶດຂອງເຈົ້າ ແລະເຮົາຈະລົງໂທດເຈົ້າເພາະຄວາມລາມົກທັງຫລາຍຂອງເຈົ້າ
4 ຕາຂອງເຮົາຈະບໍ່ປານີເຈົ້າ ແລະເຮົາກໍຈະບໍ່ສົງສານ ແຕ່ເຮົາຈະລົງໂທດເຈົ້າໃຫ້ສົມກັບທາງປະພຶດຂອງເຈົ້າ ຂນະ
ເມື່ອສິ່ງທີ່ຊົ່ວຮ້າຍຍັງຢູ່ຖ້າມກາງເຈົ້າ ແລ້ວເຈົ້າຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ
5 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ວິບັດແລ້ວ ວິບັດອີກ ເບິ່ງແມ, ວິບັດມາເຖິງແລ້ວ
6 ຄວາມສິ້ນສຸດມາເຖິງແລ້ວ ອາວະສານນັ້ນມາເຖິງ ມັນຕື່ນຂຶ້ນຕໍ່ສູ້ເຈົ້າ ເບິ່ງແມ, ວິບັດມາເຖິງແລ້ວ
7 ຊາວແຜ່ນດິນໂລກເອີຍ, ຊາຕາຮ້າຍຂອງເຈົ້າມາເຖິງແລ້ວ ເວລາມາເຖິງແລ້ວ ວັນກໍໃກ້ເຂົ້າມາ ຄືວັນແຫ່ງຄວາມໂກ
ລາຫົນ ແລະບໍ່ແມ່ນສຽງໂຮ່ຮ້ອງຍິນດີທີ່ເທິງພູ
8 ບັດນີ້ ບໍ່ດົນເຮົາຈະລະບາຍຄວາມພິໂຣດຂອງເຮົາອອກເຫນືອເຈົ້າ ແລະປ່ອຍໃຫ້ຄວາມກິ້ວຂອງເຮົາມີຕໍ່ເຈົ້າຈົນມອດ
ລົງ ແລະພິພາກສາເຈົ້າໃຫ້ສົມກັບການປະພຶດຂອງເຈົ້າ ແລະເຮົາຈະລົງໂທດເຈົ້າເພາະຄວາມຫນ້າກຽດຫນ້າຊັງທັງ
ສິ້ນຂອງເຈົ້າ
9 ຕາຂອງເຮົາຈະບໍ່ປານີ ແລະເຮົາຈະບໍ່ສົງສານ ເຮົາຈະລົງໂທດເຈົ້າໃຫ້ສົມກັບການປະພຶດຂອງເຈົ້າ ຂນະເມື່ອສິ່ງຫນ້າ
ກຽດຫນ້າຊັງຂອງເຈົ້າຍັງຢູ່ຖ້າມກາງເຈົ້າ ແລ້ວເຈົ້າຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າຜູ້ທຳໂທດ
10 “ວັນນັ້ນ ເບິ່ງແມ, ມາເຖິງແລ້ວ ຊາຕາຮ້າຍຂອງເຈົ້າອອກມາແລ້ວ ຄວາມຮຸນແຮງຈະເພີ້ມຂຶ້ນ ຄວາມກໍາສູງໂອ້
ອວດຂຶ້ນສຸດຍອດ

11 ຄວາມທາຣຸນໄດ້ຈະເຣີນເປັນຄວາມຣຸນແຮງ ຈະບໍ່ມີຜູ້ໃດເຫລືອຢູ່ເລີຍ ຄວາມອຸດົມສົມບູນຂອງເຂົາກໍບໍ່ມີ ຄວາມມັ່ງຄັ່ງຂອງເຂົາກໍບໍ່ມີ ຄວາມເປັນຜູ້ໃຫຍ່ໃນພວກເຂົາກໍບໍ່ມີ

12 ເວລານັ້ນມາເຖິງແລ້ວ ວັນນັ້ນກໍໃກ້ເຂົ້າ ຢ່າໃຫ້ຜູ້ຊື້ດີໃຈ ຢ່າໃຫ້ຜູ້ຂາຍເສັຽໃຈ ເພາະພຣະພິໂຣດຢູ່ເຫນືອໄພ່ພົນຂອງນາງ

13 ເພາະວ່າຜູ້ຂາຍຈະບໍ່ໄດ້ກັບໄປຍັງສິ່ງທີ່ເຂົາໄດ້ຂາຍໄປ ຂນະເມື່ອເຂົາຍັງມີຊີວິດຢູ່ ເພາະວ່ານິມິດນັ້ນກໍກ່ຽວຂ້ອງກັບໄພ່ພົນທັງຫລາຍ ແລະຈະບໍ່ຫັນກັບ ແລະເພາະຄວາມບາບຜິດຂອງເຂົາ ຈຶ່ງບໍ່ມີຜູ້ໃດຮັກສາຊີວິດໄວ້ໄດ້

14 “ເຂົາໄດ້ເປົ່າແກແລ້ວ ແລະໄດ້ຕຽມທຸກຢ່າງໄວ້ພ້ອມ ແຕ່ບໍ່ມີໃຜເຂົ້າສົງຄາມ ເພາະວ່າພຣະພິໂຣດຂອງເຮົາຢູ່ເຫນືອໄພ່ພົນຂອງນາງ

15 ດາບກໍຢູ່ຂ້າງນອກ ໂຣກລະບາດແລະຄວາມອຶດຢາກແລະໂຣກລະບາດກໍກິນເສັຽ

16 ແລະຖ້າມີຜູ້ນຶ່ງຜູ້ໃດລອດຕາຍຫນີໄປໄດ້ເຂົາຈະຢູ່ເທິງພູ ເຫມືອນນົກກາງແກແຫ່ງຮ່ອມພູ ທຸກຄົນກໍຮ້ອງຄ່ຳຄວນເພາະຄວາມບາບຜິດຂອງຕົນ

17 ມືທັງສິ້ນກໍອ່ອນແອ ແລະເຂົ່າທັງຫມົດກໍອ່ອນເປັ້ຽ

18 ເຂົາທັງຫລາຍຄາດແອວໄວ້ດ້ວຍຜ້າກະສອບ ແລະຄວາມສັ່ນສະທ້ານຄອບງຳເຂົາໄວ້ ຄວາມລະອາຍຢູ່ທີ່ໃບຫນ້າຂອງເຂົາທຸກຄົນ ແລະຫົວຂອງເຂົາກໍລ້ານຫມົດ

19 ເຂົາໂຍນເງິນຂອງເຂົາໄປໃນຖນົນ ແລະທອງຄຳຂອງເຂົາກໍເຫມືອນສິ່ງທີ່ມົນທິນ ເງິນແລະທອງຂອງເຂົາບໍ່ອາດທີ່ຈະຊ່ອຍກູ້ເຂົາໄວ້ໃນວັນແຫ່ງພຣະພິໂຣດຂອງພຣະຜູ້ເປັນເຈົ້າ ເຂົາຈະໃຫ້ເຊົາຫິວ ຫລືບັນຈຸໃຫ້ເຕັມທ້ອງດ້ວຍເງິນທອງກໍບໍ່ໄດ້ ເພາະວ່າເປັນສິ່ງທີ່ສະດຸດໃຫ້ເຂົາທຳບາບຜິດ

20 ຄວາມຟູມເຟືອຍຂອງສິ່ງເຫລົ່ານັ້ນ ເຂົາໃຊ້ເພື່ອກຽດຈອມປອມ ເຂົາໃຊ້ສ້າງຮູບໂຄຣົບອັນຫນ້າກຽດຫນ້າຊັງແລະຫນ້າລັງກຽດຂອງເຂົາ ເຫດສັນນັ້ນຈະກະທຳສິ່ງເຫລົ່ານັ້ນໃຫ້ເປັນສິ່ງທີ່ມົນທິນແກ່ເຂົາ

21 ແລະເຮົາຈະມອບສິ່ງເຫລົ່ານັ້ນໄວ້ໃນມືຂອງຊົນຕ່າງດ້າວໃຫ້ເປັນຂອງຍຶດ ແລະມອບຄົນອະທັມໃນແຜ່ນດິນໂລກໃຫ້ເປັນຂອງປຸ້ນໄດ້ ແລະເຂົາທັງຫລາຍຈະກະທຳໃຫ້ເປັນມົນທິນ

22 ເຮົາຈະຫັນຫນ້າຂອງເຮົາໄປເສັຽຈາກເຂົາດ້ວຍ ເຂົາຈຶ່ງຈະກະທຳສະຖານປະເສີດຂອງເຮົາໃຫ້ເປັນມົນທິນ ໂຈນຈະເຂົ້າມາກະທຳໃຫ້ເປັນມົນທິນ

23 ແລະເຮັດໃຫ້ເປັນທີ່ຮ້າງເປົ່າ “ເພາະວ່າແຜ່ນດິນນັ້ນເຕັມດ້ວຍຄະດີທີ່ເປິເປື້ອນດ້ວຍເລືອດ ແລະເມືອງກໍເຕັມດ້ວຍຄວາມທາຣຸນ

24 ສັນນັ້ນເຮົາຈະນຳປະຊາຊາດ ທີ່ຊົ່ວຮ້າຍທີ່ສຸດມາຖືກຳມະສິດບ້ານເຮືອນຂອງເຂົາ ແລະເຮົາຈະໃຫ້ຄວາມອວດອົ່ງຂອງຄົນທີ່ແຂງແຮງນັ້ນສິ້ນສຸດລົງ ແລະສະຖານທີ່ບໍຣິສຸດຂອງເຂົາຈະເປັນມົນທິນ

25 ເມື່ອຄວາມວິຕົກມາເຖິງ ເຂົາຈະສແວງຫາສັນຕິພາບ ແຕ່ກໍບໍ່ມີເລີຍ

26 ວິບັດມາເຖິງແລ້ວ ວິບັດມາເຖິງອີກ ກິດຕິສັບເກີດຕາມກິດຕິສັບ ເຂົາສແວງຫານິມິດຈາກຜູ້ປະກາດພຣະທັມ ແຕ່ພຣະທັມກໍພິນາດໄປຈາກປະໂຣຫິດ ແລະບັນດາເຖົ້າແກ່ກໍຈະບໍ່ໃຫ້ຄຳປຶກສາຫຍັງ

27 ເຈົ້າຊີວິດກໍໄວ້ທຸກ ແລະເຈົ້ານາຍກໍຄຸມກາຍດ້ວຍຄວາມທ່ວງອາລັຍ ແລະມືຂອງຣາສດອນກໍສັ່ນເຊັ່ນ ເຮົາຈະກະທຳເຂົາຕາມທາງຂອງເຂົາ ແລະເຮົາຈະພິພາກສາເຂົາຕາມຫລັກການພິພາກສາຂອງເຂົາ ແລະເຂົາຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ”

## 8 ນິມິດເຣື່ອງການຫນ້າກຽດຫນ້າຊັງໃນເຢຣູຊາເລັມທີ່ຜູ້ປະກາດພຣະທັມເຫັນ

## Abominations in the Temple

1 ເມື່ອວັນທີຫ້າເດືອນທີຫົກ ໃນປີທີຫົກ ຂນະທີ່ຂ້າພະເຈົ້ານັ່ງຢູ່ໃນເຮືອນຂອງຂ້າພະເຈົ້າ ແລະພວກຜູ້ໃຫຍ່ຂອງພວກຢູ
ດານັ່ງຢູ່ຫນ້າຂ້າພະເຈົ້າ ພຣະຫັດຂອງພຣະເຈົ້າລົງມາເທິງຂ້າພະເຈົ້າໃນທີ່ນັ້ນ
2 ແລ້ວຂ້າພະເຈົ້າກໍຫລຽວເບິ່ງ ແລະມີລັກສະນະດັ່ງຊາຍຄົນນຶ່ງ ເບື້ອງລຸ່ມຂອງສ່ວນທີ່ເຫັນເປັນແອວນັ້ນ ເປັນໄຟ
ເຫນືອຂຶ້ນໄປເປັນຄືຄວາມເຫລື້ອມຄືທອງສໍາຣິດອັນເຫລື້ອມໃສ
3 ທ່ານຢຽດຮູບປະພັນມືນັ້ນອອກມາຈັບຜົມຂອງຂ້າພະເຈົ້າປອຍນຶ່ງ ແລະພຣະວິນຍານໄດ້ຍົກຂ້າພະເຈົ້າຂຶ້ນລະຫວ່າງ
ພິພົບແລະສວັນ ແລະນໍາຂ້າພະເຈົ້າມາເຖິງເຢຣູຊາເລັມໃນນິມິດຂອງພຣະເຈົ້າ ມາຍັງທາງເຂົ້າປະຕູດ້ານເຫນືອຂອງ
ລານຊັ້ນໃນ ຊຶ່ງເປັນທີ່ຕັ້ງຮູບຂອງຄວາມຫວງແຫນ ຊຶ່ງກະທໍາໃຫ້ບັງເກີດຄວາມຫວງແຫນ
4 ເບິ່ງແມ, ພຣະຣັສມີຂອງພຣະເຈົ້າຂອງອິສຣາເອນກໍຢູ່ທີ່ນັ້ນເຫມືອນດັ່ງນິມິດທີ່ຂ້າພະເຈົ້າໄດ້ເຫັນໃນທີ່ຮ່ອມນັ້ນ
5 ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ບັດນີ້ຈົ່ງເງີຍຫນ້າຂຶ້ນໄປເບິ່ງທາງທິດເຫນືອ” ຂ້າພະເຈົ້າ
ຈຶ່ງເງີຍຫນ້າຂຶ້ນຫລຽວໄປເບິ່ງທາງທິດເຫນືອ ແລະເບິ່ງແມ, ທາງທິດເຫນືອຂອງປະຕູແທ່ນບູຊາໃນທາງເຂົ້າ ຮູບ
ຄວາມຫວງແຫນນີ້ຢູ່ທີ່ນັ້ນ
6 ແລະພຣະອົງກ່າວກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ເຈົ້າເຫັນຫລືບໍ່ວ່າເຂົາເຮັດຫຍັງຢູ່ ຄືການຫນ້າກຽດຫນ້າ
ຊັງອັນໃຫຍ່ ຊຶ່ງເຊື້ອສາຍອິສຣາເອນກະທໍາກັນຢູ່ທີ່ນີ້ອັນທີ່ຈະໃຫ້ເຮົາໄປໄກຈາກສະຖານນະມັສການຂອງເຮົາ ແຕ່
ເຈົ້າຍັງຈະໄດ້ເຫັນການຫນ້າກຽດຫນ້າຊັງອັນໃຫຍ່ກວ່ານີ້ອີກ”
7 ແລະພຣະອົງຊົງນໍາຂ້າພະເຈົ້າມາເຖິງປະຕູລານ ແລະເມື່ອຂ້າພະເຈົ້າຫລຽວເບິ່ງ ເບິ່ງແມ່, ກໍເຫັນປ່ອງນຶ່ງຢູ່ໃນກໍາ
ແພງ
8 ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ຈົ່ງເຈາະເຂົ້າໄປໃນກໍາແພງ” ແລະເມື່ອຂ້າພະເຈົ້າໄດ້
ເຈາະເຂົ້າໄປໃນກໍາແພງແລ້ວ ມີປະຕູຢູ່ປະຕູນຶ່ງ
9 ແລະພຣະອົງກ່າວກັບຂ້າພະເຈົ້າວ່າ, “ເຂົ້າໄປເລີຍ ໄປເບິ່ງການຫນ້າກຽດຫນ້າຊັງຢ່າງຮ້າຍແຮງຊຶ່ງເຂົາກະທໍາທີ່ນີ້”
10 ດັ່ງນັ້ນ ຂ້າພະເຈົ້າຈຶ່ງເຂົ້າໄປແລະໄດ້ເຫັນ ເບິ່ງແມ, ເປັນພາບເທິງຝາໂດຍຮອບ ມີສັດເລືອຄານທຸກຊະນິດ ແລະສັດ
ທີ່ຫນ້າຂີ້ດຽດ ແລະຮູບໂຄຣົບທັງສິ້ນຂອງເຊື້ອສາຍອິສຣາເອນ
11 ແລະມີພວກຜູ້ໃຫຍ່ແຫ່ງເຊື້ອສາຍອິສຣາເອນເຈັດສິບຄົນຢືນຢູ່ຂ້າງຫນ້າຮູບເຫລົ່ານັ້ນ ແລະມີຢາອັສອານີຢາບຸດຊາຟ
ານຢືນຢູ່ໃນຫມູ່ພວກເຂົາທັງຫລາຍ ຕ່າງກໍມີຫມໍ້ຂາງໄຟຢູ່ໃນມື ແລະຄວັນຫອມແຫ່ງເຄື່ອງບູຊາກໍຂຶ້ນໄປຂ້າງເທິງ
12 ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ເຈົ້າໄດ້ເຫັນແລ້ວບໍ່ແມ່ນຫລືວ່າພວກຜູ້ໃຫຍ່ຂອງເຊື້ອ
ສາຍອິສຣາເອນກະທໍາສິ່ງໃດຢູ່ໃນທີ່ມືດທຸກຄົນຕ່າງກໍຢູ່ໃນຫ້ອງຮູບພາບຂອງຕົນ ເພາະເຂົາທັງຫລາຍເວົ້າວ່າ, “ພຣະ
ຜູ້ເປັນເຈົ້າບໍ່ທອດພຣະເນດເຫັນເຮົາ ພຣະຜູ້ເປັນເຈົ້າຊົງປະຖິ້ມແຜ່ນດິນນີ້ເສັຽແລ້ວ”
13 ພຣະອົງກ່າວກັບຂ້າພະເຈົ້າດ້ວຍວ່າ “ເຈົ້າຍັງຈະເຫັນການຫນ້າກຽດຫນ້າຊັງຊຶ່ງເຂົາກະທໍາຍິ່ງກວ່ານີ້ອີກ”
14 ແລ້ວພຣະອົງຊົງນໍາຂ້າພະເຈົ້າມາເຖິງທາງເຂົ້າປະຕູພຣະວິຫານຂອງພຣະຜູ້ເປັນເຈົ້າດ້ານເຫນືອແລະ ເບິ່ງແມ, ທີ່ນັ້ນ
ມີຜູ້ຍິງຫລາຍຄົນນັ່ງຮ້ອງໄຫ້ອາລັຍຫາເຈົ້າພໍ່ທັມມູດ ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ,
15 “ບຸດແຫ່ງມະນຸດເອີຍ, ເຈົ້າເຫັນແລ້ວຫລື ເຈົ້າຍັງຈະເຫັນການຫນ້າກຽດຫນ້າຊັງອັນຍິ່ງໃຫຍ່ກວ່າສິ່ງເຫລົ່ານີ້ອີກ”
16 ແລ້ວພຣະອົງຊົງນໍາຂ້າພະເຈົ້າເຂົ້າມາໃນລານຊັ້ນໃນແຫ່ງພຣະວິຫານຂອງພຣະຜູ້ເປັນເຈົ້າ ເບິ່ງແມ, ທາງປະຕູພຣະ
ວິຫານຂອງ ພຣະຜູ້ເປັນເຈົ້າ ລະຫວ່າງມຸກແລະແທ່ນບູຊາ ມີຜູ້ຊາຍປະມານຊາວຫ້າຄົນຫັນຫລັງໃຫ້ພຣະວິຫານແຫ່ງ
ພຣະເຈົ້າ ຫນ້າຂອງເຂົາຫັນໄປທາງທິດຕາເວັນອອກ ກໍາລັງນະມັສການພຣະອາທິດດ້ານຕາເວັນອອກນັ້ນ
17 ແລ້ວພຣະອົງຊົງກ່າວກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ເຈົ້າເຫັນແລ້ວຫລືທີ່ເຊື້ອສາຍຢູດາກະທໍາການຫນ້າ
ກຽດຫນ້າຊັງຊຶ່ງເຂົາກະທໍາຢູ່ທີ່ນີ້ ເປັນສິ່ງເລັກນ້ອຍຫລື ເຂົາຈຶ່ງກະທໍາໃຫ້ແຜ່ນດິນເຕັມໄປດ້ວຍຄວາມທາຣຸນແລະກະ
ທໍາໃຫ້ເຮົາພິໂຣດຍິ່ງຂຶ້ນ ເຂົາທັງຫລາຍເອົາກິ່ງໄມ້ມາແຕະດັງຂອງເຂົາ

18 ເຫດສັນນັ້ນ ເຮົາຈະກະທຳດ້ວຍຄວາມພິໂຣດ ຕາຂອງເຮົາຈະບໍ່ປານີ ແລະເຮົາຈະບໍ່ສົງສານ ເຖິງເຂົາຈະຮ້ອງດ້ວຍ
ສຽງອັນດັງໃສ່ຫູຂອງເຮົາ ເຮົາຈະບໍ່ຟັງເຂົາ”

## 9 ເຣື່ອງການເຂັ່ນຂ້າຜູ້ມີບາບ

The Slaughter of the Idolaters

1 ແລ້ວພຣະອົງຊົງເປັ່ງພຣະສຸຣະສຽງດັງເຂົ້າຫູຂ້າພະເຈົ້າວ່າ, “ເຈົ້າທັງຫລາຍຜູ້ເປັນພະນັກງານທຳໂທດປະຈຳເມືອງ
ຈົ່ງເຂົ້າມາໃກ້ ໃຫ້ຕ່າງຄົນຖືເຄື່ອງມືທຳລາຍມາດ້ວຍ”
2 ແລະເບິ່ງແມ, ມີຊາຍຫົກຄົນເຂົ້າມາຈາກປະຕູເທິງ ຊຶ່ງຫັນຫນ້າໄປທາງເຫນືອ ແຕລະຄົນຖືອາວຸດທຸກຄົນ ມີຊາຍຄົນ
ນຶ່ງນຸ່ງຫົ່ມຜ້າປ່ານຖືເຄື່ອງຂຽນມາກັບຄົນເຫລົ່ານັ້ນດ້ວຍ ແລະເຂົາທັງຫລາຍເຂົ້າໄປຢືນຢູ່ທີ່ຂ້າງແທ່ນທອງສຳຣິດ
3 ພຣະຣັສມີຂອງພຣະເຈົ້າຂອງອິສຣາເອນໄດ້ເຫາະຂຶ້ນໄປຈາກເຊຣູບິມ ແລ້ວຊຶ່ງເປັນທີ່ເຄີຍສະຖິດ ໄປຍັງປະຕູພຣະວິ
ຫານແລະພຣະອົງກ່າວເອີ້ນຊາຍຜູ້ທີ່ນຸ່ງຫົ່ມຜ້າປ່ານ ຜູ້ທີ່ຖືເຄື່ອງຂຽນ
4 ແລະພຣະຜູ້ເປັນເຈົ້າຊົງສັ່ງວ່າ, “ຈົ່ງໄປຕລອດນະຄອນຄືຕລອດເຢຣູຊາເລັມ ແລະເຮັດເຄື່ອງຫມາຍໄວ້ທີ່ຫນ້າຜາກ
ຂອງປະຊາຊົນທີ່ຖອນຫາຍໃຈແລະຄ່ຳຄວນ ເພາະຄວາມຫນ້າກຽດຫນ້າຊັງທັງສິ້ນທີ່ກະທຳກັນໃນເມືອງ”
5 ແລະພຣະຜູ້ເປັນເຈົ້າກ່າວກັບຄົນອື່ນໆ ຊຶ່ງຂ້າພະເຈົ້າໄດ້ຍິນວ່າ, “ຈົ່ງຜ່ານໄປຕລອດນະຄອນຕາມຊາຍຄົນນັ້ນໄປ
ແລະຂ້າຟັນເສັຽ ຕາຂອງເຈົ້າຢ່າໄດ້ປານີ ແລະເຈົ້າຢ່າສົງສານເລີຍ
6 ຈົ່ງຂ້າຄົນເຖົ້າແກ່ ຄົນຫນຸ່ມສາວ ທັງເດັກນ້ອຍແລະຜູ້ຍິງ ແຕ່ຢ່າແຕະຕ້ອງຜູ້ທີ່ມີເຄື່ອງຫມາຍ ແລະຈົ່ງເລີ້ມຕົ້ນທີ່ສຸ
ດການນະມັສການຂອງເຮົາ” ດັ່ງນັ້ນເຂົາຈຶ່ງຕັ້ງຕົ້ນກັບພວກຄົນເຖົ້າຜູ້ຊຶ່ງຢູ່ຫນ້າພຣະວິຫານ
7 ແລ້ວພຣະອົງກ່າວກັບເຂົາວ່າ, “ຈົ່ງກະທຳໃຫ້ພຣະວິຫານເປັນມົນທິນ ຈົ່ງຖົມຜູ້ທີ່ຖືກຂ້າໃຫ້ເຕັມລານ ຈົ່ງໄປເທີນ”
ເຂົາທັງຫລາຍຈຶ່ງອອກໄປແລະຂ້າຟັນທີ່ໃນນະຄອນ
8 ຂນະທີ່ເຂົາກຳລັງຂ້າຟັນຢູ່ນັ້ນເຫລືອຂ້າພະເຈົ້າແຕ່ຜູ້ດຽວ ຂ້າພະເຈົ້າກໍຫມູບຫນ້າລົງດິນຮ້ອງວ່າ, “ອະນິຈາ ພຣະຜູ້
ເປັນເຈົ້າ ພຣະອົງຈະຊົງທຳລາຍຄົນອິສຣາເອນທີ່ເຫລືອຢູ່ນັ້ນທັງສິ້ນໃນການທີ່ພຣະອົງຊົງລະບາຍຄວາມກິ້ວຂອງພ
ຣະອົງເຫນືອເຢຣູຊາເລັມຫລື”
9 ແລ້ວພຣະອົງກ່າວກັບຂ້າພະເຈົ້າວ່າ, “ບາບຂອງເຊື້ອສາຍອິສຣາເອນແລະຢູດາຍິ່ງໃຫຍ່ນັກ ແຜ່ນດິນກໍເຕັມໄປດ້ວຍ
ເລືອດ ແລະຄວາມອະຍຸດຕິທັມກໍເຕັມນະຄອນ ເພາະເຂົາກ່າວວ່າ “ພຣະຜູ້ເປັນເຈົ້າຊົງປະຖິ້ມແຜ່ນດິນນີ້ແລ້ວ ແລະ
ພຣະຜູ້ເປັນເຈົ້າບໍ່ທອດພຣະເນດອີກ”
10 ສຳລັບເຮົາ ຕາຂອງເຮົາຈະບໍ່ປານີ ແລະເຮົາຈະບໍ່ສົງສານ ແຕ່ເຮົາຈະລົງໂທດຕາມການປະພຶດຂອງເຂົາເຫນືອຫົວ
ຂອງເຂົາທັງຫລາຍ”
11 ແລະເບິ່ງແມ, ຊາຍຄົນທີ່ນຸ່ງຫົ່ມຜ້າປ່ານທີ່ຖືເຄື່ອງຂຽນນັ້ນ ໄດ້ນຳຖ້ອຍຄຳກັບມາກ່າວວ່າ, “ຂ້າພຣະອົງໄດ້ກະທຳ
ຕາມທີ່ພຣະອົງຊົງສັ່ງຂ້າພຣະອົງໄວ້ນັ້ນແລ້ວ”

## 10 ພຣະສະງ່າຣາສີຂອງພຣະເຈົ້າຫນີຈາກພຣະວິຫານ

God’s Glory Leaves Jerusalem

1 ແລ້ວຂ້າພະເຈົ້າກໍຫລຽວເບິ່ງ ເບິ່ງແມ, ທີ່ທ້ອງຟ້າຊຶ່ງຢູ່ເຫນືອຫົວຂອງເຫລົ່າເຊຣຸບບິມ ມີສິ່ງນຶ່ງປາກົດຂຶ້ນເຫນືອເຊຣຸ
ບິມນັ້ນເຫມືອນໄພທູນ
2 ແລະພຣະອົງກ່າວກັບຊາຍທີ່ນຸ່ງຫົ່ມຜ້າປ່ານວ່າ, “ຈົ່ງເຂົ້າໄປຖ້າມກາງວົງລໍ້ຊຶ່ງຢູ່ພາຍໃຕ້ເຊຣູບິມ ຈົ່ງເອົາມືກອບເອົາ
ຖ່ານຮ້ອນຈາກຖ້າມກາງເຫລົ່າເຊຣູບິມ ນຳໄປໂຮຍເຫນືອນະຄອນນັ້ນ” ແລະຊາຍຄົນນັ້ນກໍເຂົ້າໄປຕໍ່ຫນ້າຕໍ່ຕາຂ້າພະ
ເຈົ້າ

3 ຝ່າຍເຫລົ່າເຊຣູບິມນັ້ນຢືນທີ່ດ້ານໃຕ້ຂອງພຣະວິຫານ ຂນະເມື່ອຊາຍຄົນນັ້ນເຂົ້າໄປ ແລະເມກກໍຄຸມຢູ່ເຕັມລານຊັ້ນໃນ

4 ແລະພຣະຣັສມີຂອງພຣະຜູ້ເປັນເຈົ້າກໍຂຶ້ນຈາກເຊຣູບິມໄປຍັງປະຕູພຣະວິຫານ ແລະພຣະວິຫານກໍເຕັມໄປດ້ວຍຄວາມສຸກໃສແຫ່ງ ພຣະຣັສມີຂອງພຣະຜູ້ເປັນເຈົ້າ

5 ແລະສຽງປີກຂອງເຫລົ່າເຊຣູບິມກໍໄດ້ຍິນໄປເຖິງລານຊັ້ນນອກ ເຫມືອນພຣະສຸຣະສຽງຂອງພຣະຜູ້ເປັນເຈົ້າຜູ້ຊົງຣິດອຳນາດຍິ່ງໃຫຍ່ເມື່ອພຣະອົງຊົງກ່າວ

6 ແລະເມື່ອພຣະອົງມີພຣະບັນຊາສັ່ງຊາຍທີ່ນຸ່ງຫົ່ມຜ້າປ່ານວ່າ, “ຈົ່ງໄປເອົາໄຟມາຈາກກາງວົງລໍ້ ແລະຈາກກອງເຫລົ່າເຊຣູບິມ” ຊາຍຄົນນັ້ນກໍເຂົ້າໄປຢືນຢູ່ຂ້າງໆວົງລໍ້ອັນນຶ່ງ

7 ເຊຣູບິມຕົນນຶ່ງໄດ້ຢຽດມືຂອງຕົນອອກມາລະຫວ່າງເຫລົ່າເຊຣູບິມໄປຍັງໄຟຊຶ່ງຢູ່ລະຫວ່າງເຫລົ່າເຊຣູບິມ ຈັບໄຟຂຶ້ນມາ ແລະໃສ່ມືຂອງຊາຍທີ່ນຸ່ງຫົ່ມຜ້າປ່ານ ຊາຍນັ້ນກໍນຳໄຟອອກໄປ

8 ປາກົດວ່າໃນເຫລົ່າເຊຣູບິມນັ້ນມີສິ່ງທີ່ຢູ່ໃຕ້ປີກເຫມືອນດັ່ງມືມະນຸດ

9 ແລະຂ້າພະເຈົ້າຫລຽວເບິ່ງ ເບິ່ງແມ, ມີວົງລໍ້ຢູ່ສີ່ອັນຂ້າງໆເຫລົ່າເຊຣູບິມ ຢູ່ຂ້າງເຊຣູບິມຕົນລະນຶ່ງວົງລໍ້ ລັກສະນະຂອງວົງລໍ້ນັ້ນເຫມືອນແສງແກ້ວປະເສີດ

10 ລັກສະນະກົງຈັກວົງລໍ້ທັງສີ່ນັ້ນກໍເຫມືອນກັນ ເຫມືອນວົງລໍ້ຊ້ອນໃນວົງລໍ້

11 ເມື່ອວົງລໍ້ນີ້ໄປ ກໍໄປໄດ້ຂ້າງນຶ່ງຂ້າງໃດໃນຂ້າງທັງສີ່ ໂດຍບໍ່ຕ້ອງຫັນເລີຍໃນເວລາໄປ ຖ້າອັນຫນ້າມຸ້ງຫນ້າໄປທາງໃດວົງລໍ້ອັນອື່ນກໍຕາມໄປໂດຍບໍ່ຕ້ອງຫັນໃນຂນະທີ່ໄປ

12 ແລະທັງຕົວ ດ້ານຫລັງມືປີກ ແລະວົງລໍ້ມີຕາຢູ່ຮອບ ທັງສີ່ນັ້ນກໍມີວົງລໍ້ຂອງຕົວ

13 ວົງລໍ້ເຫລົ່ານັ້ນ ທີ່ຂ້າພະເຈົ້າໄດ້ຍິນກັບຫູເຂົາເອີ້ນວ່າ ກົງຈັກເອີຍ

14 ມີຫນ້າສີ່ຫນ້າ ຫນ້າແຣກເປັນຫນ້າເຊຣູບິມ ຫນ້າທີສອງເປັນຫນ້າມະນຸດ ແລະຫນ້າທີສາມເປັນຫນ້າສິງ ແລະຫນ້າທີສີ່ເປັນຫນ້ານົກອິນຊີ

15 ແລະເຫລົ່າເຊຣູບິມກໍເຫາະຂຶ້ນ ເປັນສັດທີ່ຂ້າພະເຈົ້າເຄີຍເຫັນຢູ່ຣິມແມ່ນ້ຳເຄບາ ເມື່ອເຫລົ່າເຊຣູບິມໄປ ວົງລໍ້ກໍຕາມຂ້າງໄປດ້ວຍ

16 ແລະເມື່ອເຫລົ່າເຊຣູບິມກາງປີກອອກເພື່ອບິນຂຶ້ນຈາກພິພົບ ວົງລໍ້ເຫລົ່ານັ້ນກໍບໍ່ຫັນໄປຈາກຂ້າງໆເຫລົ່າເຊຣູບິມເລີຍ

17 ເມື່ອເຫລົ່າເຊຣູບິມຢຸດຢູ່ເຫລົ່າວົງລໍ້ກໍເຊົາຢູ່ດ້ວຍ ເມື່ອເຫລົ່າເຊຣູບິມເຫາະຂຶ້ນ ເຫລົ່າວົງລໍ້ກໍເຫາະຂຶ້ນໄປດ້ວຍ ເພາະວ່າວິນຍານຂອງສັດນັ້ນຢູ່ໃນວົງລໍ້

18 ແລ້ວພຣະຣັສມີຂອງພຣະຜູ້ເປັນເຈົ້າໄດ້ໄປຈາກປະຕູພຣະວິຫານ ສະຖິດເຫນືອເຫລົ່າເຊຣູບິມ

19 ເມື່ອເຫລົ່າເຊຣູບິມອອກໄປກໍກາງປີກອອກບິນຂຶ້ນໄປຈາກພິພົບຕໍ່ຫນ້າຕໍ່ຕາຂ້າພະເຈົ້າ ວົງລໍ້ກໍຕາມຂ້າງໄປດ້ວຍ ແລະໄປຢືນຢູ່ທີ່ທາງເຂົ້າປະຕູດ້ານຕາເວັນອອກຂອງພຣະວິຫານຂອງແຫ່ງພຣະເຈົ້າຂອງອິສຣາເອນກໍຢູ່ເຫນືອເຊຣູບິມເຫລົ່ານັ້ນ

20 ເຫລົ່ານີ້ເປັນສັດຊຶ່ງຂ້າພະເຈົ້າໄດ້ເຫັນພາຍໃຕ້ພຣະເຈົ້າແຫ່ງອິສຣາເອນທີ່ຣິມແມ່ນ້ຳເຄບາ ແລະຂ້າພະເຈົ້າຊາບວ່າເປັນເຫລົ່າເຊຣູບິມ

21 ເຊຣູບິມທຸກຕົນມີສີ່ຫນ້າແລະສີ່ປີກ ແລະພາຍໃຕ້ປີກມີຮູບປະພັນມືມະນຸດ

22 ສ່ວນຮູບປະພັນຂອງຫນ້າເຫລົ່ານັ້ນ ເປັນຫນ້າທັງຮູບທັງຕົວ ຊຶ່ງຂ້າພະເຈົ້າໄດ້ເຫັນທີ່ຣິມແມ່ນ້ຳເຄບາ ເຊຣູບິມທຸກຕົນອອກໄປຂ້າງຫນ້າຂອງຕົນ

## 11 ຊົງປາບປາມເຈົ້ານາຍທີ່ຊົ່ວ

Judgment on wicked Counselors

1 ພຣະວິນຍານໄດ້ຍົກຂ້າພະເຈົ້າຂຶ້ນ ແລະນຳຂ້າພະເຈົ້າມາຍັງປະຕູດ້ານຕາເວັນອອກຂອງພຣະວິຫານແຫ່ງພຣະເຈົ້າ
ຊຶ່ງຫັນຫນ້າໄປທິດຕາເວັນອອກ ເບິ່ງແມ, ທີ່ທາງເຂົ້າປະຕູມີຜູ້ຊາຍຢູ່ຊາວຫ້າຄົນ ແລະຖ້າມກາງນັ້ນຂ້າພະເຈົ້າ
ເຫັນຢາອັສອານີຢາບຸດອັສຊູ ແລະເປລາຕີຢາບຸດເບນານີຢາ ເຈົ້ານາຍແຫ່ງປະຊາຊົນ
2 ແລະພຣະອົງກ່າວກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ຄົນເຫລົ່ານີ້ຄືຜູ້ທີ່ອອກອຸບາຍທຳຄວາມບາບຜິດ ແລະ
ເປັນຜູ້ໃຫ້ຄຳປຶກສາທີ່ຊົ່ວຮ້າຍໃນນະຄອນນີ້
3 ຜູ້ກ່າວວ່າ “ເວລາທີ່ຈະປຸກເຮືອນຍັງບໍ່ມາໃກ້ເລີຍ ນະຄອນນີ້ເປັນຫມໍ້ແລະເຮົາເປັນເນື້ອ”
4 ບຸດແຫ່ງມະນຸດເອີຍ, ເຫດສັນນັ້ນຈົ່ງປະກາດພຣະທັມກ່າວໂທດເຂົາ ຈົ່ງປະກາດເທີນ”
5 ພຣະວິນຍານຂອງພຣະຜູ້ເປັນເຈົ້າລົງມາປະທັບເທິງຂ້າພະເຈົ້າ ແລະພຣະອົງກ່າວກັບຂ້າພະເຈົ້າວ່າ, “ຈົ່ງກ່າວເຖີດ
ວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຊື້ອສາຍອິສຣາເອນເອີຍ ເຈົ້າຄິດດັ່ງນັ້ນ ແລະເຮົາຮູ້ສິ່ງທີ່ເຂົ້າມາໃນໃຈຂອງເຈົ້າ
6 ເຈົ້າໄດ້ທະວີຄົນທີ່ເຈົ້າໄດ້ຂ້າໃນນະຄອນນີ້ ແລະຖິ້ມຄົນທີ່ຖືກຂ້າເຕັມຕາມຖນົນຫົນທາງໄປຫມົດ
7 ເຫດສັນນັ້ນພຣະຜູ້ເປັນເຈົ້າຈຶ່ງກ່າວດັ່ງນີ້ວ່າ ບັນດາຜູ້ທີ່ເຈົ້າໄດ້ຂ້າ ຊຶ່ງເຈົ້າໄດ້ຖິ້ມໄວ້ຖ້າມກາງນະຄອນນີ້ເຂົາທັງ
ຫລາຍເປັນເນື້ອ ແລະນະຄອນນີ້ເປັນຫມໍ້ ແຕ່ເຈົ້າຈະຖືກນຳອອກມາຈາກຖ້າມກາງນັ້ນ
8 ພຣະຜູ້ເປັນເຈົ້າກ່າວວ່າ ເຈົ້າຢ້ານດາບ ແລະເຮົາຈະນຳດາບມາເຫນືອເຈົ້າ
9 ເຮົາຈະນຳເຈົ້າອອກມາຈາກຖ້າມກາງນັ້ນ ແລະມອບເຈົ້າໄວ້ໃນມືຂອງຄົນຕ່າງດ້າວ ແລະທຳການພິພາກສາລົງໂທດ
ເຈົ້າ
10 ເຈົ້າຈະຖືກດາບລົ້ມລົງ ເຮົາຈະລົງໂທດເຈົ້າທີ່ເຂດແດນອິສຣາເອນ ແລະເຈົ້າຈະໄດ້ຊາບວ່າເຮົາຄືພຣະຜູ້ເປັນເຈົ້າ
11 ນະຄອນນີ້ຈະບໍ່ແມ່ນຫມໍ້ຂອງເຈົ້າ ທີ່ເຈົ້າຈະເປັນເນື້ອໃນຖ້າມກາງນັ້ນ ເຮົາຈະລົງໂທດເຈົ້າທີ່ເຂດແດນອິສຣາເອນ
12 ແລະເຈົ້າຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ ເພາະເຈົ້າບໍ່ໄດ້ດຳເນີນຕາມກົດເກນຂອງເຮົາ ຫລືປະຕິບັດຕາມກົດ
ຫມາຍຂອງເຮົາ ແຕ່ໄດ້ປະພຶດຕາມກົດຫມາຍຂອງປະຊາຊາດທັງຫລາຍທີ່ຢູ່ຮອບເຈົ້າ”
13 ຢູ່ມາເມື່ອຂ້າພະເຈົ້າກຳລັງປະກາດພຣະທັມຢູ່ ເປລາຕີຢາບຸດເບນານີຢາກໍສິ້ນຊີວິດ ແລ້ວຂ້າພະເຈົ້າກໍກົ້ມຫນ້າລົງ
ດິນຮ້ອງສຽງດັງວ່າ “ພຣະເຈົ້າ ເຈົ້າຂ້າ ພຣະອົງຊົງກະທຳໃຫ້ຄົນອິສຣາເອນທີ່ເຫລືອຢູ່ນັ້ນສິ້ນສຸດເລີຍຫລື ພຣະເຈົ້າ
ຂ້າ”

### ຄຳສັນຍາແຫ່ງການໃຫ້ສູ່ສະພາບເດີມແລະການຟື້ນຈິດໃຈ

14 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
15 “ບຸດແຫ່ງມະນຸດເອີຍ, ພີ່ນ້ອງຂອງເຈົ້າ ຄືຍາດທີ່ມີສິດໄຖ່ຄືນສິ້ນທັງເຊື້ອສາຍຂອງອິສຣາເອນຫມົດດ້ວຍກັນ ຄືບຸກຄົນ
ທີ່ຊາວເຢຣູຊາເລັມໄດ້ກ່າວວ່າ “ເຂົາທັງຫລາຍໄດ້ຫ່າງເຫີນໄປຈາກພຣະຜູ້ເປັນເຈົ້າ ແຜ່ນດິນນີ້ຊົງມອບໄວ້ແກ່ເຮົາ
ເປັນກຳມະສິດ”
16 ເຫດສັນນັ້ນຈົ່ງກ່າວວ່າ “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຖິງແມ່ນເຮົາຈະໄດ້ຍ້າຍເຂົາໃຫ້ຫ່າງອອກໄປຢູ່ຖ້າມກາງປະ
ຊາຊາດທັງຫລາຍ ເຖິງແມ່ນເຮົາໄດ້ກະຈັດກະຈາຍເຂົາໄປຢູ່ຖ້າມກາງປະເທດທັງປວງ ເຮົາກໍຍັງເປັນສະຖານນະມັສ
ການຂອງເຂົາຂນະນຶ່ງໃນປະເທດທີ່ເຂົາໄດ້ໄປຢູ່”
17 ເຫດສັນນັ້ນຈົ່ງກ່າວວ່າ “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາຈະຮວບຮວມເຈົ້າມາຈາກຊົນຊາດທັງຫລາຍ ແລະຊຸມນຸມ
ເຈົ້າຈາກປະເທດທີ່ເຈົ້າກະຈັດກະຈາຍໄປຢູ່ນັ້ນ ແລະເຮົາຈະມອບແຜ່ນດິນອິສຣາເອນໃຫ້ແກ່ເຈົ້າ”
18 ແລະເມື່ອເຂົາມາຢູ່ທີ່ນັ້ນ ເຂົາຈະຮື້ສິ່ງທີ່ຫນ້າຂີ້ດຽດຂອງເມືອງນັ້ນທັງສິ້ນ ແລະສິ່ງທີ່ຫນ້າກຽດຫນ້າຊັງຂອງເມືອງນັ້ນ
ທັງສິ້ນອອກໄປເສັຽຈາກທີ່ນັ້ນ

19 ແລະເຮົາຈະໃຫ້ຈິດໃຈດຽວແກ່ເຂົາ ແລະເຮົາຈະບັນຈຸຈິດວິນຍານໃຫມ່ໄວ້ໃນເຂົາ ເຮົາຈະນຳໃຈຫີນອອກໄປເສັຽຈາກ
ເນື້ອຂອງເຂົາ ແລະໃຫ້ໃຈເນື້ອແກ່ເຂົາ
20 ເພື່ອເຂົາຈະດຳເນີນຕາມກົດເກນຂອງເຮົາ ແລະຮັກສາກົດຫມາຍຂອງເຮົາ ແລະກະທຳຕາມ ເຂົາທັງຫລາຍຈະເປັນ
ປະຊາຊົນຂອງເຮົາ ແລະເຮົາຈະເປັນພຣະເຈົ້າຂອງເຂົາທັງຫລາຍ
21 ແຕ່ບຸກຄົນເຫລົ່ານັ້ນທີ່ຈິດໃຈຂອງເຂົາດຳເນີນຕາມສິ່ງທີ່ຫນ້າຂີ້ດຽດແລະສິ່ງທີ່ຫນ້າກຽດຫນ້າຊັງຂອງເຂົາເຮົາຈະລົງ
ໂທດທັນໃຫ້ສົມກັບການປະພຶດຂອງເຂົາເຫນືອຫົວຂອງເຂົາເອງ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ”
22 ແລ້ວເຫລົ່າເຊຣູບິມກໍກາງປີກອອກວົງລໍ້ກໍຢູ່ຂ້າງໆ ແລະພຣະຣັສມີຂອງພຣະເຈົ້າຂອງອິສຣາເອນກໍຢູ່ເຫນືອສິ່ງເຫລົ່າ
ນັ້ນ
23 ພຣະຣັສມີຂອງພຣະຜູ້ເປັນເຈົ້າຂຶ້ນໄປຈາກກາງນະຄອນ ໄປສະຖິດຢູ່ເທິງພູຊຶ່ງຢູ່ທາງດ້ານຕາເວັນອອກຂອງນະຄອນ
ນັ້ນ
24 ແລະພຣະວິນຍານໄດ້ຍົກຂ້າພະເຈົ້າຂຶ້ນ ນຳຂ້າພະເຈົ້າມາດ້ວຍນິມິດໂດຍພຣະວິນຍານຂອງພຣະເຈົ້າເຖິງເມືອງຄັນ
ເດອາ ມາສູ່ພວກທີ່ກວາດໄປເປັນຊະເລີຍ ແລ້ວນິມິດທີ່ຂ້າພະເຈົ້າໄດ້ເຫັນນັ້ນກໍຂຶ້ນໄປຈາກຂ້າພະເຈົ້າ
25 ຂ້າພະເຈົ້າຈຶ່ງບອກເຖິງບັນດາສິ່ງຕ່າງໆຊຶ່ງພຣະຜູ້ເປັນເຈົ້າຊົງສຳແດງແກ່ຂ້າພະເຈົ້າໃຫ້ພວກທີ່ຖືກກວາດໄປເປັນຊະ
ເລີຍຮູ້

## 12 ເອເຊກຽນສະແດງພາບການຂົນຍ້າຍເຂົ້າໄປເປັນຊະເລີຍ

Judah’s Captivity Portrayed

1 ຖ້ອຍຄຳຂອງພຣະເຈົ້າມາເຖິງຂ້າພະເຈົ້າວ່າ,
2 “ບຸດແຫ່ງມະນຸດເອີຍ, ເຈົ້າອາສັຍຢູ່ຖ້າມກາງເຊື້ອສາຍທີ່ມັນກະບົດ ຜູ້ມີຕາເພື່ອເບິ່ງແຕ່ເບິ່ງບໍ່ເຫັນ
ຜູ້ມີຫູເພື່ອຟັງ ແຕ່ຟັງບໍ່ໄດ້ຍິນ ເພາະເຂົາທັງຫລາຍເປັນເຊື້ອສາຍທີ່ມັກກະບົດ
3 ເຫດສັນນັ້ນ ບຸດແຫ່ງມະນຸດເອີຍ, ເຈົ້າຈົ່ງຈັດຕຽມສິ່ງຂອງສຳລັບຕົນເພື່ອການຖືກກວາດໄປເປັນຊະເລີຍ ແລະຈົ່ງໄປ
ເປັນຊະເລີຍໃນເວລາກາງເວັນຕໍ່ຫນ້າຕໍ່ຕາເຂົາ ເຈົ້າຈະຕ້ອງໄປເປັນຊະເລີຍຈາກສະຖານທີ່ຂອງເຈົ້າໄປຍັງອີກທີ່ນຶ່ງຕໍ່
ຫນ້າຕໍ່ຕາເຂົາ ຕາມເຂົາຈະເຂົ້າໃຈແມ່ນວ່າເຂົາເປັນເຊື້ອສາຍທີ່ມັກກະບົດ
4 ເຈົ້າຈົ່ງນຳສິ່ງຂອງຂອງເຈົ້າອອກມາກາງເວັນຕໍ່ຫນ້າຕໍ່ຕາເຂົາ ເຫມືອນສິ່ງຂອງເພື່ອການຖືກ
ກວາດໄປເປັນຊະເລີຍ ໃນເວລາຄ່ຳເຈົ້າຈົ່ງອອກໄປຕໍ່ຫນ້າຕໍ່ຕາເຂົາ ອອກໄປຢ່າງຜູ້ຖືກກວາດໄປເປັນຊະເລີຍ
5 ຈົ່ງເຈາະກຳແພງຕໍ່ຫນ້າຕໍ່ຕາເຂົາ ແລ້ວອອກໄປຕາມຮູກຳແພງນັ້ນ
6 ຈົ່ງຍົກສິ່ງຂອງໃສ່ບ່າຂອງເຈົ້າຕໍ່ຫນ້າຕໍ່ຕາເຂົາ ແລ້ວແບກອອກໄປໃນເວລາມືດ ເຈົ້າຈົ່ງຄຸມຫນ້າເສັຽຢ່າໃຫ້ເຫັນແຜ່ນ
ດິນ ເພາະເຮົາກະທຳໃຫ້ເຈົ້າເປັນຫມາຍສຳຄັນແກ່ເຊື້ອສາຍອິສຣາເອນ”
7 ຂ້າພະເຈົ້າກໍກະທຳຕາມທີ່ຂ້າພະເຈົ້າຮັບບັນຊາມາ ຂ້າພະເຈົ້ານຳສິ່ງຂອງອອກມາໃນເວລາກາງເວັນ ເຫມືອນສິ່ງ
ຂອງເພື່ອການກວາດໄປເປັນຊະເລີຍ ໃນເວລາຄ່ຳຂ້າພະເຈົ້າກໍເຈາະກຳແພງດ້ວຍມືຂອງຂ້າພະເຈົ້າເອງ ຂ້າພະເຈົ້າ
ອອກໄປໃນເວລາມືດ ແບກສັມພາຣະຂອງຂ້າພະເຈົ້າໄປຕໍ່ຫນ້າຕໍ່ຕາເຂົາ
8 ໃນຕອນເຊົ້າ ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
9 “ບຸດແຫ່ງມະນຸດເອີຍ, ເຊື້ອສາຍອິສຣາເອນຄືເຊື້ອສາຍທີ່ມັກກະບົດນັ້ນ ໄດ້ເວົ້າກັບເຈົ້າບໍ່ແມ່ນຫລືວ່າ “ເຈົ້າເຮັດ
ຫຍັງ”
10 ຈົ່ງກ່າວແກ່ເຂົາວ່າ “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຖ້ອຍຄຳໂອວາດນີ້ກ່ຽວກັບເຈົ້ານາຍຄົນນັ້ນໃນເຢຣູຊາເລັມ ແລະ
ເຊື້ອສາຍອິສຣາເອນທັງຫມົດຊຶ່ງຢູ່ໃນນະຄອນນັ້ນ”

11 ຈົ່ງກ່າວວ່າ "ຂ້າພະເຈົ້າເປັນຫມາຍສຳຄັນສຳລັບທ່ານ ທີ່ຂ້າພະເຈົ້າໄດ້ກະທຳແລ້ວນີ້ ເຂົາທັງຫລາຍຈະຖືກກະທຳຢ່າງດຽວກັນ ເຂົາຈະຖືກກວາດໄປເປັນຊະເລີຍ"

12 ແລະເຈົ້ານາຍຄົນນັ້ນຜູ້ຢູ່ຖ້າມກາງເຂົາ ຈະຍົກສິ່ງຂອງຂຶ້ນໃສ່ບ່າໃນເວລາມືດ ແລະອອກໄປ ເຂົາທັງຫລາຍຈະຄຸມຫນ້າຂອງທ່ານ ເພື່ອວ່າທ່ານຈະບໍ່ຫລຽວເຫັນແຜ່ນດິນດ້ວຍຕາຂອງທ່ານເອງ

13 ແລະເຮົາຈະກາງຂ່າຍຂອງເຮົາຄຸມທ່ານແລະທ່ານຈະຕິດກັບຂອງເຮົາ ແລະເຮົາຈະນຳທ່ານເຂົ້າໄປໃນບາບີໂລນແຜ່ນດິນຂອງຄົນຄັນເດອານ ເຖິງປານນັ້ນທ່ານກໍຍັງເບິ່ງບໍ່ເຫັນແຜ່ນດິນນັ້ນ ແລະທ່ານຈະຕ້ອງຕາຍທີ່ນັ້ນ

14 ບັນດາຜູ້ທີ່ຢູ່ຮອບທ່ານນັ້ນ ເຮົາຈະກະຈາຍເຂົາໄປຕາມລົມທຸກທິດທຸກທາງ ຮວມທັງຜູ້ຊ່ອຍແລະກອງທັບຂອງທ່ານດ້ວຍ ແລະເຮົາຈະຊັກດາບອອກໄລ່ຕາມເຂົາໄປ

15 ແລະເມື່ອເຮົາໃຫ້ເຂົາກະຈັດພັດພາກໄປຢູ່ຖ້າມກາງປະຊາຊາດ ແລະກະຈາຍາເຂົາໄປຕາມປະເທດຕ່າງໆເຂົາຈຶ່ງຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ

16 ແຕ່ເຮົາຈະໃຫ້ເຂົາບາງຄົນພົ້ນຈາກດາບ ຈາກການອຶດຢາກ ແລະຈາກໂຣກລະບາດ ເພື່ອເຂົາຈະໄດ້ເລົ່າການຫນ້າກຽດຫນ້າຊັງທັງສິ້ນຂອງເຂົາ ຖ້າມກາງປະຊາຊາດຊຶ່ງເຂົາຢູ່ນັ້ນ ແລະເຂົາຈະຮູ້ວ່າ ເຮົາ ຄືພຣະຜູ້ເປັນເຈົ້າ"

17 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ,

18 "ບຸດແຫ່ງມະນຸດເອີຍ, ຈົ່ງຮັບປະທານອາຫານຂອງເຈົ້າດ້ວຍຕົວສັ່ນ ແລະດື່ມນ້ຳດ້ວຍຄວາມສະທົກສະທ້ານແລະດ້ວຍຄວາມຢ້ານກົວ

19 ແລະກ່າວແກ່ປະຊາຊົນວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ກ່ຽວກັບຊາວເຢຣູຊາເລັມໃນແຜ່ນດິນອິສຣາເອນວ່າ ເຂົາຈະຮັບປະທານອາຫານຂອງເຂົາດ້ວຍຄວາມຢ້ານກົວ ແລະດື່ມນ້ຳດ້ວຍຄວາມສັ່ນສາຍ ເພາະວ່າສາຣະພັດທີ່ມີຢູ່ໃນແຜ່ນດິນຂອງເຂົາຈະຕ້ອງຖືກຍຶດໄປ ເນື່ອງດ້ວຍຄວາມທາຣຸນຂອງຄົນທັງປວງທີ່ຢູ່ໃນແຜ່ນດິນນັ້ນ

20 ແລະເມືອງທີ່ມີຄົນອາສັຍຢູ່ຈະຮົກຮ້າງ ແລະແຜ່ນດິນນັ້ນກໍຈະຮ້າງເປົ່າ ແລະເຈົ້າຈະຮູ້ວ່າ ເຮົາ ຄືພຣະຜູ້ເປັນເຈົ້າ"

21 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

22 "ບຸດແຫ່ງມະນຸດເອີຍ, ສຸພາສິດຊຶ່ງເຈົ້າທັງຫລາຍມີທີ່ກ່າວເຖິງແຜ່ນດິນອິສຣາເອນວ່າ "ວັນນັ້ນກໍໄກອອກໄປ ແລະນິມິດທຸກເລື່ອງບໍ່ກາຍເປັນຈິງຈັກເທື່ອ" ນັ້ນ ເຈົ້າຫມາຍວ່າຫຍັງ

23 ເຫດສັນນັ້ນຈົ່ງບອກເຂົາວ່າ "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາຈະໃຫ້ສຸພາສິດບົດນີ້ສິ້ນສຸດເສັຽທີ່ ເຂົາຈະບໍ່ໃຊ້ເປັນສຸພາສິດອີກໃນອິສຣາເອນ ແຕ່ຈົ່ງກ່າວແກ່ເຂົາວ່າ ວັນນັ້ນກໍໃກ້ພຽງຄືບ ແລະນິມິດທຸກເລື່ອງກໍຈະສຳເຣັດ

24 ເພາະຈະບໍ່ມີນິມິດປອມຫລືຄຳທຳນວາຍຕາມໃຈຄົນໃນເຊື້ອສາຍອິສຣາເອນອີກເລີຍ

25 ແຕ່ເຮົາຄືພຣະຜູ້ເປັນເຈົ້າຈະເວົ້າຄຳທີ່ເຮົາຈະເວົ້າ ແລະຈະຕ້ອງເປັນໄປຕາມຄຳນັ້ນຈະບໍ່ລ້າຊ້າຕໍ່ໄປອີກ ແຕ່ພຣະຜູ້ເປັນເຈົ້າກ່າວວ່າເຊື້ອສາຍທີ່ມັກກະບົດເອີຍ ໃນສມັຍຂອງເຈົ້ານີ້ແຫລະ ເຮົາຈະລັ່ນວາຈາແລະກະທຳຕາມນັ້ນ"

26 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

27 "ເບິ່ງແມ, ບຸດແຫ່ງມະນຸດເອີຍ, ເຊື້ອສາຍຂອງອິສຣາເອນກ່າວວ່າ "ນິມິດທີ່ເຂົາເຫັນເປັນເຣື່ອງຂອງອີກຫລາຍວັນຂ້າງຫນ້າ ແລະເຂົາປະກາດພຣະທັມເຖິງເວລາທີ່ຫ່າງໄກພຸ້ນ"

28 ເຫດສັນນັ້ນຈົ່ງກ່າວແກ່ເຂົາວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ບັນດາຖ້ອຍຄຳຂອງເຮົາຈະບໍ່ລໍຊ້າອີກຕໍ່ໄປເລີຍ ແຕ່ວາຈາທີ່ເຮົາລັ່ນອອກມານັ້ນຈະຕ້ອງເປັນໄປຈິງ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ"

## 13 ກ່າວໂທດຜູ້ປະກາດພຣະທັມປອມ

False Prophets Condemned

1 ຖ້ອຍຄຳຂອງພຣະເຈົ້າມາເຖິງຂ້າພະເຈົ້າວ່າ,

2 “ບຸດແຫ່ງມະນຸດເອີຍ, ເຈົ້າຈົ່ງປະກາດພຣະທັມກ່າວໂທດຜູ້ປະກາດພຣະທັມຂອງອິສຣາເອນ ຈົ່ງເຜີຍແລະກ່າວແກ່
ຄົນເຫລົ່ານັ້ນທີ່ປະກາດພຣະທັມຕາມໃຈຂອງຕົນວ່າ, “ຈົ່ງຟັງພຣະຄຳຂອງພຣະເຈົ້າ”
3 ພຣະເຈົ້າຊົງກ່າວດັ່ງນີ້ວ່າ, “ວິບັດແກ່ຜູ້ປະກາດພຣະທັມໂງ່ ຜູ້ຕິດຕາມວິນຍານຂອງຕົນເອງແລະບໍ່ເຄີຍໄດ້ເຫັນສິ່ງໃດ
ເລີຍ
4 ອິສຣາເອນເອີຍ ຜູ້ປະກາດພຣະທັມຂອງເຈົ້າເຫມືອນຫມາໄນຖ້ານກາງສິ່ງສລັກຫັກພັງ
5 ເຈົ້າບໍ່ໄດ້ຂຶ້ນໄປເຖິງກຳແພງຫລຸ ແລະບໍ່ໄດ້ສ້າງກຳແພງເພື່ອເຊື້ອສາຍອິສຣາເອນ ເພື່ອໃຫ້ຕັ້ງຢູ່ໄດ້ໃນສົງຄາມໃນວັນ
ແຫ່ງພຣະຜູ້ເປັນເຈົ້າ
6 ເຂົາທັງຫລາຍເຫັນນິມິດບໍ່ຈິງ ແລະທຳນວາຍຕົວະ ເຂົາກ່າວວ່າ “ພຣະຜູ້ເປັນເຈົ້າກ່າວວ່າ ໃນເມື່ອພຣະຜູ້ເປັນເຈົ້າບໍ່
ໄດ້ຊົງໃຊ້ເຂົາໄປ ເຖິງປານນັ້ນເຂົາກໍຍັງຫວັງທີ່ຈະໃຫ້ສຳເຣັດຕາມຖ້ອຍຄຳຂອງເຂົາ
7 ເຈົ້າໄດ້ເຄີຍເຫັນນິມິດບໍ່ຈິງ ແລະເຄີຍທຳນວາຍຕົວະບໍ່ແມ່ນຫລື ໃນເມື່ອເຈົ້າກ່າວວ່າ “ພຣະຜູ້ເປັນເຈົ້າກ່າວວ່າ ທັງທີ່
ເຮົາບໍ່ໄດ້ເວົ້າເລີຍ”
8 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ເພາະເຈົ້າກ່າວບໍ່ຈິງແລະໄດ້ເຫັນນິມິດມຸສາ ພຣະຜູ້ເປັນເຈົ້າກ່າວວ່າ ເຫດ
ສັນນັ້ນ ເຮົາເປັນປໍຣະປັກກັບເຈົ້າ
9 ມືຂອງເຮົາຈະຕໍ່ສູ້ຜູ້ປະກາດພຣະທັມຜູ້ເຫັນນິມິດບໍ່ຈິງແລະຜູ້ໃຫ້ຄຳທຳນວາຍຕົວະ ເຂົາຈະບໍ່ໄດ້ເຂົ້າໄປໃນສະພາ
ແຫ່ງປະຊາຊົນຂອງເຮົາ ຫລືຂຶ້ນທະບຽນຢູ່ໃນທະບຽນຂອງເຊື້ອສາຍອິສຣາເອນ ແລະເຂົາຈະບໍ່ໄດ້ເຂົ້າໃນແຜ່ນດິນອິ
ສຣາເອນ ແລະເຈົ້າຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ
10 ເພາະວ່າເຂົາທັງຫລາຍໄດ້ນຳປະຊາຊົນຂອງເຮົາໃຫ້ຫລົງ ໂດຍກ່າວວ່າ “ສັນຕິພາບ” ເມື່ອບໍ່ມີສັນຕິພາບເລີຍ ແລະ
ເພາະວ່າເມື່ອມີຄົນສ້າງກຳແພງ ຜູ້ປະກາດພຣະທັມນັ້ນກໍເອົາປູນຂາວທາໂອບ
11 ຈົ່ງກ່າວແກ່ຜູ້ທີ່ເອົາປູນຂາວທານັ້ນວ່າ ກຳແພງນັ້ນຈະພັງ ຈະມີຝົນຕົກຖ້ວມ ຫມາກເຫັບໃຫຍ່ຈະຕົກລົງມາ ແລະລົມ
ພະຍຸຈະເກີດຂຶ້ນ
12 ເມື່ອກຳແພງພັງລົງ ເຂົາຈະບໍ່ເວົ້າກັບທ່ານຫລືວ່າ ປູນຂາວທີ່ເຈົ້າໄດ້ທານັ້ນຢູ່ໃສ
13 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາຈະກະທຳໃຫ້ລົມພະຍຸເກີດຂຶ້ນດ້ວຍຄວາມພິໂຣດຂອງເຮົາ ແລະດ້ວຍ
ຄວາມໂກດຂອງເຮົາຈະມີຝົນຖ້ວມ ດ້ວຍຄວາມພິໂຣດຂອງເຮົາ ຈະມີຫມາກເຫັບໃຫຍ່ທຳລາຍເສັຽ
14 ແລະເຮົາຈະພັງກຳແພງຊຶ່ງເຈົ້າທາດ້ວຍປູນຂາວນັ້ນ ແລະໃຫ້ພັງລົງເຖິງດິນ ຮາກກຳແພງນັ້ນຈຶ່ງຈະປາກົດ ເມື່ອກຳ
ແພງພັງ ເຈົ້າທັງຫລາຍຈະພິນາດຢູ່ທີ່ກາງກຳແພງ ແລະເຈົ້າຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ
15 ເຮົາຈະໃຫ້ຄວາມພິໂຣດຂອງເຮົາສຳເຣັດເທິງກຳແພງແລະເທິງຄົນເຫລົ່ານັ້ນທີ່ທາກຳແພງດ້ວຍປູນຂາວ ແລະເຮົາຈະ
ເວົ້າກັບເຈົ້າວ່າ ກຳແພງບໍ່ມີອີກແລ້ວ ຜູ້ທີ່ທາປູນຂາວກໍບໍ່ມີດ້ວຍ
16 ຄືຜູ້ປະກາດພຣະທັມ ອິສຣາເອນຜູ້ປະກາດພຣະທັມກ່ຽວເຖິງກຸງເຢຣູຊາເລັມ ແລະໄດ້ເຫັນນິມິດແຫ່ງສັນຕິພາບຂອງ
ເມືອງນັ້ນ ໃນເມື່ອບໍ່ມີສັນຕິພາບ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
17 “ເຈົ້າ ບຸດແຫ່ງມະນຸດເອີຍ, ເຈົ້າຈົ່ງມຸ້ງຫນ້າຕໍ່ສູ້ບັນດາບຸດສາວແຫ່ງຊົນຊາດຂອງເຈົ້າ ຜູ້ປະກາດພຣະທັມຕາມ
ຄວາມຄິດຂອງຕົນເອງ ຈົ່ງປະກາດພຣະທັມກ່າວໂທດເຂົາ
18 ແລະກ່າວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ວິບັດແຫ່ງຍິງທີ່ຫຍິບຜ້າຍັນສຳລັບຂໍ້ມື ແລະເຮັດຜ້າຄຸມຫົວໃຫ້ຄົນທຸກ
ຂນາດ ເພື່ອລ້າວິນຍານອື່ນໆໃຫ້ຄົງຊີວິດຢູ່ເພື່ອຜົນກຳໄລຂອງເຈົ້າຫລື
19 ເຈົ້າໄດ້ລຶບກຽດຂອງເຮົາຖ້າມກາງໄພ່ພົນຂອງເຮົາ ດ້ວຍເຫັນແກ່ເຂົ້າບເລເປັນກຳໆ ແລະປ່ຽງເຂົ້າຈີ່ເທົ່ານັ້ນ ຄົນທີ່ບໍ່
ຄວນຈະຕາຍ ເຈົ້າກໍກະທຳໃຫ້ຕາຍເສັຽ ຄົນທີ່ບໍ່ຄວນໄວ້ຊີວິດ ເຈົ້າກໍໄວ້ຊີວິດ ໂດຍເຈົ້າເວົ້າຕົວະຕໍ່ໄພ່ພົນທີ່ຟັງຄຳ
ຕົວະ

20 "ດ້ວຍເຫດນີ້ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຕໍ່ສູ້ຜ້າຍັນຂອງເຈົ້າ ຊຶ່ງເຈົ້າໃຊ້ລ້າວິນຍານເຫມືອນດັ່ງລ້ານົກ
ແລະເຮົາຈະຈີກຜ້າຍັນນັ້ນເສັຽຈາກແຂນຂອງເຈົ້າທັງຫລາຍ ແລະເຮົາຈະປ່ອຍວິນຍານເຫລົ່ານັ້ນໄປ ຄືວິນຍານທີ່ເຈົ້າ
ລ່າເຫມືອນດັ່ງລ້ານົກ
21 ຜ້າຄຸມຂອງເຈົ້າ ເຮົາກໍຈະຈີກເສັຽດ້ວຍ ແລະຊ່ອຍກູ້ໄພ່ພົນຂອງເຮົາໃຫ້ພົ້ນຈາກມືຂອງເຈົ້າ ແລະເຂົາຈະບໍ່ເປັນເຫຍື່ອ
ໃນມືຂອງເຈົ້າຕໍ່ໄປ ແລະເຈົ້າຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ
22 ເພາະເຈົ້າໄດ້ກະທຳໃຫ້ຄົນຊອບທັມທໍ້ຖອຍໃຈດ້ວຍການຕົວະ ທັງທີ່ເຮົາບໍ່ໄດ້ກະທຳໃຫ້ເຂົາເສົ້າໃຈເລີຍ ແລະເຈົ້າໄດ້
ຫນຸນໃຈຄົນອະທັມ ເພື່ອບໍ່ໃຫ້ເຂົາຫັນກັບຈາກທາງອະທັມຂອງເຂົາຈະໄດ້ຮັກສາຊີວິດຂອງເຂົາໄວ້
23 ເຫດສັນນັ້ນເຈົ້າຈະໄດ້ເຫັນນິມິດທີ່ຫລອກລວງ ຫລືກະທຳການທຳນວາຍອີກ ເຮົາຈະຊ່ອຍກູ້ໄພ່ພົນຂອງເຮົາໃຫ້ພົ້ນ
ຈາກມືຂອງເຈົ້າ ແລ້ວເຈົ້າຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ"

## 14 ການພິພາກສາຄົນໄຫວ້ຮູບໂຄຣົບ ຜູ້ປຶກສາຜູ້ປະກາດພຣະທັມປອມ

God's Judgments Justified

1 ພວກຜູ້ໃຫຍ່ຂອງອິສຣາເອນບາງຄົນມາຫາຂ້າພະເຈົ້າ ແລະມານັ່ງຢູ່ຫນ້າຂ້າພະເຈົ້າ
2 ແລະຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
3 "ບຸດແຫ່ງມະນຸດເອີຍ, ຄົນເຫລົ່ານີ້ໄດ້ຍຶດເອົາຮູບໂຄຣົບຂອງເຂົາໄວ້ໃນໃຈ ແລະວາງສິ່ງທີ່ສະດຸດໃຫ້ທຳບາບຜິດໄວ້
ຂ້າງຫນ້າເຂົາ ຄວນທີ່ເຮົາຈະຍອມຕົວໃຫ້ເຂົາຖາມເຮົາຫລື
4 ເຫດສັນນັ້ນຈົ່ງເວົ້າກັບເຂົາ ແລະກ່າວແກ່ເຂົາວ່າ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ ຄົນໃດໃນເຊື້ອສາຍອິສຣາເອນເອົາ
ຮູບໂຄຣົບຂອງເຂົາໄວ້ໃນໃຈ ແລະວາງສິ່ງທີ່ສະດຸດໃຫ້ທຳບາບຜິດໄວ້ຂ້າງຫນ້າເຂົາ ແລະຍັງມາຫາຜູ້ປະກາດພຣະ
ທັມ ເຮົາຄືພຣະຜູ້ເປັນເຈົ້າຈະຕອບເຂົາເອງໃນເຣື່ອງຮູບໂຄຣົບຫລວງຫລາຍຂອງເຂົານັ້ນ
5 ເພື່ອເຮົາຈະໄດ້ຍຶດຈິດໃຈຂອງເຊື້ອສາຍອິສຣາເອນ ຜູ້ເຫີນຫ່າງໄປຈາກເຮົາທຸກຄົນດ້ວຍເຣື່ອງຮູບໂຄຣົບຂອງເຂົາ
6 "ເຫດສັນນັ້ນຈົ່ງກ່າວແກ່ເຊື້ອສາຍອິສຣາເອນວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງກັບໃຈ ແລະຫັນກັບຈາກຮູບໂຄຣົບ
ຂອງເຈົ້າເສັຽ ແລະຈົ່ງຫັນຫນ້າຂອງເຈົ້າເສັຽຈາກສິ່ງຫນ້າກຽດຫນ້າຊັງຂອງເຈົ້າ
7 ເພາະວ່າຄົນໃດໃນເຊື້ອສາຍອິສຣາເອນ ຫລືຄົນຕ່າງດ້າວຄົນໃດທີ່ອາສັຍຢູ່ໃນອິສຣາເອນ ຜູ້ຊຶ່ງແຍກຕົວເຂົາຈາກເຮົາ
ຍຶດເອົາຮູບໂຄຣົບຂອງເຂົາໄວ້ໃນໃຈຂອງເຂົາ ແລະວາງສິ່ງທີ່ສະດຸດໃຫ້ທຳບາບຜິດໄວ້ຊື່ຫນ້າຂອງເຂົາ ແລ້ວຍັງຈະ
ມາຫາຜູ້ປະກາດພຣະທັມເພື່ອຂໍຖາມຈາກເຮົາເພື່ອປໂຍດຂອງເຂົາ ເຮົາຄືພຣະຜູ້ເປັນເຈົ້າຈະຕອບເຂົາເອງ
8 ແລະເຮົາຈະມຸ້ງຫນ້າຂອງເຮົາຕໍ່ສູ້ຄົນນັ້ນ ເຮົາຈະທຳໃຫ້ເຂົາເປັນຫມາຍສຳຄັນແລະເປັນຂີ້ປາກ ແລະກຳຈັດເຂົາເສັຽ
ຈາກຖ້າມກາງໄພ່ພົນຂອງເຮົາ ແລະເຈົ້າຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ
9 ຖ້າຜູ້ປະກາດພຣະທັມຖືກຫລອກລວງກ່າວຄຳນຶ່ງຄຳໃດ ເຮົາຄືພຣະຜູ້ເປັນເຈົ້າໄດ້ລວງຜູ້ປະກາດພຣະທັມຄົນນັ້ນ
ແລະເຮົາຈະຢຽດມືຂອງເຮົາອອກຕໍ່ສູ້ເຂົາ ແລະຈະທຳລາຍເຂົາເສັຽຈາກຖ້າມກາງອິສຣາເອນໄພ່ພົນຂອງເຮົາ
10 ເຂົາທັງຫລາຍຈະຕ້ອງທົນຮັບໂທດຂອງເຂົາ (ໂທດຂອງຜູ້ປະກາດພຣະທັມ ແລະໂທດຂອງຜູ້ຂໍຖາມຈະໄດ້ຮັບ
ເຫມືອນກັນ)
11 ເພື່ອວ່າເຊື້ອສາຍອິສຣາເອນຈະບໍ່ຫລົງຫນີໄປຈາກເຮົາອີກ ຫລືບໍ່ກະທຳຕົວໃຫ້ມົນທິນດ້ວຍການທໍຣະຍົດຂອງຕົນອີກ
ແຕ່ເຂົາທັງຫລາຍຈະເປັນໄພ່ພົນຂອງເຮົາ ແລະເຮົາຈະເປັນພຣະຜູ້ເປັນເຈົ້າຂອງເຂົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ"

### ຄວາມຍຸດຕິທັມຂອງການທີ່ພຣະເຈົ້າຊົງລົງໂທດເຢຣູຊາເລັມ

12 ແລະຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

13 “ບຸດແຫ່ງມະນຸດເອີຍ, ເມື່ອແຜ່ນດິນກະທຳບາບຕໍ່ເຮົາໂດຍປະພຶດທໍຣະຍົດ ແລະເຮົາຢຽດມືຂອງເຮົາອອກຕໍ່ສູ້ແຜ່ນ
ດິນນັ້ນ ແລະທຳລາຍມະນຸດແລະສັດເສັຽຈາກແຜ່ນດິນນັ້ນ
14 ເຖິງແມ່ນວ່າມະນຸດທັງສາມນີ້ ຄື ໂນອາ ດານີເອນ ແລະໂຢບ ຢູ່ໃນແຜ່ນດິນນັ້ນ ເຂົາກໍຈະກູ້ເອົາແຕ່ຊີວິດຂອງຕົນເທົ່າ
ນັ້ນ ອອກມາດ້ວຍຄວາມຊອບທັມຂອງເຂົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້
15 ຖ້າເຮົາກະທຳໃຫ້ສັດຮ້າຍຜ່ານເຂົ້າແຜ່ນດິນນັ້ນ ແລະສັດເຫລົ່ານັ້ນທຳໃຫ້ຄົນຫມົດໄປ ໃຫ້ເປັນທີ່ຮ້າງເປົ່າ ຈົນມະນຸດ
ຜ່ານເຂົ້າໄປບໍ່ໄດ້ເພາະສັດປ່ານັ້ນ
16 ພຣະຜູ້ເປັນເຈົ້າຊົງກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເຖິງວ່າບຸຣຸດທັງສາມຢູ່ໃນແຜ່ນດິນນັ້ນ ເຂົາທັງຫລາຍຈະຊ່ອຍບຸດທັງ
ຊາຍຍິງໃຫ້ລອດບໍ່ໄດ້ ສະເພາະຕົວເຂົາເອງຈະລອດໄປໄດ້ ແຕ່ແຜ່ນດິນນັ້ນຈະຮ້າງເປົ່າ
17 ຫລືຖ້າເຮົານຳດາບມາຍັງແຜ່ນດິນນັ້ນ ແລະກ່າວວ່າ ໃຫ້ດາບຜ່ານຂ້າມແຜ່ນດິນນັ້ນ ເຮົາຈະທຳລາຍມະນຸດແລະສັດ
ເສັຽຈາກແຜ່ນດິນນັ້ນ
18 ພຣະຜູ້ເປັນເຈົ້າກ່າວວ່າ ເຖິງແມ່ນບຸຣຸດທັງສາມຈະຢູ່ໃນນັ້ນ ເຮົາມີຊີວິດຢູ່ສັນໃດ ເຂົາທັງຫລາຍຈະຊ່ອຍບຸດທັງຊາຍ
ຍິງໃຫ້ລອດບໍ່ໄດ້ ສະເພາະຕົວເຂົາເອງຈະລອດໄປໄດ້
19 ຫລືຖ້າເຮົາສົ່ງໂຣກລະບາດເຂົ້າມາໃນແຜ່ນດິນນັ້ນ ແລະລະບາຍຄວາມພິໂຣດຂອງເຮົາອອກເຫນືອເມືອງນັ້ນດ້ວຍ
ເລືອດ ເພື່ອກຳຈັດມະນຸດແລະສັດຈາກແຜ່ນດິນນັ້ນເສັຽ
20 ເຖິງແມ່ນວ່າ ໂນອາ ດານີເອນ ແລະໂຢບຢູ່ໃນແຜ່ນດິນນັ້ນ ພຣະຜູ້ເປັນເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເຂົາທັງ
ຫລາຍຈະຊ່ອຍ  ບຸດທັງຊາຍຍິງໃຫ້ລອດບໍ່ໄດ້ ເຂົາຈະຊ່ອຍສະເພາະຊີວິດຂອງເຂົາໄວ້ໄດ້ດ້ວຍຄວາມຊອບທັມຂອງ
ເຂົາ
21 “ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈະຮ້າຍແຮງຍິ່ງກວ່ານັ້ນຫລາຍເທົ່າໃດ ເມື່ອເຮົາສົ່ງພັຍແຫ່ງການພິພາກສາທັງສີ່
ປະການຂອງເຮົາມາຫນືອເຢຣູຊາເລັມ ຄືດາບ ການອຶດຢາກ ສັດຮ້າຍແລະໂຣກລະບາດ ເພື່ອກຳຈັດມະນຸດແລະສັດ
ເສັຽຈາກເມືອງນັ້ນ
22 ເບິ່ງແມ, ເຖິງຈະມີຄົນລອດຕາຍເຫລືອຢູ່ໃນນະຄອນນັ້ນ ນຳເອົາບຸດຊາຍແລະບຸດຍິງທັງຫລາຍຂອງເຂົາອອກມາ
ເມື່ອເຂົາທັງຫລາຍອອກມາຫາເຈົ້າ ແລະເຈົ້າໄດ້ເຫັນທາງແລະການກະທຳຂອງເຂົາ ເຈົ້າຈະເບົາໃຈໃນເຣື່ອງການ
ຮ້າຍ ຊຶ່ງເຮົາໄດ້ນຳມາເຫນືອເຢຣູຊາເລັມ ອັນໄດ້ນຳມາເຫນືອນະຄອນນັ້ນ
23 ຄົນເຫລົ່ານັ້ນຈະທຳໃຫ້ເຈົ້າເບົາໃຈ ເມື່ອເຈົ້າໄດ້ເຫັນທາງແລະການກະທຳທັງຫລາຍຂອງເຂົາແລ້ວ ແລະເຈົ້າຈະຊາບ
ວ່າ ເຮົາບໍ່ໄດ້ກະທຳບັນດາສິ່ງທີ່ເຮົາໄດ້ກະທຳໄວ້ແລ້ວໃນນະຄອນນັ້ນດ້ວຍປາສຈາກເຫດຜົນ ພຣະຜູ້ເປັນເຈົ້າກ່າວ
ດັ່ງນີ້ແຫລະ”

## 15 ເຢຣູຊາເລັມເຫມືອນເຄືອອະງຸ່ນທີ່ໃຊ້ບໍ່ໄດ້

The Useless Vine

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 “ບຸດແຫ່ງມະນຸດເອີຍ, ໄມ້ຕົ້ນເຄືອອະງຸ່ນ ຄືໄມ້ກິ່ງອະງຸ່ນຊຶ່ງຢູ່ໃນຫມູ່ພວກໄມ້ປ່າ ວິເສດກວ່າໄມ້ຢ່າງອື່ນຫລື
3 ເຂົາເອົາໄມ້ຕົ້ນອະງຸ່ນເຮັດສິ່ງນຶ່ງສິ່ງໃດໄດ້ຫລື ຄົນເອົາໄປເຮັດຂໍສຳລັບແຂວນພາຊນະອັນໃດຫລື
4 ເບິ່ງແມ, ເຂົາໃຊ້ເປັນຟືນໃສ່ໄຟ ເມື່ອໄຟໄຫມ້ປາຍທັງສອງແລ້ວ ທາງກາງກໍເປັນຖ່ານ ຈະໃຊ້ປໂຍດອັນໃດໄດ້ຫລື
5 ເບິ່ງແມ, ເມື່ອມັນຍັງດີຢູ່ກໍບໍ່ໄດ້ໃຊ້ປໂຍດຫຍັງ ເມື່ອຖືກໄຟໄຫມ້ເປັນຖ່ານແລ້ວແຮ່ງມີປໂຍດນ້ອຍລົງ ຈະໃຊ້ເຮັດ
ການຫຍັງໄດ້ແດ່
6 ເຫດສັນນັ້ນພຣະຜູ້ເປັນເຈົ້າຈຶ່ງກ່າວດັ່ງນີ້ວ່າ ໄມ້ຕົ້ນອະງຸ່ນຊຶ່ງຢູ່ຖ້າມກາງໄມ້ປ່າ ເຮົາຖິ້ມໃຫ້ມັນເປັນຟືນໃສ່ໄຟເສັຽສັນ
ໃດ ເຮົາຈະຖິ້ມຊາວເຢຣູຊາເລັມສັນນັ້ນ

7 ເຮົາຈະມຸ້ງໜ້າຂອງເຮົາຕໍ່ສູ້ເຂົາ ເຖິງວ່າເຂົາຈະໜີອອກຈາກໄຟ ໄຟກໍຍັງຈະເຜົາຜານເຂົາ ແລະເມື່ອເຮົາມຸ່ງໜ້າ
ຂອງເຮົາຕໍ່ສູ້ເຂົາ ເຈົ້າຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ
8 ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຈະກະທຳໃຫ້ແຜ່ນດິນນັ້ນຮ້າງເປົ່າ ເພາະເຂົາໄດ້ປະພຶດທໍຣະຍົດ

## 16 ກຸງເຢຣູຊາເລັມບໍ່ຊື່ສັດ

God’s Faithless Bride

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ,
2 ບຸດແຫ່ງມະນຸດເອີຍ, ຈົ່ງໃຫ້ເຢຣູຊາເລັມຊາບເຖິງສິ່ງທີ່ໜ້າກຽດຊັງຂອງຕົວ
3 ແລະກ່າວວ່າ ພຣະຜູ້ເປັນເຈົ້າກ່າວຢ່າງນີ້ແກ່ເຢຣູຊາເລັມວ່າ ຕົ້ນເດີມແລະກຳເນີດຂອງເຈົ້າເປັນແຜ່ນດິນຂອງຄົນກາ
ນາອານ ພໍ່ຂອງເຈົ້າເປັນຄົນອາໂມຣິດ ແລະແມ່ຂອງເຈົ້າເປັນຄົນຮິດຕີ
4 ເວົ້າເຖິງກຳເນີດຂອງເຈົ້າ ໃນວັນທີ່ເຈົ້າເກີດມານັ້ນເຂົາບໍ່ໄດ້ຕັດສາຍສະບື ແລະເຂົາກໍບໍ່ໄດ້ລ້າງຊຳຣະເຈົ້າ ບໍ່ໄດ້ເອົາ
ເກືອທາ ບໍ່ໄດ້ເອົາຜ້າພັນເຈົ້າໄວ້
5 ບໍ່ມີຕາຈັກໜ່ວຍໄດ້ສົງສານເຈົ້າ ທີ່ຈະເມດຕາເຈົ້າແລະກະທຳສິ່ງເຫລົ່ານີ້ໃຫ້ເຈົ້າ ເຈົ້າຖືກປະຖິ້ມໃນພື້ນທົ່ງ ເພາະໃນ
ວັນທີ່ເຈົ້າເກີດນັ້ນເຈົ້າເປັນທີ່ໜ້າລັງກຽດ
6 “ເມື່ອເຮົາຜ່ານເຈົ້າໄປ ເຫັນເຈົ້າດີ້ນຢູ່ໃນກອງເລືອດຂອງເຈົ້າ ເຮົາກໍເວົ້າກັບເຈົ້າໃນກອງເລືອດຂອງເຈົ້າວ່າ “ຈົ່ງມີຊີ
ວິດຢູ່
7 ແລະຈະເຣີນເຕີບໃຫຍ່ຂຶ້ນ ເຮົາຈະກະທຳໃຫ້ເຈົ້າເຫມືອນຢ່າງພືດໃນທົ່ງນາ” ເຈົ້າກໍໃຫຍ່ແລະສູງຂຶ້ນຈົນເປັນສາວເຕັມ
ໂຕ ໜ້າເອິກຂອງເຈົ້າກໍກໍ່ຮູບຂຶ້ນມາ ແລະຂົນຂອງເຈົ້າກໍງອກ ແຕ່ເຈົ້າພັດເປືອຍຕົວ
8 “ເມື່ອເຮົາຜ່ານເຈົ້າໄປອີກຄັ້ງນຶ່ງແລະຫລຽວເບິ່ງເຈົ້າ ເບິ່ງແມ, ເຈົ້າມີອາຍຸຮູ້ຈັກຮັກແລ້ວ ເຮົາກໍຂຍາຍຣິມປີກຄຸມເຈົ້າ
ໄວ້ ພຣະຜູ້ເປັນເຈົ້າກ່າວວ່າ ເຮົາກໍປະຕິຍານແລະກະທຳຄຳສັນຍາກັບເຈົ້າ ແລະເຈົ້າກໍເປັນຂອງເຮົາ
9 ເຮົາກໍເອົາເຈົ້າອາບນ້ຳ ລ້າງເລືອດເສັຽຈາກເຈົ້າ ແລະເຈີມເຈົ້າດ້ວຍນ້ຳມັນ
10 ເຮົາແຕ່ງຕົວເຈົ້າດ້ວຍເສື້ອປັກ ແລະເອົາເກີບໜັງສວມໃຫ້ເຈົ້າ ເຮົາພັນເຈົ້າໄວ້ດ້ວຍຜ້າປ່ານເນື້ອລະອຽດແລະຄຸມ
ເຈົ້າໄວ້ດ້ວຍຜ້າຣາຄາແພງ
11 ເຮົາແຕ່ງຕົວເຈົ້າດ້ວຍເຄື່ອງອາພອນ ສວມກຳໄລມືໃຫ້ເຈົ້າ ແລະສວມສ້ອຍຄໍໃຫ້ເຈົ້າ
12 ເຮົາເອົາແຫວນໃສ່ດັງເຈົ້າແລະໃສ່ຕຸ້ມຫູທີ່ຫູຂອງເຈົ້າ ແລະສວມມົງກຸດໄວ້ເທິງຫົວຂອງເຈົ້າ
13 ເຮົາກໍປະດັບເຈົ້າດ້ວຍທອງຄຳແລະເງິນ ແລະເຄື່ອງນຸ່ງຂອງເຈົ້າກໍເປັນຜ້າປ່ານເນື້ອລະອຽດ ຜ້າຣາຄາແພງແລະຜ້າ
ປັກ ເຈົ້າກິນຍອດແປ້ງ ນ້ຳເຜິ້ງ ແລະນ້ຳມັນ ເຈົ້າງາມເລີດບາດຕາບາດໃຈ ແລະເຈົ້າຈະເຣີນຂຶ້ນເປັນຊັ້ນເຈົ້າ
14 ຊື່ສຽງຂອງເຈົ້າກໍລືໄປຖ້ວນກາງປະຊາຊາດເພາະຄວາມງາມຂອງເຈົ້າດ້ວຍຄວາມງາມນັ້ນກໍສົມບູນ ເນື່ອງຈາກຄວາມ
ສະງ່າງາມທີ່ເຮົາໄດ້ຫຸ້ມເຫໃຫ້ເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
15 “ແຕ່ເຈົ້າວາງໃຈໃນຄວາມງາມຂອງເຈົ້າ ແລະໄດ້ຫລິ້ນຊູ້ເພາະຊື່ສຽງຂອງເຈົ້າບໍ່ວ່າຜູ້ໃດຈະຜ່ານມາ ເຈົ້າກໍໃຫ້ຫລົງລະ
ເລີງໄປດ້ວຍການຫລິ້ນຊູ້ຂອງເຈົ້າ
16 ເຈົ້າເອົາເຄື່ອງນຸ່ງຂອງເຈົ້າແດ່ ແລະເຈົ້າໄດ້ສ້າງບ່ອນສູງທັງຫລາຍທີ່ຕ່າງໆ ປະດັບຢ່າງຫຣູຫຣາ ແລ້ວກໍຫລິ້ນຊູ້ຢູ່ເທິງ
ນັ້ນ ບໍ່ເຄີຍມີເຫມືອນຢ່າງນີ້ ຕໍ່ໄປກໍບໍ່ມີເຫມືອນ
17 ເຈົ້າຍັງເອົາເຄື່ອງຮູບເອ້ອັນງາມຂອງເຈົ້າ ຊຶ່ງເປັນທອງຄຳຂອງເຮົາ ແລະເງິນຂອງເຮົາ ຊຶ່ງເຮົາໄດ້ໃຫ້ແກ່ເຈົ້າ ແລ້ວ
ເຈົ້າສ້າງເປັນຮູບຜູ້ຊາຍສຳລັບເຈົ້າ ແລະເຈົ້າກໍຫລິ້ນຊູ້ຢູ່ກັບຮູບເຫລົ່ານັ້ນ
18 ເຈົ້າເອົາເຄື່ອງແຕ່ງກາຍທີ່ປັກໄປຫົ່ມຮູບເຫລົ່ານັ້ນໄວ້ ແລະວາງນ້ຳມັນແລະເຄື່ອງຫອມຂອງເຮົາໄວ້ຂ້າງໜ້າມັນ

19 ອາຫານທີ່ເຮົາໃຫ້ແກ່ເຈົ້າກໍເຫມືອນກັນ ຄືເຮົາລ້ຽງເຈົ້າດ້ວຍຍອດແປ້ງ ນ້ຳມັນ ແລະນ້ຳເຜິ້ງ ເຈົ້າກໍເອົາມາວາງຂ້າງ
ຫນ້າມັນ ໃຫ້ເປັນກິ່ນຫອມທີ່ເພິ່ງພໍໃຈ ແລະກໍເປັນຢ່າງນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
20 ນອກຈາກນີ້ ເຈົ້າໄດ້ນຳບຸດຊາຍຂອງເຈົ້າແລະບຸດຍິງຂອງເຈົ້າ ຊຶ່ງເຈົ້າໄດ້ໃຫ້ບັງເກີດມາເພື່ອເຮົາ ແລະເຈົ້າກໍໄດ້
ຖວາຍບູຊາແກ່ມັນເພື່ອໃຫ້ມັນເຜົາຜານ ການຫລິ້ນຊູ້ຂອງເຈົ້າເປັນສິ່ງເລັກນ້ອຍຫລື
21 ເຈົ້າຈຶ່ງໄດ້ຂ້າລູກຂອງເຮົາຖວາຍແກ່ຮູບເຫລົ່ານັ້ນໂດຍໃຫ້ລຸຍໄຟ
22 ຕລອດສິ່ງອັນຫນ້າກຽດຊັງຂອງເຈົ້າ ແລະການຫລິ້ນຊູ້ຂອງເຈົ້າ ເຈົ້າບໍ່ໄດ້ຈົດຈຳວັນທີ່ເຈົ້າຍັງນ້ອຍຢູ່ ເມື່ອເຈົ້າເປືອຍ
ຕົວແລະດີ້ນກະແດ່ວໆຢູ່ໃນກອງເລືອດຂອງເຈົ້າ
23 “ພາຍຫລັງຈາກຄວາມຊົ່ວຮ້າຍທັງສິ້ນຂອງເຈົ້າ (ພຣະຜູ້ເປັນເຈົ້າກ່າວວ່າ ວິບັດ ວິບັດແກ່ເຈົ້າ)
24 ເຈົ້າໄດ້ສ້າງຫ້ອງຫລັງຄາໂຄ້ງສຳລັບຕົວ ລານເມືອງທຸກແຫ່ງເຈົ້າກໍສ້າງສະຖານນະມັສການທີ່ສູງສຳລັບຕົວ
25 ຫົວຖນົນທຸກແຫ່ງເຈົ້າໄດ້ກໍ່ສ້າງບ່ອນສູງຂອງເຈົ້າ ແລະເອົາຄວາມງາມຂອງເຈົ້າມາທຳສິ່ງທີ່ຫນ້າກຽດຊັງ ອ້າຂາຂອງ
ເຈົ້າໃຫ້ຜູ້ທີ່ຜ່ານໄປມາບໍ່ວ່າໃຜ ແລະທະວີການຫລິ້ນຊູ້ຂອງເຈົ້າ
26 ເຈົ້າຢ່າຫລິ້ນຊູ້ກັບຄົນເອຢິບ ຊຶ່ງເປັນເພື່ອນບ້ານທີ່ມີຕັນຫາຫລາຍ ທະວີການຫລິ້ນຊູ້ຂອງເຈົ້າເພື່ອກະທຳໃຫ້ເຮົາພິ
ໂຣດ
27 ເບິ່ງແມ, ເຮົາຈຶ່ງຢຽດມືຂອງເຮົາອອກຕໍ່ສູ້ເຈົ້າ ແລະລົດອາຫານສ່ວນແບ່ງຂອງເຈົ້າລົງ ແລະມອບເຈົ້າໄວ້ໃຫ້ແກ່ສັດຕ
ຣູຂອງເຈົ້າໃຫ້ເຂົາກະທຳຕາມໃຈຊອບ ຄືບັນດາບຸດສາວຄົນຟີລິສຕິນ ຜູ້ຊຶ່ງລະອາຍໃນຄວາມປະພຶດອັນມີຣາຄະ
ຕັນຫາຂອງເຈົ້າ
28 ເຈົ້າຍັງຫລິ້ນຊູ້ກັບຄົນອັສຊີເຣັຽດ້ວຍ ເພາະວ່າເຈົ້າບໍ່ຮູ້ຈັກອີ່ມ ເຈົ້າຫລິ້ນຊູ້ກັບເຂົາທັງຫລາຍ ເຖິງປານນັ້ນເຈົ້າກໍຍັງບໍ່
ອີ່ມໃຈ
29 ເຈົ້າຍັງທະວີການຫລິ້ນຊູ້ຂອງເຈົ້າກັບແຜ່ນດິນນັກທຸຣະກິດຂອງຄົນຄັນເດອາ ເຖິງແມ່ນກັບແຜ່ນດິນນີ້ເຈົ້າກໍຍັງບໍ່ອີ່ມ
ໃຈ
30 “ພຣະຜູ້ເປັນເຈົ້າກ່າວວ່າ ເຈົ້າໄດ້ເຮັດສິ່ງທັງຫມົດເຫລົ່ານັ້ນ ດັ່ງໂສເພນີທີ່ບໍ່ມີຢາງອາຍ
31 ຄືສ້າງຫ້ອງຫລັງຄາໂຄ້ງໄວ້ທີ່ຫົວຖນົນທຸກແຫ່ງ ແລະໄດ້ຕັ້ງບ່ອນສູງຂອງເຈົ້າໄວ້ຕາມລານເມືອງທຸກໆແຫ່ງ ເຖິງປານ
ນັ້ນເຈົ້າກໍຍັງບໍ່ເຫມືອນຍິງໂສເພນີ ເພາະເຈົ້າດູຫມິ່ນສິນຈ້າງ
32 ເປັນເມັຽທີ່ໂສເພນີຈັດແຈ່ງ ຍອມຕ້ອນຮັບແຂກແປກຫນ້າແທນທີ່ຈະຕ້ອນຮັບຜົວ
33 ຜູ້ຊາຍຍ່ອມໃຫ້ຂອງແກ່ຍິງໂສເພນີ ແຕ່ເຈົ້າກັບໃຫ້ສິ່ງຂອງແກ່ຄົນຮັກຂອງເຈົ້າ ໃຫ້ສິນບົນນຳໃຫ້ເຂົາເຂົ້າມາຈາກທຸ
ກດ້ານເພື່ອການຫລິ້ນຊູ້ຂອງເຈົ້າ
34 ສະນັ້ນ ເຈົ້າຈຶ່ງຜິດກັບຍິງອື່ນໃນເຣື່ອງການຫລິ້ນຊູ້ ແລະເຈົ້າກັບໃຫ້ສິນຈ້າງ ຂນະເມື່ອບໍ່ມີຜູ້ໃດໃຫ້ສິນຈ້າງແກ່ເຈົ້າ
ເພາະສະນັ້ນເຈົ້າຈຶ່ງແຕກຕ່າງກັນ
35 “ເຫດສັນນີ້ ຍິງແມ່ຈ້າງເອີຍ ຈົ່ງຟັງຖ້ອຍຄຳຂອງພຣະຜູ້ເປັນເຈົ້າ
36 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະຄວາມລະອາຍຂອງເຈົ້າກໍແຈ້ງປະຈັກ ແລະຕົວປະເປືອຍເຈົ້າໄດ້ປາກົດ ໃນການ
ຫລິ້ນຊູ້ຂອງເຈົ້າກັບຄົນຮັກຂອງເຈົ້າ ແລະເພາະຮູບໂຄຣົບອັນຫນ້າກຽດຊັງຂອງເຈົ້າທັງສິ້ນ ແລະເພາະໂລຫິດລູກ
ຂອງເຈົ້າທີ່ເຈົ້າຖວາຍໃຫ້ແກ່ມັນ
37 ເຫດສັນນັ້ນ ເບິ່ງແມ, ເຮົາຈະຮວບຮວມຄົນຮັກຂອງເຈົ້າທັງສິ້ນ ຊຶ່ງເປັນຜູ້ທີ່ເຈົ້າເພີດເພີນດ້ວຍ ທຸກຄົນທີ່ເຈົ້າຮັກ
ແລະທຸກຄົນທີ່ເຈົ້າກຽດ ເຮົາຈະຮວບຮວມເຂົາໃຫ້ມາຕໍ່ສູ້ເຈົ້າຈາກທຸກດ້ານ ແລະຈະເຜີຍຕົວປະເປືອຍຂອງເຈົ້າຕໍ່ຫນ້າ
ເຂົາ ເພື່ອເຂົາຈະໄດ້ເຫັນຕົວປະເປືອຍທັງສິ້ນຂອງເຈົ້າ
38 ເຮົາຈະພິພາກສາເຈົ້າດັ່ງທີ່ເຂົາພິພາກສາຍິງທີ່ລ່ວງປະເວນີ ແລະກະທຳໃຫ້ເລືອດຕົກ ແລະເຮົາຈະນຳເອົາເລືອດແຫ່ງ
ຄວາມພິໂຣດແລະຄວາມຫວງແຫນມາເຫນືອເຈົ້າ

39 ແລະມອບເຈົ້າໄວ້ໃນມືຂອງເຈົ້າ ເຂົາຈະທໍາລາຍຫ້ອງຫລັງຄາໂຄ້ງຂອງເຈົ້າລົງ ແລະທໍາລາຍບ່ອນສູງທັງຫລາຍ
ຂອງເຈົ້າ ເຂົາຈະປົດເອົາເຄື່ອງນຸ່ງຂອງເຈົ້າ ແລະເອົາເຄື່ອງຮູບເອ້ອັນງາມຂອງເຈົ້າໄປເສັຽ ແລະປ່ອຍໃຫ້ເຈົ້າເປືອຍ
ກາຍ
40 ເຂົາທັງຫລາຍຈະນໍາຝູງຄົນມາຕໍ່ສູ້ເຈົ້າ ແລະເຂົາຈະແກວ່ງກ້ອນຫີນໃສ່ເຈົ້າ ແລະຟັນເຈົ້າດ້ວຍດາບຂອງເຂົາ
41 ເຂົາຈະເອົາໄຟເຜົາບ້ານເຮືອນຂອງເຈົ້າແລະທໍາການພິພາກສາລົງໂທດເຈົ້າ ຕໍ່ຫນ້າຜູ້ຍິງຈໍານວນຫລາຍ ເຮົາຈະກະ
ທໍາໃຫ້ເຈົ້າຢຸດການຫລິ້ນຊູ້ ແລະເຈົ້າຈະບໍ່ໃຫ້ສິນຈ້າງອີກຕໍ່ໄປ
42 ເຮົາຈະລະບາຍຄວາມພິໂຣດຂອງເຮົາໃສ່ເຈົ້າໃຫ້ຫມົດ ຄວາມຫວງແຫນຈະພາກຈາກເຈົ້າໄປ ເຮົາຈະສງົບແລະບໍ່ພິ
ໂຣດອີກຕໍ່ໄປ
43 ເພາະວ່າເຈົ້າບໍ່ໄດ້ລະນຶກເຖິງວັນເມື່ອເຈົ້າຍັງນ້ອຍ ແຕ່ໄດ້ກະທໍາໃຫ້ເຮົາພິໂຣດຈັດດ້ວຍສິ່ງເຫລົ່ານີ້ ພຣະຜູ້ເປັນເຈົ້າ
ກ່າວວ່າ ເພາະສະນັ້ນ ເບິ່ງແມ, ເຮົາຈະລົງໂທດຕາມທາງປະພຶດຂອງເຈົ້າເຫນືອຫົວເຈົ້າ “ເຈົ້າບໍ່ໄດ້ປະພຶດຕົວດ້ວຍ
ຣາຄະເພີ່ມເຂົ້າກັບສິ່ງທີ່ຫນ້າກຽດຊັງທັງສິ້ນຂອງເຈົ້າດອກຫລື
44 ເບິ່ງແມ, ທຸກຄົນທີ່ໃຊ້ສຸພາສິດຈະໃຊ້ສຸພາສິດຕໍ່ໄປນີ້ໃນເຣື່ອງເຈົ້າ ຄື “ແມ່ເປັນຢ່າງໃດ ລູກສາວກໍເປັນຢ່າງນັ້ນ”
45 ເຈົ້າເປັນລູກສາວຂອງແມ່ຂອງເຈົ້າ ຜູ້ກຽດຜົວແລະບຸດຂອງຕົນ ເຈົ້າເປັນສາວຄົນກາງຂອງເອື້ອຍແລະນ້ອງສາວຂອງ
ເຈົ້າ ຜູ້ກຽດຊັງຜົວແລະລູກຂອງຕົນ ແມ່ຂອງເຈົ້າເປັນຄົນຮິດຕີ ພໍ່ຂອງເຈົ້າເປັນຄົນອາໂມຣິດ
46 ແລະເອື້ອຍຂອງເຈົ້າ ຄືຊາມາເຣັຽຜູ້ຢູ່ກັບບຸດສາວເຫນືອເຈົ້າຂຶ້ນໄປ ແລະນ້ອງສາວຂອງເຈົ້າຜູ້ຢູ່ຂ້າງທິດໃຕ້ຂອງເຈົ້າຄື
ໂຊໂດມກັບລູກສາວຂອງເຂົາ
47 ເຖິງປານນັ້ນ ເຈົ້າກໍຍັງບໍ່ພໍໃຈທີ່ຈະດໍາເນີນໃນທາງທັງຫລາຍຂອງເຂົາ ຫລືກະທໍາຕາມສິ່ງທີ່ຫນ້າກຽດຊັງຂອງເຂົາ
ພາຍໃນເວລາອັນເລັກນ້ອຍເຈົ້າກໍຊົ່ວຊ້າກວ່າໃນບັນດາທາງທັງສິ້ນຂອງເຈົ້າ
48 ພຣະຜູ້ເປັນເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ໂຊໂດມນ້ອງສາວຂອງເຈົ້າກັບບຸດສາວຂອງເຂົາ ກໍບໍ່ໄດ້ກະທໍາຢ່າງທີ່
ເຈົ້າແລະລູກສາວຂອງເຈົ້າໄດ້ກະທໍາ
49 ເບິ່ງແມ, ນີ້ແຫລະເປັນຄວາມຊົ່ວຂອງໂຊໂດມນ້ອງສາວຂອງເຈົ້າ ຄືຕົວເຂົາແລະລູກສາວຂອງເຂົາມີຄວາມຈອງຫອງ
ມີອາຫານເຫລືອກິນ ແລະມີຄວາມສະບາຍເຫລືອເກີນ ບໍ່ຊ່ອຍເຫລືອຄົນຍາກຈົນ ແລະຄົນຂັດສົນ
50 ເຂົາອວດອີ່ງ ແລະກະທໍາສິ່ງທີ່ຫນ້າກຽດຊັງຕໍ່ຫນ້າເຮົາ ເຫດສັນນັ້ນ ເມື່ອເຮົາເຫັນແລ້ວ ເຮົາຈຶ່ງທໍາລາຍເຂົາເສັຽ
51 ຊາມາເຣັຽບໍ່ໄດ້ທໍາບາບເຖິງເຄິ່ງນຶ່ງຂອງເຈົ້າ ເຈົ້າທໍາສິ່ງທີ່ຫນ້າກຽດຊັງຍິ່ງກວ່າເຂົາທັງສອງ ແລະໂດຍຄວາມຫນ້າ
ກຽດຊັງທັງສິ້ນທີ່ເຈົ້າທໍານັ້ນ ຈຶ່ງກະທໍາໃຫ້ເອື້ອຍແລະນ້ອງສາວຂອງເຈົ້າເບິ່ງເຫມືອນຊອບທັມ
52 ເຈົ້າຈົ່ງທົນຮັບຄວາມອັບອາຍຂາຍຫນ້າດ້ວຍ ເພາະເຈົ້າໄດ້ກະທໍາໃຫ້ ການພິພາກສາເອນອຽງໄປທາງເອື້ອຍແລະ
ນ້ອງສາວຂອງເຈົ້າ ເຂົາຖືກຫລາຍກວ່າເຈົ້າ ເພາະບາບຂອງເຈົ້າຊຶ່ງເຈົ້າໄດ້ທໍາ ຫນ້າລັງກຽດຫລາຍກວ່າເຂົາໄປອີກ
ເຈົ້າຈົ່ງລະອາຍດ້ວຍ ແລະຈົ່ງທົນຮັບຄວາມອັບອາຍຂາຍຫນ້າຂອງເຈົ້າ ເພາະເຈົ້າໄດ້ກະທໍາໃຫ້ເອື້ອຍແລະນ້ອງສາວ
ຂອງເຈົ້າເບິ່ງເຫມືອນຊອບທັມ
53 “ເຮົາຈະໃຫ້ເຂົາກັບສູ່ສະພາບເດີມທັງສະພາບເດີມຂອງໂຊໂດມແລະບຸດສາວ ແລະສະພາບເດີມຂອງຊາມາເຣັຽ
ແລະບຸດສາວ ແລະເຮົາຈະໃຫ້ກັບສູ່ສະພາບເດີມຂອງເຈົ້າຖ້າມກາງເຂົາດ້ວຍ
54 ເພື່ອເຈົ້າຈະທົນຮັບຄວາມອັບອາຍຂາຍຫນ້າຂອງເຈົ້າ ແລະລະອາຍສິ່ງທີ່ເຈົ້າກະທໍາແລ້ວທັງສິ້ນໃຫ້ເປັນການເລົ້າ
ໂລມແກ່ເຂົາ
55 ສ່ວນເອື້ອຍແລະນ້ອງສາວຂອງເຂົາຈະໄດ້ກັບສູ່ພາວະເດີມຂອງຕົນ ແລະຊາມາເຣັຽກັບບຸດສາວຂອງຕົນຈະກັບສູ່ພາ
ວະເດີມຂອງຕົນ ສ່ວນເຈົ້າແລະບຸດສາວຂອງເຈົ້າຈະກັບໄປຍັງພາວະເດີມຂອງເຈົ້າ
56 ໃນສມັຍທີ່ເຈົ້າອວດອີ່ງນັ້ນ ໂຊໂດມນ້ອງສາວຂອງເຈົ້າເປັນຄວາມເຍີ້ຍຫຍັນໃນປາກຂອງເຈົ້າບໍ່ແມ່ນຫລື

57 ຄືກ່ອນຄວາມຊົ່ວຮ້າຍຂອງເຈົ້າຈະໄດ້ເຜີຍອອກ ບັດນີ້ເຈົ້າກາຍເປັນເຫມືອນເຂົາແລ້ວ ເປັນສິ່ງທີ່ຫນ້າຕຳຫນິແກ່ບຸດ
ສາວຂອງໂຊໂດມ ແລະເພື່ອນບ້ານທັງສິ້ນຂອງເຂົາ ແລະແກ່ບຸດສາວຂອງຟີລິສຕິນ ຄືຜູ້ທີ່ຢູ່ອ້ອມຮອບຊຶ່ງດູຫມິ່ນເຈົ້າ
58 ເຈົ້າຕ້ອງຮັບໂທດຣາຄະຂອງເຈົ້າ ແລະສິ່ງທີ່ຫນ້າກຽດຊັງຂອງເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

An Everlasting Covenant

59 "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາຈະກະທຳແກ່ເຈົ້າຢ່າງທີ່ເຈົ້າໄດ້ກະທຳແລ້ວນັ້ນ ຜູ້ດູຫມິ່ນຄຳສາບານແລະຫັກຄຳ
ສັນຍາ
60 ເຖິງປານນັ້ນເຮົາຈະລະນຶກເຖິງຄຳສັນຍາຂອງເຮົາ ຊຶ່ງເຮົາກະທຳໄວ້ກັບເຈົ້າໃນສມັຍເມື່ອເຈົ້າຍັງສາວຢູ່ ແລະເຮົາຈະ
ສະຖາປະນາຄຳສັນຍາອັນຕລອດໄປໄວ້ກັບເຈົ້າ
61 ແລ້ວເຈົ້າຈະຣະລຶກເຖິງທາງຂອງເຈົ້າ ແລະມີຄວາມລະອາຍ ເມື່ອເຈົ້າຮັບທັງເອື້ອຍແລະນ້ອງສາວຂອງເຈົ້າ ແລະເຮົາ
ມອບໃຫ້ແກ່ເຈົ້າເປັນບຸດສາວ ແຕ່ບໍ່ແມ່ນຕາມຄຳສັນຍາຊຶ່ງທຳໄວ້ກັບເຈົ້າ
62 ເຮົາຈະສະຖາປະນາຄຳສັນຍາຂອງເຮົາໄວ້ກັບເຈົ້າ ແລະເຈົ້າຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ
63 ເພື່ອເຈົ້າຈະຈື່ໄດ້ແລະສິນເທ່ ແລະເພາະຄວາມລະອາຍຂອງເຈົ້າ ເຈົ້າຈະບໍ່ອ້າປາກເວົ້າອີກ ເມື່ອເຮົາລົບມົນທິນບາບ
ທຸກສິ່ງທີ່ເຈົ້າໄດ້ກະທຳມາແລ້ວ ພຣະຜູ້ເປັນເຈົ້າກ່າວດັ່ງນີ້"

## 17 ຄຳອຸປມາເຣື່ອງນົກອິນຊີແລະເຄືອອະງຸ່ນ

The Two Eagles and the Vine

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 "ບຸດແຫ່ງມະນຸດເອີຍ, ຈົ່ງຍົກປິສນາແລະກ່າວເປັນຄຳອຸປມາແກ່ເຊື້ອສາຍອິສຣາເອນ
3 ວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ມີນົກອິນຊີໃຫຍ່ໂຕນຶ່ງ ປີກໃຫຍ່ແລະຂົນປີກກໍຍາວ ມີຂົນມາກມາຍຫລາຍສີ ມາຍັງ
ເລບານອນແລະສັບຍອດຕົ້ນສົນ
4 ມັນຫັກຍອດກິ່ງອ່ອນແລ້ວກໍຄາບໄປຍັງແຜ່ນດິນທີ່ມີການຄ້າຂາຍ ແລະວາງໄວ້ໃນຫົວເມືອງຂອງພໍ່ຄ້າທັງຫລາຍ
5 ແລ້ວມັນກໍເອົາເມັດພືດແຫ່ງແຜ່ນດິນໂລກໄປປູກໄວ້ໃນທີ່ດິນອຸດົມ ມັນເອົາເມັດໄວ້ຂ້າງນ້ຳມາກຫລາຍ ຕັ້ງໄວ້ເຫມື
ອນກັບກິ່ງຕົ້ນໄມ້ສະໂນ
6 ເມັດກໍປົ່ງຂຶ້ນມາ ແລະເບັ້ງນັ້ນໄດ້ກາຍເປັນເຄືອເຕັ້ຍທີ່ລາມໄປແຕ່ວ່າບໍ່ຂຶ້ນສູງ ກິ່ງທັງຫລາຍແຕ່ເຄືອນັ້ນໄດ້ລາມໄປສູ່
ນົກອິນຊີ ແລະຮາກກໍຍັງຢູ່ລຸ່ມມັນ ເມັດຈຶ່ງບັງເກີດເປັນເຄືອ ແຕກກິ່ງອອກແລະມີໃບແຕກອອກໄປ
7 "ແຕ່ວ່າມີນົກອິນຊີໂຕໃຫຍ່ອີກໂຕນຶ່ງ ມີປີກໃຫຍ່ແລະຂົນຫລາຍ ເບິ່ງແມ, ເຄືອອະງຸ່ນນັ້ນໄດ້ປົ່ງຮາກມາຫານົກອິນຊີ
ໂຕນີ້ແລະແຕກກິ່ງລາມໄປຫານົກນີ້ ເພື່ອໃຫ້ມັນທົດນ້ຳໃຫ້ ຈາກຮ່ອງທີ່ປູກຢູ່ນັ້ນ
8 ນົກໄດ້ຍ້າຍມັນໄປປູກໄວ້ໃນບ່ອນດິນດີໃຫ້ນ້ຳມາກຫລາຍ ເພື່ອໃຫ້ແຕກກິ່ງແລະບັງເກີດຜົນ ແລະເປັນເຄືອອະງຸ່ນທີ່ມີ
ກຽດ
9 ຈົ່ງກ່າວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຄືອນັ້ນຈະຈະເຣີນຂຶ້ນໄດ້ຫລື ນົກນັ້ນຈະບໍ່ຖອນຮາກມັນຂຶ້ນແລະເດັດຜົນ
ເພື່ອໃຫ້ໃບອ່ອນຫ່ຽວແຫ້ງເສັຽຫລື ຈະບໍ່ຕ້ອງມີແຂນອັນໃຫຍ່ຫລືມີປະຊາຊົນຫລາຍຄົນ ເພື່ອຖອນເຄືອອອກຈາກ
ຮາກ
10 ເບິ່ງແມ, ເມື່ອມັນຍ້າຍໄປປູກ ເຄືອນັ້ນກໍປົ່ງງາມດີຫລື ເມື່ອລົມທິດຕາເວັນອອກພັດຖືກມັນເຂົ້າ ມັນຈະບໍ່ຫ່ຽວແຫ້ງໄປ
ຫລື ມັນຄົງຫ່ຽວແຫ້ງໄປເຖິງຮ່ອງທີ່ມັນເກີດມານັ້ນບໍ່ແມ່ນຫລື"
11 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາຍັງຂ້າພະເຈົ້າອີກວ່າ,

12 “ບັດນີ້ຈົ່ງກ່າວເຊື້ອສາຍທີ່ມັກກະບົດນັ້ນວ່າ ທ່ານທັງຫລາຍບໍ່ຊາບຫລືວ່າ ສິ່ງເຫລົ່ານີ້ມີຄວາມຫມາຍວ່າຢ່າງໃດ ຈົ່ງ
ບອກເຂົາວ່າ ເບິ່ງແມ, ພຣະຣາຊາກຸງບາບີໂລນໄດ້ມາຍັງກຸງເຢຣູຊາເລັມ ແລະກວາດເອົາກະສັດແລະເຈົ້ານາຍທັງ
ຫລາຍພາມາຍັງພຣະຣາຊາທີ່ກຸງບາບີໂລນ
13 ແລະພຣະອົງໄດ້ຊົງເອົາເຊື້ອພຣະວົງຜູ້ນຶ່ງແລະທຳຄຳສັນຍາກັບທ່ານຜູ້ນັ້ນໃຫ້ເຂົາສາບານຕົວ (ຄົນສຳຄັນໆຂອງ
ແຜ່ນດິນ ພຣະອົງໄດ້ກວາດຕ້ອນເອົາໄປ
14 ເພື່ອວ່າຣາຊອານາຈັກນັ້ນຈະຕ່ຳຕ້ອຍຍົກຕົວຂຶ້ນອີກບໍ່ໄດ້ ແລະໃນການທີ່ຮັກສາຄຳສັນຍາຂອງພຣະອົງຈະຄົງຢັ້ງຢືນ
ຢູ່ໄດ້)
15 ແຕ່ກະສັດໄດ້ກະບົດຕໍ່ພຣະອົງ ໂດຍສົ່ງຣາຊທູດໄປຍັງເອຢິບ ດ້ວຍຫວັງວ່າຈະໄດ້ມ້າແລະກອງທັບໃຫຍ່ໂຕ ກະສັດ
ຈະກະທຳສຳເຣັດຫລື ຜູ້ທີ່ກະທຳເຊັ່ນນີ້ຈະຫນີໄປລອດຫລື ຖ້າທ່ານຫັກຄຳສັນຍາຍັງຈະລອດໄດ້ອີກຫລື
16 ພຣະຜູ້ເປັນເຈົ້າກ່າວວ່າ ເຮົາຜູ້ຊົງມີພຣະຊົນຢູ່ສັນໃດ ທ່ານຈະຕ້ອງຕາຍໃນບາບີໂລນ ໃນບ່ອນທີ່ພຣະຣາຊາອົງນັ້ນ
ປະທັບຢູ່ ຄື ພຣະຣາຊາຜູ້ໄດ້ຊົງຕັ້ງທ່ານໃຫ້ເປັນກະສັດແລະທ່ານໄດ້ດູຫມິ່ນຄຳສາບານຕໍ່ພຣະອົງ ແລະໄດ້ຫັກຄຳ
ສັນຍາທີ່ກະທຳໄວ້ກັບພຣະອົງ
17 ຟາຣາໂອປະກອບດ້ວຍກອງທັບອັນໃຫຍ່ໂຕ ແລະຜູ້ຄົນຫລວງຫລາຍຈະບໍ່ຊ່ອຍທ່ານຜູ້ນັ້ນໃນການສົງຄາມ ໃນເມື່ອ
ເຂົາຈະຍົກກອງດິນສູງ ແລະກໍ່ກຳແພງລ້ອມ ເພື່ອຈະທຳລາຍຊີວິດເປັນອັນຫລວງຫລາຍນັ້ນເສັຽ
18 ເພາະເຫດທ່ານດູຫມິ່ນຄຳສາບານແລະຫັກຄຳສັນຍາ ແລະເພາະທ່ານປະຕິຍານຕົວແລະຍັງກະທຳສິ່ງເຫລົ່ານີ້ ທ່ານ
ຈຶ່ງຈະຫນີໄປໃຫ້ພົ້ນບໍ່ໄດ້
19 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາມີພຣະຊົນຢູ່ສັນໃດເພາະຄຳປະຕິຍານຕໍ່ເຮົາທີ່ເຂົາດູຫມິ່ນແລະຄຳສັນ
ຍາຂອງເຮົາທີ່ເຂົາຫັກເສັຽ ເຮົາຈະລົງໂທດໃຫ້ຕົກເຫນືອຫົວຂອງທ່ານຜູ້ນັ້ນ
20 ເຮົາຈະກາງຕາຫນ່າງຂອງເຮົາຄຸມເຂົາແລະເຂົາຈະຕິດກັບຂອງເຮົາ ແລະເຮົາຈະນຳເຂົາເຂົ້າໄປໃນບາບີໂລນ ແລະພິ
ຈາຣະນາພິພາກສາເຂົາທີ່ນັ້ນໃນເຣື່ອງທີ່ເຂົາໄດ້ທໍຣະຍົດເຮົາ
21 ແລະກອງທັບທີ່ເຂົາໄດ້ເລືອກສັນໄວ້ນັ້ນຈະລົ້ມລົງດ້ວຍດາບ ແລະຜູ້ທີ່ລອດຕາຍຈະພາກຈາກກັນໄປທົ່ວທິບ ແລະ
ເຈົ້າຈະຮູ້ວ່າເຮົາ ຄືພຣະຜູ້ເປັນເຈົ້າທີ່ໄດ້ລັ່ນວາຈາໄວ້ແລ້ວ”

Israel Exalted at Last

(ອຊກ 31:1-9)

22 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, “ເຮົາເອງຈະເອົາກິ່ງຈາກຍອດສູງຂອງຕົ້ນສົນ ແລະປູກໄວ້ ເຮົາຈະຫັກກິ່ງອ່ອນຂອງມັນ
ອອກເສັຽ ແລະເຮົາເອງຈະປູກມັນໄວ້ເທິງພູຍອດສູງ
23 ເຮົາຈະປູກມັນໄວ້ເທິງພູສູງຂອງອິສຣາເອນ ເພື່ອຈະແຕກກິ່ງແລະບັງເກີດຜົນ ແລະເປັນຕົ້ນສົນທີ່ມີກຽດ ແລະນົກທຸກ
ຊະນິດຈະມາອາສັຍຢູ່ທີ່ຮົ່ມກິ່ງຂອງມັນ
24 ແລະຕົ້ນໄມ້ທຸກຕົ້ນໃນທົ່ງຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າກະທຳຕົ້ນໄມ້ສູງໃຫ້ຕ່ຳລົງ ແລະກະທຳຕົ້ນຕ່ຳໃຫ້ສູງຂຶ້ນ
ກະທຳຕົ້ນໄມ້ຂຽວໃຫ້ແຫ້ງໄປ ແລະກະທຳຕົ້ນໄມ້ແຫ້ງໃຫ້ງາມສົດຂຶ້ນ ເຮົາຄືພຣະຜູ້ເປັນເຈົ້າໄດ້ລັ່ນວາຈາແລ້ວ ເຮົາ
ຈະກະທຳເຊັ່ນນັ້ນ”

## 18 ການຮັບຜິດຊອບຂອງແຕ່ລະຄົນ

Individual Retribution

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ,
2 “ເປັນຫຍັງປະຊາຊົນຈຶ່ງເວົ້າຄຳພັງເພີຍນີ້ໃນປະເທດອິສຣາເອນວ່າ ພໍ່ແມ່ກິນຫມາກອະງຸ່ນດິບ ແຕ່ພວກລູກຊ້ຳ
ພັດເຂັດແຂ້ວ”

3 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄປວ່າ ເຮົາເປັນພຣະຜູ້ເປັນເຈົ້າຜູ້ມີຊີວິດຢູ່ແນ່ນອນ ສະນັ້ນພວກເຈົ້າບໍ່ຕ້ອງເວົ້າຄຳພັງເພີຍ
ຂ້າງເທິງນີ້ໃນອິສຣາເອນອີກ

4 ຊີວິດທັງສິ້ນເປັນຂອງເຮົາ ຊີວິດພໍ່ ຊີວິດລູກ ແລະຊີວິດຂອງທຸກໆຄົນເປັນຂອງເຮົາ ສະນັ້ນບຸກຄົນຜູ້ໃດເຮັດບາບບຸກ
ຄົນນັ້ນກໍຕ້ອງຕາຍ

5 ສົມມຸດວ່າມີຄົນດີທີ່ສັດຊື່ແລະຊອບທັມແທ້ຈັກຄົນນຶ່ງ

6 ຖ້າຄົນນັ້ນບໍ່ຂາບໄຫວ້ຮູບໂຄຣົບຂອງຊາວອິສຣາເອນ ຫລືບໍ່ກິນຂອງທີ່ເອົາບູຊາໃນສະຖານທີ່ເຮົາຫ້າມ ບໍ່ລໍ້ລວງຫລິ້ນ
ເມັຽຂອງຄົນອື່ນ ບໍ່ຮ່ວມເພດກັບຍິງທີ່ກຳລັງເປັນລະດູ ບໍ່ສໍ້ໂກງຫລືບີບບັງຄົນນຶ່ງຄົນໃດ

7 ແຕ່ສົ່ງສິ່ງຂອງຈຳນຳຄືນໃຫ້ແກ່ລູກຫນີ້ ໃຫ້ອາຫານແກ່ຜູ້ທີ່ອຶດຢາກ ແລະໃຫ້ເສື້ອຜ້າແກ່ຜູ້ບໍ່ມີ

8 ບໍ່ໄດ້ໃຫ້ຄົນຢືມເງິນເພື່ອເອົາດອກເບັ້ຽ ປະຕິເສດບໍ່ຍອມເຮັດຄວາມຊົ່ວ ໃຫ້ຄວາມຍຸດຕິທັມແກ່ຜູ້ເປັນຄວາມ

9 ເຊື່ອຟັງຄຳສັ່ງແລະເຮັດຕາມພຣະທັມຂອງເຮົາດ້ວຍຄວາມເອົາໃຈໃສ່ ແລະຊື່ສັດສຸຈຣິດ ຜູ້ນັ້ນແຫລະຄືຄົນຊອບທັມ
ເຂົາຈະມີຊີວິດຢູ່ ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ແຫລະ

10 ອີກຢ່າງນຶ່ງສົມມຸດວ່າ ເຂົາຜູ້ນັ້ນມີລູກຊາຍຂີ້ລັກແລະຂ້າຄົນ

11 ເປັນຜູ້ກະທຳສິ່ງທີ່ພໍ່ຂອງຕົນບໍ່ເຄີຍກະທຳມາກ່ອນ ເຂົາກິນຂອງທີ່ເອົາບູຊາໃນສະຖານທີ່ເຮົາຫ້າມ ລໍ້ລວງຫລິ້ນເມັຽ
ຂອງຄົນອື່ນ

12 ບັງຄັບສໍ້ໂກງຄົນຍາກຈົນ ກະທຳການປຸ້ນຈີ້ ບໍ່ຍອມຄືນຂອງໃຫ້ແກ່ຜູ້ເອົາມາຈຳນຳ ຂາບໄຫວ້ຮູບໂຄຣົບ ເຮັດສິ່ງທີ່
ຫນ້າຂີ້ດຽດລະອາຍ

13 ໃຫ້ຄົນຢືມເງິນເພື່ອເອົາດອກເບັ້ຽແລ້ວຄົນຜູ້ນີ້ຄວນຈະມີຊີວິດຢູ່ບໍ? ເຂົາຈະມີຊີວິດຢູ່ບໍ່ໄດ້ ເພາະວ່າເຂົາໄດ້ກະທຳໃນ
ສິ່ງທີ່ຫນ້າຂີ້ດຽດແລະລະອາຍເຫລົ່ານີ້ມາແລ້ວ ເຂົາຈະຕ້ອງຕາຍຍ້ອນການກະທຳນັ້ນ ແລະຕ້ອງຮັບຜິດຊອບເອົາເອງ
ໃນການຕາຍນັ້ນ

14 ບັດນີ້ ສົມມຸດວ່າຄົນຜູ້ນີ້ມີລູກຊາຍຢູ່ຜູ້ນຶ່ງ ລູກຊາຍຄົນນີ້ໄດ້ເຫັນພໍ່ກະທຳບາບທຸກຢ່າງແຕ່ບໍ່ໄດ້ເຮັດຕາມ

15 ບໍ່ໄດ້ຂາບໄຫວ້ຮູບໂຄຣົບຂອງອິສຣາເອນ ບໍ່ກິນຂອງທີ່ເອົາບູຊາໃນສະຖານທີ່ເຮົາຫ້າມ ບໍ່ລໍ້ລວງຫລິ້ນເມັຽຂອງຄົນ
ອື່ນ

16 ບໍ່ກົດຂີ່ຂົ່ມເຫັງຫລືໂລບເອົາຂອງຄົນນຶ່ງຄົນໃດ ເຂົາຄືນຂອງຈຳນຳໃຫ້ແກ່ລູກຫນີ້ ໃຫ້ອາຫານແກ່ຜູ້ທີ່ຫິວແລະໃສ່ເສື້
ອຜ້າແກ່ຜູ້ທີ່ບໍ່ມີ

17 ບໍ່ຍອມເຮັດຊົ່ວ ບໍ່ໄດ້ໃຫ້ຄົນຢືມເງິນເພື່ອເອົາດອກເບັ້ຽ ເປັນຜູ້ປະພຶດຕາມພຣະທັມແລະຄຳສັ່ງຂອງເຮົາ ສະນັ້ນເຂົາ
ຈະບໍ່ຕາຍຍ້ອນບາບທີ່ພໍ່ໄດ້ກະທຳ ແຕ່ຈະມີຊີວິດຢູ່ຢ່າງແນ່ນອນ

18 ສ່ວນພໍ່ຂອງເຂົານັ້ນສໍ້ໂກງ ປຸ້ນຈີ້ ແລະທຳຊົ່ວກັບຄົນທຸກຄົນສເມີ ດັ່ງນັ້ນເຂົາຈຶ່ງຕ້ອງຕາຍຍ້ອນບາບຂອງຕົນ

19 ແຕ່ເຈົ້າຖາມວ່າ ເປັນຫຍັງລູກຊາຍຈຶ່ງບໍ່ໄດ້ຮັບໂທດຍ້ອນບາບຂອງພໍ່ ຄຳຕອບກໍຄື ລູກຊາຍໄດ້ເຮັດດີແລະຊອບທັມ
ໄດ້ຮັກສາພຣະທັມແລະໄດ້ປະພຶດຕາມດ້ວຍຄວາມເອົາໃຈໃສ່ ດັ່ງນັ້ນເຂົາຈຶ່ງຈະມີຊີວິດຢູ່ຢ່າງແນ່ນອນ

20 ຜູ້ໃດເຮັດບາບຜູ້ນັ້ນຈະຕ້ອງຕາຍ ບໍ່ແມ່ນວ່າລູກຊາຍຕ້ອງໄດ້ຮັບໂທດຍ້ອນບາບຂອງພໍ່ ຫລືພໍ່ຕ້ອງຮັບໂທດຍ້ອນບາບ
ຂອງລູກດອກ ຄົນດີກໍຈະໄດ້ຮັບຜົນດີ ແລະຄົນຊົ່ວກໍຈະໄດ້ຮັບຜົນຊົ່ວ

21 ຖ້າຄົນຊົ່ວເຊົາເຮັດບາບ ແລະປະພຶດຕາມພຣະທັມຂອງເຮົາ ເຮັດແຕ່ສິ່ງທີ່ດີແລະຊອບທັມ ເຂົາກໍຈະບໍ່ຕາຍ ແຕ່ຈະມີ
ຊີວິດຢູ່ຢ່າງແນ່ນອນ

22 ເຮົາຈະຊົງໃຫ້ອະພັຍບາບທັງປວງແກ່ເຂົາ ແລ້ວເຂົາຈະມີຊີວິດຢູ່ເພາະວ່າໄດ້ເຮັດຊອບທັມ”

23 ພຣະຜູ້ເປັນເຈົ້າຊົງຖາມວ່າ, “ເຈົ້າຄິດວ່າເຮົາດີໃຈທີ່ເຫັນຄົນຊົ່ວຕາຍຊັ້ນບໍ ບໍ່ແມ່ນຢ່າງນັ້ນດອກ ເຮົາຈະດີໃຈເມື່ອ
ເຫັນຄົວຊົ່ວປ່ຽນໃຈ ແລະມີຊີວິດຢູ່ເທົ່ານັ້ນ

24 ແຕ່ຖ້າຄົນຊອບທັມເຊົາເຮັດດີ ເລີ້ມຕົ້ນເຮັດຊົ່ວຕ່າງໆ ກະທຳສິ່ງທີ່ຫນ້າຊີ້ງດລະອາຍເຊັ່ນດຽວກັນກັບຄົນຊົ່ວ ຄົນຜູ້
ນັ້ນຄວນຈະມີຊີວິດຢູ່ບໍ ບໍ່ມີເລີຍ ຄວາມດີທີ່ເຂົາໄດ້ກະທຳມາຈະບໍ່ປາກົດ ເຂົາຈະຕ້ອງຕາຍຍ້ອນຄວາມບໍ່ສັດຊື່ ແລະ
ຍ້ອນບາບຂອງເຂົາເອງ
25 ແຕ່ເຈົ້າຊໍ້າພັດເວົ້າວ່າ ພຣະຜູ້ເປັນເຈົ້າຊົງເຮັດບໍ່ຍຸດຕິທັມ ໂອ ອິສຣາເອນເອີຍ, ຈົ່ງຟັງເຮົາກ່ອນ ເຈົ້າຄິດວ່າວິທີການ
ຂອງເຮົາບໍ່ຍຸດຕິທັມຊັ້ນບໍ ວິທີການຂອງພວກເຈົ້ານັ້ນແຫລະບໍ່ຍຸດຕິທັມ
26 ເມື່ອຄົນຊອບທັມເຊົາເຮັດດີ ແລະເລີ້ມຕົ້ນເຮັດຊົ່ວກໍຕ້ອງຕາຍໄປ ເຂົາຕາຍຍ້ອນຄວາມຊົ່ວທີ່ເຂົາເຮັດ
27 ເມື່ອຄົນຊົ່ວປ່ຽນໃຈຈາກການກະທຳບາບ ມາກະທຳສິ່ງທີ່ດີແລະຊອບທັມ ກໍເປັນການຊ່ອຍຊີວິດຂອງເຂົາເອງໄວ້
28 ເພາະວ່າເຂົາຄິດຮູ້ເມື່ອໃນໃຈເຖິງສິ່ງທີ່ໄດ້ກະທຳມາ ແລ້ວປ່ຽນໃຈບໍ່ກະທຳອີກ ດັ່ງນັ້ນແຫລະ, ເຂົາຈຶ່ງຈະບໍ່ຕາຍຢ່າງ
ແນ່ນອນ ແຕ່ຈະມີຊີວິດຢູ່ຕໍ່ໄປ
29 ອິສຣາເອນເອີຍ ພວກເຈົ້າເວົ້າວ່າ ພຣະຜູ້ເປັນເຈົ້າຊົງກະທຳບໍ່ຍຸດຕິທັມ ເຈົ້າຄິດວ່າວິທີການຂອງເຮົາບໍ່ຍຸດຕິທັມຊັ້ນ
ບໍ? ວິທີການຂອງເຈົ້ານັ້ນແຫລະ ບໍ່ຍຸດຕິທັມ
30 ອິສຣາເອນເອີຍ, ບັດນີ້ ເຮົາພຣະຜູ້ເປັນເຈົ້າຈະບອກເຈົ້າວ່າ ເຮົາຈະພິພາກສາພວກເຈົ້າແຕ່ລະຄົນຕາມການກະທຳ
ຂອງຕົນ ຈົ່ງຫລີກຫນີຈາກຄວາມຊົ່ວຮ້າຍທັງປວງທີ່ເຈົ້າກຳລັງເຮັດຢູ່ນັ້ນເສັຽຢ່າໃຫ້ບາບທຳລາຍເຈົ້າ ຈົ່ງຫລີກຫນີຈາ
ກການທຳຊົ່ວທັງປວງ
31 ໃຫ້ປ່ຽນຄວາມຄິດ ແລະຈິດໃຈເສັຽໃຫມ່ ໂອ ອິສຣາເອນເອີຍ, ຫລືວ່າພວກເຈົ້າຢາກຕາຍຊັ້ນບໍ”
32 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄປອີກວ່າ, “ເຮົາບໍ່ຢາກໃຫ້ຄົນນຶ່ງຄົນໃດຕາຍ ສະນັ້ນ ຈົ່ງເຊົາເຮັດບາບ ແລະມີຊີວິດຢູ່ເທີ້ນ”

## 19 ບົດຄໍ່າຄວນເຣື່ອງເຈົ້ານາຍອິສຣາເອນ

Israel Degraded

1 ຝ່າຍເຈົ້າຈົ່ງເປັ່ງສຽງຮ້ອງບົດຄໍ່າຄວນເຣື່ອງເຈົ້ານາຍອິສຣາເອນ
2 ກ່າວວ່າ ແມ່ຂອງເຈົ້າເຫມືອນແມ່ສິງຖ້າມກາງຝູງສິງ ນາງນອນຢູ່ກາງສິງຫນຸ່ມລ້ຽງດູລູກຂອງນາງ
3 ນາງລ້ຽງລູກສິງໂຕນຶ່ງໃຫ້ເຕີບໃຫຍ່ຂຶ້ນ ກາຍເປັນສິງຫນຸ່ມ ມັນຝຶກຫັດຈັບເຍື່ອ ແລະມັກກິນຄົນ
4 ປະຊາຊາດໄດ້ຍິນເຣື່ອງຂອງມັນ ເຂົາກໍຈັບມັນໄດ້ໃນຫລຸມພາງຂອງເຂົາ ເຂົາເອົາຂໍກ່ຽວນຳມັນມາຍັງແຜ່ນດິນເອຢິບ
5 ເມື່ອແມ່ສິງເຫັນວ່ານາງຄອຍນານແລ້ວ ແລະຄວາມຫວັງຂອງນາງສູນໄປ ນາງກໍເອົາລູກມາອີກໂຕນຶ່ງລ້ຽງໃຫ້ເປັນສິງ
ຫນຸ່ມ
6 ມັນໄປໆມາຖ້າມກາງສິງ ແລະກາຍເປັນສິງຫນຸ່ມ ແລະມັນຝຶກຫັດຈັບເຍື່ອ ມັນກິນຄົນ
7 ມັນປຸ້ນບັນດາປ້ອມປຣາການຂອງເຂົາ ແລະກະທຳໃຫ້ເມືອງທັງຫລາຍຂອງເຂົາຫວ້າງເປົ່າ ແຜ່ນດິນແລະຜູ້ທີ່ຢູ່ໃນ
ແຜ່ນດິນນັ້ນກໍຕື່ນຕົກໃຈເມື່ອໄດ້ຍິນສຽງຄຳຣາມຂອງມັນ
8 ແລ້ວບັນດາປະຊາຊາດກໍລ້ອມຕໍ່ສູ້ມັນ ທຸກດ້ານຈາກແຂວງທັງປວງ ເຂົາທັງຫລາຍກາງຂ່າຍອອກຄຸມມັນ ມັນກໍຖືກ
ຈັບຢູ່ໃນຫລຸມພາງຂອງເຂົາທັງຫລາຍ
9 ເຂົາເອົາຂໍກ່ຽວພາມາຂັງມັນໄວ້ໃນກົງ ແລະນຳມັນມາຍັງກະສັດບາບີໂລນ ເຂົາກໍຂັງມັນໄວ້ໃນທີ່ກຳບັງເຂັ້ມແຂງ ເພື່ອ
ບໍ່ໃຫ້ໄດ້ຍິນສຽງຂອງມັນອີກທີ່ເທິງພູແຫ່ງອິສຣາເອນ
10 ມານດາຂອງເຈົ້າເຫມືອນເຄືອອະງຸ່ນທີ່ຢູ່ໃນສວນອະງຸ່ນ ເອົາມາປູກໄວ້ຣິມນໍ້າ ມີຫມາກດົກແລະມີກິ່ງມາກຫລາຍ
ເຫດດ້ວຍນໍ້າບໍຣິບູນ
11 ກິ່ງທີ່ແຂງແຮງທີ່ສຸດກາຍເປັນໄມ້ຄ້ອນສຳລັບພວກຜູ້ປົກຄອງ ມັນຊູຂຶ້ນສູງຖ້າມກາງກິ່ງທີ່ຫນາຕຶບ ຜູ້ໃດກໍເຫັນສ່ວນ
ສູງຂອງມັນ

12 ແຕ່ວ່າເຄືອອະງຸ່ນຖືກຖອນອອກດ້ວຍຄວາມຄຽດຮ້າຍ ຖືກຖິ້ມລົງຍັງພື້ນດິນ ລົມຕາເວັນອອກກະທຳໃຫ້ມັນຫ່ຽວໄປ
ເຂົາເດັດຫມາກອອກໄປເສັຽຫມົດ ກິ່ງທີ່ແຂງແຮງກໍຫ່ຽວແຫ້ງໄປ ໄຟກໍໄຫມ້ເສັຽ
13 ຄາວນີ້ຖອນໄປປູກໄວ້ໃນຖິ່ນກັນດານ ໃນແຜ່ນດິນທີ່ແຫ້ງແລ້ງກັນດານນ້ຳ
14 ໄຟໄດ້ອອກມາຈາກກິ່ງໃຫຍ່ນັ້ນ ເຜົາຜານກິ່ງອື່ນແລະຫມາກເສັຽຫມົດ ຈຶ່ງບໍ່ມີກິ່ງແຂງແຮງເຫລືອຢູ່ໃນຕົ້ນອີກເລີຍ
ບໍ່ມີໄມ້ຄ້ອນສຳລັບຜູ້ປົກຄອງ ນີ້ເປັນບົດເພງຄ່ຳຄວນ ແລະໃຊ້ເປັນບົດເພງຄ່ຳຄວນ

## 20 ການກະທຳຂອງພຣະເຈົ້າຕໍ່ອິສຣາເອນ

Israel's Continuing Rebellion

1 ຢູ່ມາວັນທີສິບ ເດືອນທີຫ້າໃນປີທີເຈັດ ພວກຜູ້ໃຫຍ່ແຫ່ງອິສຣາເອນບາງຄົນໄດ້ມາທູນຖາມພຣະຜູ້ເປັນເຈົ້າ ແລະມາ
ນັ່ງຢູ່ຂ້າງຫນ້າຂ້າພະເຈົ້າ
2 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
3 "ບຸດແຫ່ງມະນຸດເອີຍ, ຈົ່ງເວົ້າກັບພວກຜູ້ໃຫຍ່ແຫ່ງອິສຣາເອນ ແລະກ່າວແກ່ເຂົາວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ທີ່
ເຈົ້າມາກັນນີ້ຈະມາຖາມເຮົາຫລື ພຣະຜູ້ເປັນເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເຮົາຈະບໍ່ຍອມໃຫ້ເຈົ້າມາຖາມເຮົາ
4 ບຸດແຫ່ງມະນຸດເອີຍ, ເຈົ້າຈະພິພາກສາເຂົາຫລື ເຈົ້າຈະພິພາກສາເຂົາຫລື ຈົ່ງໃຫ້ເຂົາທັງຫລາຍຊາບເຖິງສິ່ງທີ່ຫນ້າຂີ້
ດຽດລະອາຍຂອງບັນພະບຸຣຸດຂອງເຂົາ
5 ແລະຈົ່ງກ່າວແກ່ເຂົາວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໃນວັນນັ້ນເມື່ອເຮົາເລືອກສັນອິສຣາເອນໄວ້ ເຮົາປະຕິຍານຕໍ່
ເຊື້ອສາຍແຫ່ງວົງຂອງຢາໂຄບ ໂດຍສຳແດງຕົວເຮົາໃຫ້ເຂົາຮູ້ຈັກໃນແຜ່ນດິນເອຢິບ ເຮົາປະຕິຍານກັບເຂົາວ່າ ເຮົາ
ເປັນພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຈົ້າ
6 ໃນວັນນັ້ນ ເຮົາປະຕິຍານຕໍ່ເຂົາວ່າ ເຮົາຈະນຳເຂົາອອກຈາກແຜ່ນດິນເອຢິບ ໄປຍັງແຜ່ນດິນທີ່ເຮົາຫາໃຫ້ເຂົາທັງ
ຫລາຍເປັນແຜ່ນດິນທີ່ມີນ້ຳນົມແລະນ້ຳເຜິ້ງໄຫລບໍຣິບູນ ເປັນແຜ່ນດິນທີ່ມີສັກສີທີ່ສຸດໃນແຜ່ນດິນທັງຫລາຍ
7 ແລະເຮົາກ່າວແກ່ເຂົາວ່າ ເຈົ້າທຸກຄົນຈົ່ງຖິ້ມສິ່ງທີ່ຫນ້າຂີ້ດຽດຊຶ່ງຕາຂອງເຈົ້າທັງຫລາຍກຳລັງເພີດເພີນຢູ່ນັ້ນເສັຽ ຢ່າ
ກະທຳຕົວຂອງເຈົ້າໃຫ້ມົນທິນໄປດ້ວຍຮູບໂຄຣົບຂອງເອຢິບ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ
8 ແຕ່ເຂົາທັງຫລາຍໄດ້ກະບົດຕໍ່ເຮົາແລະບໍ່ຍອມຟັງເຮົາ ເຂົາທັງຫລາຍບໍ່ໄດ້ຖິ້ມສິ່ງທີ່ຫນ້າຂີ້ດຽດ ຊຶ່ງຕາຂອງເຂົາເພີດ
ເພີນຢູ່ນັ້ນທຸກຄົນ ທັງເຂົາກໍບໍ່ໄດ້ຖິ້ມຮູບໂຄຣົບຂອງເອຢິບ "ແລ້ວເຮົາກໍຄິດວ່າ ເຮົາຈະລະບາຍຄວາມພິໂຣດຂອງເຮົາ
ອອກເຫນືອເຂົາ ແລະໃຫ້ຄວາມໂກດຂອງເຮົາທີ່ມີຕໍ່ເຂົາໃນຖ້າມກາງແຜ່ນດິນເອຢິບຈົບມອດລົງ
9 ແຕ່ເຮົາກໍກະທຳໂດຍເຫັນແກ່ຊື່ຂອງເຮົາເອງ ເພື່ອບໍ່ໃຫ້ຊື່ນັ້ນມົນທິນໃນສາຍຕາຂອງປະຊາຊາດຊຶ່ງເຂົາອາສັຍຢູ່ ເຮົາ
ຈຶ່ງໄດ້ສຳແດງຕົວຂອງເຮົາຕໍ່ຫນ້າຕໍ່ຕາເຂົາໃຫ້ເຂົາຮູ້ຈັກ ໃນການທີ່ເຮົານຳຄົນອິສຣາເອນອອກມາຈາກແຜ່ນດິນເອ
ຢິບ
10 ດັ່ງນັ້ນ ເຮົາຈຶ່ງນຳເຂົາອອກຈາກແຜ່ນດິນເອຢິບ ແລະນຳເຂົາເຂົ້າມາໃນຖິ່ນກັນດານ
11 ເຮົາໃຫ້ກົດເກນຂອງເຮົາແກ່ເຂົາ ແລະສຳແດງກົດຫມາຍຂອງເຮົາໃຫ້ເຂົາຮູ້ ຊຶ່ງຖ້າມະນຸດໄດ້ຮັກສາໄວ້ກໍຈະດຳຣົງຊີ
ວິດຢູ່ໄດ້
12 ນອກຈາກນີ້ອີກ ເຮົາໄດ້ໃຫ້ສະບາໂຕຂອງເຮົາແກ່ເຂົາ ເປັນຫມາຍສຳຄັນລະຫວ່າງເຮົາແລະເຂົາທັງຫລາຍ ເພື່ອເຂົາ
ຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ ເປັນຜູ້ກະທຳໃຫ້ເຂົາບໍຣິສຸດ
13 ແຕ່ເຊື້ອສາຍອິສຣາເອນໄດ້ກະບົດຕໍ່ເຮົາໃນຖິ່ນກັນດານ ເຂົາບໍ່ໄດ້ດຳເນີນຕາມກົດເກນຂອງເຮົາ ແຕ່ໄດ້ປະຕິເສດບໍ່
ຮັບກົດຫມາຍຂອງເຮົາ ຊຶ່ງຖ້າມະນຸດໄດ້ຮັກສາໄວ້ກໍຈະດຳຣົງຊີວິດຢູ່ໄດ້ ແລະເຂົາໄດ້ກະທຳໃຫ້ສະບາໂຕຂອງເຮົາ
ເຂົາໄດ້ປມາດຢ່າງຫນັກ "ແລ້ວເຮົາກໍຄິດວ່າເຮົາຈະລະບາຍຄວາມກິ້ວຂອງເຮົາອອກເຫນືອເຂົາໃນຖິ່ນກັນດານ
ແລະທຳໃຫ້ເຂົາຈິບສິ້ນລົງເສັຽ

14 ແຕ່ເຮົາກໍກະທໍາໂດຍເຫັນແກ່ຊື່ຂອງເຮົາເອງ ເພື່ອບໍ່ໃຫ້ຊື່ນັ້ນມົນທິນໃນສາຍຕາຂອງປະຊາຊາດທັງຫລາຍ ຊຶ່ງເຮົາໄດ້ນໍາຄົນອິສຣາເອນອອກມາຕໍ່ໜ້າເຂົາ

15 ນອກຈາກນີ້ ເຮົາໄດ້ປະຕິຍານຕໍ່ເຂົາໃນຖິ່ນກັນດານວ່າ ເຮົາຈະບໍ່ນໍາເຂົາເຂົ້າມາໃນແຜ່ນດິນຊຶ່ງເຮົາໄດ້ໃຫ້ແກ່ເຂົາ ເປັນແຜ່ນດິນທີ່ມີນໍ້ານົມແລະນໍ້າເຜິ້ງໄຫລບໍຣິບູນ ເປັນແຜ່ນດິນທີ່ມີສັກສີທີ່ສຸດໃນແຜ່ນດິນທັງຫລາຍ

16 ເພາະເຂົາປະຕິເສດບໍ່ຮັບກົດໝາຍຂອງເຮົາ ແລະບໍ່ດໍາເນີນຕາມກົດເກນຂອງເຮົາ ແລະໄດ້ກະທໍາໃຫ້ສະບາໂຕຂອງເຮົາຖືກປມາດ ເພາະວ່າຈິດໃຈຂອງເຂົາໄປຕິດຕາມຮູບໂຄຣົບຂອງເຂົາ

17 ເຖິງປານນັ້ນກໍດີ ຕາຂອງເຮົາກໍຍັງປານີເຂົາ ແລະເຮົາບໍ່ໄດ້ທໍາລາຍເຂົາ ຫລືກະທໍາໃຫ້ເຂົາຈິບສິ້ນລົງໃນຖິ່ນກັນດານນັ້ນ

18 "ແລະເຮົາເວົ້າກັບບຸດຫລານຂອງເຂົາໃນຖິ່ນກັນດານນັ້ນວ່າ ຢ່າດໍາເນີນຕາມກົດເກນຂອງບັນພະບຸຣຸດຂອງເຈົ້າ ຫລືຮັກສາກົດໝາຍຂອງເຂົາ ຫລືກະທໍາຕົວເຈົ້າໃຫ້ມົນທິນໄປດ້ວຍຮູບໂຄຣົບຂອງເຂົາ

19 ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ ຈົ່ງດໍາເນີນຕາມກົດເກນຂອງເຮົາ ແລະຈົ່ງຮັກສາກົດໝາຍຂອງເຮົາ ແລະປະພຶດຕາມ

20 ແລະນັບຖືບັນດາສະບາໂຕຂອງເຮົາ ເພື່ອຈະເປັນໝາຍສໍາຄັນລະຫວ່າງເຮົາກັບເຈົ້າ ເພື່ອເຈົ້າຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຈົ້າ

21 ແຕ່ລູກຫລານເຫລົ່ານັ້ນກໍກະບົດຕໍ່ເຮົາ ເຂົາທັງຫລາຍບໍ່ໄດ້ດໍາເນີນຕາມກົດເກນຂອງເຮົາ ແລະບໍ່ຮັກສາກົດໝາຍຂອງເຮົາ ແລະບໍ່ປະພຶດຕາມ ຊຶ່ງຖ້າມະນຸດໄດ້ຮັກສາໄວ້ກໍຈະດໍາຣົງຊີວິດຢູ່ໄດ້ ເຂົາໄດ້ກະທໍາໃຫ້ບັນດາສະບາໂຕຂອງເຮົາຖືກປມາດ "ແລ້ວເຮົາກໍຄິດວ່າເຮົາຈະລະບາຍຄວາມພິໂຣດອຂງເຮົາອອກເໜືອເຂົາ ແລະໃຫ້ຄວາມໂກດຂອງເຮົາມີຕໍ່ເຂົາ ທີ່ໃນຖິ່ນກັນດານຈົນມອດລົງ

22 ແຕ່ເຮົາໄດ້ຫົດມືຂອງເຮົາໄວ້ ແລະກະທໍາໂດຍເຫັນແກ່ຊື່ຂອງເຮົາໄວ້ ແລະກະທໍາໂດຍເຫັນແກ່ຊື່ຂອງເຮົາເອງ ເພື່ອບໍ່ໃຫ້ຊື່ນັ້ນມົນທິນໃນສາຍຕາຂອງປະຊາຊາດທັງຫລາຍ ຊຶ່ງເຮົາໄດ້ນໍາຊົນອິສຣາເອນອອກມາຕໍ່ໜ້າເຂົາ

23 ນອກຈາກນີ້ ເຮົາໄດ້ປະຕິຍານຕໍ່ເຂົາທັງຫລາຍໃນຖິ່ນກັນດານວ່າ ເຮົາຈະໃຫ້ພັດພາກຈາກກັນໄປໃນຖ້າມກາງປະຊາຊາດແລະກະຈາຍເຂົາໄປຢູ່ຕາມປະເທດຕ່າງໆ

24 ເພາະວ່າເຂົາບໍ່ໄດ້ກະທໍາຕາມກົດໝາຍຂອງເຮົາ ແຕ່ໄດ້ປະຕິເສດບໍ່ຮັບກົດເກນຂອງເຮົາ ແລະກະທໍາໃຫ້ບັນດາສະບາໂຕຂອງເຮົາຖືກປມາດ ແລະຕາຂອງເຂົາກໍຈັບຢູ່ທີ່ຮູບໂຄຣົບແຫ່ງບັນພະບຸຣຸດຂອງເຂົາ

25 ນອກຈາກນີ້ ເຮົາໄດ້ໃຫ້ກົດເກນທີ່ບໍ່ດີແລະໃຫ້ກົດໝາຍ ຊຶ່ງຕາມນັ້ນເຂົາຈະດໍາຣົງຊີວິດບໍ່ໄດ້

26 ແລະເຮົາກໍໄດ້ໃຫ້ເຂົາມົນທິນໄປດ້ວຍຂອງຖວາຍຂອງເຂົາເອງ ໂດຍໃຫ້ເຂົາຖວາຍບຸດຫົວປີໃຫ້ລຸຍໄຟ ເພື່ອເຮົາຈະກະທໍາໃຫ້ເຂົາຢ້ານກົວ ເພື່ອໃຫ້ເຂົາຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ

27 "ເຫດສັນນັ້ນ ບຸດແຫ່ງມະນຸດເອີຍ, ຈົ່ງເວົ້າກັບເຊື້ອສາຍອິສຣາເອນແລະກ່າວແກ່ເຂົາວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໃນເຣື່ອງນີ້ບັນພະບຸຣຸດຂອງເຈົ້າໄດ້ໝິ່ນປມາດເຮົາອີກ ໂດຍກະທໍາແກ່ເຮົາຢ່າງທໍຣະຍົດ

28 ເພາະວ່າເມື່ອເຮົາໄດ້ນໍາເຂົາເຂົ້າມາໃນແຜ່ນດິນທີ່ເຮົາໄດ້ສັນຍາວ່າຈະໃຫ້ເຂົານັ້ນແລ້ວ ເມື່ອເຂົາເຫັນສາຍພູສູງໃນທີ່ໃດຫລືເຫັນ ຕົ້ນໄມ້ໃບດົກທີ່ໃດ ເຂົາກໍຖວາຍເຄື່ອງສັຕບູຊາຂອງເຂົາທີ່ນັ້ນ ແລະຖວາຍເຄື່ອງບູຊາອັນເປັນເຫດໃຫ້ເຮົາເຄືອງໃຈ ແລະເຂົາເທເຄື່ອງດື່ມບູຊາອອກທີ່ນັ້ນ

29 (ເຮົາໄດ້ຖາມເຂົາວ່າສະຖານທີ່ສູງຊຶ່ງເຈົ້າເຂົ້າໄປນັ້ນແມ່ນຫຍັງ ແລະເຂົາຈຶ່ງເອີ້ນຊື່ທີ່ນັ້ນວ່າ ບາມາສືບໆມາຈົນທຸກວັນນີ້)

30 ເຫດສັນນັ້ນຈົ່ງກ່າວແກ່ເຊື້ອສາຍອິສຣາເອນວ່າພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຈົ້າກະທໍາຕົວໃຫ້ມົນທິນໄປຕາມຢ່າງບັນພະບຸຣຸດຂອງເຈົ້າ ແລະຫລິ້ນຊູ້ກັບສິ່ງທີ່ໜ້າຂີ້ດຽດຂອງເຂົາຫລື

31 ເມື່ອເຈົ້າຖວາຍເຄື່ອງບູຊາແລະຖວາຍບຸດຊາຍໃຫ້ລຸຍໄຟ ເຈົ້າໄດ້ກະທຳຕົວໃຫ້ມົນທິນດ້ວຍຮູບໂຄຣົບຂອງເຈົ້າຈົນ
ທຸກວັນນີ້ ໂອ ເຊື້ອສາຍອິສຣາເອນເອີຍ, ເຮົາຈະໃຫ້ເຈົ້າມາຖາມເຮົາຫລື ພຣະຜູ້ເປັນເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນ
ໃດ ເຮົາຈະບໍ່ໃຫ້ເຈົ້າມາຖາມເຮົາສັນນັ້ນ
32 ສິ່ງໃດຢູ່ໃນໃຈຂອງເຈົ້າຈະບໍ່ບັງເກີດຂຶ້ນໄດ້ເລີຍ ຄືຄວາມຄິດທີ່ວ່າ “ໃຫ້ເຮົາເປັນເຫມືອນປະຊາຊາດທັງຫລາຍໃຫ້
ເປັນເຫມືອນເຜົ່າຕ່າງໆໃນປະເທດທົ່ວໄປ ຄືໃຫ້ເຮົາບົວລະບັດໄມ້ແລະສີລາ”

God Will restore Israel

33 ພຣະຜູ້ເປັນເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເຮົາຈະເປັນກະສັດເຫນືອເຈົ້າແນ່ນອນດ້ວຍມືທີ່ມີຣິດ ແລະດ້ວຍແຂນທີ່
ຢຽດອອກ ແລະດ້ວຍຄວາມພິໂຣດທີ່ເທລົງມາ
34 ເຮົາຈະນຳເຈົ້າອອກມາຈາກຊົນຊາດທັງຫລາຍ ແລະຮວບຮວມເຈົ້າອອກມາຈາກປະເທດທັງປວງຊຶ່ງເຈົ້າຕ້ອງກະຈັດ
ກະຈາຍກັນໄປຢູ່ນັ້ນ ດ້ວຍມືທີ່ມີຣິດແລະດ້ວຍແຂນທີ່ຢຽດອອກ ແລະດ້ວຍຄວາມພິໂຣດທີ່ເທລົງມາ
35 ແລະເຮົາຈະນຳເຈົ້າເຂົ້າໄປໃນຖິ່ນກັນດານແຫ່ງຊົນຊາດທັງຫລາຍ ແລະທີ່ນັ້ນເຮົາຈະເຂົ້າສູ່ການພິພາກສາກັບເຈົ້າ
ຫນ້າຕໍ່ຫນ້າ
36 ເຮົາເຂົ້າສູ່ການພິພາກສາກັບບັນພະບຸຣຸດຂອງເຈົ້າໃນຖິ່ນກັນດານແຫ່ງແຜ່ນດິນເອຢິບຢ່າງໃດ ພຣະຜູ້ເປັນເຈົ້າກ່າວ
ວ່າ ເຮົາຈະເຂົ້າສູ່ການພິພາກສາກັບເຈົ້າຢ່າງນັ້ນ
37 ເຮົາຈະນັບເຈົ້າໂດຍໃຫ້ລອດໄປໃຕ້ໄມ້ແສ້ ແລະເຮົາຈະໃຫ້ເຈົ້າເຂົ້າມາໃນເຄື່ອງຜູກຄຳສັນຍາ
38 ເຮົາຈະຊຳຮະພວກກະບົດເສັຽຈາກຖ້າມກາງເຈົ້າທັງຜູ້ທໍຣະຍົດຕໍ່ເຮົາ ເຮົາຈະນຳເຂົາອອກຈາກແຜ່ນດິນທີ່ເຂົາໄປອາ
ສັຍຢູ່ນັ້ນ ແຕ່ເຂົາຈະບໍ່ໄດ້ເຂົ້າໄປໃນແຜ່ນດິນອິສຣາເອນ” ແລ້ວເຈົ້າຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ
39 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໂອ ເຊື້ອສາຍອິສຣາເອນເອີຍ, ຝ່າຍເຈົ້າທັງຫລາຍທຸກຄົນຈົ່ງໄປບົວລະບັດຮູບໂຄຣົບ
ຂອງເຈົ້າດຽວນີ້ ແລະຕໍ່ໄປຖ້າເຈົ້າບໍ່ຟັງເຮົາ ແຕ່ຊື່ອັນບໍຣິສຸດຂອງເຮົານັ້ນເຈົ້າຢ່າກະທຳໃຫ້ມົນທິນອີກດ້ວຍຂອງ
ຖວາຍແລະດ້ວຍຮູບໂຄຣົບຂອງເຈົ້າ
40 ພຣະຜູ້ເປັນເຈົ້າກ່າວວ່າ ດ້ວຍວ່າເທິງພູບໍຣິສຸດຂອງເຮົາ ຄືພູສູງຂອງອິສຣາເອນ ບັນດາເຊື້ອສາຍທັງຫມົດຂອງອິສຣາ
ເອນຈະບົວລະບັດເຮົາໃນແຜ່ນດິນນັ້ນ ເຮົາຈະໂຜດເຂົາທີ່ນັ້ນ ໃນທີ່ນັ້ນເຮົາຈະເອີ້ນຂອງຖວາຍຂອງເຈົ້າ ແລະຂອງ
ຖວາຍບູຊາທີ່ຄັດເລືອກດີທີ່ສຸດນັ້ນ ກັບເຄື່ອງຖວາຍບູຊາອັນສັກສິດທັງສິ້ນຂອງເຈົ້າ
41 ເມື່ອເຮົານຳເຈົ້າອອກມາຈາກຊາດທັງຫລາຍ ແລະຮວບຮວມເຈົ້າອອກມາຈາກປະເທດທີ່ເຈົ້າກະຈັດກະຈາຍໄປຢູ່ນັ້ນ
ເຮົາຈະໂຜດເຈົ້າດັ່ງເປັນກິ່ນທີ່ພໍໃຈຂອງເຮົາ ແລະເຮົາຈະສຳແດງຄວາມບໍຣິສຸດສັກສິດຂອງເຮົາຖ້າມກາງເຈົ້າຕໍ່ຫນ້າ
ຕໍ່ຕາປະຊາຊາດທັງຫລາຍ
42 ແລະເຈົ້າຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ ໃນເມື່ອເຮົານຳເຈົ້າເຂົ້າໃນແຜ່ນດິນອິສຣາເອນ ອັນເປັນປະເທດຊຶ່ງເຮົາສັນ
ຍາໄວ້ວ່າຈະໃຫ້ແກ່ບັນພະບຸຣຸດຂອງເຈົ້າ
43 ໃນທີ່ນັ້ນເຈົ້າຈະລະນຶກເຖິງທາງແລະການກະທຳທັງສິ້ນຂອງເຈົ້າ ຊຶ່ງເຈົ້າໄດ້ໃຊ້ກະທຳໃຫ້ຕົວຂອງເຈົ້າມົນທິນ ແລະ
ເຈົ້າຈະກຽດຊັງຕົວຂອງເຈົ້າ ເພາະຄວາມຊົ່ວທັງຫລາຍຊຶ່ງເຈົ້າໄດ້ກະທຳນັ້ນ
44 ໂອ ເຊື້ອສາຍອິສຣາເອນເອີຍ, ເມື່ອເຮົາໄດ້ກະທຳກັບເຈົ້າດ້ວຍເຫັນແກ່ຊື່ຂອງເຮົາ ບໍ່ແມ່ນຕາມທາງອັນຊົ່ວຂອງເຈົ້າ
ຫລືຕາມການກະທຳອັນຖ່ອຍຮ້າຍຂອງເຈົ້າ ແລ້ວເຈົ້າຈຶ່ງຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ”

A Prophecy against the Negeb

45 ແລະພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
46 “ບຸດແຫ່ງມະນຸດເອີຍ, ຈົ່ງມຸ້ງຫນ້າໄປທາງທິດໃຕ້ແລະເທສນາກ່າວໂທດພວກຖິ່ນໃຕ້ ຈົ່ງປະກາດພຣະທັມຕໍ່ແດນປ່າ
ໄມ້ທີ່ໃນຖິ່ນໃຕ້

47 ຈົ່ງກ່າວແກ່ປ່າໄມ້ແຫ່ງຖິ່ນໃຕ້ວ່າຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະກໍ່
ໄຟໄວ້ໃນເຈົ້າ ມັນຈະເຜົາຜານຕົ້ນໄມ້ຂຽວແລະຕົ້ນໄມ້ແຫ້ງທຸກຕົ້ນທີ່ຢູ່ໃນເຈົ້າເສັຽ ຈະດັບແປວໄຟອັນລຸກໂພງນັ້ນບໍ່
ໄດ້ ແລະໃບຫນ້າທຸກຫນ້າຕັ້ງແຕ່ທິດໃຕ້ຈົນເຖິງທິດເຫນືອຈະຖືກໄຟລວກ
48 ມະນຸດທັງສິ້ນຈະເຫັນວ່າເຮົາຄືພຣະຜູ້ເປັນເຈົ້າຜູ້ໄດ້ກໍ່ໄຟນັ້ນ ຜູ້ໃດຈະດັບກໍບໍ່ໄດ້”
49 ແລ້ວຂ້າພະເຈົ້າຈຶ່ງກ່າວວ່າ, “ພຣະເຈົ້າ ເຈົ້າຂ້າ ເຂົາທັງຫລາຍກຳລັງກ່າວເຖິງຂ້າພຣະອົງວ່າ “ເຂົາບໍ່ແມ່ນເປັນຄົນ
ສ້າງຄຳອຸປມາດອກຫລື”

## 21 ດາບອັນຄົມຂອງພຣະເຈົ້າ

The Drawn sword of God

1 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 “ບຸດແຫ່ງມະນຸດເອີຍ, ຈົ່ງມຸ່ງຫນ້າຂອງເຈົ້າຕໍ່ສູ້ເຢຣູຊາເລັມ ແລະເທສນາກ່າວໂທດສະຖານສັກສິດທັງຫລາຍ ຈົ່ງເຜີຍ
ພຣະທັມກ່າວໂທດແຜ່ນດິນອິສຣາເອນ
3 ແລະກ່າວແກ່ແຜ່ນດິນອິສຣາເອນວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາເປັນປໍຣະປັກກັບເຈົ້າ ແລະເຮົາຈະ
ຊັກດາບຂອງເຮົາອອກຈາກຝັກ ແລະເຮົາຈະທຳລາຍທັງຄົນຊອບທັມແລະຄົນອະທັມອອກຈາກເຈົ້າເສັຽ
4 ເພາະເຮົາຈະຕັດເອົາທັງຄົນຊອບທັມແລະຄົນອະທັມອອກຈາກເຈົ້າເສັຽ ເຫດສັນນັ້ນດາບຂອງເຮົາຈະອອກຈາກຝັກ
ໄປຕໍ່ສູ້ມະນຸດທັງສິ້ນຈາກທິດໃຕ້ຈົນເຖິງທິດເຫນືອ
5 ແລະມະນຸດທັງສິ້ນຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າໄດ້ຊັກດາບຂອງເຮົາອອກຈາກຝັກແລ້ວ ແລະຈະບໍ່ເກັບໃສ່ຝັກ
ອີກ
6 ບຸດແຫ່ງມະນຸດເອີຍ, ເຫດສັນນັ້ນຈົ່ງຫາຍໃຈໃຫຍ່ ຫາຍໃຈໃຫຍ່ດ້ວຍຄວາມລະທົມໃຈແລະຄວາມຂົມຂື່ນຕໍ່ຫນ້າຕໍ່
ຕາເຂົາທັງຫລາຍ
7 ແລະເມື່ອເຂົາທັງຫລາຍກ່າວແກ່ເຈົ້າວ່າ “ເປັນຫຍັງເຈົ້າຫາຍໃຈໃຫຍ່” ເຈົ້າຈົ່ງກ່າວວ່າ “ເພາະເຣື່ອງຂ່າວນັ້ນ ເມື່ອ
ຂ່າວນັ້ນມາເຖິງຫົວໃຈທຸກດວງຈະລະລາຍແລະມືທັງສິ້ນຈະອ່ອນເພັຽລົງ ແລະບັນດາຈິດວິນຍານຈະອ່ອນແອໄປ
ແລະຫົວເຂົ່າທຸກເຂົ່າຈະອ່ອນເພັຽດັ່ງນ້ຳ ເບິ່ງແມ, ຂ່າວນັ້ນມາເຖິງແລະຈະສຳເຣັດ” ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
8 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
9 “ບຸດແຫ່ງມະນຸດເອີຍ, ຈົ່ງປະກາດພຣະທັມແລະກ່າວວ່າ ອົງພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ດາບເຫລັ້ມນຶ່ງຊຶ່ງເຂົາລັບ
ໃຫ້ຄົມ ແລະຂັດມັນດ້ວຍ
10 ລັບໃຫ້ຄົມເພື່ອຈະເຂັ່ນຂ້າ ຂັດມັນໄວ້ເພື່ອຈະໃຫ້ແມບມາບເຫມືອນຟ້າແມບ ເຮົາຈະລ້າເລີງຫລື ລູກຂອງເຮົາເອີຍ
ເຈົ້າໄດ້ປມາດຄຳເຕືອນ ແລະໄມ້ແສ້ທຸກຢ່າງ
11 ເຫດສັນນັ້ນຈຶ່ງມອບດາບໃຫ້ຂັດມັນ ເພື່ອຈະຖືໄວ້ໄດ້ ດາບນັ້ນຄົມແລ້ວແລະຂັດມັນ ເພື່ອຈະມອບໄວ້ໃນມືຂອງຜູ້ຂ້າ
12 ບຸດແຫ່ງມະນຸດເອີຍ, ຈົ່ງຮ້ອງໄຫ້ແລະຄ່ຳຄວນເທີນ ເພາະເປັນເຣື່ອງຕໍ່ສູ້ກັບໄພ່ພົນຂອງເຮົາ ແລະຕໍ່ສູ້ກັບບັນດາເຈົ້າ
ນາຍຂອງອິສຣາເອນ ເຂົາຖືກມອບໄວ້ແກ່ດາບພ້ອມກັບໄພ່ພົນຂອງເຮົາ ເຫດສັນນັ້ນຈົ່ງຕີທີ່ໂງ່ນຂາຂອງເຈົ້າເທີນ
13 ເພາະມີການທົດລອງເບິ່ງປະຊາຊົນຂອງເຮົາ ແລະຖ້າເຂົາບໍ່ກັບໃຈ ທຸກສິ່ງເຫລົ່ານີ້ກໍຈະເກີດຂຶ້ນ” ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ແຫລະ
14 “ບຸດແຫ່ງມະນຸດເອີຍ, ເຫດສັນນັ້ນຈົ່ງປະກາດພຣະທັມເຖີດ ຈົ່ງຕົບມືແລະປ່ອຍໃຫ້ດາບລົງມາສອງຄັ້ງ ສາມຄັ້ງ ຄື
ດາບສຳລັບຄົນເຫລົ່ານັ້ນທີ່ຈະຖືກຂ້າ ເປັນດາບແຫ່ງການຄາຕກັມອັນໃຫຍ່ຫລວງຊຶ່ງລ້ອມຕົວພວກເຂົາທັງຫລາຍໄວ້
15 ເພື່ອວ່າໃຈຂອງເຂົາຈະລະລາຍແລະເພື່ອການສະດຸດຈະທະວີຄູນທີ່ປະຕູເມືອງທັງຫມົດຂອງເຂົາ ເຮົາຈຶ່ງໄດ້ມອບ
ດາບທີ່ແມບມາບນັ້ນແລ້ວ ເຮັດໃຫ້ເຫມືອນດັ່ງກັບຟ້າແມບ ເຂົາຂັດມັນເພື່ອຈະເຂັ່ນຂ້າ

16 ຮວມກັນເຂົ້າມາ ໄປທາງຂວາລຽງແຖວ ແລ້ວໄປທາງຊ້າຍ ບໍ່ວ່າຫນ້າຂອງເຈົ້າມຸ້ງໄປທາງໃດ

17 ເຮົາຈະຕົບມືຂອງເຮົາດ້ວຍ ແລະເຮົາຈະລະບາຍຄວາມພິໂຣດຂອງເຮົາຈົນຫມົດ ເຮົາຄືພຣະຜູ້ເປັນເຈົ້າໄດ້ລັ່ນວາຈາ ແລ້ວ"

18 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

19 "ບຸດແຫ່ງມະນຸດເອີຍ, ຈົ່ງຂີດທາງໄວ້ສອງທາງໃຫ້ດາບແຫ່ງກະສັດບາບີໂລນເຂົ້າມາ ທັງສອງທາງໃຫ້ອອກມາຈາກ ແຜ່ນດິນດຽວກັນ ແລະຈົ່ງເຮັດປ້າຍບອກທາງ ຈົ່ງເຮັດໄວ້ທີ່ຫົວຖນົນທີ່ເຂົ້າໄປຫາກຸງ

20 ເຮັດທາງນຶ່ງໃຫ້ດາບມາຍັງຣັບບາແຫ່ງຄົນອັມໂມນ ແລະມາຍັງຢູດາແລະມາຍັງເຢຣູຊາເລັມເມືອງທີ່ມີກຳແພງ

21 ເພາະວ່າກະສັດບາບີໂລນຢືນຢູ່ທີ່ທາງປ້າຍທີ່ຢູ່ຫົວຖນົນສອງຖນົນ ກຳນົດຫາຄຳທຳນວາຍ ທ່ານສັ່ນລູກທະນູ ແລະ ປຶກສາເຕຣາຟິມ ທ່ານຫລຽວເບິ່ງທີ່ຕັບ

22 ໃນມືຂ້າງຂວາ ທ່ານມີສລາກເຢຣູຊາເລັມ ເພື່ອຕັ້ງເຄື່ອງເຈາະປ່ອງ ເພື່ອຈະໃຫ້ອ້າປາກໃນການຂ້າ ເພື່ອຈະສົ່ງສຽງ ຮ້ອງ ເພື່ອວາງເຄື່ອງເຈາະປ່ອງກຳແພງເຂົ້າທີ່ປະຕູເມືອງເພື່ອກໍ່ຄັນຄູຂຶ້ນ ແລະກໍ່ກຳແພງລ້ອມ

23 ສຳລັບຄົນເຫລົ່ານັ້ນເປັນເຫມືອນຄຳທຳນວາຍປອມ ເຂົາທຳພິທີສາບານໃຫ້ລະນຶກເຖິງຄວາມຜິດ ເພື່ອເຂົາທັງຫລາຍ ຈະຖືກຈັບເອົາໄປ

24 "ເຫດສັນນັ້ນພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ ເພາະວ່າເຈົ້າໄດ້ກະທຳບາບຂອງເຈົ້າໃຫ້ເຮົາລະນຶກໄດ້ ໂດຍການທໍຣະ ຍົດຂອງເຈົ້າທີ່ເຜີຍອອກ ຈົນບາບຂອງເຈົ້າປາກົດໃນການກະທຳທັງສິ້ນຂອງເຈົ້າ ເພາະເຈົ້າໃຫ້ເຮົາລະນຶກຂຶ້ນໄດ້ ເຈົ້າ ຈຶ່ງຕ້ອງຖືກຈັບເອົາໄປໂດຍເຫລົ່າສັດຕຣູ

25 ແລະເຈົ້າ ໂອ ຜູ້ອະທັມທີ່ຂາດສິນທັມ ຄືເຈົ້ານາຍອິສຣາເອນເອີຍ, ຜູ້ທີ່ວັນກຳນົດມາເຖິງແລ້ວ ຄືເວລາແຫ່ງການລົງ ໂທດຄັ້ງສຸດທ້າຍ

26 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງແກ້ຜ້າຄຽນຫົວແລະຖອດມົງກຸດອອກເສັຽ ສິ່ງຕ່າງໆຈະບໍ່ຄົງຢູ່ຢ່າງທີ່ເຄີຍເປັນ ໃຫ້ຍົ ກຍ້ອງສິ່ງທີ່ຕ່ຳຂຶ້ນ ແລະໃຫ້ກົດສິ່ງທີ່ສູງລົງ

27 ເຮົາຈະກະທຳໃຫ້ເປັນທີ່ພັງທະລາຍ ພັງທະລາຍ ພັງທະລາຍ ແລະຈະບໍ່ມີເລີຍຈົນກວ່າຜູ້ມີສິດອັນຊອບທັມຈະມາ ເຖິງ ແລະເຮົາຈະປະທານໃຫ້ແກ່ທ່ານຜູ້ນັ້ນ

28 "ບຸດແຫ່ງມະນຸດເອີຍ, ແລະເຈົ້າຈົ່ງປະກາດພຣະຄຳແລະກ່າວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ກ່າວກັບຄົນອັມໂມນ ແລະກ່ຽວກັບເຣື່ອງທີ່ຫນ້າຕຳຫນິຂອງເຂົາທັງຫລາຍວ່າ ດາບເຫລັ້ມນຶ່ງ ດາບເຫລັ້ມນຶ່ງຖືກຊັດອອກເພື່ອການເຂັ່ນຂ້າ ເຂົາຂັດເຫລື້ອມໃຫ້ດື່ມເລືອດ ແລະໃຫ້ແມບມາບເຫມືອນຟ້າແມບ

29 ຂນະເມື່ອເຂົາເຫັນນິມິດປອມມາບອກທ່ານ ຂນະເມື່ອເຂົາໃຫ້ຄຳທຳນວາຍມຸສາແກ່ທ່ານ ເພື່ອຈະວາງທ່ານໄວ້ເທິງຄໍ ຂອງຜູ້ອະທັມທີ່ຊົ່ວຊ້າເວລາກຳນົດຂອງເຂົາມາເຖິງແລ້ວ ຄືເວລາແຫ່ງການລົງໂທດຄັ້ງສຸດທ້າຍ

30 ຈົ່ງໃຫ້ດາບກັບເຂົ້າຝັກ ເຮົາຈະພິພາກສາເຈົ້າໃນສະຖານທີ່ດັ້ງເດີມຂອງເຈົ້າໃນແຜ່ນດິນດັ້ງເດີມຂອງເຈົ້າ

31 ເຮົາຈະເທຄວາມພິໂຣດຂອງເຮົາເຫນືອເຈົ້າ ແລະເຮົາຈະພົ່ນເຈົ້າດ້ວຍໄຟແຫ່ງຄວາມພິໂຣດຂອງເຮົາ ແລະເຮົາຈະ ມອບເຈົ້າໄວ້ໃນມືຂອງຄົນໃຈເໝືອນສັດ ຜູ້ມີຝີມືໃນການທຳລາຍ

32 ເຈົ້າຈະເປັນຟືນໄວ້ໃສ່ໄຟ ເລືອດຂອງເຈົ້າຈະຢູ່ກາງແຜ່ນດິນ ຈະບໍ່ມີໃຜຈົດຈຳເຈົ້າໄວ້ອີກ ເພາະເຮົາຄືພຣະຜູ້ເປັນເຈົ້າ ໄດ້ລັ່ນວາຈາແລ້ວ"

## 22 ບາບຂອງເຢຣູຊາເລັມ

The Blood City

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

2 ບຸດແຫ່ງມະນຸດເອີຍ, ຕົວເຈົ້າຈະພິພາກສາຫລື ເຈົ້າຈະພິພາກສາເມືອງທີ່ເປື້ອນດ້ວຍເລືອດນັ້ນຫລື ດັ່ງນັ້ນເຈົ້າຈົ່ງ
ບອກເຖິງການກະທຳສິ່ງອັນໜ້າຂີ້ດຽດຂອງເມືອງນັ້ນໃຫ້ເມືອງນັ້ນຟັງ
3 ເຈົ້າຈົ່ງກ່າວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ນີ້ເປັນເມືອງທີ່ກະທຳໃຫ້ເລືອດຕົກຢູ່ທີ່ກາງຕົນເອງ ເພື່ອໃຫ້ເວລາກຳນົດ
ຂອງຕົນມາເຖິງ ແລະເປັນເມືອງທີ່ສ້າງຮູບໂຄຣົບໄວ້ໃຫ້ຕົວມົນທິນໄປ
4 ເຈົ້າມີກັມຊົ່ວດ້ວຍເລືອດທີ່ເຈົ້າກະທຳໃຫ້ຕົກນັ້ນ ແລະມົນທິນໄປດ້ວຍຮູບໂຄຣົບທີ່ເຈົ້າກະທຳໄວ້ ແລະເຈົ້າໄດ້ນຳໃຫ້
ເວລາຂອງເຈົ້າເຂົ້າມາໃກ້ ເວລາກຳນົດແຫ່ງປີຂອງເຈົ້າມາເຖິງແລ້ວ ເຫດສັນນັ້ນ ເຮົາຈຶ່ງກະທຳເຈົ້າໃຫ້ເປັນທີ່ປະນາມ
ກັນຖ້າມກາງປະຊາຊາດ ແລະເປັນທີ່ເຍາະເຍີ້ຍແກ່ປະເທດທັງຫລາຍ
5 ຜູ້ທີ່ຢູ່ໃກ້ ແລະທີ່ທີ່ຢູ່ໄກເຈົ້າ ຈະເຍາະເຍີ້ຍເຈົ້າ ຜູ້ເປັນເມືອງທີ່ເສັງຊື່ ແລະເຕັມດ້ວຍຄວາມຫວຸ້ນວາຍ
6 “ເບິ່ງແມ, ເຈົ້ານາຍແຫ່ງອິສຣາເອນຊຶ່ງຢູ່ໃນເຈົ້າ ທຸກຄົນກໍນ້ອມໄປໃນທາງທີ່ເຮັດໃຫ້ເລືອດອອກຕາມອຳນາດຂອງ
ເຂົາ
7 ບິດາມານດາຖືກຢຽດຫຍາມຢູ່ໃນເຈົ້າ ຄົນຕ່າງດ້າວທີ່ອາສັຍຢູ່ກໍຖືກບຽດບຽນຢູ່ຖ້າມກາງເຈົ້າ ລູກກຳພ້າແລະຍິງ
ໝ້າຍກໍຖືກຂົ່ມເຫັງຢູ່ໃນເຈົ້າ
8 ເຈົ້າໄດ້ດູໝິ່ນສິ່ງບໍຣິສຸດຂອງເຮົາ ແລະເຈົ້າບໍ່ໄດ້ຍຶດຖືວັນສະບາໂຕ
9 ໃນເຈົ້າມີຄົນກ່າວຮ້າຍເພື່ອຈະເຮັດໃຫ້ເລືອດອອກ ແລະມີຄົນໃນເຈົ້າທີ່ຮັບປະທານເທິງພູເຂົາ ເຂົາໄດ້ທຳການໜ້າ
ລະອາຍທັງຫລາຍ
10 ໃນເຈົ້າມີຊາຍລາງຄົນລ່ວງປະເວນີກັບພັຣຍາຂອງບິດາເຂົາ ໃນເຈົ້າມີຄົນທີ່ຂົ່ມຂືນຜູ້ຍິງທີ່ຍັງມີມົນທິນເພາະມີປະຈຳ
ເດືອນ
11 ຄົນນຶ່ງກະທຳການໜ້າກຽດຊັງກັບພັຣຍາເພື່ອນບ້ານ ອີກຄົນນຶ່ງຂົ່ມຂືນລູກສະໃພ້ຂອງຕົນຢ່າງໜ້າລະອາຍ ໃນເຈົ້າ
ມີອີກຄົນນຶ່ງກະທຳນ້ອງສາວໃຫ້ເປັນມົນທິນ ຄືລູກສາວຂອງບິດາຂອງຕົນ
12 ໃນເຈົ້າມີຄົນຮັບສິນບົນ ເພື່ອກະທຳໃຫ້ເລືອດອອກ ເຈົ້າເອົາດອກເບັ້ຽ ແລະເອົາເງິນເພີ້ມ ແລະເອົາກຳໄລຈາກເພື່ອນ
ບ້ານຂອງເຈົ້າໂດຍການບີບບັງຄັບ ແລະເຈົ້າໄດ້ລືມເຮົາເສັຽ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
13 “ເບິ່ງແມ, ເຫດສັນນັ້ນ ເຮົາຈະຍື່ນກຳປັ້ນເນື່ອງຈາກຜົນກຳໄລອະທັມທີ່ເຈົ້າໄດ້ ແລະເນື່ອງຈາກເລືອດທີ່ຢູ່ໃນໝູ່
ພວກເຈົ້າທັງຫລາຍ
14 ໃຈເຈົ້າຈະທົນໄດ້ຫລື ແລະມືຂອງເຈົ້າຈະແຂງແຮງຢູ່ຫລື ໃນວັນທີ່ເຮົາຈະເອົາເຣື່ອງກັບເຈົ້າ ເຮົາຄືພຣະຜູ້ເປັນເຈົ້າໄດ້
ລັ່ນວາຈາແລ້ວ ແລະເຮົາຈະກະທຳ
15 ເຮົາຈະໃຫ້ເຈົ້າກະຈັດພັດພາກໄປໃນໝູ່ປະຊາຊາດ ແລະກະຈາຍເຈົ້າໄປຕາມປະເທດຕ່າງໆ ແລະເຮົາຈະເຜົາເອົາ
ຄວາມເປື້ອນເປິອອກຈາກເຈົ້າເສັຽ
16 ໃນສາຍຕາຂອງປະຊາຊາດເຈົ້າຈະເປັນມົນທິນໄປເພາະເຈົ້າເອງ ແລະເຈົ້າຈະຮູ້ວ່າເຮົາຄືພຣະຜູ້ເປັນເຈົ້າ”
17 ແລະພຣະຄຳຂອງພຣະອົງມາເຖິງຂ້າພະເຈົ້າວ່າ,
18 “ບຸດແຫ່ງມະນຸດເອີຍ, ສຳລັບເຮົາເຊື້ອສາຍອິສຣາເອນກາຍເປັນຂີ້ໂລຫະ ເຂົາທັງສິ້ນເປັນທອງສຳຣິດ ກົ່ວ ເຫລັກ
ແລະຊືນໃນເຕົາຫລອມ ເຂົາເປັນຂີ້ໂລຫະເງິນໄປໝົດ
19 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະວ່າເຈົ້າເປັນຂີ້ໂລຫະໄປເສັຽທັງສິ້ນແລ້ວ ເຫດສັນນັ້ນ ເບິ່ງແມ, ເຮົາຈະ
ຮວບຮວມເຈົ້າໄວ້ຖ້າມກາງເຢຣູຊາເລັມ
20 ເໝືອນຄົນທີ່ຮວບຮວມເງິນ ທອງສຳຣິດ ແລະເຫລັກ ແລະຊືນ ແລະກົ່ວໄວ້ໃນເຕົາຫລອມ ເພື່ອເອົາໄຟພົ່ນໃສ່ໃຫ້
ມັນລະລາຍ ດັ່ງນັ້ນເຮົາຈະຮວບຮວມເຈົ້າດ້ວຍຄວາມກິ້ວໂກດແລະດ້ວຍຄວາມພິໂຣດຂອງເຮົາ ແລະເຮົາຈະໃສ່ເຈົ້າ
ຮວມໄວ້ໃຫ້ເຈົ້າລະລາຍ
21 ເຮົາຈະຮວບຮວມເຈົ້າ ແລະເອົາໄຟແຫ່ງຄວາມພິໂຣດຂອງເຮົາພົ່ນໃສ່ເຈົ້າ ແລະເຈົ້າຈະລະລາຍຢູ່ຖ້າມກາງນັ້ນ

22 ເງິນລະລາຍຢູ່ໃນເຕົາຫລອມສັນໃດ ເຈົ້າທັງຫລາຍຈະລະລາຍຢູ່ຖ້າມກາງໄຟສັນນັ້ນ ແລະເຈົ້າຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າໄດ້ລະບາຍຄວາມພິໂຣດຂອງເຮົາອອກເຫນືອເຈົ້າ”

23 ແລະພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

24 “ບຸດແຫ່ງມະນຸດເອີຍ, ຈົ່ງເວົ້າກັບແຜ່ນດິນນັ້ນວ່າ ເຈົ້າເປັນແຜ່ນດິນທີ່ບໍ່ໄດ້ຮັບການຊຳຮະ ຫລືຝົນບໍ່ໄດ້ຕົກຮຳໃນວັນພິໂຣດ

25 ເຈົ້ານາຍຖ້າມກາງແຜ່ນດິນນັ້ນກໍເປັນເຫມືອນສິງຄຳຣາມຈີກເຫຍື່ອຢູ່ ເຂົາທັງຫລາຍກິນຊີວິດມະນຸດ ເຂົາຍຶດຊັບສົມບັດແລະສິ່ງປະເສີດໄປ ເຂົາໄດ້ກະທຳໃຫ້ເກີດຍິງຫມ້າຍມີຂຶ້ນຫລວງຫລາຍຖ້າມກາງແຜ່ນດິນນັ້ນ

26 ປະໂຣຫິດຂອງເຂົາໄດ້ລະເມີດທັມບັນຍັດຂອງເຮົາແລະໄດ້ກະທຳປວງສິ່ງບໍຣິສຸດຂອງເຮົາໃຫ້ມົນທິນໄປ ສິ່ງທີ່ບໍຣິສຸດແລະສິ່ງທີ່ຖ່ອຍຮ້າຍເຂົາກໍບໍ່ແຍກໃຫ້ຕ່າງກັນ ເຂົາບໍ່ໄດ້ສອນຄວາມແຕກຕ່າງລະຫວ່າງຂອງທີ່ມົນທິນແລະຂອງສະອາດ ເຂົາບໍ່ນຳພາວັນສະບາໂຕຂອງເຮົາ ດັ່ງນັ້ນແຫລະ, ເຮົາຈຶ່ງຫມິດກຽດຖ້າມກາງເຂົາທັງຫລາຍ

27 ເຈົ້ານາຍໃນຖ້າມກາງແຜ່ນດິນເປັນເຫມືອນຫມາປ່າທີ່ກັດເຫຍື່ອ ທຳໃຫ້ໂລຫິດຕົກ ທຳລາຍຊີວິດເພື່ອຈະໄດ້ກຳໄລອັນບໍ່ສັດຊື່

28 ແລະຜູ້ປະກາດພຣະທັມຂອງແຜ່ນດິນນັ້ນ ກໍທາດ້ວຍປູນຂາວໃຫ້ເຂົາເຫັນນິມິດເທັດ ແລະໃຫ້ຄຳທຳນວາຍຕົວະແກ່ເຂົາ ໂດຍກ່າວວ່າ “ພຣະຜູ້ເປັນເຈົ້າກ່າວດັ່ງນີ້” ໃນເມື່ອພຣະຜູ້ເປັນເຈົ້າບໍ່ໄດ້ກ່າວເລີຍ

29 ຣາສດອນກະທຳການບີບຄັ້ນແລະກະທຳການປຸ້ນຈີ້ ເຂົາບີບບັງຄັບຄົນຍາກຈົນແລະຄົນຂັດສົນ ແລະບີບຄັ້ນຜູ້ທີ່ອາສັຍຢູ່ຢ່າງຍຸດຕິທັມ

30 ແລະເຮົາກໍສແວງຫາຈັກຄົນນຶ່ງໃນພວກເຂົາຊຶ່ງຈະສ້າງກຳແພງແລະຢືນຢູ່ໃນຊ່ອງຫວ່າງຕໍ່ຫນ້າເຮົາເພື່ອແຜ່ນດິນນັ້ນເພື່ອເຮົາຈະບໍ່ໄດ້ທຳລາຍມັນເສັຽ ແຕ່ກໍຫາບໍ່ໄດ້ຈັກຄົນດຽວ

31 ສັນນັ້ນເຮົາຈຶ່ງເທຄວາມພິໂຣດຂອງເຮົາລົງເຫນືອເຂົາ ເຮົາໄດ້ເຜົາຜານເຂົາດ້ວຍໄຟພິໂຣດຂອງເຮົາ ເຮົາຈະລົງໂທດຕາມການປະພຶດຂອງເຂົາເຫນືອຫົວເຂົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ”

## 23 ເອື້ອຍນ້ອງສອງສາວ

Oholah and Oholibah

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

2 “ບຸດແຫ່ງມະນຸດເອີຍ ມີຜູ້ຍິງສອງຄົນເປັນບຸດສາວມານດາດຽວກັນ

3 ນາງຫລິ້ນຊູ້ໃນເອຢິບ ນາງຫລິ້ນຊູ້ຕັ້ງແຕ່ສາວໆ ໃນທີ່ນັ້ນນົມຂອງນາງຖືກບີບຄັ້ນ ແລະເອິກພົມມະຈາຣີຂອງນາງກໍຖືກຈັບຕ້ອງ

4 ຄົນເອື້ອຍຊື່ ໂອໂຮລາ ແລະນ້ອງສາວຊື່ ໂອໂຮລີບາ ທັງສອງມາເປັນຂອງເຮົາ ທັງສອງເກີດບຸດຊາຍຍິງ ເຣື່ອງຊື່ນັ້ນໂອໂຮລາ ຄືຊາມາເຣັຽ ແລະໂອໂຮລີບາ ຄືເຢຣູຊາເລັມ

5 “ໂອໂຮລາຫລິ້ນຊູ້ເມື່ອນາງເປັນຂອງເຮົາ ນາງລຸ່ມຫລົງອັສຊີເຣັຽພວກຄົນຮັກຂອງນາງ

6 ຊຶ່ງເປັນນັກຮົບແຕ່ງເຄື່ອງສີມ່ວງແລະເປັນເຈົ້າເມືອງແລະຜູ້ບັງຄັບບັນຊາ ທຸກຄົນເປັນຊາຍຫນຸ່ມທີ່ພຶງປາຖນາ ພົນມ້າຂີ່ມ້າ

7 ນາງຫລິ້ນຊູ້ກັບຄົນເຫລົ່ານີ້ ຊຶ່ງເປັນບຸກຄົນຊັ້ນຍອດຂອງອັສຊີເຣັຽທຸກຄົນ ແລະນາງກໍກະທຳຕົວໃຫ້ເປັນມົນທິນດ້ວຍຮູບໂຄຣົບຂອງທຸກຄົນທີ່ນາງລຸ່ມຫລົງນັ້ນ

8 ນາງບໍ່ໄດ້ເລີກການຫລິ້ນຊູ້ຊຶ່ງນາງໄດ້ທຳຕັ້ງແຕ່ຄັ້ງຢູ່ໃນເອຢິບເພາະວ່າເມື່ອຍັງສາວຢູ່ ຄົນຫນຸ່ມກໍເຂົ້ານອນກັບນາງແລະຈັບຕ້ອງເອິກພົມມະຈາຣີຂອງນາງແລະຖອກການຫລິ້ນຊູ້ຂອງເຂົາໃຫ້ແກ່ນາງ

9 ເຫດສັນນັ້ນເຮົາຈຶ່ງມອບນາງໃຫ້ຕົກຢູ່ໃນມືພວກຄົນຮັກຂອງນາງ ຄືອັສຊີເຣັຽ ຊຶ່ງນາງລຸ່ມຫລົງນັ້ນ

10 ຜູ້ເຫລົ່ານີ້ເພີຍຄວາມປະເປືອຍຕົວຂອງນາງ ເຂົາຈັບບຸດຊາຍຍິງຂອງນາງ ແລະຂ້ານາງເສັຽດ້ວຍດາບ ນາງຈຶ່ງເປັນຄຳ
ເຍາະເຍີ້ຍຖ້າມກາງຜູ້ຍິງທັງຫລາຍ ໃນເມື່ອໄດ້ພິພາກສາລົງໂທດນາງແລ້ວ
11 “ໂອໂຮລີບານ້ອງສາວຂອງນາງເຫັນເຊັ່ນນັ້ນ ນາງກໍຖ່ອຍຮ້າຍຫລາຍກວ່າເອື້ອຍອີກດ້ວຍຣາຄະຕັນຫາ ແລະໃນການ
ຫລິ້ນຊູ້ຫລາຍກວ່າເອື້ອຍ
12 ນາງລຸ່ມຫລົງອັສຊີເຣັຽ ເຈົ້າເມືອງແລະຜູ້ບັງຄັບບັນຊາ ນັກຮົບທີ່ນຸ່ງເຄື່ອງອັນລະອຽດ ພົນມ້າຂີ່ມ້າ ທຸກຄົນເປັນຊາຍ
ຫນຸ່ມທີ່ພຶງປາຖນາ
13 ແລະເຮົາເຫັນວ່ານາງມີມົນທິນເສັຽແລ້ວ ນາງທັງສອງກໍເດີນທາງດຽວກັນ
14 ແຕ່ນາງຍັງຫລິ້ນຊູ້ຕື່ມອີກ ນາງເຫັນຮູບຄົນຢູ່ເທິງຝາ ເປັນຮູບຄົນຄັນເດອານຊຽນດ້ວຍສີແດງເຂັ້ມ
15 ມີສາຍແອວຮັດຄາດແອວ ມີຜ້າຄຽນຫົວທີ່ຢ່ອນລົງ ທຸກຄົນເປັນເຫມືອນນາຍທະຫານ ເປັນຮູບຊາວບາບີໂລນ ຊຶ່ງ
ແຜ່ນດິນເດີມຂອງເຂົາຄືຄັນເດອານ
16 ເມື່ອນາງເຫັນຮູບນັ້ນກໍຫລຸ່ມຫລົງເຂົາເສັຽແລ້ວ ແລະສົ່ງຜູ້ນຳຂ່າວໄປຫາເຂົາທີ່ຄັນເດອານ
17 ຊາວບາບີໂລນກໍມາຫານາງເຖິງຕຽງຮັກ ແລະເຂົາກໍກະທຳໃຫ້ນາງເປັນມົນທິນດ້ວຍຣາຄະຂອງເຂົາ ຫລັງຈາກທີ່ນາ
ງເປື້ອນເປິກັບເຂົາແລ້ວ ນາງກໍເບື່ອຫນ່າຍ
18 ເມື່ອນາງໄດ້ທຳການຫລິ້ນຊູ້ເສັຽຢ່າງເປີດເຜີຍ ແລະນາງສຳແດງຄວາມປະເປືອຍຕົວຂອງນາງ ເຮົາກໍເບື່ອຫນ່າຍເຫ
ມືອນຢ່າງເຮົາເບື່ອຫນ່າຍເອື້ອຍຂອງນາງ
19 ເຖິງປານນັ້ນນາງຍັງທະວີການຫລິ້ນຊູ້ຂອງນາງຂຶ້ນອີກ ໂດຍທວນລະນຶກເຖິງເມື່ອຄັ້ງຍັງສາວຢູ່ ເມື່ອນາງຫລິ້ນຊູ້ຢູ່ໃນ
ແຜ່ນດິນເອຢິບ
20 ນາງລຸ່ມຫລົງຊູ້ຂອງນາງທີ່ນັ້ນ ລຳເນື້ອຂອງເຂົາກໍເຫມືອນຂອງລາ ແລະຂອງເຂົາກໍເຫມືອນຂອງມ້າ
21 ດັ່ງນີ້ແຫລະ, ເຈົ້າກໍອາລັຍໃນຣາຄະເມື່ອເຈົ້າຍັງສາວຢູ່ ເມື່ອຄົນເອຢິບຈັບຕ້ອງເອິກຂອງເຈົ້າ ແລະລູບຄຳຫົວນົມຂອງ
ເຈົ້າ”
22 ເຫດສັນນັ້ນ ໂອໂຮລີບາເອີຍ, ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ເບິ່ງແມ, ເຮົາຈະໃຫ້ຄົນຮັກທີ່ເຈົ້າເບື່ອຫນ່າຍແລ້ວນັ້ນ
ໃຫ້ມາສູ້ເຈົ້າ ແລະເຮົາຈະນຳເຂົາມາສູ້ເຈົ້າຈາກທຸກດ້ານ
23 ມີຄົນບາບີໂລນແລະຄົນຄັນເດອານທັງສິ້ນ ເປໂກດ ແລະໂຊອາ ແລະໂກອາ ທັງຄົນອັສຊີເຣັຽທັງສິ້ນດ້ວຍ ເປັນຄົນ
ຫນຸ່ມທີ່ເພິງປາຖນາ ເຈົ້າເມືອງ ຜູ້ບັງຄັບບັນຊາທັງສິ້ນ ເປັນນາຍທະຫານແລະນັກຮົບ ທຸກຄົນຂີ່ມ້າ
24 ເຂົາຈະມາຈາກທິດເຫນືອຕໍ່ສູ້ເຈົ້າ ມີຣົດຮົບ ກຽນ ແລະຊົນຊາດທັງຫລາຍເປັນອັນມາກ ເຂົາຈະຕັ້ງຕົນຕໍ່ສູ້ເຈົ້າທຸກດ້າ
ນ ດ້ວຍໂລ້ໃຫຍ່ແລະໂລ້ນ້ອຍ ແລະຫມວກເຫລັກ ແລະເຮົາຈະມອບການພິພາກສາໃຫ້ເຂົາ ແລະເຂົາທັງຫລາຍຈະພິ
ພາກສາເຈົ້າຕາມຫລັກການພິພາກສາຂອງເຂົາທັງຫລາຍ
25 ເຮົາຈະມຸ່ງຄວາມກິ້ວຂອງເຮົາຕໍ່ສູ້ເຈົ້າ ແລະເຂົາຈະກະທຳກັບເຈົ້າດ້ວຍຄວາມກ້ຽວກາດ ແລະເຂົາຈະຕັດດັງເຈົ້າແລະ
ຕັດຫູຂອງເຈົ້າອອກເສັຽ ແລະຜູ້ທີ່ລອດຕາຍຈະລົ້ມລົງດ້ວຍດາບ ເຂົາຈະຈັບບຸດຊາຍແລະບຸດຍິງຂອງເຈົ້າ ແລະຄົນທີ່
ລອດຕາຍຂອງເຈົ້າຈະຖືກເຜົາດ້ວຍໄຟ
26 ເຂົາຈະແກ້ເອົາເສື້ອຂອງເຈົ້າອອກ ແລະນຳເອົາເຄື່ອງຮູບປະພັນງາມໆຂອງເຈົ້າໄປເສັຽ
27 ເຮົາຈະໃຫ້ຣາຄະແລະການຫລິ້ນຊູ້ ຊຶ່ງເຈົ້ານຳມາຈາກແຜ່ນດິນເອຢິບສູນສິ້ນລົງ ເພື່ອເຈົ້າຈະບໍ່ໄດ້ເງີຍຫນ້າຂຶ້ນເບິ່ງ
ຄົນເອຢິບແລະລະນຶກເຖິງເຂົາອີກຕໍ່ໄປ
28 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະມອບເຈົ້າໄວ້ໃນມືຂອງຜູ້ທີ່ເຈົ້າກຽດຊັງ ໃນມືຂອງຜູ້ເຫລົ່ານັ້ນທີ່
ເຈົ້າເບື່ອຫນ່າຍ
29 ເຂົາທັງຫລາຍຈະກະທຳກັບເຈົ້າດ້ວຍຄວາມກຽດຊັງແລະຍຶດເອົາຜົນແຫ່ງການງານຂອງເຈົ້າໄປເສັຽ ແລະຖິ້ມເຈົ້າໄວ້
ໃຫ້ຕົວປະເປືອຍຢູ່ບໍ່ມີຜ້າທີ່ມການປະເປືອຍຢູ່ແລະການຫນ້າລະອາຍ ແລະການຫລິ້ນຊູ້ຂອງເຈົ້າຈະຕ້ອງປາກົດແຈ້ງ

30 ຣາຄະແລະການຫລິ້ນຊູ້ຂອງເຈົ້າໄດ້ນຳສິ່ງເຫລົ່ານີ້ມາເຫນືອເຈົ້າ ເພາະເຈົ້າຫລິ້ນຊູ້ກັບປະຊາຊາດທັງຫລາຍ ຍ້ອນ
ເຈົ້າໄດ້ໃຫ້ຕົວຖືກຖ່ອຍຮ້າຍດ້ວຍຮູບໂຄຣົບຂອງເຂົາທັງຫລາຍ
31 ເຈົ້າດຳເນີນຕາມທາງແຫ່ງເອື້ອຍຂອງເຈົ້າ ເຫດສັນນັ້ນເຮົາຈຶ່ງມອບຈອກຂອງນາງໃສ່ມືເຈົ້າ
32 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຈົ້າຈະຕ້ອງດື່ມຈາກຈອກຂອງເອື້ອຍເຈົ້າ ຊຶ່ງເລິກແລະກວ້າງເຈົ້າຈະຖືກຫົວຂວັນເຍາະ
ເຍີ້ຍ ແລະຖືກພິ່ນປມາດເພາະຈອກນັ້ນເຕັມຈົນວ່າມັນລົ້ນອອກ
33 ເຈົ້າຈະເຕັມໄປດ້ວຍຄວາມມຶນເມົາແລະຄວາມໂສກ ຈອກຂອງຊາມາເຣັຽເອື້ອຍຂອງເຈົ້ານັ້ນເປັນຈອກແຫ່ງ
ຄວາມຢ້ານກົວແລະຫນ້າຢ້ານກົວ
34 ເຈົ້າຈະດື່ມແລະດື່ມຈົນກ້ຽງເຈົ້າຈະກັດຈອກນັ້ນເປັນປ່ຽງເສດ ແລະຈີກຫົວນົມຂອງເຈົ້າເສັຽ ເພາະເຮົາໄດ້ລັ່ນວາ
ຈາແລ້ວ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
35 ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະເຈົ້າລືມເຮົາແລະແກ່ວງເຮົາໄປໄວ້ເບື້ອງຫລັງເຈົ້າເສັຽ ເພາະສະນັ້ນ
ເຈົ້າຈຶ່ງຮັບໂທດຣາຄະ ແລະການຫລິ້ນຊູ້ຂອງເຈົ້າເທີນ”
36 ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ເຈົ້າຈະພິພາກສາໂອໂຮລາແລະໂອໂຮລີບາຫລື ແລ້ວ
ຈຶ່ງປະກາດການກະທຳທີ່ຫນ້າຊີ້ດຽດຂອງນາງໃຫ້ເຂົາຮູ້
37 ເພາະວ່ານາງໄດ້ກະທຳການລ່ວງປະເວນີ ແລະເລືອດຢູ່ໃນມືຂອງນາງ ນາງກະທຳການລ່ວງປະເວນີກັບຮູບໂຄຣົບ
ຂອງນາງ ແລະນາງຍັງຖວາຍບຸດຊາຍຊຶ່ງນາງບັງເກີດໃຫ້ແກ່ເຮົານັ້ນໃຫ້ລຸຍໄຟເປັນອາຫານແຫ່ງຮູບໂຄຣົບນັ້ນດ້ວຍ
38 ນອກຈາກນັ້ນນາງໄດ້ກະທຳເຊັ່ນນີ້ແກ່ເຮົາ ຄືນາງໄດ້ກະທຳໃຫ້ສະຖານສັກສິດຂອງເຮົາເປັນມົນທິນໃນວັນດຽວກັນ
ແລະໄດ້ ປມາດວັນສະບາໂຕທັງຫລາຍຂອງເຮົາ
39 ຄືຂນະເມື່ອນາງຂ້າລູກຂອງນາງເປັນເຄື່ອງບູຊາຮູບໂຄຣົບ ໃນວັນນັ້ນນາງກໍເຂົ້າມາໃນສະຖານສັກສິດຂອງເຮົາ ແລະ
ກະທຳສະຖານທີ່ນັ້ນໃຫ້ເປັນມົນທິນ ນາງກະທຳສິ່ງເຫລົ່ານີ້ໃນວິຫານຂອງເຮົາ
40 ນອກຈາກນີ້ນາງຍັງໄດ້ໃຫ້ໄປຫາຜູ້ຊາຍມາຈາກເມືອງໄກ ຄືນາງໃຊ້ຜູ້ນຳຂ່າວໄປຫາ ແລະເບິ່ງແມ, ເຂົາກໍມາ ເຈົ້າກໍ
ຊຳຮະຕົວຂອງເຈົ້າ ເຈົ້າທາຕາຂອງເຈົ້າ ແລະແຕ່ງກາຍຂອງເຈົ້າດ້ວຍເຄື່ອງປະດັບ ເພື່ອຄົນເຫລົ່ານັ້ນ
41 ເຈົ້ານັ່ງຢູ່ເທິງຕັ່ງອັນສູງສັກ ມີໂຕະວາງຢູ່ຂ້າງຫນ້າ ຊຶ່ງເປັນໂຕະທີ່ເຈົ້າໄດ້ວາງເຄື່ອງຫອມແລະນ້ຳມັນຂອງເຮົາ
42 ສຽງຂອງປະຊາຊົນທີ່ປ່ອຍຕົວກໍດັງຢູ່ກັບນາງ ພ້ອມກັບຄົນສາມັນເຂົານຳຄົນເມົາມາຈາກຖິ່ນກັນດານດ້ວຍ ແລະເຂົາ
ເອົາກຳໄລມືສວມໃສ່ແຂນຂອງຜູ້ຍິງແລະສວມມົງກຸດງາມໆໃສ່ເທິງຫົວຂອງນາງທັງສອງ
43 “ເຮົາຈຶ່ງກ່າວເຣື່ອງນາງ ຜູ້ທີ່ຫງ່ອຮ່ວງໂດຍການລ່ວງປະເວນີວ່າ ເຂົາຍັງຫລິ້ນຊູ້ກັບນາງຫລື
44 ເພາະຊາຍເຫລົ່ານັ້ນຍັງເຂົ້າຫານາງ ຢ່າງດຽວກັບຜູ້ຊາຍເຂົ້າຫາໂສເພນີ ດັ່ງນັ້ນເຂົາກໍເຂົ້າຫາໂອໂຮລາກັບໂອໂຮລີ
ບາຊຶ່ງເປັນຍິງມີຣາຄະ
45 ແຕ່ຄົນຊອບທັມຈະພິພາກສານາງດ້ວຍຄຳພິພາກສາອັນຄວນຕົກແກ່ຍິງຜູ້ລ່ວງປະເວນີ ແລະດ້ວຍຄຳພິພາກສາອັນ
ຄວນຕົກແກ່ຍິງຜູ້ກະທຳໃຫ້ເລືອດອອກ ເພາະນາງເປັນຍິງລ່ວງປະເວນີ ແລະເພາະຄວາມຜິດທີ່ທຳໃຫ້ ນາງເຖິງຕາຍ
ຢູ່ກັບນາງ”
46 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງນຳກອງທັບມາສູ້ກັບນາງທັງສອງນີ້ ແລະມອບນາງໄວ້ແກ່ຄວາມຢ້ານກົວແລະ
ການຖືກຍຶດ
47 ແລະກອງທັບຈະເອົາຫີນຄວ່າງໃສ່ນາງແລະຂ້ານາງເສັຽດ້ວຍດາບ ເຂົາຂ້າບຸດຊາຍຍິງຂອງນາງ ແລະເຜົາເຮືອນທັງ
ຫລາຍຂອງນາງເສັຽ
48 ດັ່ງນີ້ແຫລະ, ເຮົາຈະໃຫ້ຣາຄະໃນແຜ່ນດິນນັ້ນສູນສິ້ນໄປ ເພື່ອຜູ້ຍິງທັງຫລາຍຈະໄດ້ຮັບຄວາມຕັກເຕືອນແລະບໍ່ປະ
ພຶດຣາຄະຢ່າງທີ່ເຈົ້າໄດ້ກະທຳແລ້ວນັ້ນ

49 ສ່ວນຣາຄະຂອງເຈົ້ານັ້ນເຈົ້າຈະຕ້ອງຮັບໂທດ ແລະເຈົ້າຈະຕ້ອງຮັບໂທດເຣື່ອງການບູຊາຮູບໂຄຣົບຢ່າງບາບໜາ
ຂອງເຈົ້າ ແລະເຈົ້າຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ"

## 24 ຄຳອຸປມາເຣື່ອງໜໍ້ເດືອດ

The Boiling Pot

(ຍຣມ 1:13-19)

1 ເມື່ອວັນທີ່ສິບເດືອນທີ່ສິບປີທີ່ເກົ້າ ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 "ບຸດແຫ່ງມະນຸດເອີຍ, ຈົ່ງຂຽນຊື່ຂອງວັນນີ້ໄວ້ ວັນນີ້ກະສັດບາບີໂລນລ້ອມເຢຣູຊາເລັມ ໃນວັນນີ້ເອງ
3 ແລະຈົ່ງກ່າວຄຳອຸປມາແກ່ເຊື້ອສາຍທີ່ມັກກະບົດ ແລະເວົ້າກັບເຂົາວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງຕັ້ງໜໍ້ໄວ້ ຕັ້ງ
ໄວ້ເດີ ເທນໍ້າໃສ່ໜໍ້ນຳ
4 ໃສ່ຊີ້ນເຂົ້າໄປ ເອົາຊີ້ນດີໆ ຄືຊີ້ນໂຄ່ນຂາ ແລະຊີ້ນສັນຂາໜ້າ ເລືອກກະດູກດີມາໃສ່ໃຫ້ເຕັມ
5 ຈົ່ງເລືອກແກະທີ່ດີທີ່ສຸດມາໂຕນຶ່ງ ກອງຟືນໄວ້ໃຕ້ນັ້ນ ຈົ່ງຕົ້ມໃຫ້ດີເພື່ອຄ້ຽວກະດູກທີ່ຢູ່ໃນນັ້ນດ້ວຍ
6 "ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ວິບັດແກ່ກຸງທີ່ຊຸ່ມໂລຫິດ ວິບັດແກ່ໜໍ້ທີ່ມີຂີ້ໝ້ຽງຂ້າງໃນ ແລະຊຶ່ງຂີ້ໝ້ຽງບໍ່
ໄດ້ຫລຸດອອກມາ ຈົ່ງເອົາເນື້ອອອກເທື່ອລະຕ່ອນໆ ຢ່າຈັບສລາກເລີຍ
7 ເພາະວ່າເລືອດທີ່ນາງກະທຳໃຫ້ອອກນັ້ນຍັງຢູ່ຖ້າມກາງນາງ ນາງວາງໄວ້ເທິງຫີນໂລ້ນ ນາງບໍ່ໄດ້ເທລົງໄວ້ເທິງຫີນ
ໂລ້ນ ນາງບໍ່ໄດ້ເທລົງດິນເພື່ອເອົາຂີ້ຝຸ່ນດິນປົກປິດໄວ້
8 ເຮົາໄດ້ວາງເລືອດທີ່ນາງທຳໃຫ້ອອກນັ້ນໄວ້ເທິງກ້ອນຫີນ ເພື່ອບໍ່ໃຫ້ປິດເລືອດນັ້ນໄວ້ ເພື່ອເພີ້ມຄວາມພິໂຣດ ແລະ
ທຳການແກ້ແຄ້ນ
9 ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ວິບັດແກ່ກຸງທີ່ຄາຕະກັມ ເຮົາຈະກະທຳໃຫ້ກອງຟືນນັ້ນໃຫຍ່ຂຶ້ນ
10 ຈົ່ງສຸມຟືນເຂົ້າໄປແລະກໍ່ໄຟຂຶ້ນ ຕົ້ມຊີ້ນໃຫ້ດີ ແລ້ວເທນໍ້າຕົ້ມຊີ້ນນັ້ນອອກເສັຽ ແລະປ່ອຍກະດູກໃຫ້ໄໝ້
11 ແລະວາງໜໍ້ເປົ່າໄວ້ເທິງຖ່ານເພື່ອໃຫ້ຮ້ອນ ໃຫ້ທອງແດງໄໝ້ ໃຫ້ຄວາມເປື້ອນເປິລະລາຍເສັຽໃນນັ້ນ ໃຫ້ຂີ້
ໝ້ຽງຂອງມັນໄໝ້ໄຟ
12 ເຮົາກະທຳຕົວຂອງເຮົາໃຫ້ເມື່ອຍໄປລ້າໆ ຂີ້ໝ້ຽງທີ່ໜາຂອງມັນກໍບໍ່ຫລຸດອອກດ້ວຍໄຟ
13 ຂີ້ໝ້ຽງນັ້ນໄດ້ແກ່ຣາຄະອັນເປື້ອນເປິຂອງເຈົ້າ ເພາະວ່າເຮົາຈະຊຳຣະເຈົ້າແລ້ວ ແຕ່ເຈົ້າບໍ່ຊຳຣະຕົວຈາກຄວາມເປື້ອນ
ເປິຂອງເຈົ້າ ເຈົ້າຈະບໍ່ຖືກຊຳຣະອີກຕໍ່ໄປ ຈົນກວ່າເຮົາຈະລະບາຍຄວາມກ້ຽວກາດຂອງເຮົາອອກເໜືອເຈົ້າຈົນໝົດ
14 ເຮົາຄືພຣະຜູ້ເປັນເຈົ້າໄດ້ລັ່ນວາຈາແລ້ວ ຈະເປັນໄປຢ່າງນັ້ນ ເຮົາຈະກະທຳເຊັ່ນນັ້ນ ເຮົາຈະບໍ່ຖອຍກັບ ເຮົາຈະບໍ່
ສງວນໄວ້ ແລະເຮົາຈະບໍ່ປ່ຽນໃຈ ເຮົາຈະພິພາກສາເຈົ້າຕາມວິທີການແລະການກະທຳຂອງເຈົ້າ ພຣະຜູ້ເປັນເຈົ້າກ່າວ
ດັ່ງນີ້ແຫລະ"

### ມໍຣະນະກັມຂອງພັຣຍາເອເຊກຽນ

Ezekiel's Bereavement

15 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າອີກວ່າ,
16 "ບຸດແຫ່ງມະນຸດເອີຍ, ເບິ່ງແມ, ເຮົາຈະເອົາສິ່ງທີ່ພໍຕາຂອງເຈົ້າໄປເສັຽຈາກເຈົ້າດ້ວຍການປະຫານເສັຽແລ້ວ ເຖິງປານ
ນັ້ນເຈົ້າກໍຢ່າຄໍ່າຄວນຫລືຮ້ອງໄຫ້ ຫລືໃຫ້ນໍ້າຕາອອກ
17 ຈົ່ງຫາຍໃຈໃຫຍ່ເຖີດ ແຕ່ຢ່າໃຫ້ອອກສຽງ ຢ່າໄວ້ທຸກໃຫ້ຄົນທີ່ຕາຍ ຈົ່ງປົກຫົວຂອງເຈົ້າ ແລະໃສ່ເກີບຂອງເຈົ້າ ຢ່າ
ປິດໜວດຫລືຮັບປະທານອາຫານຂອງເຂົາ"
18 ດັ່ງນັ້ນ ຂ້າພະເຈົ້າຈຶ່ງເວົ້າກັບປະຊາຊົນຕອນເຊົ້າ ແລະພັຣຍາຂອງຂ້າພະເຈົ້າກໍສິ້ນຊີວິດຕອນຄໍ່າ ຮຸ່ງເຊົ້າຂຶ້ນຂ້າພະ
ເຈົ້າກໍກະທຳຢ່າງທີ່ຂ້າພະເຈົ້າຮັບພຣະບັນຊາ

19 ປະຊາຊົນກໍຖາມຂ້າພະເຈົ້າວ່າ, "ທ່ານຈະບໍ່ບອກເຮົາທັງຫລາຍຫລືວ່າ ສິ່ງນີ້ມີຄວາມຫມາຍຫຍັງແກ່ເຮົາ ຊຶ່ງທ່ານກະທຳເຊັ່ນນີ້"

20 ແລ້ວຂ້າພະເຈົ້າກໍເວົ້າກັບເຂົາວ່າ "ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ

21 "ຈົ່ງກ່າວແກ່ເຊື້ອສາຍອິສຣາເອນວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະກະທຳສະຖານສັກສິດຂອງເຮົາອັນເປັນຄວາມພາກພູມໃຈໃນອຳນາດຂອງເຈົ້າ ແລະຄວາມປາຖນາແຫ່ງວິນຍານຈິດຂອງເຈົ້າ ໃຫ້ກາຍເປັນບ່ອນຖ່ອຍຮ້າຍ ບຸດຊາຍຍິງຂອງເຈົ້າຊຶ່ງເຈົ້າຖິ້ມໄວ້ເບື້ອງຫລັງຈະລົ້ມລົງດ້ວຍດາບ

22 ແລະເຈົ້າທັງຫລາຍຈະກະທຳຢ່າງທີ່ເຮົາກະທຳ ເຈົ້າຈະບໍ່ປິດຫນວດ ຫລືຮັບປະທານອາຫານຂອງເຂົາ

23 ຜ້າຄຽນຫົວຈະຢູ່ເທິງຫົວຂອງເຈົ້າ ແລະເກີບຈະຢູ່ທີ່ຕີນຂອງເຈົ້າ ເຈົ້າຈະບໍ່ໄວ້ທຸກຫລືຮ້ອງໄຫ້ ແຕ່ເຈົ້າຈະຈິບຫາຍໄປເພາະຄວາມບາບຊົ່ວຂອງເຈົ້າ ແລະຈະໂອ່ຍຄາງແກ່ກັນແລະກັນ

24 ເອເຊກຽນຈະເປັນເຄື່ອງຫມາຍສຳຄັນແກ່ເຈົ້າທັງຫລາຍດັ່ງນີ້ ເຂົາໄດ້ກະທຳສິ່ງໃດ ເຈົ້າຈະກະທຳຢ່າງນັ້ນ ເມື່ອເຫດການເຫລົ່ານີ້ມາເຖິງ ເຈົ້າຈະໄດ້ຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ

25 "ແລະເຈົ້າ ບຸດແຫ່ງມະນຸດເອີຍ, ໃນວັນທີ່ເຮົາເອົາທີ່ກຳບັງເຂັ້ມແຂງຂອງເຂົາທັງຫລາຍອອກໄປ ອັນເປັນຄວາມລື້ນເລີງ ແລະເປັນສັກສີຂອງເຂົາ ສິ່ງທີ່ພໍເຖົ້າຂອງເຂົາທັງຫລາຍ ແລະສິ່ງທີ່ໃຈຂອງເຂົາປາຖນາ ທັງບຸດຊາຍແລະບຸດຍິງຂອງເຂົາ

26 ໃນວັນນັ້ນ ຜູ້ຫນີພັຍຈະມາຫາເຈົ້າ ເພື່ອຈະລາຍງານຂ່າວໃຫ້ເຈົ້າໄດ້ຍິນເອງ

27 ໃນວັນນັ້ນ ປາກຂອງເຈົ້າຈະເຊົາກີກຕໍ່ຫນ້າຜູ້ຫນີພັຍ ແລະເຈົ້າຈະເວົ້າແລະຈະບໍ່ກີກອີກຕໍ່ໄປ ດັ່ງນັ້ນເຈົ້າເປັນເຄື່ອງຫມາຍສຳລັບເຂົາ ແລະເຂົາທັງຫລາຍຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ"

## 25 ຄຳເຜີຍພຣະຄຳກ່າວໂທດຄົນອັມໂມນ

Proclamation against Ammon

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

2 "ບຸດແຫ່ງມະນຸດເອີຍ, ມຸ້ງຫນ້າຂອງເຈົ້າໄປຍັງຄົນອັມໂມນ ແລະຈົ່ງປະກາດພຣະຄຳກ່າວໂທດເຂົາ

3 ຈົ່ງກ່າວແກ່ຄົນອັມໂມນວ່າ ຈົ່ງຟັງພຣະຄຳຂອງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ອາຮາ" ເຫນືອສະຖານສັກສິດຂອງເຮົາເມື່ອທີ່ນັ້ນເປັນມົນທິນ ແລະເຫນືອແຜ່ນດິນອິສຣາເອນເມື່ອໄດ້ຖືກກະທຳໃຫ້ຮ້າງເປົ່າ ແລະເຫນືອເຊື້ອສາຍຢູດາເມື່ອຖືກກວາດໄປເປັນຊະເລີຍ

4 ເຫດສັນນັ້ນ ເບິ່ງແມ, ເຮົາຈະມອບເຈົ້າໃຫ້ແກ່ປະຊາຊົນທາງທິດຕາເວັນອອກໃຫ້ເປັນກຳມະສິດ ເຂົາຈະຕັ້ງຄ້າຍຢູ່ຖ້າມກາງເຈົ້າ ແລະສ້າງທີ່ຢູ່ຂອງເຂົາກາງພວກເຈົ້າ ເຂົາທັງຫລາຍຈະຮັບປະທານຫມາກໄມ້ຂອງເຈົ້າ ແລະຈະດື່ມນ້ຳນົມຂອງເຈົ້າ

5 ເຮົາຈະກະທຳໃຫ້ເມືອງຣັບບາເປັນທົ່ງຫຍ້າສຳລັບອູດ ແລະທຳໃຫ້ທີ່ຂອງຄົນອັມໂມນເປັນຄອກສຳລັບຝູງແກະແບ້ ແລ້ວເຈົ້າຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ

6 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະເຈົ້າໄດ້ຕົບມືແລະກະທືບຕີນແລະຍິນດີດ້ວຍໃຈຄິດຮ້າຍຕໍ່ແຜ່ນດິນອິສຣາເອນ

7 ເຫດສັນນັ້ນ ເບິ່ງແມ, ເຮົາໄດ້ຍື່ນມືຂອງເຮົາອອກຕໍ່ສູ້ເຈົ້າ ແລະຈະມອບເຈົ້າໄວ້ແກ່ປະຊາຊົນທັງຫລາຍໃຫ້ເປັນຂອງຍຶດ ແລະເຮົາຈະຕັດເຈົ້າອອກເສັຽຈາກຊົນຊາດທັງຫລາຍ ແລະເຮົາຈະກະທຳໃຫ້ເຈົ້າພິນາດໄປຈາກປະເທດຕ່າງໆ ເຮົາຈະທຳລາຍເຈົ້າແລ້ວເຈົ້າຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ

### ຄຳເຜີຍພຣະຄຳກ່າວໂທດໂມອາບ

Proclamation against Moab

8 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະໂມອາບແລະເຊອີກ່າວວ່າ ເບິ່ງແມ, ເຊື້ອສາຍຢູດາກໍເຫມືອນປະຊາຊາດອື່ນໆ
ທັງສິ້ນ
9 ເຫດສັນນັ້ນ ເບິ່ງແມ, ເຮົາຈະເປີດບ່າໄລ່ໂມອາບ ຈົນບໍ່ມີເມືອງເຫລືອຄືເມືອງຂອງເຂົາຈາກດ້ານນັ້ນ ສັກສີຂອງປະ
ເທດນັ້ນຄືເມືອງເບທເຢຊີໂມທ ເມືອງບາອານເມໂອນແລະເມືອງກີຣີອາທາອິມ
10 ເຮົາຈະມອບໃຫ້ແກ່ປະຊາຊົນທາງທິດຕາເວັນອອກ ພ້ອມກັບຄົນອັມໂມນໃຫ້ເປັນກຳມະສິດແກ່ເຈົ້າ ເພື່ອວ່າຈະບໍ່ມີ
ໃຜນຶກເຖິງຄົນອັມໂມນອີກໃນຖ້າມກາງປະຊາຊາດ
11 ແລະເຮົາຈະພິພາກສາລົງໂທດໂມອາບ ແລ້ວເຂົາທັງຫລາຍຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ

**ຄຳເຜີຍພຣະຄຳກ່າວໂທດເອໂດມ**

Proclamation against Edom

12 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະວ່າເອໂດມໄດ້ປະພຶດຢ່າງຄຽດແຄ້ນຕໍ່ເຊື້ອສາຍຢູດາ ແລະໄດ້ກະທຳກັນຊົ່ວ
ຫລາຍໃນການທີ່ແກ້ແຄ້ນເຂົາ
13 ເຫດສັນນັ້ນ ພຣະຜູ້ເປັນເຈົ້າຈຶ່ງກ່າວດັ່ງນີ້ວ່າ ເຮົາຈະຍື່ນມືຂອງເຮົາອອກຕໍ່ສູ້ເອໂດມ ແລະຕັດຄົນແລະສັດອອກເສັຽ
ຈາກເມືອງນັ້ນ ແລະເຮົາຈະກະທຳໃຫ້ເມືອງນັ້ນຮ້າງເປົ່າຕັ້ງແຕ່ເມືອງເຕມານເຖິງເມືອງເດດານ ເຂົາທັງຫລາຍກໍຈະ
ລົ້ມລົງດ້ວຍດາບ
14 ແລະເຮົາຈະວາງການແກ້ແຄ້ນຂອງເຮົາລົງເຫນືອເມືອງເອໂດມດ້ວຍມືຂອງອິສຣາເອນໄພ່ພົນຂອງເຮົາ ແລະເຂົາຈະ
ກະທຳຕາມຄວາມກິ້ວໂກດແລະຄວາມພິໂຣດຂອງເຮົາໃນເມືອງເອໂດມ ແລະເຂົາຈະຊາບເຖິງການແກ້ແຄ້ນຂອງເຮົ
າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

**ຄຳເຜີຍພຣະຄຳກ່າວໂທດຄົນຟີລິສຕິນ**

Proclamation against Philistia

15 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະວ່າຄົນຟີລິສຕິນໄດ້ກະທຳຢ່າງຄຽດແຄ້ນແລະທຳການແກ້ແຄ້ນດ້ວຍໃຈຄິດຮ້າຍ
ຫມາຍທຳລາຍ ໂດຍຄວາມເປັນສັດຕຣູອັນບໍ່ຮູ້ຈັກຈົບສິ້ນນັ້ນເສັຽ
16 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະຍື່ນມືຂອງເຮົາອອກຕໍ່ສູ້ຄົນຟີລິສຕິນ ແລະເຮົາຈະຕັດ
ຄົນເຄເຣທີອອກ ແລະທຳລາຍຄົນທີ່ເຫລືອຢູ່ຕາມຝັ່ງທະເລນັ້ນເສັຽ
17 ເຮົາຈະກະທຳການແກ້ແຄ້ນໃຫຍ່ຍິ່ງເຫນືອເຂົາດ້ວຍການຊໍາຣະຢ່າງພິໂຣດຂອງເຮົາ ແລ້ວເຂົາຈະຊາບວ່າເຮົາຄືພຣະ
ຜູ້ເປັນເຈົ້າ ເມື່ອເຮົາໄດ້ວາງການແກ້ແຄ້ນຂອງເຮົາໄວ້ເຫນືອເຂົາ”

## 26 ຄຳເຜີຍພຣະຄຳກ່າວໂທດເມືອງຕີເຣ

Proclamation against Tyre

1 ຢູ່ມາໃນວັນຕົ້ນເດືອນປີທີສິບເອັດ ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 “ບຸດແຫ່ງມະນຸດເອີຍ, ເພາະວ່າເມືອງຕີເຣ ໄດ້ເວົ້າກ່ຽວພັນກັບເຢຣູຊາເລັມວ່າ “ປະຕູເມືອງຂອງຊົນຊາດທັງຫລາຍ
ຫັກເສັຽແລ້ວ ມັນເປີດກວ້າງໄວ້ຮັບຂ້າ ມັນຮ້າງເປົ່າແລ້ວ ຂ້າຈະບໍຣິບູນຂຶ້ນ”
3 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ, ເມືອງຕີເຣເອີຍ, ເຮົາເປັນສັດຕຣູກັບເຈົ້າ ແລະຈະນຳປະຊາຊາດຢ່າງ
ຫລວງຫລາຍຕໍ່ສູ້ເຈົ້າ ດັ່ງທະເລກະທຳໃຫ້ຄື້ນຂອງມັນຂຶ້ນມາ
4 ເຂົາທັງຫລາຍຈະທຳລາຍກຳແພງເມືອງຕີເຣ ແລະພັງທະລາຍຫໍຄອຍຂອງເມືອງນັ້ນເສັຽ ແລະເຮົາຈະຂຸດດິນເສັຽຈາກ
ເມືອງນັ້ນ ກະທຳໃຫ້ເປັນຫີນໂຫລ້ນໆ
5 ເມືອງນັ້ນເປັນທີ່ສຳລັບຕາກມອງຢູ່ກາງທະເລ ເພາະເຮົາໄດ້ລັ່ນວາຈາແລ້ວ ພຣະຜູ້ເປັນເຈົ້າໄດ້ກ່າວ ແລະເມືອງນັ້ນ
ຈະເປັນຂອງປຸ້ນແຫ່ງບັນດາປະຊາຊາດ

6 ແລະພວກລູກສາວຂອງເມືອງນີ້ຊຶ່ງຢູ່ເທິງແຜ່ນດິນໃຫຍ່ຈະຕ້ອງຖືກຂ້າເສັຽດ້ວຍດາບ ແລ້ວເຂົາທັງຫລາຍຈະຊາບວ່າ
ເຮົາຄືພຣະຜູ້ເປັນເຈົ້າ
7 “ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະນຳເນບູກາດເນສຊາກະສັດບາບີໂລນ ຜູ້ເປັນຈອມກະສັດມາຍັງ
ເມືອງຕີເຣຈາກທິດເຫນືອ ພ້ອມທັງມ້າແລະຣົດຮົບກັບພົນມ້າແລະກອງທະຫານຫລວງຫລາຍ
8 ທ່ານຈະຂ້າລູກສາວຂອງເຈົ້າເທິງແຜ່ນດິນໃຫຍ່ເສັຽດ້ວຍດາບ ທ່ານຈະກໍ່ກຳແພງລ້ອມເຈົ້າໄວ້ ແລະສ້າງຄັນຄູຕໍ່ສູ້ກັບ
ເຈົ້າ ແລະຈະຍົກຫລັງຄາເປັນໂລ້ຕໍ່ສູ້ກັບເຈົ້າ
9 ທ່ານຈະຕັ້ງເຄື່ອງເຈາະປ່ອງຕໍ່ສູ້ກັບກຳແພງຂອງເຈົ້າແລະທ່ານຈະເອົາຂວານຂອງທ່ານຟັນຫໍຄອຍຂອງເຈົ້າລົງ
10 ມ້າຂອງທ່ານຫລວງຫລາຍຈົນຂີ້ຝຸ່ນມ້າທີ່ຟຸ້ງຂຶ້ນປົກຄຸມເຈົ້າໄວ້ ກຳແພງເມືອງຂອງເຈົ້າຈະສັ່ນສະເທືອນ ດ້ວຍສຽງພົນ
ມ້າແລະກວຽນແລະຣົດຮົບ ເມື່ອທ່ານຈະຍົກເຂົ້າປະຕູເມືອງຂອງເຈົ້າ ເຫມືອນຢ່າງຄົນເດີນເຂົ້າເມືອງ ເມື່ອເມືອງນັ້ນ
ແຕກແລ້ວ
11 ທ່ານຈະຢຽບຢ່ຳທີ່ຖນົນຂອງເຈົ້າດ້ວຍກີບມ້າ ທ່ານຈະຂ້າຊົນຊາດຂອງເຈົ້າເສັຽດ້ວຍດາບ ແລະເສົາຫານອັນແຂງແຮງ
ຂອງເຈົ້າຈະລົ້ມລົງເຖິງດິນ
12 ຊັບສົມບັດຂອງເຈົ້າ ທ່ານຈະເອົາມາເປັນຂອງປຸ້ນ ເຂົາທັງຫລາຍຈະພັງກຳແພງຂອງເຈົ້າລົງ ແລະຈະທຳລາຍບ້ານ
ອັນສວຍງາມຂອງເຈົ້າເສັຽ ຫີນ ໄມ້ແລະດິນຂອງເຈົ້ານັ້ນເຂົາຈະໂຍນຖິ້ມເສັຽກາງນ້ຳ
13 ສຽງເພງຂອງເຈົ້ານັ້ນເຮົາກໍຈະໃຫ້ຢຸດ ແລະສຽງພິນເຂົາຄູ່ຂອງເຈົ້າຈະບໍ່ໄດ້ຍິນອີກ
14 ເຮົາຈະກະທຳເຈົ້າໃຫ້ເປັນສີລາໂຫລ້ນ ເຈົ້າຈະເປັນສະຖານທີ່ສຳລັບຕາກມອງ ຈະບໍ່ມີຜູ້ໃດສ້າງເຈົ້າຂຶ້ນໃຫມ່ເລີຍ
ເພາະເຮົາຄືພຣະຜູ້ເປັນເຈົ້າໄດ້ລັ່ນວາຈາແລ້ວ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
15 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແກ່ເມືອງຕີເຣວ່າ ແຜ່ນດິນຊາຍທະເລຈະບໍ່ໄດ້ສັ່ນສະເທືອນດ້ວຍສຽງທີ່ເຈົ້າລົ້ມເມື່ອຜູ້ບາດ
ເຈັບຮ້ອງຄວນຄາງ ເມື່ອການເຂັ່ນຂ້າໄດ້ເກີດຢູ່ຖ້າມກາງເຈົ້າຫລື
16 ແລ້ວເຈົ້ານາຍທັງສິ້ນທີ່ຈະກ້າວລົງມາຈາກບັນລັງແລະແກ້ເຄື່ອງທົງອອກ ແລະປົດເຄື່ອງແຕ່ງກາຍທີ່ປັກອອກເສັຽ
ແລະຈະເອົາຄວາມສັ່ນສາຍຢ້ານກົວມາເປັນເຄື່ອງທົງ ຈະປະທັບຢູ່ເທິງພື້ນດິນແລະສັ່ນຢູ່ທຸກຂນະແລະຢ້ານກົວເພາະ
ເຈົ້າ ເມືອງຕີເຣ
17 ທ່ານເຫລົ່ານີ້ຈະເປັ່ງສຽງບົດຄ່ຳຄວນເຣື່ອງເຈົ້າ ແລະກ່າວແກ່ເຈົ້າວ່າ “ໂອ ເຈົ້າ ຜູ້ມີພົລເມືອງຫນາແຫນ້ນເອີຍ, ເຈົ້າສູ
ນໄປຈາກທະເລເສັຽແລ້ວ ເຈົ້າເປັນເມືອງແຂງກ້າຢູ່ທີ່ທະເລ ທັງເຈົ້າແລະຊາວເມືອງຂອງເຈົ້າວ່າເຖິງຄົນທີ່ນັ້ນແລ້ວ
ເຈົ້າໃຫ້ເຂົາຢ້ານ
18 ບັດນີ້ ເກາະທັງຫລາຍກໍສັ່ນສະເທືອນໃນວັນທີ່ເຈົ້າລົ້ມລົງ ບັນດາເກາະທີ່ຢູ່ໃນທະເລກໍຢ້ານເພາະເຈົ້າສິ້ນໄປເສັຽ”
19 “ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເມື່ອເຮົາກະທຳເຈົ້າໃຫ້ເປັນເມືອງຮ້າງເປົ່າເຫມືອນຢ່າງເມືອງທີ່ບໍ່ມີຄົນອາສັຍ
ເມື່ອເຮົານຳທະເລມາຖ້ວມເຈົ້າ ແລະນ້ຳມາກຫລາຍປົກຄຸມເຈົ້າໄວ້
20 ແລ້ວເຮົາຈະຊຸກເຈົ້າລົງໄປພ້ອມກັບຄົນເຫລົ່ານັ້ນທີ່ລົງໄປຍັງປາກແດນຄົນຕາຍ ໄປຍັງຄົນສມັຍເກົ່າ ເຮົາຈະກະທຳ
ເຈົ້າໃຫ້ອາສັຍຢູ່ທີ່ໂລກບາດານຖ້າມກາງສິ່ງສລັກຫັກພັງໃນສມັຍດຶກດຳບັນ ພ້ອມກັບຜູ້ທີ່ລົງໄປຍັງປາກແດນຄົນຕາຍ
ເພື່ອວ່າຈະບໍ່ມີຜູ້ໃດອາສັຍຢູ່ໃນເຈົ້າ ແລະເຈົ້າຈະບໍ່ຕັ້ງຢູ່ໃນແຜ່ນດິນຂອງຜູ້ມີຊີວິດ
21 ເຮົາຈະກະທຳໃຫ້ເຈົ້າເປັນທີ່ຫນ້າຕົກໃຈ ຈະບໍ່ມີເຈົ້າອີກແລ້ວ ເຖິງຜູ້ໃດຈະມາຫາເຈົ້າ ເຂົາຈະມາຫາເຈົ້າບໍ່ພົບອີກຕໍ່
ໄປເປັນນິດ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ”

## 27 ບົດຄ່ຳຄວນເຣື່ອງເມືອງຕີເຣ

Lamentation over Tyre

1 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

2 ເຈົ້າ ບຸດແຫ່ງມະນຸດເອີຍ, ຈົ່ງເປັ່ງສຽງບົດຄໍ່າຄວນເຣື່ອງເມືອງຕີເຣ
3 ແລະຈົ່ງກ່າວແກ່ເມືອງຕີເຣ ຜູ້ຢູ່ທາງເຂົ້າສູ່ທະເລ ເປັນພໍ່ຄ້າແຫ່ງຊົນຊາດທັງຫລາຍທີ່ຢູ່ຕາມແຜ່ນດິນຊາຍທະເລ ພ
ຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເມືອງຕີເຣເອີຍ, ເຈົ້າໄດ້ກ່າວວ່າ ຂ້ານີ້ມາພ້ອມຄວາມງາມອັນສົມບູນແບບ
4 ເຂດແດນຂອງເຈົ້າຢູ່ທີ່ກາງທະເລ ຜູ້ກໍ່ສ້າງໄດ້ກະທໍາໃຫ້ຄວາມງົດງາມຂອງເຈົ້າເປັນດັ່ງເຮືອລໍາງາມ
5 ເຂົາໄດ້ເອົາໄມ້ແປກມາຈາກເຊນີ ເຂົາເອົາໄມ້ສົນມາຈາກເລບານອນເຮັດເປັນເສົາຄໍ້າທັງຫລາຍໃຫ້ເຈົ້າ
6 ເອົາໄມ້ກໍ່ແຫ່ງເມືອງບາຊານ ມາເຮັດເປັນໄມ້ພາຍຂອງເຈົ້າ ເຂົາເຮັດດາດຟ້າຂອງເຈົ້າດ້ວຍໄມ້ສົນ ໄດ້ມາຈາກຊາຍ
ຝັ່ງເກາະໄຊ ປຣັສຝັງດ້ວຍງາຊ້າງ
7 ສ່ວນໃບຂອງເຈົ້ານັ້ນ ທໍາດ້ວຍຜ້າປ່ານເນື້ອລະອຽດຈາກເອຢິບ ໃຊ້ຕາງທຸງຂອງເຈົ້າ ຜ້າສີຟ້າສີມ່ວງມາຈາກຝັ່ງເມືອງ
ເອລີຊາກໍເປັນທັບອາສັຍຂອງເຈົ້າ
8 ຊາວເມືອງຊີໂດນແລະເມືອງຊີໂດນແລະອາວັດ ເປັນພວກສີພາຍຂອງເຈົ້າ ໂອ ຕີເຣ ຊ່າງຝີມືທີ່ຢູ່ໃນກາງເຈົ້າ ກໍ
ເປັນພວກນາຍທ້າຍຂອງເຈົ້າ
9 ຜູ້ໃຫຍ່ຂອງເມືອງເກບານແລະຊ່າງສີມືຂອງເມືອງນີ້ກໍຢູ່ໃນເຈົ້າ ເປັນຊ່າງໄມ້ປະຈໍາເຮືອໃຫ້ເຈົ້າ ບັນດາເຮືອທະເລທັງ
ສິ້ນພ້ອມທີ່ນໍ້າທະເລກັບບັນດາລູກເຮືອນັ້ນໄດ້ຢູ່ນໍາເຈົ້າ ເພື່ອແລກປ່ຽນສິນຄ້າກັບເຈົ້າ
10 “ຊາວເປີເຊັຽ ລູດ ແລະພູທ ກໍຢູ່ໃນກອງທັບຂອງເຈົ້າ ເຂົາທັງຫລາຍເປັນທະຫານຂອງເຈົ້າ ເຂົາແຂວນໂລ້ແລະຫມວກ
ເຫລັກໃນເຈົ້າ ເຂົາກະທໍາໃຫ້ເຈົ້າມີສະງ່າ
11 ຊາວອາວັດແລະຊາວເຮເລກຢູ່ເທິງກໍາແພງໂດຍຮອບ ຊາວກາມັດຢູ່ໃນຫໍຄອຍຂອງເຈົ້າ ເຂົາແຂວນໂລ້ໄວ້ຕາມກໍາ
ແພງຂອງເຈົ້າໂດຍຮອບ ເຂົາກະທໍາໃຫ້ຄວາມງາມຂອງເຈົ້າດີທີ່ສຸດ
12 “ຕາຊິສໄປມາຄ້າຂາຍກັບເຈົ້າ ເພາະເຈົ້າມີຊັບພຍາກອນມາກມາຍຫລາຍຊະນິດ ເຂົາເອົາ ເງິນ ເຫລັກ ຊືນ ແລະກົ່ວ
ມາແລກປ່ຽນກັບສິນຄ້າຂອງເຈົ້າ
13 ເມືອງຢາວານ ຕູບານ ແລະເມເຊກ ຄ້າຂາຍກັບເຈົ້າ ເຂົາແລກປ່ຽນຄົນແລະພາຊນະທອງສໍາຣິດກັບສິນຄ້າຂອງເຈົ້າ
14 ເມືອງເບທໂຕການາ ເອົາຝູງມ້າກັບຄົນຂີ່ມ້າ ຝູງລໍມາແລກກັບສິນຄ້າຂອງເຈົ້າ
15 ຊາວເດດານທໍາການຄ້າຂາຍກັບເຈົ້າ ແຜ່ນດິນແຄມທະເລເປັນອັນມາກເປັນຕລາດປະຈໍາຂອງເຈົ້າ ເຂົານໍາງາຊ້າງ
ແລະໄມ້ຍຸງມາເປັນຄ່າຂອງສິນຄ້າ
16 ເມືອງອາຣາມ (Edom) ໄປມາຄ້າຂາຍກັບເຈົ້າ ເພາະເຈົ້າມີສິນຄ້າອຸດົມ ເຂົາເອົາມໍຣະກົດ ຜ້າສີມ່ວງ ຜ້າແສ່ວ ຜ້າ
ປ່ານເນື້ອລະອຽດ ຫີນງອກ ແລະທັບທິມມາແລກກັບສິນຄ້າຂອງເຈົ້າ
17 ຢູດາແລະແຜ່ນດິນອິສຣາເອນກໍຄ້າຂາຍກັບເຈົ້າ ເຂົາເອົາເຂົ້າບເລເມືອງມິນນິດ ຫມາກກອກເທດແລະຫມາກເດື່ອ
ຕົ້ນຣະດູ ນໍ້າເຜິ້ງ ນໍ້າມັນ ກໍາຍານ ມາແລກກັບສິນຄ້າຂອງເຈົ້າ
18 ດາມັສກັສໄປມາຄ້າຂາຍກັບເຈົ້າ ເພາະເຈົ້າມີສິນຄ້າອຸດົມ ເພາະຊັບພຍາກອນມາກມາຍຫລາຍຊະນິດຂອງເຈົ້າ ມີ
ເຫລົ້າອະງຸ່ນເຮນໂບນ ແລະຂົນແກະຂາວ
19 ເຂົາເອົາເຫລົ້າຈາກເມືອງອູຊານ ມາແລກກັບສິນຄ້າຂອງເຈົ້າ ເຂົາເອົາເຫລັກຫລໍ່ ແລະເຄື່ອງເທດຕ່າງໆມາແລກກັບ
ສິນຄ້າຂອງເຈົ້າ
20 ເມືອງເດດານຄ້າຂາຍກັບເຈົ້າໃນເຣື່ອງຜ້າອານສໍາລັບຂັບຂີ່
21 ເມືອງອາຣະເບັຽແລະເຈົ້ານາຍທັງຫລາຍຂອງເມືອງເກດາຣ ເປັນພໍ່ຄ້າຂາປະຈໍາໃນເຣື່ອງລູກແກະ ແກະເຖິກ ແບ້ ເຂົາ
ໄປມາຄ້າຂາຍກັບເຈົ້າໃນເຣື່ອງເຫລົ່ານີ້
22 ພໍ່ຄ້າທັງຫລາຍຂອງເມືອງເຊບາ ແລະເມືອງຣາອາມາກໍຄ້າຂາຍກັບເຈົ້າ ເຂົາເອົາເຄື່ອງເທດຊະນິດດີໆທັງສິ້ນແລະ
ເພັດພອຍທຸກຊະນິດ ແລະທອງຄໍາມາແລກສິນຄ້າກັບເຈົ້າ
23 ເມືອງຮາຣານ ການເນ ແລະເອເດນ ພໍ່ຄ້າທັງຫລາຍຂອງເມືອງເຊບາ ອັສຊູ ແລະຄິນມາດ ກໍຄ້າຂາຍກັບເຈົ້າ

24 ເມືອງເຫລົ່ານີ້ທຳການຄ້າຂາຍກັບເຈົ້າໃນຕລາດຂອງເຈົ້າໃນເຣື່ອງເຄື່ອງແຕ່ງກາຍຢ່າງດີວິເສດ ເສື້ອສີຟ້າ ແລະເສື້ອ
ແສ່ວ ແລະພົມທຳດ້ວຍດ້າຍສີຕ່າງໆມັດໄວ້ແໜ້ນດ້ວຍດ້າຍຝັ້ນ
25 ກຳປັ່ນເຮືອທັງຫລາຍຂອງເມືອງຕາຊິສບັນທຸກສິນຄ້າຂອງເຈົ້າ "ດັ່ງນັ້ນ ເຈົ້າຈຶ່ງບໍຣິບູນແລະບັນທຸກໄວ້ຢ່າງໜັກໃນ
ທ້ອງທະເລ
26 ພວກພາຍເຮືອຂອງເຈົ້ານຳເຈົ້າອອກໄປທີ່ໃນທະເລເລິກ ລົມຕາເວັນອອກທຳໃຫ້ເຮືອເຈົ້າແຕກໃນທ້ອງທະເລ
27 ຊັບສິນຂອງເຈົ້າ ຂອງຂາຍຂອງເຈົ້າ ສິນຄ້າຂອງເຈົ້າ ລູກເຮືອຂອງເຈົ້າ ແລະນາຍທ້າຍຂອງເຈົ້າ ຊ່າງໄມ້ປະຈຳຂອງ
ເຈົ້າ ຜູ້ຄ້າສິນຄ້າຂອງເຈົ້າ ນັກຣົບທັງສິ້ນຂອງເຈົ້າຜູ້ຢູ່ໃນເຈົ້າ ພ້ອມກັບພັກພວກທັງສິ້ນຂອງເຈົ້າທີ່ຢູ່ໃນຖ້າມກາງເຈົ້າ
ຈົມລົງໃນທ້ອງທະເລ
28 ແຜ່ນດິນກໍສັ່ນສະເທືອນ ເມື່ອໄດ້ຍິນສຽງໂອຍອາຍຂອງພວກນາຍທ້າຍຂອງເຈົ້າ
29 ຜູ້ທີ່ຖືໄມ້ພາຍກໍລົງມາຈາກເຮືອຂອງເຂົາ ພວກລູກເຮືອແລະພວກນາຍທ້າຍມາຢືນຢູ່ເທິງຝັ່ງທັງຫມົດ
30 ເຂົາລ້ວນແຕ່ໄວ້ທຸກໃຫ້ເຈົ້າແລະຮ້ອງໄຫ້ໜັກໜາ ເຂົາເອົາຂີ້ຝຸ່ນດິນຊັດໃສ່ຫົວຂອງເຂົາ ແລະກິ້ງເກືອກຢູ່ທີ່ກອງຂີ້
ເທົ່າ
31 ເຂົາແຖຜົມເພາະເຈົ້າ ແລະເອົາຜ້າກະສອບຄຽນແອວໄວ້ ເຂົາຮ້ອງໄຫ້ເພາະເຈົ້າດ້ວຍຈິດໃຈອັນຂົມຂື່ນ ກັບໄວ້ທຸກ
ໜັກ
32 ໃນການຮ້ອງຮ່ຳໄຮນັ້ນ ເຂົາເປັ່ງສຽງບົດຄ່ຳຄວນເພື່ອເຈົ້າ ແລະໄດ້ຮ້ອງທຸກເພື່ອເຈົ້າວ່າ, "ມີຜູ້ໃດຫລືທີ່ຖືກທຳລາຍ
ເໝືອນເມືອງຕີເຣ ໃນຖ້າມກາງທະເລ
33 ເມື່ອສິນຄ້າຂອງເຈົ້າມາຈາກທະເລກໍກະທຳໃຫ້ຊົນຊາດທັງຫລາຍເປັນອັນມາກພໍໃຈ ເຈົ້າໄດ້ກະທຳໃຫ້ບັນດາກະສັດ
ແຫ່ງໂລກມັ່ງຄັ່ງ ດ້ວຍສົມບັດແລະສິນຄ້າອັນອຸດົມຂອງເຈົ້າ
34 ບັດນີ້ ເຈົ້າຫລົ້ມລົງແລ້ວດ້ວຍທະເລໃນວັງນ້ຳເລິກ ສິນຄ້າຂອງເຈົ້າແລະລູກເຮືອຂອງເຈົ້າ ໄດ້ຈົມລົງພ້ອມກັບເຈົ້າ
35 ພວກຊາວແຜ່ນດິນຊາຍທະເລທັງສິ້ນ ກໍຕົກຕະລຶງເພາະເຈົ້າ ກະສັດທັງຫລາຍຂອງເມືອງນັ້ນກໍຢ້ານຍິ່ງນັກ ໃບໜ້າກໍ
ຂາວຊີດ
36 ພໍ່ຄ້າຖ້າມກາງຊົນຊາດທັງຫລາຍໂຮ່ຮ້ອງໃສ່ເຈົ້າ ເຈົ້າສູນສິ້ນເປັນເຫດໃຫ້ຕົກໃຈ ແລະຈະບໍ່ດຳຣົງຢູ່ອີກຕໍ່ໄປເປັນນິດ

## 28 ຄຳທຳນວາຍກ່າວໂທດກະສັດແຫ່ງເມືອງຕີເຣ

Proclamation against the King of Tyre

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 "ບຸດແຫ່ງບຸດມະນຸດເອີຍ, ຈົ່ງກ່າວແກ່ເຈົ້າເມືອງຕີເຣວ່າພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ເພາະໃຈຂອງເຈົ້າຜຍອງຂຶ້ນ
ແລະເຈົ້າໄດ້ກ່າວວ່າ ຂ້າເປັນພຣະເຈົ້າ ຂ້ານັ່ງຢູ່ໃນທີ່ນັ່ງແຫ່ງພຣະເຈົ້າໃນທ້ອງທະເລ" ແຕ່ເຈົ້າເປັນພຽງມະນຸດບໍ່ແມ່ນ
ພຣະເຈົ້າ ແມ້ເຈົ້າຈະພິຈາຣະນາຕົນເອງວ່າສລາດຢ່າງພຣະເຈົ້າ
3 ເຈົ້າສລາດກວ່າດານີເອນຈິງ ບໍ່ມີຄວາມລັບອັນໃດທີ່ເຊື່ອງໃຫ້ພົ້ນເຈົ້າໄດ້
4 ເຈົ້າຫາຊັບສົມບັດມາສຳລັບຕົນໂດຍສະຕິປັນຍາແລະຄວາມເຂົ້າໃຈຂອງເຈົ້າ ແລະໄດ້ຮອບຮວມທອງຄຳແລະເງິນ
ມາໄວ້ໃນຄັງຂອງເຈົ້າ
5 ດ້ວຍສະຕິປັນຍາຍິ່ງໃຫຍ່ໃນການຄ້າຂອງເຈົ້າ ເຈົ້າໄດ້ທະວີຊັບສົມບັດຂອງເຈົ້າຂຶ້ນ ແລະຈິດໃຈຂອງເຈົ້າກໍຜຍອງຂຶ້ນ
ໃນຊັບສົມບັດຂອງເຈົ້າ
6 ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, "ເພາະເຈົ້າຖືຕົວເຈົ້າວ່າສລາດເໝືອນຢ່າງພຣະເຈົ້າ
7 ເຫດສັນນັ້ນ ເບິ່ງແມ, ເຮົາຈະນຳຄົນຕ່າງດ້າວມາສູ້ເຈົ້າ ເປັນຊົນຊາດທີ່ທາຣຸນທີ່ສຸດໃນບັນດາປະຊາຊາດ ເຂົາທັງ
ຫລາຍຈະຊັກດາບອອກຕໍ່ສູ້ກັບຄວາມງາມແຫ່ງສະຕິປັນຍາຂອງເຈົ້າ ແລະເຂົາຈະປມາດປະຈານຍົດສັກຂອງເຈົ້າ

8 ເຂົາທັງຫລາຍຈະຊຸກເຈົ້າລົງໄປທີ່ໃນປາກແດນຄົນຕາຍ ແລະເຈົ້າຈະຕາຍຢ່າງຄົນທີ່ຖືກຂ້າຂ້າໃນທ້ອງທະເລ
9 ເຈົ້າຍັງຈະກ່າວອີກຫລື ວ່າ "ຂ້າເປັນພຣະເຈົ້າ" ຕໍ່ໜ້າຄົນທີ່ຂ້າເຈົ້າ ເຖິງເຈົ້າເປັນພຽງມະນຸດ ບໍ່ແມ່ນພຣະເຈົ້າຢູ່ໃນມື
ຂອງຄົນທີ່ໃຫ້ເຈົ້າບາດເຈັບ
10 ເຈົ້າຈະຕາຍຢ່າງຄົນທີ່ບໍ່ໄດ້ເຂົ້າພິທີຕັດຕາຍ ໂດຍມືຂອງຄົນຕ່າງດ້າວ ເພາະເຮົາໄດ້ລັ່ນວາຈາແລ້ວ ພຣະຜູ້ເປັນ
ເຈົ້າຊົງກ່າວ"
11 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

Lamentation over the King of Tyre

12 "ບຸດແຫ່ງມະນຸດເອີຍ, ຈົ່ງເປັ່ງສຽງບົດຄໍ່າຄວນເພື່ອກະສັດເມືອງຕີເຣ ແລະຈົ່ງກ່າວແກ່ທ່ານວ່າ ພຣະຜູ້ເປັນເຈົ້າດັ່ງນີ້
ວ່າ "ເຈົ້າເປັນຕາແຫ່ງຄວາມສົມບູນແບບເຕັມດ້ວຍສະຕິປັນຍາ ແລະມີຄວາມງາມຢ່າງຄົບບໍຣິບູນ
13 ເຈົ້າຢູ່ໃນເອເດນ ສວນຂອງພຣະຜູ້ເປັນເຈົ້າ ເພັດພອຍທຸກຢ່າງເປັນເສື້ອຂອງເຈົ້າ ຄືທັບທິມ ເພັດນິນຈິນດາ ພອຍ
ເຫລືອງ ນິນ ມະນີໂຊດ ໂມລາ ນິນສີຄາມ ມໍຣະກົດ ແລະໂກເມນ ເພັດພອຍເຫລົ່ານີ້ຝັງໃນທອງຄຳ ແລະລວດລາຍ
ແກະສລັກກໍເປັນທອງຄຳ ສິ່ງເຫລົ່ານັ້ນຈັດຕຽມໄວ້ໃນວັນທີ່ສ້າງເຈົ້າຂຶ້ນມາ
14 ເຮົາຕັ້ງເຈົ້າໃຫ້ຢູ່ກັບເຊຣູບິມ ຜູ້ປ້ອງກັນທີ່ໄດ້ເຈີມຕັ້ງໄວ້ ເຈົ້າຢູ່ເທິງພູອັນສັກສິດແຫ່ງພຣະເຈົ້າ ແລະເຈົ້າເດີນຢູ່ຖ້າມ
ກາງສີລາໄຟ
15 ເຈົ້າກໍປາສຈາກຕຳໜິໃນວິທີການທັງຫລາຍຂອງເຈົ້າ ຕັ້ງແຕ່ວັນທີ່ເຈົ້າໄດ້ຖືກສ້າງຂຶ້ນມາຈົນພົບຄວາມບາບຊົ່ວໃນ
ຕົວເຈົ້າ
16 ໃນຄວາມອຸດົມສົມບູນແຫ່ງການຄ້າຂອງເຈົ້ານັ້ນ ເຈົ້າກໍເຕັມໄປດ້ວຍການທາຣຸນ ເຈົ້າກະທຳບາບ ເຮົາຈະກຳຈັດເຈົ້າ
ເສັຽຈາກພູແຫ່ງພຣະເຈົ້າ ແລະເຊຣູບິມຜູ້ປ້ອງກັນນັ້ນກໍຂັບເຈົ້າອອກໄປຈາກຖ້າມກາງສີລາໄຟ
17 ຈິດໃຈຂອງເຈົ້າຜຍອງຂຶ້ນເພາະຄວາມງາມຂອງເຈົ້າ ເຈົ້າກະທຳໃຫ້ສະຕິປັນຍາຂອງເຈົ້າເສື່ອມເສັຽລົງ ເພາະເຫັນແກ່
ຄວາມງາມຂອງເຈົ້າ ເຮົາຄວ່າງເຈົ້າລົງທີ່ດິນແລ້ວ ເຮົາຕິແຜ່ເຈົ້າຕໍ່ໜ້າກະສັດທັງຫລາຍ ເພື່ອຕາຂອງທ່ານທັງຫລາຍ
ເຫລົ່ານັ້ນຈະເພີນຢູ່ທີ່ເຈົ້າ
18 ເຈົ້າກະທຳໃຫ້ສະຖານນະມັສການຂອງເຈົ້າເສື່ອມເສັຽໂດຍຄວາມບາບຊົ່ວມາກມາຍຂອງເຈົ້າ ໃນການຄ້າອັນບໍ່ຊອບ
ທັມຂອງເຈົ້າ ເຫດສັນນັ້ນເຮົາຈຶ່ງນຳໄຟລົງມາຈາກໝູ່ພວກເຈົ້າ ໄຟກໍເຜົາຜານເຈົ້າ ເຮົາກະທຳໃຫ້ເຈົ້າກັບເປັນຂີ້ເທົ່າ
ໄປເທິງພື້ນໂລກ ໃນສາຍຕາຂອງຄົນທັງປວງທີ່ເຫັນເຈົ້າ
19 ບັນດາຜູ້ທີ່ຮູ້ຈັກເຈົ້າຖ້າມກາງຊົນຊາດທັງຫລາຍ ເຂົາກໍຕົກຕະລຶງເພາະເຈົ້າ ເຈົ້າສິ້ນສູນລົງກາຍເປັນເຫດໃຫ້ສະດຸ້ງ
ຕົກໃຈ ແລະຈະບໍ່ເປັນອີກຕລອດໄປເປັນນິດ"

**ຄຳພຍາກອນກ່າວໂທດເມືອງຊີໂດນ**

Proclamation against Sidon

20 ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
21 ບຸດແຫ່ງມະນຸດເອີຍ, ຈົ່ງມຸ່ງໜ້າຕໍ່ສູ້ຊີໂດນ ແລະພຍາກອນກ່າວໂທດເມືອງນັ້ນ
22 ແລະກ່າວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ເບິ່ງແມ, ຊີໂດນ ເຮົາເປັນປໍຣະປັກກັບເຈົ້າ ເຮົາຈະສຳແດງພຣະສະງ່າຣາ
ສີຂອງເຮົາຖ້າມກາງເຈົ້າ ແລະເຂົາທັງຫລາຍຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ ເມື່ອເຮົາທຳການພິພາກສາລົງໂທດ
ໃນເມືອງນັ້ນ ແລະສຳແດງຄວາມບໍຣິສຸດຂອງເຮົາໃນເມືອງນັ້ນ
23 ເພາະເຮົາຈະສົ່ງໂຣກລະບາດເຂົ້າມາໃນເມືອງນັ້ນ ແລະສົ່ງເລືອດເຂົ້າມາໃນຖນົນຂອງເມືອງນັ້ນ ຄົນທີ່ຖືກຂ້າຕາຍ
ຈະລົ້ມລົງຖ້າມກາງເມືອງນັ້ນ ລົ້ມລົງດ້ວຍດາບທີ່ຢູ່ຮອບເມືອງນັ້ນທຸກດ້ານ ແລ້ວເຂົາທັງຫລາຍຈະຊາບວ່າ ເຮົາຄືພ
ຣະຜູ້ເປັນເຈົ້າ

24 “ສ່ວນເຊື້ອສາຍອິສຣາເອນນັ້ນ ຈະບໍ່ມີເຫລັກໄໜລທີ່ໃຫ້ເປັນບາດກັບໜາມທີ່ໃຫ້ເຈັບຖ້າມກາງເພື່ອນບ້ານທັງປວງ ຊຶ່ງໄດ້ເຄີຍກະທຳແກ່ເຂົາດ້ວຍຄວາມດູໝິ່ນ ແລ້ວເຂົາຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ

Future Blessing for Israel

25 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເມື່ອເຮົາຮວບຮວມເຊື້ອສາຍອິສຣາເອນ ຈາກຊົນຊາດທັງຫລາຍ ຊຶ່ງເຂົາໄດ້ກະຈັດກະຈາຍໄປຢູ່ຖ້າມກາງນັ້ນ ແລະເມື່ອເຮົາສຳແດງຄວາມບໍຣິສຸດຂອງເຮົາຖ້າມກາງເຂົາຕໍ່ໜ້າຕໍ່ຕາຂອງປະຊາຊາດທັງຫລາຍແລ້ວ ເຂົາທັງຫລາຍຈະໄດ້ອາສັຍຢູ່ໃນແຜ່ນດິນຂອງເຂົາເອງ ຊຶ່ງເຮົາໄດ້ມອບໃຫ້ແກ່ຢາໂຄບຜູ້ຮັບໃຊ້ຂອງເຮົາ

26 ເຂົາທັງຫລາຍຈະອາສັຍຢູ່ໃນທີ່ນັ້ນຢ່າງປອດພັຍ ເຂົາຈະສ້າງບ້ານເຮືອນແລະປູກສວນອະງຸ່ນ ເມື່ອເຮົາກະທຳການພິພາກສາລົງໂທດເພື່ອນບ້ານຂອງເຂົາທັງສິ້ນ ຜູ້ໄດ້ກະທຳຕໍ່ເຂົາດ້ວຍຄວາມດູໝິ່ນນັ້ນ ເຂົາທັງຫລາຍຈະອາສັຍຢູ່ຢ່າງປອດພັຍ ແລ້ວເຂົາທັງຫລາຍຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ ພຣະເຈົ້າຂອງເຂົາທັງຫລາຍ

## 29 ຄຳທຳນວາຍກ່າວໂທດເອຢິບ

Proclamation against Egypt

1 ເມື່ອວັນທີສິບສອງ ເດືອນສິບໃນປີທີສິບ ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

2 “ບຸດແຫ່ງມະນຸດເອີຍ, ຈົ່ງມຸ້ງໜ້າຂອງເຈົ້າຕໍ່ສູ້ຟາຣາໂອກະສັດແຫ່ງເອຢິບ ທຳນວາຍກ່າວໂທດກະສັດແລະເອຢິບທັງສິ້ນ

3 ເວົ້າໄປເຖີດແລະກ່າວວ່າພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ “ເບິ່ງແມ, ເຮົາເປັນປໍຣະປັກກັບເຈົ້າ ຟາຣາໂອກະສັດແຫ່ງເອຢິບ ຜູ້ຈະເປັນແຂ້ໂຕຮ້າຍກາດ ນອນຢູ່ກາງລຳຫ້ວຍທັງຫລາຍຂອງມັນ ຜູ້ກ່າວວ່າ “ແມ່ນ້ຳນິນຂອງຂ້າກໍເປັນຂອງຂ້າຂ້າສ້າງມັນຂຶ້ນ”

4 ເຮົາຈະເອົາເບັດເກາະຄາງຂອງເຈົ້າ ແລະກະທຳໃຫ້ປາໃນລຳຫ້ວຍທັງຫລາຍຂອງເຈົ້າຊຶ່ງຕິດຢູ່ກັບເກັດຂອງເຈົ້າ

5 ເຮົາຈະຄວ່າງເຈົ້າເຂົ້າໄປໃນຖິ່ນກັນດານທັງຕົວເຈົ້າແລະປາໃນລຳຫ້ວຍທັງຫລາຍຂອງເຈົ້າ ເຈົ້າຈະຕົກລົງທີ່ພື້ນທີ່ງບໍ່ມີຜູ້ໃດ ຮວບຮວມແລະຝັງເຈົ້າໄວ້ ເຮົາໄດ້ມອບເຈົ້າໄວ້ໃຫ້ເປັນອາຫານຂອງສັດປ່າດົນແລະຂອງນົກໃນອາກາດ

6 “ແລ້ວຄົນທີ່ຢູ່ໃນເອຢິບທັງສິ້ນຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ ເພາະເຈົ້າເປັນໄມ້ເທົ້າອໍ້ຂອງເຊື້ອສາຍອິສຣາເອນ

7 ເມື່ອເຂົາເອົາມືຈັບເຈົ້າ ເຈົ້າກໍຫັກແລະຈີກບ່າຂອງເຂົາທຸກຄົນ ແລະເມື່ອເຂົາອີງເຈົ້າ ເຈົ້າກໍຫັກແລະກະທຳໃຫ້ແອວຂອງເຂົາທຸກຄົນຫວັ່ນໄຫວໄປ

8 ດັ່ງນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະນຳດາບມາເໜືອເຈົ້າ ແລະຕັດມະນຸດແລະສັດໃຫ້ຂາດຈາກເຈົ້າເສັຽ

9 ແຜ່ນດິນເອຢິບຈະເປັນທີ່ຮ້າງແລະທີ່ຫວ້າງເປົ່າ ແລ້ວເຂົາທັງຫລາຍຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ “ພຣະຜູ້ເປັນເຈົ້າກ່າວວ່າ “ແມ່ນ້ຳນິນເປັນຂອງຂ້າ ແລະຂ້າສ້າງມັນ”

10 ເຫດສັນນັ້ນ ເບິ່ງແມ, ເຮົາເປັນປໍຣະປັກກັບເຈົ້າ ແລະກັບລຳຫ້ວຍທັງຫລາຍຂອງເຈົ້າ ເຮົາຈະກະທຳໃຫ້ແຜ່ນດິນເອຢິບຫວ້າງເປົ່າແລະຮ້າງເສັຽ ຕັ້ງແຕ່ມິກໂດນເຖິງຊີເອເນໄກໄປຈົນເຖິງເຂດແດນເອທີໂອເປັຽ

11 ບໍ່ມີຕີນມະນຸດຂ້າມແຜ່ນດິນນັ້ນ ແລະບໍ່ມີຕີນສັດຂ້າມແຜ່ນດິນນັ້ນ ຈະບໍ່ມີຜູ້ໃດອາສັຍຢູ່ເຖິງສີ່ສິບປີ

12 ເຮົາຈະກະທຳໃຫ້ແຜ່ນດິນເອຢິບເປັນທີ່ຮ້າງເປົ່າຖ້າມກາງປະເທດຮ້າງເປົ່າທັງຫລາຍ ແລະຫົວເມືອງຂອງເຈົ້າຈະຫວ້າງເປົ່າຢູ່ສີ່ສິບປີຖ້າມກາງຫົວເມືອງທີ່ຫວ້າງເປົ່າທັງຫລາຍ ເຮົາຈະໃຫ້ຄົນເອຢິບກະຈັດພັດພາກໄປຖ້າມກາງປະຊາຊາດ ແລະກະຈາຍເຂົາໄປຕາມປະເທດຕ່າງໆ

13 “ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເມື່ອສິ້ນສີ່ສິບປີແລ້ວ ເຮົາຈະຮວບຮວມຄົນເອຢິບຈາກຖ້າມກາງຊົນຊາດທັງຫລາຍ ຊຶ່ງເຂົາກະຈັດກະຈາຍໄປຢູ່ດ້ວຍກັນ

14 ເຮົາຈະໃຫ້ເອຢິບກັບສູ່ສະພາບເດີມ ແລະນຳເຂົາກັບມາຍັງແຜ່ນດິນປັທໂຣສ ຊຶ່ງເປັນແຜ່ນດິນດັ້ງເດີມຂອງເຂົາ ແລະ
ເຂົາທັງຫລາຍຈະເປັນຣາຊອານາຈັກຕ່ຳຕ້ອຍທີ່ນັ້ນ
15 ຈະເປັນຣາຊອານາຈັກທີ່ຕ່ຳຕ້ອຍທີ່ສຸດໃນບັນດາຣາຊອານາຈັກທັງຫລາຍ ແລະຈະບໍ່ເຄີຍຍົກຕົນຂຶ້ນເຫນືອປະຊາ
ຊາດທັງຫລາຍອີກເລີຍ ແລະເຮົາຈະທຳໃຫ້ເຂົາເປັນຣາຊອານາຈັກນ້ອຍຈົນບໍ່ສາມາດຈະປົກຄອງປະຊາຊາດອື່ນໄດ້
16 ແລະຈະບໍ່ເປັນທີ່ວາງໃຈຂອງເຊື້ອສາຍອິສຣາເອນອີກ ອັນທຳໃຫ້ສຳນຶກເຖິງຄວາມບາບຊົ່ວຂອງເຂົາເມື່ອຫັນໄປເພິ່ງ
ພາເອຢິບນີ້ ແລ້ວເຂົາຈະຊາບວ່າ ເຮົາຄືພຣະເຈົ້າ”

Babylonia Will Plunder Egypt

17 ເມື່ອວັນທີນຶ່ງເດືອນທີ່ນຶ່ງໃນປີທີ່ຊາວເຈັດ ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
18 “ບຸດແຫ່ງມະນຸດເອີຍ, ເນບູກາດເນສຊາ ກະສັດແຫ່ງບາບີໂລນໄດ້ໃຫ້ກອງທັບມາສູ້ຮົບກັບເມືອງຕີເຣຢ່າງຫນັກຈົນ
ຫົວທຸກຫົວໂລ້ນ ແລະບ່າທຸກບ່າກໍລອກ ເຖິງປານນັ້ນທ່ານເອງຫລືກອງທັບຂອງທ່ານກໍບໍ່ໄດ້ສິ່ງໃດໄປຈາກຕີເຣອັນ
ເປັນຄ່າແຮງຊຶ່ງທ່ານໄດ້ກະທຳຕໍ່ເມືອງນັ້ນ
19 ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະມອບແຜ່ນດິນເອຢິບໄວ້ກັບເນບູກາດເນສຊາກະສັດບາບີ
ໂລນ ແລະທ່ານຈະຂົນເອົາຊັບສົມບັດໄປແລະຍຶດເຂົ້າຂອງໄປ ແລະປຸ້ນເອົາໄປເປັນຄ່າຈ້າງກອງທັບຂອງທ່ານ
20 ພຣະຜູ້ເປັນເຈົ້າກ່າວວ່າ ເຮົາໄດ້ມອບແຜ່ນດິນເອຢິບໃຫ້ໄວ້ແກ່ທ່ານເພື່ອເປັນຄ່າແຮງງານ ຊຶ່ງເຂົາທັງຫລາຍໄດ້ກະ
ທຳເພື່ອເຮົາ
21 “ໃນວັນນັ້ນເຮົາຈະກະທຳໃຫ້ມີເຂົາງອກຂຶ້ນມາທີ່ເຊື້ອສາຍອິສຣາເອນ ແລະເຮົາຈະໃຫ້ເຈົ້າອ້າປາກເວົ້າຖ້າມກາງເຂົາ
ທັງຫລາຍ ແລ້ວເຂົາຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ”

## 30 ຄວາມຮ້າງເປົ່າຂອງເມືອງເອຢິບ

Lamentation for Egypt

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 “ບຸດແຫ່ງມະນຸດເອີຍ, ຈົ່ງທຳນວາຍ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງໂຮ່ຮ້ອງຂຶ້ນດ້ວຍຖ້ອຍຄຳເຫລົ່ານີ້ສາວ່າ ອະນິ
ຈາຫນໍ ວັນນັ້ນ”
3 ເພາະວັນນັ້ນໃກ້ເຂົ້າມາແລ້ວ ວັນແຫ່ງພຣະເຈົ້າໃກ້ເຂົ້າມາ ຈະເປັນວັນມີເມກເປັນເວລາທີ່ກຳນົດຂອງປະຊາຊາດ
4 ດາບເຫລັ້ມນຶ່ງຈະມາເຫນືອເອຢິບ ແລະຄວາມແສນຣະທົມຈະຢູ່ໃນເອທີໂອເປັຽ ເມື່ອຄົນທີ່ຖືກຂ້າລົ້ມໃນເອຢິບ ແລະ
ເຂົາຂົນເອົາຊັບສົມໄປເສັຽ ແລະຮາກຖານຂອງເມືອງນັ້ນກໍຖືກທະລາຍລົງ
5 ເອທີໂອເປັຽ ແລະພູດ ແລະລູດ ແລະອາຣະເບັຽ ແລະລີບຢາ ແລະປະຊາຊົນແຫ່ງແຜ່ນດິນນັ້ນທີ່ຢູ່ໃນປະເທດແຫ່ງຄຳ
ສັນຍາຈະລົ້ມລົງດ້ວຍດາບດ້ວຍກັນກັບເຂົາ
6 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຜູ້ຄົນເຫລົ່ານັ້ນທີ່ສນັບສນຸນເອຢິບຈະຫລົ່ມຈົມ ແລະອານຸພາບອັນຈອງຫອງຂອງມັນ
ຈະລົງມາແລະຈາກມິກໂດນເຖິງຊີເອເນ ເຂົາຈະລົ້ມລົງພາຍໃນປະເທດນັ້ນດ້ວຍດາບ ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ
7 ມັນຈະຮ້າງເປົ່າຢູ່ຖ້າມກາງປະເທດທີ່ຮ້າງເປົ່າທັງຫລາຍ ແລະຫົວເມືອງຂອງມັນຈະຢູ່ຖ້າມກາງເມືອງທີ່ປະຮ້າງ
8 ເຂົາຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ ເມື່ອເຮົາວາງໄຟທີ່ເອຢິບ ແລະຜູ້ຊ່ອຍທັງຫມົດຂອງມັນກໍທະລາຍແລ້ວ
9 “ໃນວັນນັ້ນທູດຈະລົງເຮືອໄປຈາກເຮົາ ເພື່ອຈະກະທຳໃຫ້ຄົນເອທີໂອເປັຽທີ່ເລີ່ນເລີ່ຢູ່ນັ້ນມີຄວາມຢ້ານກົວແລະໃນວັນ
ກຳນົດຂອງເອຢິບ ຄວາມແສນຣະທົມຈະມາເຖິງເຂົາເຫລົ່ານັ້ນ ເພາະວັນນັ້ນມາເຖິງອີ່ຫລີ
10 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາຈະກະທຳໃຫ້ຊັບສົມບັດຂອງເອຢິບສິ້ນສຸດລົງ ດ້ວຍມືຂອງເນບູກາດເນສຊາກະ
ສັດບາບີໂລນ

11 ຕົວທ່ານພ້ອມກັບຊົນຊາດຂອງທ່ານ ຄືຊົນຊາດທີ່ທາລຸນທີ່ສຸດໃນບັນດາປະຊາຊາດຈະຖືກນຳເຂົ້າມາເພື່ອທຳລາຍ
ແຜ່ນດິນນັ້ນ ແລະເຂົາຈະຊັກດາບອອກຕໍ່ສູ້ເອຢິບ ກະທຳໃຫ້ແຜ່ນດິນເຕັມໄປດ້ວຍຄົນທີ່ຖືກຂ້າ
12 ເຮົາຈະກະທຳໃຫ້ແມ່ນ້ຳນິນແຫ້ງໄປ ເຮົາຈະຂາຍແຜ່ນດິນນັ້ນໄວ້ໃນມືຂອງຄົນຊົ່ວ ກະທຳໃຫ້ແຜ່ນດິນແລະສາຣະພັດ
ທີ່ຢູ່ເທິງແຜ່ນດິນນັ້ນຮ້າງເປົ່າ ໂດຍມືຂອງຄົນຕ່າງດ້າວ
13 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາຈະທຳລາຍຮູບໂຄຣົບ ແລະກະທຳໃຫ້ຮູບທັງຫລາຍທີ່ໃນເມືອງເມມຟິສສິ້ນສຸດລົງ
ແລະຈະບໍ່ມີເຈົ້າຈາກແຜ່ນດິນເອຢິບອີກ ດັ່ງນັ້ນເຮົາຈະໃສ່ຄວາມຢຳເກງໄວ້ໃນແຜ່ນດິນເອຢິບ
14 ເຮົາຈະກະທຳປັທໂຣສໃຫ້ເປັນທີ່ຮ້າງເປົ່າ ແລະວາງໄຟທີ່ໂຊອານ ແລະຈະກະທຳການພິພາກສາລົງໂທດເມືອງເທເບ
ສ
15 ເຮົາຈະເທຄວາມພິໂຣດຂອງເຮົາລົງເທິງເມືອງເປລູຊີອູມ ທີ່ກຳບັງເຂັ້ມແຂງຂອງເອຢິບ ແລະຕັດຫມູ່ທັງປວງອອກ
ເສັ້ງຈາກເມືອງເທເບສ
16 ເຮົາຈະວາງໄຟໃນເອຢິບ ເມືອງເປລູຊີອູມຈະຢູ່ໃນຄວາມຂັດສົນຫລາຍ ເມືອງເທເບສຈະແຕກ ແລະເມືອງເມມຟິສ
ຈະມີປໍຣະປັກໃນເວລາກາງເວັນ
17 ຊາຍສະກັນຂອງເມືອງໂອນແລະເມືອງປີເບເສທຈະລົ້ມລົງດ້ວຍດາບ ແລະເມືອງນັ້ນຈະຕົກໄປເປັນຊະເລີຍ
18 ທີ່ເມືອງເຕຮັຟກາງເວັນຈະມືດ ເມື່ອເຮົາທຳລາຍແອກຂອງເອຢິບ ແລະອານຸພາບອັນຈອງຫອງຂອງເມືອງນັ້ນຈະສິ້ນ
ສຸດລົງ ຈະມີເມກມາປົກຄຸມເມືອງນັ້ນໄວ້ ແລະເຫລົ່າລູກສາວຂອງເມືອງນັ້ນຈະຕົກໄປເປັນຊະເລີຍ
19 ເຮົາຈະກະທຳການພິພາກສາລົງໂທດເອຢິບດັ່ງນີ້ແຫລະ ແລ້ວເຂົາຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ"

Proclamation against Pharaoh

20 ເມື່ອວັນທີເຈັດ ເດືອນທີນຶ່ງ ໃນປີທີສິບເອັດ ພຣະຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
21 "ບຸດແຫ່ງມະນຸດເອີຍ, ເຮົາໄດ້ກະທຳໃຫ້ແຂນຂອງຟາຣາໂອກະສັດແຫ່ງເອຢິບຫັກ ບໍ່ມີຜູ້ໃດພັນແຂນໃຫ້ ບໍ່ມີຜູ້ໃດ
ເອົາຜ້າມາພັນແຂນເພື່ອຈະຮັກສາໃຫ້ຫາຍ ເພື່ອໃຫ້ເຂັ້ມແຂງທີ່ຈະແກວ່ງດາບໄດ້ອີກ
22 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາເປັນປໍຣະປັກກັບຟາຣາໂອກະສັດແຫ່ງເອຢິບ ເຮົາຈະຫັກແຂນ
ຂອງເຂົາ ທັງແຂນທີ່ຍັງແຂງແຮງແລະແຂນທີ່ຫັກແລ້ວນັ້ນ ເຮົາຈະກະທຳໃຫ້ດາບຫລຸດຈາກມືຂອງເຂົາ
23 ເຮົາຈະໃຫ້ຄົນເອຢິບກະຈັດພັດພາກໄປຢູ່ຖ້າມກາງປະຊາຊາດ ແລະກະຈາຍເຂົາໄປຕາມປະເທດຕ່າງໆ
24 ເຮົາຈະເສີມກຳລັງແຂນຂອງກະສັດບາບີໂລນ ແລະເອົາດາບຂອງເຮົາໃສ່ມືໃຫ້ ແຕ່ເຮົາຈະຫັກແຂນຂອງຟາຣາໂອ
ແລະເຂົາຈະຄ່ຳຄວນຕໍ່ຫນ້າທ່ານຢ່າງຄົນຖືກບາດເຈັບເກືອບຈະຕາຍ
25 ເຮົາຈະເສີມກຳລັງແຂນຂອງກະສັດແຫ່ງບາບີໂລນ ແຕ່ແຂນຂອງຟາຣາໂອຈະຕົກ ແລ້ວເຂົາທັງຫລາຍຈະຊາບວ່າ
ເຮົາຄືພຣະຜູ້ເປັນເຈົ້າ ເມື່ອເຮົາເອົາດາບຂອງເຮົາໃສ່ມືຂອງກະສັດແຫ່ງບາບີໂລນ ທ່ານຈະຍື່ນມັນອອກຕໍ່ສູ້ແຜ່ນດິນ
ເອຢິບ
26 ແລະເຮົາຈະໃຫ້ຄົນກະຈັດພັດພາກໄປຢູ່ຖ້າມກາງປະຊາຊາດ ແລະກະຈາຍເຂົ້າໄປຕາມປະເທດຕ່າງໆແລ້ວເຂົາຈະ
ຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ"

## 31 ຊະຕາກັມຂອງຟາຣາໂອ ແລະຊົນຊາດຂອງພຣະອົງ

The Lofty Cedar

(ອຊກ 17:22-24)

1 ແລະຢູ່ມາ ເມື່ອວັນທີນຶ່ງ ເດືອນທີສາມ ໃນປີທີສິບເອັດ ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 ບຸດແຫ່ງມະນຸດເອີຍ, ຈົ່ງກ່າວແກ່ຟາຣາໂອກະສັດແຫ່ງເອຢິບແລະແກ່ຫມູ່ປະຊາຊົນຂອງທ່ານວ່າ ໃນຄວາມເປັນ
ໃຫຍ່ເປັນໂຕຂອງທ່ານນັ້ນ ທ່ານເຫມືອນຜູ້ໃດ

3 ເບິ່ງແມ, ເຮົາຈະປຽບເຈົ້າກັບໄມ້ສົນໃນເລບານອນ ມີກິ່ງງາມແລະມີໃບຮົ່ມ ແລະສູງຫລາຍ ຍອດຢູ່ທີ່ຖ້າມກາງເມກ

4 ມີນ້ຳຫລໍ່ລ້ຽງ ນ້ຳບາດານທຳໃຫ້ມັນງອກສູງ ກະທຳໃຫ້ແມ່ນ້ຳຂອງບາດານໄຫລຮອບບ່ອນທີ່ປູກມັນໄວ້ ກະທຳໃຫ້ລຳ
ທານຂອງບາດານແຕກແຍກອອກມາໄປທົ່ວຕົ້ນໄມ້ໃນປ່າທັງສິ້ນ

5 ດັ່ງນັ້ນມັນຈຶ່ງສູງເຫນືອຕົ້ນໄມ້ໃນປ່າທັງຫລາຍ ກິ່ງໄມ້ກໍແຕກໃຫຍ່ ແລະກ້ານກໍຍາວ ເພາະນ້ຳມາກຫລໍ່ລ້ຽງຢ່າງດີ

6 ນົກໃນອາກາດທັງສິ້ນໄດ້ມາເຮັດຮັງຢູ່ໃນກິ່ງຂອງມັນ ສັດປ່າທົ່ງທັງສິ້ນເກີດລູກອອກມາຢູ່ໃຕ້ກ້ານ ປະຊາຊາດໃຫຍ່
ໂຕທັງສິ້ນ ອາສັຍຢູ່ໃຕ້ຮົ່ມຂອງມັນ

7 ມັນກໍງົດງາມດ້ວຍຄວາມຍິ່ງໃຫຍ່ຂອງມັນ ດ້ວຍຄວາມຍາວແຫ່ງກ້ານຂອງມັນເພາະຮາກຂອງມັນຢັ່ງເລິກລົງໄປຍັງ
ນ້ຳອຸດົມ

8 ຕົ້ນສົນທີ່ຢູ່ໃນອຸທຍານຂອງພຣະເຈົ້າ ກໍຍັງສູ້ບໍ່ໄດ້ ຕົ້ນແປກກໍຍັງບໍ່ເທົ່າກິ່ງຂອງມັນ ຕົ້ນໂພກໍບໍ່ທໍ່ຖ້າປຽບກັບກິ່ງຂອງ
ມັນ ບໍ່ມີໄມ້ຕົ້ນໃດໃນອຸທຍານຂອງພຣະເຈົ້າທີ່ມີຄວາມງາມເຫມືອນມັນ

9 ເຮົາໄດ້ກະທຳໃຫ້ມັນງາມດ້ວຍກິ່ງກ້ານມາກມາຍຂອງມັນ ຕົ້ນໄມ້ທັງສິ້ນໃນສວນເອເດນກໍອິດສາມັນ ຄືຕົ້ນໄມ້ຊຶ່ງຢູ່
ໃນອຸທຍານຂອງພຣະເຈົ້າ

10 “ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະວ່າມັນສູງແລະຊູຍອດຂອງມັນຂຶ້ນຢູ່ຖ້າມກາງເມກ ແລະຈິດໃຈຂອງ
ມັນກໍອວດອົ່ງເພາະຄວາມສູງຂອງມັນ

11 ເຮົາຈະມອບມັນໄວ້ໃນມືຂອງຜູ້ນຶ່ງທີ່ຊົງອານຸພາບໃນບັນດາປະຊາຊາດ ທ່ານນັ້ນຈະກະທຳຕໍ່ມັນໃຫ້ສາສົມກັບຄວາມ
ຊົ່ວຮ້າຍຂອງມັນເປັນແນ່ ເຮົາໄດ້ໄລ່ມັນອອກ

12 ຄົນຕ່າງດ້າວ ຄືຊົນຊາດທີ່ທາຣຸນທີ່ສຸດໃນບັນດາປະຊາຊາດ ຈະປ້ຳມັນລົງແລະຖິ້ມໄວ້ ກິ່ງຂອງມັນຈະຕົກລົງເທິງພູ
ທັງຫລາຍແລະໃນຮ່ອມພູທັງສິ້ນ ແລະກ້ານຫັກຂອງມັນະຢູ່ໃນຫ້ວຍທັງສິ້ນຂອງແຜ່ນດິນ ແລະບັນດາປະຊົນຊາດທັງ
ຫລາຍຂອງພິພົບຈະລົງໄປເສັຽຈາກຮົ່ມເງົາຂອງມັນແລະຖິ້ມມັນເສັຽ

13 ນົກໃນອາກາດທັງສິ້ນຈະອາສັຍຢູ່ເທິງສິ່ງສລັກຫັກພັງຂອງມັນ ແລະສັດປ່າຈະຢູ່ເທິງກ້ານຂອງມັນ

14 ທີ່ເປັນເຊັ່ນນີ້ກໍເພື່ອຕົ້ນໄມ້ທີ່ຢູ່ຮິມນ້ຳຈະບໍ່ງອກຂຶ້ນສູງ ຫລືຊູຍອດຂຶ້ນຖ້າມກາງເມກ ແລະເພື່ອບໍ່ໃຫ້ຕົ້ນໄມ້ທີ່ດື່ມນ້ຳ
ຂຶ້ນສູງຢ່າງນັ້ນໄດ້ ເພາະວ່າມັນທັງຫລາຍຕ້ອງມອບໃຫ້ແກ່ຄວາມຕາຍ ມອບໃຫ້ແກ່ຖິ່ນແຫ່ງຄວາມຕາຍຖ້າມກາງ
ບຸດແຫ່ງມະນຸດກັບຜູ້ທີ່ໄດ້ລົງໄປຍັງປາກແດນຄົນຕາຍ

15 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເມື່ອມັນລົງໄປຍັງແດນຄົນຕາຍ ເຮົາຈະກະທຳໃຫ້ບາດານຄຸມຕົວໄວ້ທຸກໃຫ້ມັນ ແລະ
ຢັບຢັ້ງແມ່ນ້ຳຂອງມັນໄວ້ແລະນ້ຳເປັນອັນມາກຈະຢຸດຢັ້ງ ເຮົາຈະຄຸມເລບານອນໄວ້ໃຫ້ຮ້ອງໄຫ້ທຸກໂສກເພື່ອມັນ
ແລະຕົ້ນໄມ້ໃນທົ່ງນາທັງສິ້ນຈະສລົບເພາະມັນ

16 ເຮົາຈະກະທຳໃຫ້ປະຊາຊາດສັ່ນສະເທືອນດ້ວຍສຽງທີ່ມັນລົ້ມ ເມື່ອເຮົາແກວ່ງມັນລົງໄປທີ່ແດນຄົນຕາຍພ້ອມກັບບັນ
ດາຜູ້ທີ່ລົງໄປຍັງປາກແດນ ແລະຕົ້ນໄມ້ທັງສິ້ນໃນເອເດນຕົ້ນໄມ້ທີ່ຄັດເລືອກແລ້ວແລະຕົ້ນໄມ້ທີ່ດີທີ່ສຸດຂອງເລບາ
ນອນ ຕົ້ນໄມ້ທີ່ດື່ມນ້ຳຈະໄດ້ຮັບຄວາມເລົ້າໂລມທີ່ໃນໂລກບາດານ

17 ປະຊາຊາດເຫລົ່ານີ້ຈະລົງໄປຍັງແດນຄົນຕາຍກັບເຂົາດ້ວຍ ໄປຢູ່ກັບບັນດາຜູ້ທີ່ຖືກຂ້າດ້ວຍດາບ ຄືບັນດາຜູ້ຊ່ອຍເຂົາ
ທີ່ຢູ່ໃຕ້ຮົ່ມຂອງເຂົາຖ້າມກາງປະຊາຊາດ

18 ດັ່ງນີ້ ເຈົ້າເຫມືອນຜູ້ໃດໃນເຣື່ອງສັກສີ ແລະຄວາມເປັນໃຫຍ່ຖ້າມກາງຕົ້ນໄມ້ແຫ່ງເອເດນ ເຈົ້າຈະຖືກນຳລົງມາພ້ອມ
ກັບຕົ້ນໄມ້ແຫ່ງເອເດນໄປຍັງໂລກບາດານ ເຈົ້າຈະນອນຢູ່ຖ້າມກາງຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ ພ້ອມກັບຜູ້ທີ່ຖືກຂ້າດ້ວຍ
ດາບ ນີ້ຄືຟາຣາໂອແລະຄົນທັງຫລາຍທັງສິ້ນຂອງທ່ານ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ”

## 32 ບົດຄໍ່າຄວນເຣື່ອງຟາຣາໂອ

Lamentation over Pharaoh and Egypt

1 ເມື່ອວັນທີນຶ່ງ ເດືອນທີສິບສອງ ໃນປີທີສິບສອງ ຖ້ອຍຄໍາຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 ບຸດແຫ່ງມະນຸດເອີຍ, ຈົ່ງເປັ່ງສຽງບົດຄໍ່າຄວນເຣື່ອງຟາຣາໂອກະສັດແຫ່ງເອຢິບ ແລະກ່າວໃຫ້ທ່ານຟັງດັ່ງນີ້ວ່າ “ທ່ານ
ຖືວ່າທ່ານເຫມືອນສິງຫນຸ່ມຖ້າມກາງປະຊາຊາດ ແຕ່ທ່ານເປັນເຫມືອນມັງກອນໃນທະເລທັງຫລາຍ ທ່ານໄດ້ອອກມາ
ໃນແມ່ນໍ້າທັງຫລາຍ ເອົາຕີນຂອງທ່ານກວນນໍ້າ ແລະກະທໍາແມ່ນໍ້າຂອງມັນໃຫ້ມົນທິນໄປ
3 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຮົາຈະກາງຕານ່າງຂອງເຮົາຄຸມທ່ານໂດຍກອງທັບຊົນຊາດທັງຫລາຍເປັນອັນມາກ
ແລະເຂົາເຫລົ່ານັ້ນຈະລາກທ່ານຂຶ້ນມາດ້ວຍອວນຂອງເຮົາ
4 ແລະເຮົາຈະແກວ່ງທ່ານລົງເທິງດິນ ແລະເຮົາຈະຟາດທ່ານລົງເທິງພື້ນທົ່ງ ແລະຈະກະທໍາໃຫ້ນົກທັງສິ້ນໃນອາກາດມາ
ຈັບຢູ່ເທິງທ່ານ ແລະເຮົາຈະໃຫ້ທ່ານເປັນອາຫານອີ່ມຂອງສັດທົ່ວທັງໂລກ
5 ເຮົາຈະເອົາເນື້ອຂອງທ່ານມາວາງໄວ້ເທິງພູ ແລະຖົມຮ່ອມພູດ້ວຍສົບຂອງທ່ານ
6 ເຮົາຈະໃຫ້ແຜ່ນດິນແມ່ນແຕ່ພູເຂົາຊຸ່ມໄປດ້ວຍເລືອດກໍາລັງໄຫລຂອງທ່ານ ແລະຫ້ວຍຈະເຕັມໄປດ້ວຍທ່ານ
7 ເມື່ອເຮົາດັບທ່ານ ເຮົາຈະຄຸມຟ້າສວັນໄວ້ ແລະກະທໍາໃຫ້ດວງດາວມືດໄປ ເຮົາຈະເອົາເມກບັງດວງອາທິດ ແລະດວງ
ຈັນຈະບໍ່ສ່ອງແຈ້ງ
8 ດວງແຈ້ງທັງປວງທີ່ສ່ອງແຈ້ງແຫ່ງສວັນນັ້ນ ເຮົາຈະກະທໍາໃຫ້ມືດຢູ່ເຫນືອທ່ານ ແລະວາງຄວາມມືດໄວ້ເຫນືອແຜ່ນ
ດິນຂອງທ່ານ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
9 “ເມື່ອເຮົາທໍາລາຍທ່ານຖ້າມກາງປະຊາຊາດໃນປະເທດຊຶ່ງທ່ານບໍ່ຮູ້ຈັກນັ້ນ ເຮົາຈະກະທໍາໃຫ້ຈິດໃຈຂອງຊົນຊາດທັງ
ຫລາຍເປັນອັນມາກລໍາບາກ
10 ເມື່ອເຮົາແກວ່ງດາບຂອງເຮົາຕໍ່ຫນ້າເຂົາທັງຫລາຍ ເຮົາຈະກະທໍາໃຫ້ຊົນຊາດທັງຫລາຍເປັນອັນມາກເບິ່ງຕະລຶງທີ່
ທ່ານແລະກະສັດຂອງເຂົາທັງຫລາຍຈະສະທົກສະທ້ານເພາະທ່ານ ໃນວັນທີ່ທ່ານລົ້ມລົງນັ້ນເຂົາທັງຫລາຍຈະຕົວສັ່ນ
ທຸກຂນະຈິດທົ່ວກັນເພາະຫ່ວງຊີວິດຂອງຕົນເອງ
11 ເພາະພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ດາບຂອງກະສັດແຫ່ງບາບີໂລນຈະມາເຫນືອທ່ານ
12 ເຮົາຈະທໍາໃຫ້ຄົນທັງປວງຂອງທ່ານລົ້ມລົງດ້ວຍດາບຂອງຜູ້ມີກໍາລັງ ທຸກຄົນກໍລ້ວນເປັນທີ່ທາຣຸນທີ່ສຸດໃນບັນດາປະ
ຊາຊາດ “ເຂົາຈະນໍາຄວາມທະເຍີທະຍານຂອງເອຢິບໃຫ້ມາເຖິງທີ່ສິ້ນສຸດ ແລະຄົນທັງຫລາຍທັງສິ້ນຂອງມັນຈະພິ
ນາດ
13 ເຮົາຈະທໍາລາຍສັດຂອງເມືອງນັ້ນທັງສິ້ນຈາກຂ້າງນໍ້າມາກຫລາຍ ແລະບໍ່ມີຕີນມະນຸດຄົນໃດກະທໍາໃຫ້ນໍານັ້ນຂຸ່ນອີກ
ກີບສັດກໍຈະບໍ່ກະທໍາໃຫ້ນໍ້ານັ້ນຂຸ່ນອີກເຊັ່ນກັນ
14 ແລ້ວເຮົາຈະທໍາໃຫ້ນໍ້າຂອງເຂົາທັງຫລາຍໃສ ແລະກະທໍາໃຫ້ແມ່ນໍ້າທັງຫລາຍຂອງເຂົາໄຫລໄປເຫມືອນນໍ້າມັນໄຫລ
ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
15 ເມື່ອເຮົາກະທໍາໃຫ້ແຜ່ນດິນເອຢິບຮ້າງເປົ່າ ແລະເມື່ອແຜ່ນດິນຖືກຍຶດເອົາເຂົ້າຂອງທີ່ມີຢູ່ໃນແຜ່ນດິນໄປຫມົດແລ້ວ
ເມື່ອເຮົາທໍາລາຍຜູ້ຄົນທີ່ອາສັຍຢູ່ໃນເມືອງນັ້ນ ແລ້ວເຂົາທັງຫລາຍຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ
16 ນີ້ເປັນບົດຄໍ່າຄວນທີ່ຈະຮ້ອງຄໍ່າຄວນ ເຫລົ່າທິດາແຫ່ງປະຊາຊາດຈະຮ້ອງບົດນັ້ນ ເຂົາຈະຮ້ອງເຣື່ອງເອຢິບແລະຄົນ
ທັງຫລາຍຂອງເອຢິບ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ”

Dirge over Egypt

17 ເມື່ອວັນທີສິບຫ້າ ເດືອນທີນຶ່ງ ໃນປີທີສິບສອງ ພຣະຄໍາຂອງພຣະຜູ້ເປັນເຈົ້າໄດ້ມາເຖິງຂ້າພະເຈົ້າວ່າ,
18 “ບຸດແຫ່ງມະນຸດເອີຍ, ຈົ່ງຮ້ອງຄາງຢູ່ຍ້ອນຊາວເອຢິບທັງປວງ ແລະຈົ່ງສົ່ງເຂົາລົງໄປ ທັງຕົວເຂົາແລະເຫລົ່າທິດາແຫ່ງ
ປະຊາຊາດທີ່ໂອ່ອ່າໄປຍັງຖິ່ນມັດຈຸຣາຊ ໄປຍັງບັນດາຄົນເຫລົ່ານັ້ນທີ່ໄປຍັງປາກແດນຄົນຕາຍແລ້ວ

19 ໃນເຣື່ອງຄວາມງາມ ທ່ານງາມເລີດກວ່າຜູ້ໃດໆຫລື ຈົ່ງລົງໄປ ໄປນອນກັບຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ”
20 ເຂົາທັງຫລາຍຈະລົ້ມລົງກາງບັນດາຜູ້ທີ່ຖືກຂ້າດ້ວຍດາບ ມີດາບກຳນົດໄວ້ແລ້ວຈົ່ງລາກເອຢິບໄປເສັຽພ້ອມກັບຊາວ
ເອຢິບທັງສິ້ນຂອງເຂົາ
21 ເຫລົ່າຊາຍສະກັນໃນບັນດາຜູ້ທີ່ເກັ່ງກ້າຈະເວົ້າເຣື່ອງຂອງເຂົາກັບຜູ້ຊ່ອຍຂອງເຂົາຈາກກາງແດນຄົນຕາຍວ່າ “ເຂົາໄດ້
ລົງມາແລ້ວ ເຂົານອນຢູ່ ຄືຄົນທີ່ບໍ່ໄດ້ເຂົ້າພິທີຕັດ ທີ່ຖືກຂ້າດ້ວຍດາບ”
22 ອັສຊີເຣັຽກໍຢູ່ທີ່ນັ້ນຮວມທັງຄນະມີຫລຸມສົບຢູ່ຮອບຕົວ ທຸກຄົນຖືກຂ້າແລະລົ້ມລົງດ້ວຍດາບ
23 ທີ່ຝັງສົບຂອງຄົນເຫລົ່ານີ້ຢູ່ທີ່ແດນມໍຣະນາສ່ວນທີ່ໄກທີ່ສຸດແລະຄນະຂອງນາງກໍຢູ່ຮອບຫລຸມຝັງສົບຂອງນາງ ທຸກຄົນ
ຖືກຂ້າ ລົ້ມລົງດ້ວຍດາບເປັນພວກທີ່ໃຫ້ເກີດຄວາມສະດຸ້ງຕົກໃຈກົວໃນແຜ່ນດິນຂອງຜູ້ມີຊີວິດຢູ່
24 “ເອລາມກໍຢູ່ທີ່ນັ້ນ ທັງຝູງຊົນແຫ່ງຕົນກໍຢູ່ຮອບຫລຸມສົບຂອງນາງ ທຸກຄົນຖືກຂ້າ ແລະລົ້ມລົງດ້ວຍດາບ ຜູ້ລົງໄປສູ່
ໂລກບາດານໂດຍບໍ່ເຂົ້າພິທີຕັດ ເປັນພວກທີ່ໃຫ້ເກີດຄວາມສະດຸ້ງຕົກໃຈກົວໃນແຜ່ນດິນຂອງຜູ້ມີຊີວິດ ແລະເຂົາຕ້ອງ
ທົນຮັບຄວາມອັບອາຍຂາຍຫນ້າກັບຜູ້ທີ່ລົງໄປປາກແດນຄົນຕາຍ
25 ເຂົາໄດ້ເຮັດບ່ອນໃຫ້ນາງນອນໃນຫມູ່ພວກຜູ້ທີ່ຖືກຂ້າພ້ອມກັບຝູງຄົນທັງສິ້ນຂອງນາງ ມີຫລຸມສົບຢູ່ຮອບຕົວ ເປັນຜູ້ບໍ່
ໄດ້ເຂົ້າພິທີຕັດທຸກຄົນ ຖືກຂ້າດ້ວຍດາບ ເພາະວ່າຄວາມສະດຸ້ງຕົກໃຈກົວເຂົາທັງຫລາຍນັ້ນໄດ້ກະຈາຍໄປໃນແຜ່ນ
ດິນຂອງຜູ້ມີຊີວິດ ແລະເຂົາຕ້ອງທົນຮັບຄວາມອັບອາຍຂາຍຫນ້າກັບຜູ້ທີ່ລົງໄປຍັງປາກແດນຄົນຕາຍ ເຂົາມີທີ່ຢູ່ໃນ
ຫມູ່ພວກຜູ້ຖືກຂ້າ
26 “ເມເຊກ ແລະຕູບານກໍຢູ່ທີ່ນັ້ນ ທັງຝູງຊົນທັງສິ້ນຂອງນາງ ຫລຸມສົບຂອງເຂົາທັງຫລາຍຢູ່ຮອບນາງທັງສອງ ເປັນຜູ້ທີ່ບໍ່
ເຂົ້າພິທີຕັດທຸກຄົນ ຖືກຂ້າດ້ວຍດາບ ເພາະເຂົາໃຫ້ເກີດຄວາມສະດຸ້ງຕົກໃຈກົວລືໄປໃນແຜ່ນດິນຂອງຜູ້ມີຊີວິດ
27 ເຂົາທັງຫລາຍບໍ່ໄດ້ນອນຢູ່ກັບຜູ້ເກັ່ງກ້າໃນຈຳພວກທີ່ບໍ່ໄດ້ເຂົ້າພິທີຕັດທີ່ໄດ້ລົ້ມລົງ ລົງໄປຍັງແດນຄົນຕາຍພ້ອມກັບຍ
ຸດໂທປະກອນຂອງເຂົາ ຜູ້ຊຶ່ງມີດາບວາງໄວ້ໃຕ້ຫົວຂອງເຂົາ ແລະເກາະກໍຢູ່ເທິງກະດູກຂອງເຂົາ ເພາະວ່າຄວາມສະດ
ຸ້ງຕົກໃຈກົວລືໄປໃນແຜ່ນດິນຂອງຜູ້ມີຊີວິດ
28 ດັ່ງນັ້ນທ່ານຈະຕ້ອງຖືກຫັກແລະນອນຢູ່ໃນຫມູ່ພວກຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ ກັບຄົນເຫລົ່ານັ້ນທີ່ຖືກຂ້າດ້ວຍດາບ
29 “ເອໂດມກໍຢູ່ທີ່ນັ້ນ ຄືບັນດາກະສັດແລະບັນດາເຈົ້ານາຍທັງຫລາຍຂອງນາງ ແມ້ວ່າເຂົາທັງຫລາຍມີອານຸພາບເຂົາຍັງ
ຖືກນຳມາວາງໄວ້ກັບບັນດາຄົນເຫລົ່ານັ້ນທີ່ຖືກຂ້າດ້ວຍດາບ ເຂົານອນຢູ່ກັບຜູ້ທີ່ບໍ່ໄດ້ເຂົ້າພິທີຕັດ ກັບບັນດາຄົນທີ່ໄດ້
ລົງໄປຍັງປາກແດນຄົນຕາຍ
30 “ເຈົ້ານາຍຈາກທິດເຫນືອກໍຢູ່ທີ່ນັ້ນກັນຫມົດ ຄົນຊີໂດນທັງຫມົດ ຜູ້ທີ່ລົງໄປດ້ວຍຄວາມອາຍພ້ອມກັບຜູ້ທີ່ຖືກຂ້າເພາະ
ເຫດຄວາມສະດຸ້ງຕົກໃຈກົວທັງສິ້ນຊຶ່ງເຂົາໄດ້ກະທຳຂຶ້ນດ້ວຍກຳລັງຂອງເຂົາ ເຂົານອນຢູ່ທີ່ນັ້ນບໍ່ເຂົ້າພິທີຕັດພ້ອມກັບ
ຜູ້ທີ່ຖືກຂ້າດ້ວຍດາບ ແລະທົນຮັບຄວາມອັບອາຍຂາຍຫນ້າກັບບັນດາຜູ້ທີ່ລົງໄປຍັງປາກແດນຄົນຕາຍ
31 ພຣະຜູ້ເປັນເຈົ້າກ່າວວ່າ ເມື່ອຟາຣາໂອເຫັນພວກເຫລົ່ານັ້ນແລ້ວ ທ່ານກໍຈະເບົາໃຈໃນເຣື່ອງກອງທັບທັງສິ້ນຂອງທ່ານ
ຟາຣາໂອແລະກອງທັບທັງສິ້ນຂອງທ່ານຖືກຂ້າດ້ວຍດາບ
32 ເພາະເຂົາໄດ້ໃຫ້ເກີດຄວາມສະດຸ້ງຕົກໃຈກົວລືໃນແຜ່ນດິນຂອງຜູ້ມີຊີວິດ ເຫດສັນນັ້ນເຂົາຈະຖືກວາງໄວ້ຖ້າມກາງຜູ້ບໍ່
ເຂົ້າພິທີຕັດ ພ້ອມກັບຜູ້ຄົນເຫລົ່ານັ້ນທີ່ຖືກຂ້າດ້ວຍດາບ ທັງຟາຣາໂອແລະກອງທັບທັງສິ້ນຂອງທ່ານ ພຣະຜູ້ເປັນເຈົ້າ
ກ່າວດັ່ງນີ້ແຫລະ”

## 33 ຫນ້າທີ່ຂອງຍາມ

Ezekiel Israel’s Sentry

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,

2 “ບຸດແຫ່ງມະນຸດເອີຍ, ຈົ່ງບອກປະຊາຊົນວ່າ ເມື່ອເຮົາເຮັດໃຫ້ສົງຄາມເກີດຂຶ້ນໃນປະເທດນຶ່ງ ປະຊາຊົນໃນປະເທດ
ນັ້ນກໍຈະແຕ່ງຕັ້ງຄົນນຶ່ງເປັນຜູ້ຍາມ
3 ເມື່ອຄົນຍາມເຫັນສັດຕຣູເຂົ້າມາໃກ້ ເຂົາຈະເປົ່າແກປຸກເຕືອນທຸກໆຄົນ
4 ຖ້າຫາກຄົນນຶ່ງໄດ້ຍິນສຽງແກ ແຕ່ບໍ່ເອົາໃຈໃສ່ໃນສຽງຕັກເຕືອນ ສັດຕຣູກໍຈະມາຂ້າຄົນນັ້ນເສັຽ ແລ້ວຄວາມຜິດຈະ
ເປັນຂອງຜູ້ຕາຍເອງ
5 ເພາະວ່າບໍ່ເອົາໃຈໃສ່ໃນສຽງຕັກເຕືອນ ຖ້າເຂົາເອົາໃຈໃສ່ກໍຈະສາມາດໜີໄປໄດ້
6 ແຕ່ຖ້າຄົນເຝົ້າຍາມເຫັນສັດຕຣູມາ ແຕ່ບໍ່ເປົ່າແກປຸກເຕືອນ ສັດຕຣູກໍຈະມາຂ້າຄົນບາບທັງຫລາຍຖິ້ມ ແລ້ວເຮົາກໍຈະ
ຖືວ່າ ການຕາຍຂອງພວກນັ້ນເປັນຄວາມຜິດຂອງຜູ້ເຝົ້າຍາມ
7 ສັນນີ້ແຫລະ ບຸດແຫ່ງມະນຸດເອີຍ, ເຮົາຈະແຕ່ງຕັ້ງໃຫ້ເຈົ້າເປັນຜູ້ເຝົ້າຍາມຊົນຊາດອິສຣາເອນທັງໝົດ ຈົ່ງນຳຖ້ອຍ
ຄຳທີ່ເຮົາບອກໃຫ້ໄປຕັກເຕືອນເຂົາ
8 ຖ້າເຮົາປະກາດວ່າ ມີຄົນຊົ່ວຜູ້ນຶ່ງກຳລັງຈະຕາຍ ແຕ່ເຈົ້າບໍ່ຕັກເຕືອນໃຫ້ເຂົາປ່ຽນຊີວິດໃໝ່ ເຂົາກໍຈະຕາຍເສັຽຍ້ອນ
ບາບຂອງຕົນເອງ ແລ້ວເຮົາກໍຈະຖືວ່າການຕາຍຂອງຜູ້ນັ້ນເປັນຄວາມຜິດຂອງເຈົ້າ
9 ຖ້າວ່າເຈົ້າຕັກເຕືອນເຂົາແລ້ວແຕ່ເຂົາຍັງບໍ່ເຊົາ ເຂົາກໍຈະຕາຍຍ້ອນບາບນັ້ນ ແຕ່ຊີວິດຂອງເຈົ້າຈະປອດພັຍ

**ການຮັບຜິດຊອບຂອງແຕ່ລະບຸກຄົນ**

God’s Justice and Mercy

10 “ເຈົ້າ ບຸດແຫ່ງມະນຸດເອີຍ, ເຈົ້າຈົ່ງກ່າວແກ່ເຊື້ອສາຍອິສຣາເອນ ພວກເຈົ້າເຄີຍກ່າວດັ່ງນີ້ວ່າ ຜົນຂອງການເຮັດບາບ
ໄດ້ຕົກຖືກເຮົາແລ້ວ ພວກເຮົາກຳລັງເສື່ອມເສັຽໄປ ສະນັ້ນ ເຮັດແນວໃດຈຶ່ງຈະມີຊີວິດຢູ່ໄດ້
11 ຈົ່ງບອກເຂົາວ່າ ເຮົາເປັນພຣະຜູ້ເປັນເຈົ້າຜູ້ມີຊີວິດຢູ່ ສະນັ້ນ ເຮົາຈຶ່ງບໍ່ພໍໃຈທີ່ເຫັນຄົນບາບຕາຍ ແຕ່ຢາກຈະເຫັນເຂົາ
ເຊົາທຳບາບແລະມີຊີວິດຢູ່ ອິສຣາເອນເອີຍ ເຈົ້າຈົ່ງເຊົາທຳບາບເສັຽ ຫລືວ່າພວກເຈົ້າຢາກຕາຍຊັ້ນບໍ
12 ບຸດແຫ່ງມະນຸດເອີຍ, ບັດນີ້ເຈົ້າຈົ່ງບອກພວກອິສຣາເອນວ່າ ເມື່ອຄົນຊອບທັມເຮັດບາບຄວາມດີທີ່ເຂົາເຄີຍເຮັດມາ
ນັ້ນຈະບໍ່ຊ່ອຍຫຍັງເຂົາເລີຍ ຖ້າຄົນຊົ່ວເຊົາເຮັດຊົ່ວ ເຂົາຈະບໍ່ໄດ້ຖືກລົງໂທດຍ້ອນຄວາມຊົ່ວນັ້ນ ແລະຖ້າຄົນຊອບ
ທັມເລີ້ມຕົ້ນເຮັດບາບເຂົາກໍຈະມີຊີວິດຢູ່ບໍ່ໄດ້
13 ຖ້າຫາກເຮົາສັນຍາວ່າ ຈະໃຫ້ຄົນຊອບທັມມີຊີວິດຢູ່ ແຕ່ເຂົາເຊື່ອຄວາມດີທີ່ຕົນໄດ້ກະທຳມາແລ້ວແຕ່ອະດີດ ແລ້ວ
ເລີ້ມຕົ້ນເຮັດບາບ ເຮົາຈະບໍ່ລະນຶກເຖິງຄວາມດີໃດໆທີ່ຜູ້ນັ້ນໄດ້ກະທຳມາ ເຂົາຈະຕ້ອງຕາຍຍ້ອນບາບຂອງເຂົາເອງ
14 ຖ້າເຮົາເຕືອນຄົນຊົ່ວວ່າເຂົາຈະຕ້ອງຕາຍ ແຕ່ເຂົາເຊົາເຮັດບາບຂອງເຂົາເສັຽຫັນມາທຳສິ່ງທີ່ຖືກຕ້ອງແລະດີງາມ
15 ເຊັ່ນວ່າຄືນຂອງຈຳນຳໃຫ້ແກ່ລູກໜີ້ສິ່ງຂອງທີ່ລັກມາຄືນໃຫ້ແກ່ເຈົ້າຂອງເຂົາ ຖ້າເຂົາເຊົາເຮັດບາບ ແລະປະພຶດຕາມ
ພຣະທັມທີ່ໃຫ້ມີຊີວິດ ເຂົາກໍຈະບໍ່ຕາຍ ແຕ່ຈະມີຊີວິດຢູ່ຕໍ່ໄປ
16 ສ່ວນເຮົາຈະໃຫ້ອະພັຍບາບທີ່ໄດ້ເຄີຍກະທຳມາ ຍ້ອນການເຮັດດີແລະການເຮັດສິ່ງຖືກຕ້ອງນັ້ນ ເຂົາຈະມີຊີວິດຢູ່ຕໍ່
ໄປ
17 ປະຊາຊົນຂອງເຈົ້າເວົ້າວ່າ ເຮົາເຮັດບໍ່ຍຸດຕິທັມ ບໍ່ແມ່ນຢ່າງນັ້ນດອກ ມັນແມ່ນພວກເຂົາຕ່າງຫາກບໍ່ຍຸດຕິທັມ
18 ເມື່ອຄົນຊອບທັມເຊົາເຮັດດີ ແລະເລີ້ມຕົ້ນເຮັດຊົ່ວ ເຂົາກໍຈະຕາຍຍ້ອນເຮັດຊົ່ວນັ້ນ
19 ເມື່ອຄົນຊົ່ວປ່ຽນໃຈບໍ່ເຮັດບາບ ຫັນມາເຮັດດີແລະຖືກຕ້ອງ ຊີວິດຂອງເຂົາກໍຈະປອດພັຍ
20 ໂອ ອິສຣາເອນເອີຍ ແຕ່ປານນັ້ນພວກເຈົ້າຍັງເວົ້າວ່າ ເຮົາເຮັດບໍ່ຍຸດຕິທັມຢູ່ ສະນັ້ນ ເຮົາຈະພິພາກສາໂທດຕາມທີ່
ເຈົ້າໄດ້ກະທຳ”

**ຂ່າວກຸງເຢຣູຊາເລັມແຕກ**

The Fall of Jerusalem

21 ສິບສອງປີ ຫລັງຈາກພວກຂ້າພະເຈົ້າໄດ້ຫຖືກຈັບໄປເປັນຊະເລີຍ ເມື່ອວັນທີຫ້າເດືອນສິບ ມີຊາຍຄົນນຶ່ງຫນີອອກມາ
ຈາກກຸງເຢຣູຊາເລັມບອກຂ້າພະເຈົ້າວ່າ ກຸງເຢຣູຊາເລັມໄດ້ແຕກແລ້ວ
22 ໃນຕອນຄໍ່າກ່ອນຊາຍຜູ້ນັ້ນມາເຖິງ ຂ້າພະເຈົ້າໄດ້ຕົກຢູ່ໃນອໍານາດຂອງພຣະຜູ້ເປັນເຈົ້າຈົນເວົ້າບໍ່ໄດ້ ແລ້ວໃນຕອນ
ເຊົ້າມື້ອື່ນ ເມື່ອຊາຍຄົນນັ້ນມາເຖິງ ພຣະຜູ້ເປັນເຈົ້າກໍຊົງໂຜດໃຫ້ຂ້າພະເຈົ້າເວົ້າໄດ້

The Survivors in Judah

23 ຖ້ອຍຄໍາຂອງພຣະຜູ້ເປັນເຈົ້າມາຍັງຂ້າພະເຈົ້າວ່າ,
24 "ບຸດແຫ່ງມະນຸດເອີຍ, ປະຊາຊົນທີ່ເຄີຍອາສັຍຢູ່ຕາມທົ່ວເມືອງຮ້າງໃນປະເທດອິສຣາເອນເວົ້າວ່າ ແຕ່ກ່ອນມີແຕ່ອັບ
ຣາຮາມຄົນດຽວ ສະນັ້ນ ທ່ານຈຶ່ງໄດ້ຮັບທີ່ດິນຈາກພຣະເຈົ້າແຕ່ຜູ້ດຽວ ມາບັດນີ້ພວກເຮົາມີຫລາຍຄົນ ທີ່ດິນນັ້ນຈຶ່ງເປ
ັນຂອງພວກເຮົາທຸກໆຄົນ
25 ຈົ່ງບອກພວກເຂົາວ່າເຮົາເວົ້າດັ່ງນີ້ ພວກເຈົ້າກິນເລືອດພ້ອມກັບຊີ້ນ ຂາບໄຫວ້ຮູບໂຄຣົບ ແລະຂ້າຄົນແລ້ວຍັງຈະຄິດ
ວ່າແຜ່ນດິນນັ້ນເປັນຂອງພວກເຈົ້າຢູ່ບໍ
26 ພວກເຈົ້າໄດ້ວາງໃນໃນດາບຂອງຕົນ ການກະທໍາກໍເປັນຫນ້າກຽດຊັງ ມີການລ່ວງເກີນເມັຍຄົນອື່ນ ສະນັ້ນ ເປັນ
ຫຍັງຈຶ່ງຄິດວ່າທີ່ດິນນັ້ນເປັນຂອງພວກເຈົ້າ
27 ຈົ່ງບອກພວກເຂົາ ພຣະຜູ້ເປັນເຈົ້າຊົງເຕືອນດັ່ງນີ້ ເຮົາເປັນພຣະຜູ້ເປັນເຈົ້າທີ່ມີຊີວິດ ສະນັ້ນ ປະຊາຊົນທີ່ອາສັຍຢູ່ໃນ
ທົ່ວເມືອງຮ້າງຈະຖືກຂ້າຕາຍ ຜູ້ທີ່ຢູ່ນອກເມືອງຈະຖືກສັດປ່າກິນ ຜູ້ທີ່ລີ້ຢູ່ຕາມພູແລະຖໍ້າເຫວຈະເຈັບປ່ວຍລົ້ມຕາຍ
28 ເຮົາຈະທໍາໃຫ້ປະເທດນັ້ນຮ້າງເປົ່າເສົ້າຫມອງ ອໍານາດທີ່ພວກເຂົາມີແລະພາກພູມໃຈຢູ່ນັ້ນຈະຫມົດສິ້ນລົງ ພູທັງ
ຫລາຍໃນອິສຣາເອນຈະເປັນປ່າຮ້າງເປົ່າ ຈະບໍ່ມີຄົນອາສັຍແລະເດີນຜ່ານໄປມາ
29 ເມື່ອເຮົາລົງໂທດປະຊາຊົນຍ້ອນເຂົາກະທໍາບາບ ແລະທໍາໃຫ້ປະເທດນັ້ນຮ້າງເປົ່າແລ້ວ ພວກເຂົາຈຶ່ງຈະຮູ້ວ່າ ເຮົາຄືພ
ຣະຜູ້ເປັນເຈົ້າ"
30 "ເຈົ້າ ບຸດແຫ່ງມະນຸດເອີຍ, ເມື່ອປະຊາຊົນຂອງເຈົ້າພົບກັນຢູ່ໃກ້ກໍາແພງເມືອງ ຫລືຕາມປະຕູບ້ານເຮືອນນັ້ນ ພວກ
ເຂົາກໍຊັກຊວນກັນໄປຟັງຖ້ອຍຄໍາທີ່ມາຈາກພຣະຜູ້ເປັນເຈົ້າ
31 ດັ່ງນັ້ນໄພ່ພົນຂອງເຮົາຈຶ່ງຫລັ່ງໄຫລກັນມາຟັງ ແຕ່ພວກເຂົາບໍ່ໄດ້ເຮັດຕາມເຈົ້າບອກ ເພາະວ່າພວກເຂົາມັນເວົ້າຕົວະ
ແລະມັກເງິນຄໍາຫລາຍກວ່າພຣະທັມຂອງພຣະເຈົ້າ
32 ດ້ວຍວ່າ ພວກເຂົາມາຟັງຖ້ອຍຄໍາທັງຫມົດຂອງເຈົ້າເຫມືອນມາຟັງຫມໍລໍາ ຫລືການເປົ່າແຄນເທົ່ານັ້ນ ຈຶ່ງບໍ່ມີໃຜເຊື່ອ
ຟັງເລີຍ
33 ສະນັ້ນ ເມື່ອຖ້ອຍຄໍາທັງຫມົດຂອງເຈົ້າເປັນຈິງຂຶ້ນມາ ພວກເຂົາຈຶ່ງຈະຮູ້ວ່າຜູ້ປະກາດພຣະທັມມີຢູ່ໃນພວກເຂົາແທ້"

## 34 ຄໍາທໍານວາຍກ່າວໂທດຜູ້ລ້ຽງແກະແຫ່ງ ອິສຣາເອນ

Israel's False Shepherds

1 ຖ້ອຍຄໍາຂອງພຣະເຈົ້າມາຍັງຂ້າພະເຈົ້າວ່າ,
2 "ບຸດແຫ່ງມະນຸດເອີຍ, ຈົ່ງທໍານວາຍກ່າວໂທດບັນດາຜູ້ລ້ຽງແກະແຫ່ງອິສຣາເອນ ຈົ່ງທໍານວາຍກ່າວໂທດວ່າແກ່ເຂົາ
ຄືຜູ້ລ້ຽງແກະວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ວິບັດແກ່ຜູ້ລ້ຽງແກະແຫ່ງອິສຣາເອນຜູ້ລ້ຽງຕົວເອງ ຜູ້ລ້ຽງແກະຍອມ
ລ້ຽງແກະບໍ່ແມ່ນຫລື
3 ເຈົ້າກິນໄຂມັນ ເຈົ້ານຸ່ງເຄື່ອງຂອງເຈົ້າທີ່ເຮັດດ້ວຍຂົນແກະ ແລະເຈົ້າຂ້າແກະໂຕອ້ວນໆ ແຕ່ບໍ່ໄດ້ລ້ຽງມັນ
4 ແລະບໍ່ໄດ້ເບິ່ງແຍງແກະໂຕທີ່ຈ່ອຍຜອມ ບໍ່ໄດ້ປິ່ນປົວໂຕທີ່ເຈັບໄຂ ບໍ່ໄດ້ພັນບາດແຜໃຫ້ໂຕທີ່ຖືກທໍາຮ້າຍ ບໍ່ໄດ້ນໍາໂຕ
ທີ່ຫລົງຝູງກັບຄືນມາ ຫລືບໍ່ໄດ້ຊອກຫາໂຕທີ່ສູນເສັຽໄປ ມີແຕ່ເຮັດໂຫດຮ້າຍທາຣຸນຕໍ່ມັນເທົ່ານັ້ນ

5 ຈົນພວກມັນໄດ້ແຕກກະຈັດກະຈາຍໄປຍ້ອນບໍ່ມີຜູ້ລ້ຽງ ອັນເປັນເຫດໃຫ້ສັດປ່າມາກັດກິນມັນເສັຽ
6 ດັ່ງນັ້ນແກະຂອງເຮົາຈຶ່ງຊັດເຊພະເນຈອນໄປຕາມພູແລະເນີນເຂົາ ພວກມັນໄດ້ແຕກກະຈັດກະຈາຍໄປທົ່ວໂລກ
ໂດຍບໍ່ມີໃຜຊອກຄົ້ນຫລືສແວງຫາມັນເລີຍ
7 ບັດນີ້ ພວກເຈົ້າຜູ້ລ້ຽງແກະເອີຍ ຈົ່ງຟັງສິ່ງທີ່ເຮົາຈະບອກ
8 ເຮົາເປັນພຣະເຈົ້າຜູ້ມີຊີວິດຢູ່ ສະນັ້ນ ຄວນຟັງເຮົາດີກວ່າ ແກະຂອງເຮົາໄດ້ຖືກຝູງສັດປ່າກັດກິນແລ້ວ ເພາະວ່າມັນບໍ່
ມີຜູ້ລ້ຽງ ຜູ້ລ້ຽງຂອງເຮົາບໍ່ໄດ້ຊອກຫາມັນ ພວກເຂົາລ້ຽງຕົວເອງບໍ່ແມ່ນລ້ຽງແກະ
9 ດັ່ງນັ້ນ ຜູ້ລ້ຽງແກະຂອງເຮົາເອີຍ ຈົ່ງຟັງເຮົາເດີ
10 ເຮົາພຣະຜູ້ເປັນເຈົ້າຂໍປະກາດວ່າ ເຮົາຈະເປັນສັດຕຣູກັບພວກເຈົ້າ ຈະເອົາແກະຂອງເຮົາຫນີໄປຈາກເຈົ້າ ຈະບໍ່ໃຫ້
ພວກເຈົ້າລ້ຽງມັນ ແລະລ້ຽງຕົວເອງຕໍ່ໄປອີກ ເຮົາຈະຊ່ອຍເອົາມັນຫນີໄປຈາກເຈົ້າ ຈະບໍ່ໃຫ້ມັນເປັນອາຫານຂອງພວກ
ເຈົ້າອີກ

**ຜູ້ລ້ຽງແກະທີ່ດີ**

God, the True Shepherd

11 ເຮົາ ພຣະຜູ້ເປັນເຈົ້າບອກເຈົ້າວ່າ ເຮົາຈະຄົ້ນຫາແກະຂອງເຮົາ ແລະລ້ຽງດູມັນເອງ
12 ຜູ້ລ້ຽງຍ່ອມເຕົ້າໂຮມເອົາແກະໂຕທີ່ແຕກຝູງໄປເຂົ້າກັນອີກສັນໃດ ເຮົາກໍຈະນຳເອົາແກະໂຕທີ່ແຕກຝູງໄປໃນຍາມອັນ
ຕະລາຍ ແລະບ່ອນທີ່ມືດຕຶບກັບຄືນມາຈາກທຸກໆບ່ອນສັນນັ້ນ
13 ເຮົາຈະເອົາມັນອອກມາຈາກຕ່າງປະເທດແລະເຕົ້າໂຮມເຂົ້າກັນຈະນຳມາໄວ້ໃນປະເທດຂອງມັນເອງ ຈະລ້ຽງດູມັນຢູ່
ເທິງພູອິສຣາເອນ ຢູ່ໃກ້ຫ້ວຍຮ່ອງ ແລະໃນທຸກບ່ອນທີ່ມີຄົນອາສັຍຢູ່
14 ຈະປ່ອຍມັນກິນຫຍ້າຢູ່ຕາມພູ ແລະທົ່ງຫຍ້າອັນຂຽວສົດໃນປະເທດອິສຣາເອນຢ່າງປອດພັຍ
15 ເຮົາເອງຈະເປັນຜູ້ລ້ຽງແກະຂອງເຮົາ ແລະຈະຊອກຫາບ່ອນໃຫ້ມັນພັກຜ່ອນ ເຮົາພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນີ້ແຫລະ
16 ເຮົາຈະຊອກຫາແກະໂຕທີ່ສູນເສັຽໄປ ຈະນຳໂຕທີ່ຫລົງທາງກັບມາ ຈະພັນແຜແລະປິ່ນປົວໂຕທີ່ບາດເຈັບໃຫ້ດີ ຈະ
ປ່ອຍໂຕທີ່ຕຸ້ຍພີ ແລະແຂງແຮງຢູ່ຢ່າງສະບາຍ ເພາະວ່າເຮົາເປັນຜູ້ລ້ຽງຢ່າງຍຸດຕິທັມ
17 ຝູງແກະຂອງເຮົາເອີຍ ບັດນີ້ ເຮົາບອກເຈົ້າວ່າ ເຮົາຈະພິພາກສາພວກເຈົ້າທຸກໂຕ ຈະແຍກໂຕດີອອກຈາກໂຕບໍ່ດີ
ແລະແຍກແກະອອກຈາກແບ້
18 ມີບາງໂຕໃນພວກເຈົ້າບໍ່ພໍໃຈກິນຫຍ້າຢ່າງດີ ຈຶ່ງພາກັນຢຽບຢໍ່າຫຍ້າທີ່ຕົນບໍ່ກິນ ພວກເຈົ້າດື່ມນໍ້າໃສແລ້ວກໍກວນນໍ້າທີ່
ຍັງເຫລືອໃຫ້ຂຸ່ນ
19 ແກະໂຕອື່ນໆອີກຂອງເຮົາຈຶ່ງຈຳເປັນຕ້ອງກິນຫຍ້າທີ່ພວກເຈົ້າຢຽບ ແລະຕ້ອງດື່ມນໍ້າທີ່ພວກເຈົ້າກວນ
20 ດັ່ງນັ້ນແຫລະ, ເຮົາຈຶ່ງບອກວ່າເຮົາຈະພິພາກສາເຈົ້າ ຄືແກະຕຸ້ຍແລະແກະຈ່ອຍ
21 ເພາະວ່າເຈົ້າໄດ້ຊົນແກະໂຕເຈັບໂຊໃຫ້ອອກຫນີຈາກຝູງ
22 ແຕ່ເຮົາຈະຊ່ອຍແກະຂອງເຮົາໃຫ້ພົ້ນພັຍ ຈະບໍ່ໃຫ້ມັນຖືກຂົ່ມເຫັງອີກຕໍ່ໄປ
23 ຈະແຕ່ງຕັ້ງໃຫ້ດາວິດຜູ້ຮັບໃຊ້ຂອງເຮົາເປັນຜູ້ລ້ຽງມັນ
24 ເຮົາຈະເປັນພຣະເຈົ້າຂອງພວກມັນ ສ່ວນດາວິດຜູ້ຮັບໃຊ້ຂອງເຮົາຈະເປັນນາຍຂອງມັນ ເຮົາໄດ້ກ່າວດັ່ງນີ້ແຫລະ
25 ເຮົາຈະໃຫ້ຄຳຫມັ້ນສັນຍາແລະຮັບປະກັນຄວາມປອດພັຍໃຫ້ພວກມັນ ຈະກຳຈັດສັດຮ້າຍທັງຫມົດອອກຈາກແຜ່ນ
ດິນ ເພື່ອວ່າແກະຂອງເຮົາຈະໄດ້ອາສັຍຢູ່ໃນທົ່ງນາແລະນອນໃນປ່າຢ່າງປອດພັຍ
26 ເຮົາຈະອວຍພອນພວກມັນໃຫ້ອາສັຍຢູ່ພູສັກສິດຂອງເຮົາ ຈະໃຫ້ຝົນຕົກລົງມາ ຕາມຄວາມຕ້ອງການຂອງມັນ
27 ເພື່ອກົກໄມ້ທັງຫລາຍຈະເກີດຫມາກ ທົ່ງນາຈະມີເຈົ້າ ແລະແກະທຸກໆໂຕຈະມີຊີວິດຢູ່ໃນປະເທດຂອງມັນເອງຢ່າງ
ປອດພັຍ ເມື່ອໃດເຮົາປ່ອຍໃຫ້ໄພ່ພົນຂອງເຮົາພົ້ນຈາກການເປັນທາດ ແລະແກ້ໂສ້ອອກເປັນອິສຣະແລ້ວ ເມື່ອນັ້ນ
ແຫລະ ພວກເຂົາຈຶ່ງຈະຮູ້ວ່າເຮົາຄື ພຣະຜູ້ເປັນເຈົ້າ

28 ພວກເຂົາຈະບໍ່ຖືກຊົນຊາດອື່ນມາຮິບກອນອີກຕໍ່ໄປ ຈະບໍ່ຖືກພວກສັດປ່າມາກັດກິນ ແຕ່ຈະມີຊີວິດຢູ່ຢ່າງປອດພັຍບໍ່ຢ້ານກົວຫຍັງ
29 ເຮົາຈະຍົກທີ່ງນາອັນອຸດົມສົມບູນໃຫ້ແກ່ພວກເຂົາ ຈະໃຫ້ຄວາມອຶດຢາກໃນແຜ່ນດິນນັ້ນສິ້ນສຸດລົງ ຊົນຊາດອື່ນຈະບໍ່ຫຍໍ້ຫຍັນພວກເຂົາອີກ
30 ແລ້ວຄົນທັງປວງຈະຮູ້ວ່າ ເຮົາເປັນຜູ້ຄຸ້ມຄອງອິສຣາເອນ ແລະຮູ້ວ່າພວກເຂົາເປັນໄພ່ພົນຂອງເຮົາ ເຮົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ"
31 ພຣະຜູ້ເປັນເຈົ້າຊົງກ່າວຕໍ່ໄປວ່າ, "ຝູງແກະທີ່ເຮົາລ້ຽງເອີຍ, ພວກເຈົ້າເປັນໄພ່ພົນຂອງເຮົາ ແລະເຮົາເປັນພຣະເຈົ້າຂອງເຈົ້າ"

## 35 ຄໍາທໍານວາຍກ່າວໂທດພູເຊອີຣ໌

Judgment on Mount Seir

1 ຖ້ອຍຄໍາຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 "ບຸດແຫ່ງມະນຸດເອີຍ ຈົ່ງມຸ້ງໜ້າຂອງເຈົ້າຕໍ່ສູ້ພູເຊອີ ແລະທໍານວາຍຕໍ່ມັນ
3 ແລະກ່າວແກ່ມັນວ່າພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ພູເຊອີເອີຍ, ເຮົາເປັນປໍຣະປັກກັບເຈົ້າ ແລະເຮົາຈະຢຽດມືຂອງເຮົາຕໍ່ສູ້ເຈົ້າ ແລະເຮົາຈະກະທໍາໃຫ້ເຈົ້າຮ້າງເປົ່າແລະປະຮ້າງ
4 ເຮົາຈະໃຫ້ຫົວເມືອງຂອງເຈົ້າຖືກປະຖິ້ມ ແລະເຈົ້າຈະເປັນບ່ອນຮ້າງເປົ່າ ແລະເຈົ້າຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ
5 ເພາະເຫດເຈົ້າມີຄວາມກຽດຊັງອັນຕລອດໄປເປັນນິດ ແລະມອບປະຊາຊົນອິສຣາເອນໃຫ້ແກ່ອໍານາດດາບໃນເວລາພັຍວິບັດຂອງເຂົາ ໃນເວລາແຫ່ງການລົງໂທດຄັ້ງສຸດທ້າຍ
6 ພຣະຜູ້ເປັນເຈົ້າກ່າວວ່າ ເຫດສັນນັ້ນ ເຮົາມີຊີວິດຢູ່ສັນໃດ ເຮົາຈະຕຽມເຈົ້າເພື່ອຮັບໂທດແຫ່ງການໃຫ້ເລືອດອອກ ແລະເລືອດຈະໄລ່ຕາມເຈົ້າ ເພາະເຈົ້າມີກັມຊົ່ວເຣື່ອງເລືອດ ເຫດສັນນັ້ນເລືອດຈຶ່ງໄລ່ຕາມເຈົ້າໄປ
7 ເຮົາຈະກະທໍາພູເຊອີໃຫ້ປະຮ້າງແລະຮ້າງເປົ່າ ແລະເຮົາຈະຕັດຜູ້ທີ່ໄປໆມາໆເສັຽຈາກມັນ
8 ພູຂອງເຈົ້ານັ້ນ ເຮົາຈະໃຫ້ມີຜູ້ທີ່ຖືກຂ້າເຕັມໄປໝົດ ຜູ້ທີ່ຖືກຂ້າດ້ວຍດາບຈະລົ້ມລົງຕາມເນີນເຂົາຂອງເຈົ້າ ຕາມຮ່ອມພູຂອງເຈົ້າ ແລະໃນຫ້ວຍທັງສິ້ນຂອງເຈົ້າ
9 ເຮົາຈະກະທໍາເຈົ້າໃຫ້ເປັນບ່ອນຮ້າງເປົ່າເປັນນິດ ແລະຕາມຫົວເມືອງຂອງເຈົ້າຈະບໍ່ມີຄົນອາສັຍ ແລ້ວເຈົ້າຈະຊາບວ່າເຮົາ ຄືພຣະຜູ້ເປັນເຈົ້າ
10 "ເພາະພຣະຜູ້ເປັນເຈົ້າກ່າວວ່າ "ປະຊາຊາດທັງສອງນີ້ແລະປະເທດທັງສອງນີ້ຈະຕ້ອງເປັນຂອງເຮົາ ເຮົາຈະເອົາເຂົາມາເປັນກໍາມະສິດ" ແມ່ນວ່າພຣະຜູ້ເປັນເຈົ້າສະຖິດຢູ່ທີ່ນັ້ນ
11 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວວ່າ ເຮົາມີຊີວິດຢູ່ສັນໃດ ເຮົາຈະກະທໍາຕໍ່ເຈົ້າຕາມຄວາມພິໂຣດ ແລະຄວາມອິດສາຂອງເຈົ້າ ຊຶ່ງເຈົ້າສໍາແດງເພາະຄວາມກຽດຊັງຂອງເຈົ້າຊຶ່ງມີຕໍ່ເຂົາ ເມື່ອເຮົາພິພາກສາເຈົ້າ ເຮົາຈຶ່ງຈະສໍາແດງຕົວຂອງເຮົາໃນໝູ່ພວກເຈົ້າໃຫ້ເຈົ້າຮູ້ຈັກ
12 ແລະເຈົ້າຈະຊາບວ່າ ເຮົາ ພຣະຜູ້ເປັນເຈົ້າ ໄດ້ຍິນຄໍາຫຍາບຊ້າທັງປວງຂອງເຈົ້າ ຊຶ່ງເຈົ້າໄດ້ເວົ້າປັກປໍາພູທັງຫລາຍແຫ່ງອິສຣາເອນວ່າ "ມັນຖືກປະໄວ້ໃຫ້ຮ້າງເປົ່າ ມັນຖືກມອບໄວ້ໃຫ້ເຮົາກິນ"
13 ດ້ວຍປາກຂອງເຈົ້າ ເຈົ້າໄດ້ຍົກຍໍຕົວເຈົ້າຂຶ້ນຕໍ່ສູ້ເຮົາ ແລະວ່າເຮົາອີກມາກຫລາຍເຮົາໄດ້ຍິນແລ້ວ
14 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພື່ອໃຫ້ພິພົບໂລດລ້າເລີງ ເຮົາຈຶ່ງກະທໍາເຈົ້າໃຫ້ຮ້າງເປົ່າ
15 ໃນເມື່ອມໍຣະດົກແຫ່ງເຊື້ອສາຍອິສຣາເອນນັ້ນຕ້ອງຖືກໃຫ້ຮ້າງເປົ່າໄປ ເຈົ້າຊົມຊື່ນຍິນດີສັນໃດເຮົາຈຶ່ງຕ້ອງກະທໍາແກ່ເຈົ້າສັນນັ້ນ ພູເຊອີເອີຍ ຮວມທັງເອໂດມທັງໝົດ ທັງໝົດເລີຍ ເຈົ້າຈະຕ້ອງເປັນບ່ອນຮ້າງເປົ່າ ແລ້ວເຂົາທັງຫລາຍຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ

## 36 ການໃຫ້ຊາດອິສຣາເອນຄືນສູ່ສະພາບເດີມໃນອະນາຄົດ

Blessing on Israel

1 "ເຈົ້າ ບຸດແຫ່ງມະນຸດເອີຍ, ຈົ່ງທຳນວາຍຕໍ່ສູ້ພູເຂົາທັງຫລາຍແຫ່ງອິສຣາເອນວ່າ ພູແຫ່ງອິສຣາເອນເອີຍ ຈົ່ງຟັງພຣະ
ຄຳຂອງພຣະຜູ້ເປັນເຈົ້າ
2 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະສັດຕຣູກ່າວຂວັນເຖິງເຈົ້າວ່າ "ອາຮາ" ແລະ"ບ່ອນສູງບູຮານເຫລົ່ານັ້ນໄດ້ຕົກເປັນ
ກຳມະສິດຂອງເຮົາແລ້ວ"
3 ເຫດສັນນັ້ນຈົ່ງທຳນວາຍແລະກ່າວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະວ່າເຂົາກະທຳໃຫ້ເຈົ້າຮ້າງເປົ່າ ແລະບີບ
ເຈົ້າທຸກດ້ານຈົນເຈົ້າຕົກເປັນກຳມະສິດຂອງປະຊາຊົນທີ່ເຫລືອຢູ່ນັ້ນ ແລະເຈົ້າກາຍເປັນຂີ້ປາກເປັນທີ່ນິນທາຂອງປະ
ຊາຊົນ
4 ພູແຫ່ງອິສຣາເອນເອີຍ, ເຫດສັນນັ້ນຈົ່ງຟັງພຣະຄຳຂອງພຣະເຈົ້າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແກ່ພູແລະຈ້າຍພູ ຫ້ວຍ
ແລະຮ່ອມພູ ທີ່ປະຖິ້ມແລະຮ້າງເປົ່າ ແລະຫົວເມືອງທີ່ຄົນຫນີໄປຫມົດ ຊຶ່ງໄດ້ກາຍເປັນເຫຍື່ອແລະເປັນທີ່ຫຍໍ້ຫຍັນແກ່
ປະຊາຊາດອ້ອມຮອບທີ່ເຫລືອຢູ່
5 ເຫດສັນນັ້ນພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ດ້ວຍຄວາມຫວງແຫນຢ່າງຟົດເດືອດຂອງເຮົາ ເຮົາເວົ້າກ່າວໂທດປະຊາ
ຊາດທີ່ເຫລືອຢູ່ ແລະແກ່ເອໂດມທັງສິ້ນ ຜູ້ທີ່ມອບແຜ່ນດິນຂອງເຮົາໃຫ້ແກ່ຕົນເອງໃຫ້ເປັນກຳມະສິດ ດ້ວຍຄວາມລ້າ
ເລີງຢ່າງເຕັມໃຈ ແລະຄວາມຫມິ່ນປມາດຢ່າງທີ່ສຸດ ເພື່ອເຂົາຈະໄດ້ໄລ່ຄົນແຜ່ນດິນນັ້ນອອກໄປ ເພື່ອຈະໄດ້ປຸ້ນເອົາ
ໄປເສັຽ
6 ເຫດສັນນັ້ນຈົ່ງກ່າວຄຳທຳນວາຍກ່ຽວກັບແຜ່ນດິນອິສຣາເອນ ແລະຈົ່ງກ່າວແກ່ພູແລະເນີນເຂົາ ແກ່ຫ້ວຍແລະຮ່ອມພູ
ວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາເວົ້າດ້ວຍຄວາມຫວງແຫນ ແລະຄວາມພິໂຣດຂອງເຮົາ ເພາະເຈົ້າໄດ້
ທົນຮັບຄວາມອັບອາຍຂາຍຫນ້າຈາກປະຊາຊາດ
7 ດັ່ງນັ້ນ ພຣະຜູ້ເປັນເຈົ້າກ່າວວ່າ ເຮົາປະຕິຍານວ່າປະຊາຊາດທີ່ຢູ່ຮອບເຈົ້ານັ້ນຈະທົນຮັບຄວາມອັບອາຍຂາຍຫນ້າ
8 "ພູທັງຫລາຍແຫ່ງອິສຣາເອນເອີຍ, ແຕ່ເຈົ້າຈະແຕກກິ່ງຂອງເຈົ້າອອກມາ ແລະອອກຜົນໃຫ້ແກ່ອິສຣາເອນໄພ່ພົນ
ຂອງເຮົາ ເພາະບໍ່ເຫິງເຂົາຈະໄດ້ກັບມາ
9 ເພາະ ເບິ່ງແມ, ເຮົາຢູ່ຝ່າຍເຈົ້າ ເຮົາຈະຫັນມາຫາເຈົ້າ ແລະເຈົ້າຈະຖືກໄຖແລະຖືກຫວ່ານ
10 ແລະເຮົາຈະທະວີຄົນໃຫ້ແກ່ເຈົ້າ ຄືບັນດາເຊື້ອສາຍອິສຣາເອນທົ່ວຫມົດ ຫົວເມືອງຈະມີຄົນມາອາສັຍຢູ່ ແລະສະ
ຖານທີ່ຮ້າງເປົ່າຈະຖືກສ້າງຂຶ້ນໃຫມ່
11 ເຮົາຈະທະວີທັງຄົນແລະສັດໃຫ້ແກ່ເຈົ້າ ຈະເພີ່ມຂຶ້ນແລະມີລູກດົກ ແລະເຮົາຈະກະທຳໃຫ້ເຈົ້າມີຄົນອາສັຍຢູ່ຢ່າງໃນ
ເທື່ອກ່ອນ ແລະຈະເປັນປໂຍດແກ່ເຈົ້າຫລາຍກວ່າແຕ່ກ່ອນ ແລ້ວເຈົ້າຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ
12 ເຮົາຈະໃຫ້ຄົນທຽວເທິງເຈົ້າ ຄືອິສຣາເອນໄພ່ພົນຂອງເຮົາດ້ວຍ ແລະເຂົາທັງຫລາຍຈະໄດ້ເຈົ້າເປັນກັມມະສິດ ແລະ
ເຈົ້າຈະເປັນມໍຣະດົກຂອງເຮົາ ແລະເຈົ້າຈະບໍ່ເອົາລູກຂອງເຂົາໄປອີກ
13 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເພາະຄົນກ່າວແກ່ເຈົ້າວ່າ ເຈົ້າກິນຄົນ ແລະເຈົ້າໄດ້ເອົາລູກຂອງປະຊາຊາດຂອງເຈົ້າໄປ
14 ພຣະຜູ້ເປັນເຈົ້າກ່າວວ່າ ເຫດສະນັ້ນ ເຈົ້າຈະບໍ່ກິນຄົນ ແລະຈະບໍ່ເອົາລູກຂອງເຈົ້າຈາກປະຊາຊາດຂອງເຈົ້າໄປອີກ
ເລີຍ
15 ເຮົາຈະບໍ່ໃຫ້ເຈົ້າໄດ້ຍິນຄຳຫມິ່ນປມາດຂອງປະຊາຊາດຕ່າງໆອີກ ແລະເຈົ້າບໍ່ຕ້ອງທົນຮັບຄວາມອັບອາຍຂາຍຫນ້າ
ຂອງຊົນຊາດທັງຫລາຍອີກເລີຍ ແລະບໍ່ຕ້ອງກະທຳໃຫ້ປະຊາຊາດຂອງເຈົ້າສະດຸດອີກເລີຍ ພຣະຜູ້ເປັນເຈົ້າກ່າວດັ່ງນີ້
ແຫລະ"

### The Renewal of Israel

16 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາຍັງຂ້າພະເຈົ້າອີກວ່າ,
17 “ບຸດແຫ່ງມະນຸດເອີຍ, ເມື່ອເຊື້ອສາຍອິສຣາເອນໄດ້ມາອາສັຍຢູ່ໃນແຜ່ນດິນຂອງຕົນ ເຂົາກະທຳໃຫ້ແຜ່ນດິນເປັນມົນ
ທິນດ້ວຍທາງແລະການກະທຳຂອງເຂົາ ຄວາມປະພຶດຂອງເຂົາທີ່ມີຕໍ່ເຮົາກໍເຫມືອນມົນທິນອັນເກີດຈາກຣະດູ
18 ດັ່ງນັ້ນ ເຮົາຈຶ່ງລະບາຍຄວາມພິໂຣດຂອງເຮົາອອກເຫນືອເຂົາດ້ວຍເຣື່ອງເລືອດ ດ້ວຍເຣື່ອງຮູບໂຄຣົບຊຶ່ງເຂົາໄດ້ກະ
ທຳໃຫ້ຕົກເຫິງແຜ່ນດິນນັ້ນເປັນມົນທິນ
19 ເຮົາຈຶ່ງໃຫ້ເຂົາກະຈັດພັດພາຍໄປຖ້າມກາງປະຊາຊາດແລະເຂົາຖືກກະຈາຍໄປຕາມປະເທດຕ່າງໆ ເຮົາພິພາກສາ
ເຂົາຕາມທາງແລະການກະທຳຂອງເຂົາ
20 ແຕ່ເມື່ອເຂົາມາຍັງບັນດາປະຊາຊາດ ເຂົາຈະມາທີ່ໃດກໍຕາມ ເຂົາໄດ້ກະທຳໃຫ້ນາມບໍຣິສຸດຂອງເຮົາຖືກ ຫມິ່ນປມາດ
ຊຶ່ງຄົນກ່າວຂວັນເຖິງເຂົາວ່າ “ຄົນເຫລົ່ານີ້ເປັນໄພ່ພົນຂອງພຣະເຈົ້າ ເຖິງປານນັ້ນເຂົາຍັງຕ້ອງອອກໄປຈາກແຜ່ນດິນ
ຂອງພຣະອົງ”
21 ແຕ່ເຮົາຍັງເປັນຫ່ວງນາມບໍຣິສຸດຂອງເຮົາ ຊຶ່ງເຊື້ອສາຍອິສຣາເອນກະທຳໃຫ້ຫມິ່ນປມາດຖ້າມກາງປະຊາຊາດຊຶ່ງເຂົາ
ຕົກໄປຢູ່ນັ້ນ
22 “ດັ່ງນັ້ນ ຈົ່ງກ່າວແກ່ເຊື້ອສາຍອິສຣາເອນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເຊື້ອສາຍອິສຣາເອນເອີຍ ສິ່ງທີ່ເຮົາກຳລັງຈະ
ທຳນີ້ ບໍ່ແມ່ນເຫັນແກ່ຊາວອິສຣາເອນ ແຕ່ເຫັນແກ່ພຣະນາມບໍຣິສຸດຂອງເຮົາ ຄືນາມທີ່ພວກເຈົ້າດູຫມິ່ນຢຽບຫຍາມ
ຄາວຢູ່ໃນຕ່າງປະເທດນັ້ນ
23 ເມື່ອໃດເຮົາສະແດງໃຫ້ຊາດຕ່າງໆເຫັນຄວາມບໍຣິສຸດແຫ່ງນາມອັນຍິ່ງໃຫຍ່ຂອງເຮົາ ຄື ນາມທີ່ພວກເຈົ້າໄດ້ຫມິ່ນປ
ມາດໃນຖ້າມກາງພວກເຂົາແລ້ວ ເມື່ອນັ້ນແຫລະ ພວກເຂົາຈຶ່ງຈະຮູ້ວ່າ ເຮົາຄື ພຣະຜູ້ເປັນເຈົ້າ ເຮົາບອກວ່າຈະເອົາ
ພວກເຈົ້າເປັນຕົວຢ່າງສະແດງໃຫ້ຊາດຕ່າງໆເຫັນວ່າ ເຮົາ ຄືຜູ້ບໍຣິສຸດ
24 ຈະເອົາພວກເຈົ້າອອກຈາກຊົນຊາດ ແລະປະເທດຕ່າງໆ ແລ້ວນຳກັບຄືນມາໂຮມກັນຢູ່ໃນປະເທດຂອງເຈົ້າເອງ
25 ຈະເອົານ້ຳບໍຣິສຸດຫົດສົງເຈົ້າໃຫ້ພົ້ນຈາກບາບທີ່ຂາບໄຫວ້ຮູບໂຄຣົບ ແລະພົ້ນຈາກທຸກໆສິ່ງທີ່ທຳໃຫ້ເຈົ້າມີມົນທິນ
26 ຈະໃຫ້ຈິດວິນຍານໃຫມ່ແກ່ເຈົ້າ ຈະເອົາໃຈແຂງເຫມືອນຫີນຂອງເຈົ້າອອກໄປແລະເອົາໃຈຄົນໃສ່ໃຫ້ໃຫມ່
27 ເອົາຈິດວິນຍານຂອງເຮົາເອງໃສ່ໃຫ້ເຈົ້າ ທຳໃຫ້ເຈົ້າປະພຶດຕາມພຣະທັມ ແລະຂໍ້ຄຳສັ່ງທັງປວງທີ່ເຮົາໄດ້ບອກ
28 ແລ້ວເຈົ້າຈະໄດ້ອາສັຍຢູ່ໃນແຜ່ນດິນທີ່ເຮົາໄດ້ມອບໃຫ້ແກ່ບັນພະບຸຣຸດຂອງເຈົ້າ ເຈົ້າຈະເປັນໄພ່ພົນຂອງເຮົາ ແລະ
ເຮົາຈະເປັນພຣະເຈົ້າຂອງເຈົ້າ
29 ຈະຊ່ອຍໃຫ້ເຈົ້າພົ້ນຈາກການເປັນມົນທິນຍ້ອນສິ່ງທັງປວງ ຈະສັ່ງໃຫ້ມີເຂົ້າອຸດົມສົມບູນ ເພື່ອເຈົ້າຈະບໍ່ໄດ້ອຶດຢາກ
ອີກຕໍ່ໄປ
30 ຈະໃຫ້ກົກໄມ້ແລະໄຮ່ນາເກີດຫມາກຜົນເພີ້ມພູນຂຶ້ນ ເພື່ອວ່າເຈົ້າຈະບໍ່ຖືກຊົນຊາດອື່ນຫມິ່ນປມາດຍ້ອນການອຶດ
ຢາກອີກ
31 ແລ້ວເຈົ້າຈະຮູ້ເມື່ອຄວາມຊົ່ວແລະຄວາມຜິດທີ່ໄດ້ກະທຳມາ ຈະກຽດຊັງຕົວເອງຍ້ອນຄວາມບາບແລະຄວາມບໍ່ຍຸດຕິ
ທັມນັ້ນ
32 ອິສຣາເອນເອີຍ, ເຮົາຢາກໃຫ້ເຈົ້າຮູ້ວ່າ ເຮົາຈະບໍ່ກະທຳສິ່ງທັງປວງນີ້ຍ້ອນເຫັນແກ່ເຈົ້າ ເພາະວ່າຢາກໃຫ້ເຈົ້າຮູ້ສຶກລະ
ອາຍໃຈໃນການກະທຳນັ້ນ ເຮົາຄືພຣະຜູ້ເປັນເຈົ້າໄດ້ກ່າວດັ່ງນັ້ນແຫລະ
33 ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ເມື່ອເຮົາຊຳຣະບາບໃຫ້ຫມົດໄປຈາກເຈົ້າແລ້ວ ຈະໃຫ້ເຈົ້າອາສັຍຢູ່ໃນຫົວເມືອງທັງ
ຫລາຍອີກ ແລະຈະໃຫ້ສ້າງສາສິ່ງທີ່ເພພັງຂຶ້ນໃຫມ່
34 ທົ່ງນາຂອງເຈົ້າທີ່ທຸກຄົນເຄີຍເຫັນມັນກໍມີຫຍ້າແລະເປັນປ່ານັ້ນ ເຮົາຈະໃຫ້ເຈົ້າຂຸດໄຖມັນອີກ

35 ຄົນທັງປວງຈະເວົ້າເຖິງດິນຕອນນີ້ວ່າ ແຕ່ກີ້ມັນເປັນປ່າ ແຕ່ດຽວນີ້ມັນເປັນເຫມືອນສວນເອເດັນ ແຕ່ກ່ອນຫົວເມືອງ
ທັງຫລາຍໄດ້ເພພັງຮ້າງເປົ່າແລະຖືກທຳລາຍ ແຕ່ບັດນີ້ໄດ້ມີກຳແພງແລະມີຄົນອາສັຍຢູ່
36 ແລ້ວຊົນຊາດໃກ້ຄຽງທີ່ຍັງມີຊີວິດເຫລືອຢູ່ ຈະຮູ້ວ່າ ເຮົານີ້ແຫລະເປັນຜູ້ສ້າງຫົວເມືອງທີ່ເພພັງແລະປູກພືດໃສ່ດິນຮົກ
ຮ້າງເຫລົ່ານີ້ ເຮົາຈະກະທຳຕາມທີ່ໄດ້ກ່າວມານີ້ແທ້"
37 ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ເຮົາຈະກະທຳຫລາຍກວ່ານັ້ນອີກ ຄືຈະໃຫ້ຊາວອິສຣາເອນຂໍຄວາມຊ່ອຍເຫລືອຈາກເຮົ
າ ເພື່ອເຮັດໃຫ້ເຂົາມີຄົນຫລວງຫລາຍເຫມືອນດັ່ງຝູງແກະຄືແຕ່ກ່ອນນັ້ນ
38 ຝູງແກະເຜົາບູຊາໃນວັນເທສການຢູ່ກຸງເຢຣູຊາເລັມມີຫລາຍສັນໃດ ຝູງຄົນໃນເມືອງຮ້າງເປົ່າເຫລົ່ານີ້ກໍຈະຫລາຍສັນ
ນັ້ນ ແລ້ວເຂົາທັງຫລາຍຈະຮູ້ວ່າ ເຮົາ ຄືພຣະຜູ້ເປັນເຈົ້າ"

## 37 ຮ່ອມພູກະດູກຫລ້ອນ

The Valley of Dry Bones

1 ຂ້າພະເຈົ້າໄດ້ຕົກຢູ່ພາຍໃຕ້ຣິດເດດຂອງພຣະຜູ້ເປັນເຈົ້າ ພຣະວິນຍານຂອງພຣະອົງຊົງນຳຂ້າພະເຈົ້າອອກມາປ່ອຍ
ໄວ້ໃນຮ່ອມພູແຫ່ງນຶ່ງ ຊຶ່ງມີກະດູກເຕັມໄປຫມົດຊົງນຳໄປທົ່ວບໍຣິເວນຮ່ອມພູນັ້ນ
2 ຂ້າພະເຈົ້າໄດ້ເຫັນກະດູກຢ່າງຫລວງຫລາຍຢູ່ໃນທີ່ນັ້ນ ເປັນກະດູກຫລ້ອນທັງຫມົດ
3 ພຣະອົງຊົງຖາມຂ້າພະເຈົ້າວ່າ, "ບຸດແຫ່ງມະນຸດເອີຍ, ກະດູກເຫລົ່ານີ້ຄືນມີຊີວິດອີກໄດ້ບໍ" ຂ້າພະເຈົ້າທູນຕອບວ່າ,
"ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງເທົ່ານັ້ນທີ່ຊົງຮູ້ເຣື່ອງນີ້"
4 ແລ້ວພຣະອົງຊົງກ່າວວ່າ, "ຈົ່ງປະກາດພຣະທັມຕໍ່ກະດູກຫລ້ອນເຫລົ່ານີ້ ຈົ່ງບອກພວກມັນຟັງພຣະທັມຂອງພຣະຜູ້
ເປັນເຈົ້າ
5 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແກ່ກະດູກເຫລົ່ານີ້ວ່າ ເບິ່ງແມ, ເຮົາຈະເອົາລົມຫາຍໃຈເຂົ້າໄປໃນພວກມັນ ຈະໃຫ້ມີຊີວິດ
6 ເຮົາຈະວາງເສັ້ນເອັນ ມີກ້າມຊີ້ນແລະມີຫນັງປົກຫຸ້ມອີກ ແລ້ວພວກມັນຈະຮູ້ວ່າ ເຮົາຄືພຣະຜູ້ເປັນເຈົ້າ"
7 ດັ່ງນັ້ນ ຂ້າພະເຈົ້າຈຶ່ງປະກາດພຣະທັມຕາມທີ່ພຣະອົງຊົງບອກ ໃນຂນະທີ່ປ່າວປະກາດຢູ່ນັ້ນ ຂ້າພະເຈົ້າໄດ້ຍິນສຽງ
ດັງກຸກກົກ ແລ້ວກະດູກທັງຫລາຍກໍເລີ້ມເຊື່ອມເຂົ້າກັນ
8 ໃນຂນະທີ່ເຝົ້າເບິ່ງຢູ່ນັ້ນ ພວກເສັ້ນເອັນ ແລະກ້າມຊີ້ນໄດ້ຕິດກັບກະດູກ ແລະມີຫນັງຫຸ້ມຢູ່ຂ້າງນອກແຕ່ຍັງບໍ່ທັນມີ
ລົມຫາຍໃຈເທື່ອ
9 ພຣະຜູ້ເປນັເຈົ້າຊົງກ່າວຕໍ່ຂ້າພະເຈົ້າວ່າ, "ບຸດແຫ່ງມະນຸດເອີຍ, ຈົ່ງປະກາດພຣະທັມໃຫ້ລົມຟັງ ໃຫ້ບອກວ່າ ພຣະຜູ້
ເປັນເຈົ້າຊົງສັ່ງໃຫ້ມັນມາຈາກທຸກທາງ ແລ້ວໃຫ້ເຂົ້າໄປເປັນລົມຫາຍໃຈຢູ່ໃນຊາກສົບເຫລົ່ານັ້ນ ເພື່ອໃຫ້ພວກເຂົາ
ເລີ້ມມີຊີວິດຄືນມາໃຫມ່ອີກ"
10 ດັ່ງນັ້ນ ຂ້າພະເຈົ້າຈຶ່ງປະກາດພຣະທັມຕາມທີ່ພຣະອົງຊົງບອກ ລົມກໍເຂົ້າສູ່ຊາກສົບແລະເຮັດໃຫ້ມີລົມຫາຍໃຈຄືນມີ
ຊີວິດອີກ ພວກເຂົາຈຶ່ງໄດ້ພ້ອມກັນຢືນຂຶ້ນ ເປັນຄົນຫລວງຫລາຍພໍທີ່ຈະປະກອບເປັນກອງທັບນຶ່ງໄດ້
11 ພຣະເຈົ້າຊົງບອກຂ້າພະເຈົ້າວ່າ, "ບຸດແຫ່ງມະນຸດເອີຍ, ຄົນອິສຣາເອນເປັນເຫມືອນກະດູກເຫລົ່ານີ້ແຫລະ ພວກເຂົາ
ເວົ້າວ່າ ເຂົາເອງຫ່ຽວແຫ້ງປາສຈາກຄວາມຫວັງແລະບໍ່ມີອະນາຄົດ
12 ເພາະສະນັ້ນ ຈົ່ງປະກາດພຣະທັມຕໍ່ອິສຣາເອນໄພ່ພົນຂອງເຮົາວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ "ເບິ່ງແມ, ໂອ ໄພ່
ພົນຂອງເຮົາເອີຍ, ເຮົາຈະໄຂຫລຸມຝັງສົບຂອງເຈົ້າ ແລະຈະນຳເຈົ້າກັບມາຍັງແຜ່ນດິນອິສຣາເອນ
13 "ໂອ ໄພ່ພົນຂອງເຮົາເອີຍ ເຈົ້າຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ ແລະຍົກເຈົ້າອອກມາຈາກຫລຸມຝັງສົບຂອງເຈົ້າ
14 ເຮົາຈະບັນຈຸວິນຍານຂອງເຮົາໄວ້ໃນເຈົ້າ ແລະເຈົ້າຈະມີຊີວິດ ແລະເຮົາຈະວາງເຈົ້າໄວ້ໃນແຜ່ນດິນຂອງເຈົ້າ ແລ້ວ
ເຈົ້າຈະຊາບວ່າເຮົາຄື ພຣະຜູ້ເປັນເຈົ້າໄດ້ລັ່ນວາຈາແລ້ວ ແລະເຮົາໄດ້ກະທຳ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ"

**ຢູດາແລະອິສຣາເອນຈະເປັນຣາຊອານາຈັກດຽວ**

The Two Sticks

15 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
16 “ເຈົ້າ ບຸດແຫ່ງມະນຸດເອີຍ, ໃຫ້ເອົາໄມ້ລຳນຶ່ງມາແລ້ວຂຽນໃສ່ວ່າ “ສຳລັບຢູດາແລະສຳລັບຊົນອິສຣາເອນທີ່ສັງຄົມກັບ
ຢູດາ” ຈິ່ງເອົາໄມ້ມາອີກລຳນຶ່ງແລ້ວຂຽນໃສ່ວ່າ “ສຳລັບໂຢເຊັບ (ໄມ້ຂອງເອຟຣາອິມ) ແລະເຊື້ອສາຍອິສຣາເອນທີ່
ສັງຄົມກັບໂຢເຊັບ”
17 ແລ້ວໃຫ້ກຳໄມ້ທັງສອງນັ້ນໄວ້ໃນມືເພື່ອໃຫ້ເຫັນເປັນໄມ້ລຳດຽວ
18 ເມື່ອຊົນຊາດຂອງເຈົ້າຖາມເຈົ້າວ່າ “ທ່ານຈະບໍ່ສຳແດງໃຫ້ເຮົາຮູ້ຫລືວ່າ ໄມ້ນີ້ຫມາຍຄວາມວ່າຢ່າງໃດ”
19 ຈິ່ງກ່າວແກ່ເຂົາວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະເອົາໄມ້ຂອງໂຢເຊັບ (ຊຶ່ງຢູ່ໃນມືຂອງເອຟຣາອິມ)
ແລະເຜົ່າອິສຣາເອນທີ່ສົງຄົມກັບເຂົາ ແລະເຮົາຈະເອົາໄມ້ຂອງຢູດາມາຮວມເຂົ້າກັນ ແລະເຮັດໃຫ້ໄມ້ສອງລຳນີ້ເປັນ
ອັນດຽວກັນແລະຈະຖືມັນໄວ້ໃນມືຂອງເຮົາ
20 ຕໍ່ໄປ ຈິ່ງຖືເອົາໄມ້ສອງລຳທີ່ເຈົ້າຂຽນໃສ່ນັ້ນໃຫ້ຄົນທັງຫລາຍເບິ່ງ
21 ແລ້ວຈິ່ງກ່າວແກ່ເຂົາວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ເຮົາຈະນຳຄົນອິສຣາເອນມາຈາກຖ້າມກາງປະຊາ
ຊາດ ຊຶ່ງເຂົາໄດ້ເຂົ້າໄປຢູ່ດ້ວຍນັ້ນ ແລະຈະຮວບຮວມເຂົາມາຈາກທຸກດ້ານ ແລະນຳເຂົາມາຍັງແຜ່ນດິນຂອງເຂົາເອງ
22 ຈະທຳໃຫ້ເປັນຊົນຊາດດຽວຢູ່ໃນພູທັງຫລາຍຂອງອິສຣາເອນ ຈະມີກະສັດອົງນຶ່ງຊົງເປັນປະມຸກ ແລະຈະບໍ່ຖືກແບ່ງ
ອອກເປັນສອງຊາດ ຫລືສອງອານາຈັກອີກຕໍ່ໄປ
23 ພວກເຂົາຈະບໍ່ມົມົນທິນຍ້ອນຂາບໄຫວ້ຮູບໂຄຣົບ ຫລືການເຮັດບາບອີກ ເຮົາຈະຊ່ອຍໃຫ້ເຂົາພົ້ນຈາກການທຳຊົ່ວ
ແລະທໍຣະຍົດຕໍ່ເຮົາ ຈະທຳໃຫ້ສະອາດບໍຣິສຸດ ພວກເຂົາຈະເປັນໄພ່ພົນຂອງເຮົາ ແລະເຮົາກໍຈະເປັນພຣະຜູ້ເປັນເຈົ້າ
ຂອງເຂົາ
24 ດາວິດຜູ້ຮັບໃຊ້ຂອງເຮົາຈະເປັນກະສັດເຫນືອເຂົາທັງຫລາຍ ພວກເຂົາທັງຫມົດຈະມີຜູ້ປົກຄອງຜູ້ດຽວ ແລະຈະປະພຶດ
ຕາມກົດຫມາຍຂອງເຮົາແລະຮັກສາກົດເກນຂອງເຮົາ ແລະກະທຳຕາມພຣະທັຍຂອງເຮົາດ້ວຍຄວາມສັດຊື່
25 ພວກເຂົາຈະອາສັຍຢູ່ໃນແຜ່ນດິນທີ່ບັນພະບຸຣຸດຂອງພວກເຂົາໄດ້ອາສັຍຢູ່ນັ້ນ ພວກເຂົາພ້ອມທັງລູກຫລານທັງຫມົດ
ຈະຢູ່ທີ່ນັ້ນ ຕລອດໄປ ດາວິດຜູ້ຮັບໃຊ້ຂອງເຮົາກໍຈະປົກຄອງເຂົາຕລອດໄປ
26 ຈະໃຫ້ຄຳຫມັ້ນສັນຍາໃຫ້ເຂົາໄດ້ຢູ່ຢ່າງສງົບສຸກຕລອດໄປ ຈະເພີ້ມພົລເມືອງແລະທຳໃຫ້ພຣະວິຫານມີຢູ່ໃນແຜ່ນດິນ
ຂອງເຂົາ ຕລອດໄປ
27 ເຮົາຈະຢູ່ທີ່ນັ້ນນຳພວກເຂົາ ຈະເປັນພຣະເຈົ້າຂອງເຂົາ ແລະເຂົາກໍຈະເປັນໄພ່ພົນຂອງເຮົາ
28 ເມື່ອເຮົາທຳໃຫ້ພຣະວິຫານຂອງເຮົາມີຢູ່ໃນປະເທດຂອງເຂົາແລ້ວ ຊົນຊາດທັງຫລາຍຈຶ່ງຈະຮູ້ວ່າ ເຮົາຄືພຣະຜູ້ເປັນ
ເຈົ້າຜູ້ກະທຳໃຫ້ອິສຣາເອນເປັນຊົນຊາດພິເສດຂອງເຮົາ”

## 38 ຄຳເຜີຍພຣະຄຳກ່າວໂທດໂກກ

Invasion by Gog

1 ຖ້ອຍຄຳຂອງພຣະຜູ້ເປັນເຈົ້າມາເຖິງຂ້າພະເຈົ້າວ່າ,
2 “ບຸດແຫ່ງມະນຸດເອີຍ ຈິ່ງມຸ້ງຫນ້າຂອງເຈົ້າຕໍ່ສູ້ໂກກແຫ່ງແຜ່ນດິນມາໂກກ ເຈົ້າອົງສຳຄັນຂອງເມເຊກ ແລະທູບັນ
ແລະຈິ່ງປະກາດພຣະທັມກ່າວໂທດເຂົາ
3 ຈິ່ງກ່າວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ, ໂກກເອີຍ ເຮົາເປັນປໍຣະປັກກັບເຈົ້າຜູ້ເປັນເຈົ້າອົງສຳຄັນແຫ່ງ
ເມເຊກແລະຕູບານ
4 ເຮົາຈະໃຫ້ເຈົ້າຫັນກັບ ແລະເອົາເບັດເກາະທີ່ຄາງກະໄຕຂອງເຈົ້າ ແລະເຮົາຈະນຳເຈົ້າອອກມາພ້ອມທັງກອງທັບທັງ
ສິ້ນຂອງເຈົ້າ ທັງມ້າແລະພົນມ້າ ສວມເຄື່ອງຮົບຄົບທຸກຄົນ ເປັນກອງທັບໃຫຍ່ ມີໂລ້ແລະດັ້ງ ຖືດາບທຸກຄົນ

5 ເປີເຊັຽ ກູດ ແລະພູທຢູ່ກັບເຂົາດ້ວຍ ທຸກຄົນມີໂລ້ແລະຫມວກເຫລັກ
6 ໂກເມີ ແລະກອງທັບທັງສິ້ນຂອງເຂົາ ເບັດໂຕກາມາ ຈາກສ່ວນເຫນືອສຸດ ພ້ອມກັບກອງທັບທັງສິ້ນຂອງເຂົາ ມີຊົນ
ຊາດທັງຫລາຍເປັນອັນມາກຢູ່ກັບເຈົ້າ
7 ເຈົ້າແລະບັນດາກອງທັບຊຶ່ງປະຊຸມຢູ່ກັບເຈົ້າ ຈົ່ງຕຽມຕົວພ້ອມແລະໃຫ້ພ້ອມໄວ້ສເມີ ແລະຈົ່ງເປັນຍາມເຝົ້າເຂົາທັງ
ຫລາຍ
8 ເມື່ອລ່ວງໄປຫລາຍວັນແລ້ວ ເຈົ້າຈະຕ້ອງຖືກເອີ້ນຕົວ ໃນປີຫລັງໆເຈົ້າຈະຍົກເຂົ້າໄປຕໍ່ສູ້ກັບແຜ່ນດິນຊຶ່ງໄດ້ຄືນມາ
ຈາກສົງຄາມ ເປັນແຜ່ນດິນທີ່ປະຊາຊົນຮວບຮວມກັນມາຈາກຊົນຊາດຫລາຍຊາດຢູ່ທີ່ເທິງພູອິສຣາເອນ ຊຶ່ງໄດ້ເຄີຍ
ເປັນທີ່ຖິ້ມຮ້າງມານານແລ້ວ ປະຊາຊົນຂອງແຜ່ນດິນນັ້ນອອກມາຈາກຊົນຊາດອື່ນໆ ບັດນີ້ອາສັຍຢູ່ຢ່າງປອດພັຍ
ແລ້ວທັງສິ້ນ
9 ເຈົ້າຈະອອກໄປມາເຫມືອນພະຍຸ ເຈົ້າຈະເປັນເຫມືອນເມກຄຸມແຜ່ນດິນທັງເຈົ້າແລະກອງທັບທັງສິ້ນຂອງເຈົ້າແລະຊົນ
ຊາດທັງຫລາຍເປັນອັນມາກທີ່ຢູ່ກັບເຈົ້າ
10 "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໃນວັນນັ້ນ ຈະບັງເກີດຄວາມຄິດໃນໃຈຂອງເຈົ້າ ແລະເຈົ້າຈະຄິດແຜນການຊົ່ວ
11 ແລະກ່າວວ່າ "ເຮົາຈະຍົກກອງທັບໄປຍັງແຜ່ນດິນທີ່ຊົນນະບົດບໍ່ມີກຳແພງລ້ອມ ເຮົາຈະໂຈມຕີປະຊາຊົນທີ່ສງົບຊຶ່ງ
ອາສັຍຢູ່ຢ່າງປອດພັຍ ທຸກຄົນອາສັ\ຍຢູ່ໂດຍບໍ່ມີກຳແພງ ບໍ່ມີດານ ບໍ່ມີປະຕູ
12 ເພື່ອຊີງເຂົ້າຂອງປຸ້ນເອົາໄປເພື່ອຈະເຂົ້າຍຶດບ່ອນທີ່ຖິ້ມຮ້າງ ຊຶ່ງຂນະນີ້ມີຄົນອາສັຍຢູ່ ແລະປະຊາຊົນຊຶ່ງຮວບຮວມ
ຈາກບັນດາປະຊາຊາດ ຜູ້ທີ່ໄດ້ສັດແລະເຂົ້າຂອງຄືຜູ້ອາສັຍຢູ່ໃນສູນກາງພິພົບໂລກ
13 ເຊບາແລະເດດານ ແລະບັນດາພໍ່ຄ້າແຫ່ງຕາຊິສ ແລະສິງຫນຸ່ມໃນເມືອງນັ້ນຈະກ່າວແກ່ເຈົ້າວ່າ "ທ່ານມາເພື່ອຈະຊີງ
ເຂົ້າຂອງຫລື ທ່ານຊຸມນຸມກອງທັບເພື່ອຈະປຸ້ນ ເພື່ອຈະຂົນເອົາເງິນແລະທອງໄປ ຂົນເອົາສັດແລະເຄື່ອງຂອງໄປ
ເພື່ອຈະຊີງຂອງຫລວງຫລາຍຫລື"
14 "ເຫດສັນນັ້ນ ບຸດແຫ່ງມະນຸດເອີຍ, ຈົ່ງປະກາດພຣະທັມແລະກ່າວກັບໂກກວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໃນວັນ
ນັ້ນເມື່ອອິສຣາເອນໄພ່ພົນຂອງເຮົາອາສັຍຢູ່ຢ່າງປອດພັຍແລ້ວ ເຈົ້າຈະບໍ່ໄດ້ຮູ້ຫລື
15 ທ່ານຈະມາຈາກທີ່ຂອງເຈົ້າຊຶ່ງຢູ່ສ່ວນເຫນືອທີ່ສຸດ ທັງເຈົ້າແລະຊົນຊາດທັງຫລາຍເປັນອັນມາກທີ່ຢູ່ກັບເຈົ້າ ທຸກຄົນຂີ່
ມ້າເປັນກອງທັບມະຫຶມາ ເປັນກອງທັບຊຶ່ງກຳລັງຍິ່ງນັກ
16 ເຈົ້າຈະມາຕໍ່ສູ້ອິສຣາເອນໄພ່ພົນຂອງເຮົາ ເຫມືອນຢ່າງເມກຄຸມແຜ່ນດິນໃນການພາຍຫນ້າ ເຮົາຈະນຳເຈົ້າມາຕໍ່ສູ້ກັບ
ແຜ່ນດິນຂອງເຮົາ ເພື່ອປະຊາຊາດທັງຫລາຍຈະຮູ້ວ່າຈັກເຮົາ ໂກກເອີຍ, ໃນເມື່ອເຮົາສຳແດງຄວາມບໍຣິສຸດຂອງເຮົາ
ຖ້າມກາງເຈົ້າຕໍ່ຫນ້າຕໍ່ຕາເຂົາ

Judgment on Gog

17 "ພຣະຜູ້ເປັນເຈົ້າຊົງກ່າວດັ່ງນີ້ວ່າ ເຈົ້າເປັນຜູ້ນັ້ນຫລືຜູ້ທີ່ໃນສມັຍກ່ອນເຮົາໄດ້ເວົ້າເຖິງໂດຍຜູ້ປະກາດພຣະທັມຂອງອິ
ສຣາເອນຜູ້ຮັບໃຊ້ຂອງເຮົາ ຜູ້ຊຶ່ງໃນສມັຍນັ້ນໄດ້ປະກາດພຣະທັມຢູ່ຫລາຍປີວ່າ ເຮົາຈະນຳເຈົ້າມາຕໍ່ສູ້ກັບເຂົາ
18 ພຣະຜູ້ເປັນເຈົ້າຊົງກ່າວວ່າ ແຕ່ໃນວັນນັ້ນເມື່ອໂກກຈະຍົກມາຕໍ່ສູ້ກັບແຜ່ນດິນອິສຣາເອນ ຄວາມພິໂຣດຂອງເຮົາຈະ
ພຸ່ງຂຶ້ນ
19 ເພາະເຮົາຂໍປະກາດດ້ວຍຄວາມຫວງແຫນແລະດ້ວຍຄວາມພິໂຣດດັ່ງໄຟພຸ່ງຂອງເຮົາວ່າ ໃນວັນນັ້ນຈະມີການສັ່ນສະ
ເທືອນໃຫຍ່ຍິ່ງໃນແຜ່ນດິນອິສຣາເອນ
20 ປາໃນທະເລແລະນົກໃນອາກາດ ແລະສັດປ່າທົ່ງນາແລະສັດເລືອຍຄານທີ່ຄານຢູ່ເທິງແຜ່ນດິນ ແລະປະຊາຊົນທັງສິ້ນ
ຢູ່ເທິງພື້ນພິພົບຈະສັ່ນສະເທືອນຕໍ່ຫນ້າເຮົາ ພູຈະພັງທະລາຍລົງ ແລະຫນ້າຈະເຈື່ອນລົງ ແລະກຳແພງທຸກແຫ່ງຈະລົ້ມ
ລົງທີ່ດິນ

21 ເຮົາຈະຮ້ອງເຖິງພູທັງຫລາຍຂອງເຮົາເອີ້ນດາບມາຕໍ່ສູ້ກັບໂກກ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ ແລະດາບຂອງທຸກ
ຄົນຈະຕໍ່ສູ້ກັບພີ່ນ້ອງຂອງເຂົາ
22 ເຮົາຈະພິພາກສາລົງໂທດເຂົາດ້ວຍໂຣກລະບາດ ແລະເລືອດອອກ ເຮົາຈະໃຫ້ຝົນຕົກຢ່າງນ້ຳໄຫລຊຸ່ງວ ທັງລູກເຫັບ
ແລະໄຟ ແລະໄຟມາດຕົກໃສ່ເຂົາແລະກອງທັບຂອງເຂົາແລະຊົນຊາດທັງຫລາຍເປັນອັນມາກທີ່ຢູ່ກັບເຂົາ
23 ດັ່ງນັ້ນ ເຮົາຈະສຳແດງຄວາມຍິ່ງໃຫຍ່ແລະຄວາມບໍຣິສຸດຂອງເຮົາ ແລະກະທຳຕົວໃຫ້ເປັນທີ່ຮູ້ຈັກໃນສາຍຕາຂອງປະ
ຊາຊາດທັງຫລາຍ ແລ້ວເຂົາຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າ

# 39

### Gog's Armies Destroyed

1 "ເຈົ້າ ບຸດແຫ່ງມະນຸດເອີຍ, ຈົ່ງປະກາດພຣະທັມກ່າວໂທດໂກກ ແລະກ່າວວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ເບິ່ງແມ,
ໂກກເອີຍ, ເຮົາເປັນປໍຣະປັກກັບເຈົ້າ ຜູ້ເປັນເຈົ້າອົງສຳຄັນແຫ່ງເມເຊກແລະຕູບານ
2 ເຮົາຈະປິ່ນເຈົ້າໄປສູ່ທິດທາງໃຫມ່ ແລະໃຫ້ເຈົ້າຂຶ້ນມາຈາກສ່ວນເຫນືອທີ່ສຸດ ແລະໃຫ້ເຈົ້າເຂົ້າໄປຕໍ່ສູ້ພູທັງຫລາຍ
ແຫ່ງອິສຣາເອນ
3 ແລ້ວເຮົາຈະຕີຄັນທະນູໃຫ້ຫລຸດຈາກມືຊ້າຍຂອງເຈົ້າ ແລະເຮົາຈະໃຫ້ລູກທະນູຕົກຈາກມືຂວາຂອງເຈົ້າ
4 ເຈົ້າຈະລົ້ມລົງເທິງພູແຫ່ງອິສຣາເອນ ທັງເຈົ້າແລະກອງທັບທັງສິ້ນຂອງເຈົ້າ ແລະຊົນຊາດທັງຫລາຍທີ່ຢູ່ກັບເຈົ້າ ເຮົາ
ຈະມອບໃຫ້ເປັນອາຫານແກ່ແຮ້ງທຸກຊະນິດແລະແກ່ສັດປ່າໃນທົ່ງ
5 ພຣະຜູ້ເປັນເຈົ້າກ່າວວ່າ ເຈົ້າຈະລົ້ມລົງເທິງພື້ນທົ່ງນາ ເພາະເຮົາໄດ້ລັ່ນວາຈາແລ້ວ
6 ເຮົາຈະສົ່ງໄຟມາເຫນືອໂກກ ແລະເຫນືອຜູ້ທີ່ອາສັຍຢູ່ຢ່າງປອດພັຍຕາມແຜ່ນດິນຊາຍທະເລ ແລະເຂົາທັງຫລາຍຈະ
ຊາບວ່າເຮົາຄືພຣະຜູ້ເປັນເຈົ້າ
7 "ແລະເຮົາຈະກະທຳໃຫ້ນາມບໍຣິສຸດຂອງເຮົາເປັນທີ່ຮູ້ຈັກໃນຖ້າມກາງອິສຣາເອນໄພ່ພົນຂອງເຮົາ ເຮົາຈະບໍ່ຍອມໃຫ້
ນາມບໍຣິສຸດຂອງເຮົາປມາດຫມິ່ນອີກຕໍ່ໄປ ແລະປະຊາຊາດທັງຫລາຍຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າ ອົງບໍຣິສຸດ
ໃນອິສຣາເອນ
8 ພຣະຜູ້ເປັນເຈົ້າກ່າວວ່າ ເບິ່ງແມ, ມາແລ້ວ ແລະຈະເປັນຢ່າງນັ້ນ ຄືວັນນັ້ນຊຶ່ງເຮົາໄດ້ລັ່ນວາຈາໄວ້
9 "ແລ້ວບັນດາຄົນເຫລົ່ານັ້ນທີ່ອາສັຍຢູ່ໃນບັນດາຫົວເມືອງອິສຣາເອນຈະອອກໄປ ແລະເອົາໄຟສຸມເຄື່ອງອາວຸດເຜົາ
ເສັ່ງຄືດັ້ງແລະໂລ້ ຄັນທະນູແລະລູກທະນູ ຫອກຍາວແລະຫອກຊັດ ແລະເຂົາຈະເອົາໄຟສຸມເປັນເວລາເຈັດປີ
10 ດັ່ງນັ້ນ ເຂົາບໍ່ຈຳເປັນຈະຕ້ອງເອົາຟືນມາຈາກທົ່ງນາຫລືຕັດຟືນມາຈາກປ່າ ເພາະເຂົາຈະກໍ່ໄຟດ້ວຍເຄື່ອງອາວຸດ
ແລະເຂົາທັງຫລາຍຈະຍາດຊິງຜູ້ທີ່ຍາດຊິງເຂົາ ແລະຈະປຸ້ນຜູ້ທີ່ປຸ້ນເຂົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

### The Burial of Gog

11 "ໃນວັນນັ້ນ ເຮົາຈະໃຫ້ໂກກມີບ່ອນຝັງສົບຢູ່ໃນອິສຣາເອນ ຄືຮ່ອມພູຂອງຄົນເດີນຜ່ານໄປມາ ຊຶ່ງຢູ່ທາງທິດຕາເວັນ
ອອກຂອງທະເລ ມັນຈະກີດຂວາງຄົນເດີນຜ່ານໄປມາ ເພາະວ່າໂກກແລະບັນດາຝູງຄົນທັງປວງຂອງທ່ານຈະຖືກຝັງ
ໄວ້ທີ່ນັ້ນ ເຂົາຈະເອີ້ນກັນວ່າ ຮ່ອມພູ ຮາໂມນໂກກ
12 ເຊື້ອສາຍຂອງອິສຣາເອນຈະຝັງເຂົາທັງຫລາຍຢູ່ເຖິງເຈັດເດືອນ ເພື່ອຈະໃຫ້ແຜ່ນດິນນັ້ນສະອາດ
13 ພຣະຜູ້ເປັນເຈົ້າກ່າວວ່າ ຣາສດອນທຸກຄົນຈະຝັງເຂົາທັງຫລາຍ ໃນວັນນັ້ນເມື່ອເຮົາສຳແດງພຣະສະງ່າຣາສີຂອງເຮົາ
ປະຊາຊົນນັ້ນຈະໄດ້ຮັບກຽດເພາະການຝັງສົບນັ້ນ
14 ເຂົາທັງຫລາຍຈະຕັ້ງຄົນໃຫ້ເດີນຜ່ານໄປມາໃນແຜ່ນດິນເລື້ອຍໄປ ໃຫ້ຝັງສົບຄົນເຫລົ່ານັ້ນທີ່ເຫລືອຢູ່ເທິງພື້ນແຜ່ນດິນ
ເພື່ອຈະທຳແຜ່ນດິນໃຫ້ສະອາດ ເຂົາຈະອອກກວດຄົ້ນເມື່ອສິ້ນເຈັດເດືອນແລ້ວ

15 ເມື່ອຄົນເຫລົ່ານັ້ນຜ່ານໄປມາໃນແຜ່ນດິນ ຖ້າຜູ້ໃດເຫັນກະດູກຄົນເຂົ້າ ເຂົາຈະເອົາເຄື່ອງຫມາຍປັກໄວ້ຂ້າງກະດູກ
ນັ້ນ ຈົນກວ່າຄົນຝັງຈະມາຝັງເຂົາໄວ້ໃນຮ່ອມພູຮາໂມນໂກກ
16 (ຫົວເມືອງນຶ່ງຊື່ ຮາໂມນາ ກໍຢູ່ທີ່ນັ້ນເຫມືອນກັນ) ເຂົາຈະທຳໃຫ້ແຜ່ນດິນສະອາດດັ່ງນີ້ແຫລະ
17 "ເຈົ້າ ບຸດແຫ່ງມະນຸດເອີຍ, ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຈົ່ງເວົ້າກັບນົກທຸກຊະນິດ ແລະເວົ້າກັບສັດປ່າທີ່ວ່າ, "ຈົ່ງ
ຊຸມນຸມແລະມາເຖີດ ຮວມກັນມາຈາກທຸກດ້ານມາຍັງການລ້ຽງສັກກາຣະບູຊາ ຊຶ່ງເຮົາກຳລັງຕຽມໄວ້ໃຫ້ເຈົ້າ ເປັນ
ການລ້ຽງສັກກາຣະບູຊາໃຫຍ່ເທິງພູທັງຫລາຍແຫ່ງອິສຣາເອນ ແລະເຈົ້າຈະກິນຊີ້ນແລະດື່ມເລືອດ
18 ເຈົ້າຈະກິນຊີ້ນຂອງຜູ້ເກັ່ງກ້າ ແລະດື່ມເລືອດຂອງເຈົ້ານາຍແຫ່ງພິພົບ ດັ່ງຂອງແກະເຖິກ ຂອງລູກແກະ ແລະຂອງແບ້
ກັບຂອງງົວເຖິກ ທັງສິ້ນເປັນສັດຕຸ້ຍພີແຫ່ງເມືອງບາຊານ
19 ແລະເຈົ້າຈະກິນໄຂມັນຈົນເຈົ້າອີ່ມ ແລະດື່ມເລືອດຈົນເມົາໃນການລ້ຽງສັກກາຣະບູຊາຊຶ່ງເຮົາໄດ້ຕຽມໄວ້ໃຫ້ແກ່ເຈົ້າ
20 ແລະເຈົ້າຈະອີ່ມທີ່ສຳລັບຂອງເຮົາດ້ວຍຊີ້ນມ້າແລະຜູ້ຂັບຂີ່ ທັງຊີ້ນຂອງຜູ້ເກັ່ງກ້າ ແລະຂອງນັກຮົບທຸກຊະນິດ ພຣະຜູ້
ເປັນເຈົ້າກ່າວດັ່ງນີ້ແຫລະ

Israel Restored to the Land

21 "ແລະເຮົາຈະຕັ້ງພຣະຣັສມີຂອງເຮົາໄວ້ໃນຫມູ່ປະຊາຊາດທັງປວງຈະເຫັນການພິພາກສາລົງໂທດຂອງເຮົາຊຶ່ງເຮົາໄດ້
ກະທຳ ແລະເຫັນມືຂອງເຮົາຊຶ່ງເຮົາວາງໄວ້ເທິງເຂົາທັງຫລາຍ
22 ຕັ້ງແຕ່ວັນນັ້ນເປັນຕົ້ນໄປ ເຊື້ອສາຍອິສຣາເອນຈະຊາບວ່າ ເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາທັງຫລາຍ
23 ແລະປະຊາຊາດທັງຫລາຍກໍລົ້ມລົງດ້ວຍດາບສິ້ນທຸກຄົນ
24 ເຮົາໄດ້ກະທຳຕໍ່ເຂົາຕາມມົນທິນຂອງເຂົາ ແລະຕາມການທໍຣະຍົດຂອງເຂົາທັງຫລາຍ ແລະເຮົາລີ້ຊ່ອນຫນ້າຂອງເຮົາ
ເສັຽຈາກເຂົາທັງຫລາຍ
25 "ເຫດສັນນັ້ນ ພຣະຜູ້ເປັນເຈົ້າກ່າວວ່າ ບັດນີ້ ເຮົາຈະໃຫ້ຢາໂຄບກັບສູ່ສະພາບເດີມ ແລະຈະມີຄວາມກະຣຸນາຕໍ່ເຊື້ອ
ສາຍອິສຣາເອນທັງປວງ ແລະເຮົາຈະຫວງແຫນນາມບໍຣິສຸດຂອງເຮົາ
26 ເມື່ອເຂົາທັງຫລາຍມາອາສັຍຢູ່ຢ່າງປອດພັຍໃນແຜ່ນດິນ ໂດຍບໍ່ມີຜູ້ໃດກະທຳໃຫ້ເຂົາຫວາດກົວ ເຂົາທັງຫລາຍຈະ
ທົນຮັບຄວາມອັບອາຍຂາຍຫນ້າຂອງເຂົາ ທັງການທໍຣະຍົດຊຶ່ງເຂົາທັງຫລາຍໄດ້ເຄີຍປະພຶດຕໍ່ເຮົາ
27 ເມື່ອເຮົາໄດ້ນຳເຂົາກັບມາຈາກແຜ່ນດິນສັດຕຣູຂອງເຂົາ ແລະເມື່ອເຮົາສຳແດງຄວາມບໍຣິສຸດຂອງເຮົາຖ້າມກາງເຂົາ
ທັງຫລາຍຕໍ່ຫນ້າຕໍ່ຕາປະຊາດຊາດທັງຫລາຍ
28 ແລ້ວເຂົາຈະຊາບວ່າເຮົາຄືພຣະຜູ້ເປັນເຈົ້າພຣະເຈົ້າຂອງເຂົາ ເພາະເຮົາໄດ້ສົ່ງໃຫ້ເຂົາຖືກກວາດໄປເປັນຊະເລີຍຢູ່
ຖ້າມກາງບັນດາປະຊາຊາດ ແລ້ວກໍຮວບຮວມເຂົາເຂົ້າມາໃນແຜ່ນດິນຂອງເຂົາທັງຫລາຍ ເຮົາຈະບໍ່ປ່ອຍໃຫ້ຈັກຄົນ
ນຶ່ງໃນພວກເຂົາເຫລືອຢູ່ຖ້າມກາງບັນດາປະຊາຊາດອີກເລີຍ
29 ແລະເຮົາຈະບໍ່ບັງຫນ້າຂອງເຮົາໄວ້ຈາກເຂົາທັງຫລາຍອີກເລີຍ ເມື່ອເຮົາເທວິນຍານຂອງເຮົາເຫນືອເຊື້ອສາຍອິສຣາ
ເອນ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ"

## 40 ນິມິດເຣື່ອງພຣະວິຫານ ທີ່ຜູ້ປະກາດພຣະທັມເຫັນ

The Vision of the New Temple

1 ເມື່ອປີທີຊາວຫ້າທີ່ເຮົາໄດ້ຖືກກວາດໄປເປັນຊະເລີຍນັ້ນ ໃນຕົ້ນປີເມື່ອວັນທີສິບ ໃນປີທີສິບສີ່ຫລັງຈາກທີ່ເຂົາຊະນະ
ກຸງນັ້ນເມືອງຂອງເຮົາ ໃນວັນນັ້ນພຣະຫັດຂອງພຣະຜູ້ເປັນເຈົ້າມາຢູ່ເຫນືອຂ້າພະເຈົ້າ ແລະພຣະອົງຊົງນຳຂ້າພະເຈົ້າ
ໄປທີ່ນັ້ນ
2 ແລະຊົງນຳຂ້າພະເຈົ້າມາໃນນິມິດແຫ່ງພຣະເຈົ້າມາເຖິງແຜ່ນດິນອິສຣາເອນ ແລະພຣະອົງຊົງວາງຂ້າພະເຈົ້າໄວ້ເທິງ
ພູສູງທີ່ສຸດ ຊຶ່ງທີ່ນັ້ນທາງທິດໃຕ້ມີສິ່ງກໍ່ສ້າງເຫມືອນເມືອງນຶ່ງ

3 ເມື່ອພຣະອົງຊົງນໍາຂ້າພະເຈົ້າມາໃນທີ່ນັ້ນ ເບິ່ງແມ, ມີຊາຍຄົນນຶ່ງ ປາກົດການຂອງເຂົາຄ້າຍທອງສໍາຣິດ ມີເຊືອກປ່ານເສັ້ນນຶ່ງ ແລະໄມ້ແທກອັນນຶ່ງຢູ່ໃນມື ແລະທ່ານຢືນຢູ່ທີ່ທໍປະຕູ

4 ຊາຍຄົນນັ້ນກ່າວແກ່ຂ້າພະເຈົ້າວ່າ, "ມະນຸດເອີຍ, ຈົ່ງມອງເບິ່ງດ້ວຍຕາເອງເຖີດ ແລະຈົ່ງຟັງດ້ວຍຫູຂອງເຈົ້າ ແລະຈົ່ງເອົາໃຈໃສ່ກັບສິ່ງທີ່ເຮົາຈະສໍາແດງໃຫ້ແກ່ເຈົ້າ ເພາະວ່າທີ່ນໍາເຈົ້າມາທີ່ນີ້ກໍເພື່ອຈະສໍາແດງໃຫ້ແກ່ເຈົ້າ ສິ່ງທັງສິ້ນທີ່ເຈົ້າເຫັນນັ້ນ ຈົ່ງປະກາດແກ່ເຊື້ອສາຍອິສຣາເອນ"

5 ແລະເບິ່ງແມ, ມີກໍາແພງອ້ອມຢູ່ຮອບບໍຣິເວນນອກຂອງພຣະວິຫານ ແລະໃນມືຂອງຊາຍຜູ້ນັ້ນມີໄມ້ແທກຍາວຫົກສອກ ແຕ່ລະສອກຍາວເທົ່າກັບສອກຄືບ ດັ່ງນັ້ນທ່ານຈຶ່ງແທກຄວາມຫນາຂອງກໍາແພງໄດ້ນຶ່ງໄມ້ແທກ ແລະຄວາມສູງໄດ້ນຶ່ງໄມ້ແທກ

6 ແລ້ວທ່ານເຂົ້າໄປຕາມທໍປະຕູຊຶ່ງຫັນຫນ້າໄປທິດຕາເວັນອອກ ຂຶ້ນໄປຕາມຂັ້ນໄດ ແລະທີ່ເທິງຈອມນັ້ນທ່ານແທກທາງເຂົ້າທໍປະຕູໄດ້ເລິກນຶ່ງໄມ້ແທກ

7 ແລະຫ້ອງຍາມຍາວນຶ່ງໄມ້ແທກ ແລະກວ້າງນຶ່ງໄມ້ແທກ ແລະບ່ອນຫວ່າງລະຫວ່າງຫ້ອງຍາມເຫລົ່ານັ້ນຍາວຫ້າສອກ ແລະທໍປະຕູທີ່ຢູ່ຮິມຫ້ອງໂຖງທີ່ຂໍປະຕູຕອນປາຍຊັ້ນໃນໄດ້ນຶ່ງໄມ້ແທກ

8 ແລ້ວທ່ານກໍແທກຫ້ອງໂຖງຂອງທໍປະຕູໄດ້ແປດສອກ

9 ແລະເສົາຫ້ອງໂຖງນັ້ນສອງສອກ ແລະຫ້ອງໂຖງຂອງທໍປະຕູຢູ່ທີ່ຕອນປາຍຂ້າງໃນ

10 ແຕ່ລະດ້ານຂອງທໍປະຕໍຕາເວັນອອກມີຫ້ອງຍາມຢູ່ສາມຫ້ອງ ຫ້ອງທັງສາມມີຂະຫນາດດຽວກັນ ແລະເສົາທີ່ຢູ່ທັງສອງຂ້າງກໍມີຂະຫນາດດຽວກັນ

11 ແລ້ວທ່ານຈຶ່ງແທກຄວາມກວ້າງຂອງທາງເຂົ້າທໍປະຕູໄດ້ສິບສອກ ແລະຄວາມຍາວຂອງທໍປະຕູສິບສາມສອກ

12 ຫນ້າຫ້ອງຍາມນັ້ນມີເຄື່ອງກັ້ນດ້ານລະນຶ່ງສອກ ແລະຫ້ອງຍາມນັ້ນຍາວດ້ານລະຫົກສອກ

13 ແລ້ວທ່ານກໍແທກທໍປະຕູຈາກຫລັງຄາຂອງຫ້ອງຍາມຫ້ອງນຶ່ງໄປຍັງຫລັງຄາຂອງຫ້ອງຍາມອີກຫ້ອງນຶ່ງ ໄດ້ກວ້າງຊາວຫ້າສອກ ຈາກທາງເຂົ້າຂ້າງນຶ່ງໄປຍັງອີກທາງເຂົ້າຂ້າງນຶ່ງ

14 ແລະທ່ານໄດ້ເຮັດເສົາທັງຫລາຍໄດ້ຫົກສິບສອກ ແລະຮອບທໍປະຕູມີລານໄປເຖິງເສົາ

15 ແທກຈາກຂ້າງຫນ້າທໍປະຕູຊຶ່ທາງເຂົ້າໄປຍັງປາຍຫ້ອງໂຖງຊັ້ນໃນຂອງທໍປະຕູໄດ້ຫ້າສິບສອກ

16 ຕາມທໍປະຕູນັ້ນມີປ່ອງຢ້ຽມຮອບ ຄ່ອຍໆແຄບເຂົ້າໄປຂ້າງໃນທັງໃນເສົາແລະໃນຫ້ອງຍາມ ແລະຫ້ອງໂຖງກໍມີປ່ອງຢ້ຽມຢູ່ຮອບຂ້າງໃນເຫມືອນກັນ ທີ່ເສົາມີຕົ້ນພລັມ

17 ແລ້ວທ່ານນໍາຂ້າພະເຈົ້າອອກມາທີ່ລານຊັ້ນນອກ ແລະເບິ່ງແມ, ມີຫ້ອງຫລາຍຫ້ອງແລະມີພື້ນຫີນເຮັດໄວ້ຮອບລານມີຫ້ອງສາມສິບຫ້ອງຫັນຫນ້ເຂົ້າຫາພື້ນຫີນ

18 ແລະພື້ນຫີນນັ້ນມີຢູ່ຕາມດ້ານຂ້າງທາງເຂົ້າທໍປະຕູ ເທົ່າກັບຄວາມຍາວຂອງທໍປະຕູ ນີ້ເປັນພື້ນຫີນທາງຕໍ່າ

19 ແລ້ວທ່ານກໍແທກລະຍະຈາກຫນ້າທໍປະຕູຂ້າງລຸ່ມໄປຍັງຫນ້າລານຂ້າງໃນດ້ານນອກໄດ້ນຶ່ງຮ້ອຍສອກ ຢູ່ທາງຕາເວັນອອກແລະທາງເຫນືອ

20 ສ່ວນທໍປະຕູແຫ່ງລານນອກຫັນຫນ້າໄປທາງເຫນືອ ທ່ານກໍແທກຄວາມຍາວ ແລະຄວາມກວ້າງຂອງມັນ

21 ຫ້ອງຍາມດ້ານລະສາມຫ້ອງ ກັບເສົາແລະຫ້ອງໂຖງມີຂນາດດຽວກັບທໍປະຕູທໍາອິດ ຍາວຫ້າສິບສອກກວ້າງຊາວຫ້າສອກ

22 ປ່ອງຢ້ຽມ ມຸກ ຕົ້ນອິນພລັມຂອງທໍປະຕູນີ້ມີຂນາດດຽວກັບຂອງທໍປະຕູ ຊຶ່ງຫັນຫນ້າໄປທາງທິດຕາເວັນອອກ ແລະມີຂັ້ນໄດເຈັດຂັ້ນນໍາຂຶ້ນໄປເຖິງ ແລະມຸກນັ້ນຢູ່ຂ້າງໃນ

23 ກົງຂ້າມກັບປະຕູຊຶ່ງຢູ່ຂ້າງເຫນືອເຊັ່ນດຽວກັບປະຕູທີ່ຢູ່ຂ້າງຕາເວັນອອກມີປະຕູເປີດໄປສູ່ລານຊັ້ນໃນ ແລະທ່ານກໍແທກຈາກປະຕູນຶ່ງໄປຍັງອີກປະຕູນຶ່ງໄດ້ນຶ່ງຮ້ອຍສອກ

24 ແລະທ່ານໄດ້ນຳຂ້າພະເຈົ້າໄປຍັງທິດໃຕ້ ແລະເບິ່ງແມ, ມີທໍປະຕູທາງທິດໃຕ້ນຶ່ງທໍປະຕູ ທ່ານກໍແທກເສົາແລະແທກມຸກ ກໍມີຂນາດດຽວກັບທີ່ອື່ນ
25 ມີປ່ອງຢ້ຽມທີ່ທໍປະຕູປລະມີມຸກໂດຍຮອບເຫມືອນປ່ອງຢ້ຽມບ່ອນອື່ນ ຍາວຫ້າສິບສອກແລະກວ້າງຊາວຫ້າສອກ
26 ມີຂັ້ນໄດເຈັດຂັ້ນນຳຂຶ້ນໄປເຖິງ ແລະມຸກນັ້ນຢູ່ຂ້າງໃນມີຕົ້ນອັນພລັມຢູ່ທີ່ເສົາດ້ານລະຕົ້ນ
27 ແລະມີປະຕູນຶ່ງຢູ່ທທາງທິດໃຕ້ຂອງລານຊັ້ນໃນ ແລະທ່ານກໍແທກຈາກປະຕູນຶ່ງໄປຍັງອີກປະຕູນຶ່ງຕົງໄປທາງທິດໃຕ້ໄດ້ນຶ່ງຮອຍສອກ
28 ແລ້ວທ່ານນຳຂ້າພະເຈົ້າມາຍັງລານຊັ້ນໃນໂດຍປະຕູທິດໃຕ້ ແລະທ່ານກໍແທກປະຕູທິດໃຕ້ ມີຂະໜາດຢ່າງດຽວກັບປະຕູອື່ນໆ
29 ຫ້ອງຍາມ ເສົາ ແລະມຸກຂອງທໍປະຕູນີ້ມີຂນາດດຽວກັບບ່ອນອື່ນ ມີປ່ອງຢ້ຽມທີ່ທໍປະຕູແລະທີ່ມຸກໂດຍຮອບ ຍາວຫ້າສິບສອກ ແລະກວ້າງຊາວຫ້າສອກ
30 ມີຫ້ອງໂຖງຢູ່ຮອບຍາວຊາວຫ້າສອກ ກວ້າງຫ້າສິບສອກ
31 ຫ້ອງໂຖງນັ້ນຫັນໜ້າສູ່ລານຊັ້ນນອກ ມີຕົ້ນພລັມຢູ່ທີ່ເສົາ ແລະຂັ້ນໄດນີ້ມີແປດຂັ້ນ
32 ແລ້ວທ່ານກໍພາຂ້າພະເຈົ້າມາທີ່ລານຊັ້ນໃນດ້ານຕາເວັນອອກ ແລະທ່ານກໍແທກທໍປະຕູຂນາດດຽວກັບທໍປະຕູອື່ນ
33 ຫ້ອງຍາມ ເສົາ ແລະຫ້ອງໂຖງຂອງທໍປະຕູນີ້ມີຂນາດດຽວກັນກັບທີ່ອື່ນ ມີປ່ອງຢ້ຽມທີ່ທໍປະຕູແລະທີ່ຫ້ອງໂຖງໂດຍຮອບ ຍາວຫ້າສິບສອກ ແລະກວ້າງຊາວຫ້າສອກ
34 ຫ້ອງໂຖງຂອງດ້ານນີ້ຫັນໜ້າສູ່ລານຊັ້ນນອກ ແລະມີຕົ້ນພລັມຢູ່ທີ່ເສົາດ້ານລະຕົ້ນ ແລະຂັ້ນໄດນີ້ມີແປດຂັ້ນ
35 ແລ້ວທ່ານກໍນຳຂ້າພະເຈົ້າມາຍັງປະຕູເຫນືອ ແລ້ວທ່ານກໍແທກທໍປະຕູນັ້ນມີຂນາດດຽວກັບທໍປະຕູອື່ນ
36 ຫ້ອງຍາມເສົາ ແລະຫ້ອງໂຖງຂອງທໍປະຕູນີ້ມີຂນາດດຽວກັນກັບທີ່ອື່ນ ມີປ່ອງຢ້ຽມໂດຍຮອບ ຍາວຫ້າສິບສອກແລະກວ້າງຊາວຫ້າສອກ
37 ຫ້ອງໂຖງຂອງດ້ານນີ້ຫັນໜ້າສູ່ລານຊັ້ນນອກ ແລະມີຕົ້ນພລັມຢູ່ທີ່ເສົາດ້ານລະຕົ້ນ ແລະຂັ້ນໄດນີ້ມີແແປດຂັ້ນ
38 ມີຫ້ອງໆນຶ່ງມີທາງເຂົ້າຢູ່ທີ່ເສົາຂອງທໍປະຕູ ເປັນບ່ອນລ້າງເຄື່ອງເຜົາບູຊາ
39 ແລະທີ່ຫ້ອງໂຖງຂອງທໍປະຕູມີໂຕະດ້ານລະສອງໂຕະ ເທິງນີ້ສຳລັບຂ້າເຄື່ອງເຜົາບູຊາ ເຄື່ອງບູຊາໄຖ່ບາບ ແລະເຄື່ອງບູຊາໄຖ່ຄວາມຜິດ
40 ແລະທາງດ້ານນອກ ທາງທີ່ເຂົາຂຶ້ນໄປເຖິງທາງເຂົ້າທໍປະຕູເຫນືອມີໂຕະສອງໂຕະ ອີກດ້ານນຶ່ງຂອງຫ້ອງໂຖງຂອງທໍປະຕູມີໂຕະສອງໂຕະ
41 ມີໂຕະຢູ່ຂ້າງນີ້ສີ່ໂຕະ ແລະມີໂຕະຢູ່ຂ້າງນັ້ນຂ້າງໆທໍປະຕູສີ່ໂຕະເປັນແປດໂຕະດ້ວຍກັນ ຊຶ່ງເຂົາໃຊ້ເປັນບ່ອນຂ້າເຄື່ອງສັດບູຊາ
42 ມີໂຕະສີ່ໂຕະທຳດ້ວຍຫີນສະກັດສຳລັບເຄື່ອງເຜົາບູຊາຍາວນຶ່ງສອກຄືບແລະກວ້າງນຶ່ງສອກຄືບ ສູງນຶ່ງສອກ ສຳລັບວາງເຄື່ອງມືຊຶ່ງເຂົາໃຊ້ຂ້າເຄື່ອງເຜົາບູຊາແລະເຄື່ອງສັຕບູຊາ
43 ມີຊັ້ນຍາວຄືບນຶ່ງຕິດຢູ່ຂ້າງໃນໂດຍຮອບ ເທິງໂຕະນີ້ເຂົາວາງຊີ້ນຂອງເຄື່ອງບູຊາ
44 ແລ້ວທ່ານກໍນຳຂ້າພະເຈົ້າຈາກຂ້າງນອກເຂົ້າໄປໃນລານຊັ້ນໃນ ແລະເບິ່ງແມ, ມີຫ້ອງສອງຫ້ອງໃນລານຊັ້ນໃນ ຫ້ອງນຶ່ງຢູ່ຂ້າງທໍປະຕູເຫນືອຫັນໜ້າໄປທິດໃຕ້ ອີກຫ້ອງນຶ່ງຢູ່ຂ້າງທໍປະຕູໃຕ້ ຫັນໜ້າໄປທິດເຫນືອ
45 ແລະທ່ານບອກຂ້າພະເຈົ້າວ່າ ຫ້ອງນີ້ຊຶ່ງຫັນໜ້າໄປທາງທິດໃຕ້ ສຳລັບປະໂຣຫິດຜູ້ດູແລພຣະວິຫານ
46 ແລະຫ້ອງຊຶ່ງຫັນໜ້າໄປທາງເຫນືອ ສຳລັບປະໂຣຫິດຜູ້ດູແລແທ່ນບູຊາ ປະໂຣຫິດເຫລົ່ານີ້ເປັນບຸດຊາຍຂອງຊາໂດກໃນບັນດາບຸດຂອງເລວີກໍມີພວກເຂົາເທົ່ານັ້ນທີ່ເຂົ້າມາໃກ້ພຣະຜູ້ເປັນເຈົ້າເພື່ອຈະປົວລະບັດພຣະອົງ
47 ແລະທ່ານກໍແທກລານ ໄດ້ຍາວນຶ່ງຮ້ອຍສອກ ແລະກວ້າງນຶ່ງຮ້ອຍສອກເປັນສີ່ຫລ່ຽມມົນທົນ ແລະແທ່ນບູຊາຢູ່ຂ້າງໜ້າພຣະວິຫານ

The Temple

(1ພສດ 7:14-22)

48 ແລ້ວທ່ານນຳຂ້າພະເຈົ້າມາທີ່ຫ້ອງໂຖງຂອງພຣະວິຫານ ແລະແທກເສົາຂອງຫ້ອງໂຖງໄດ້ຫ້າສອກທັງສອງດ້ານ ແລະ
ທໍປະຕູກວ້າງສິບສີ່ສອກ ກຳແພງຂ້າງທໍປະຕູນັ້ນມີດ້ານແລະສາມສອກ
49 ຫ້ອງໂຖງນັ້ນຍາວຊາວສອກ ແລະກວ້າງສິບສອງສອກ ຂັ້ນໄດສິບຂັ້ນນຳໄປເຖິງທີ່ນີ້ ແລະມີເສົາຫານຢູ່ຂ້າງເສົາທັງ
ສອງຂ້າງ

## 41

Chapter 41

1 ແລ້ວທ່ານນຳຂ້າພະເຈົ້າມາເຖິງຫ້ອງໂຖງ ແລະໄດ້ແທກເສົາ ກວ້າງດ້ານລະຫົກສອກ
2 ແລະສ່ວນກວ້າງຂອງທາງເຂົ້ານັ້ນສິບສອກ ແລະກຳແພງຂ້າງທາງເຂົ້າດ້ານລະຫ້າສອກ ແລະທ່ານກໍວັດຄວາມຍາວ
ຂອງຫ້ອງໂຖງໄດ້ສີ່ສິບສອກ ກວ້າງຊາວສອກ
3 ແລ້ວທ່ານກໍເຂົ້າໄປໃນຫ້ອງຊັ້ນໃນ ແລະແທກເສົາຂອງທາງເຂົ້າໄດ້ສອງສອກ ທາງເຂົ້ານັ້ນກວ້າງຫົກສອກ ແລະກຳ
ແພງຂ້າງທາງເຂົ້ານັ້ນເຈັດສອກ
4 ແລະທ່ານກໍແທກຄວາມຍາວຂອງຫ້ອງໄດ້ຊາວສອກ ກວ້າງຊາວສອກ ພົ້ນຫ້ອງໂຖງອອກໄປ ແລະທ່ານບອກຂ້າພະ
ເຈົ້າວ່າ ນີ້ເປັນບ່ອນບໍຣິສຸດທີ່ສຸດ
5 ແລ້ວທ່ານກໍແທກກຳແພງພຣະວິຫານໄດ້ຫນາຫົກສອກ ຢູ່ຮອບພຣະວິຫານທຸກດ້ານ
6 ຫ້ອງທັງຫລາຍທີ່ຂ້າງວິຫານໄດ້ຢູ່ຊ້ອນກັນມີສາມຊັ້ນ ມີຊັ້ນລະສາມສິບຫ້ອງ ຫ້ອງທັງຫລາຍນັ້ນໄດ້ເຂົ້າໄປໃນກຳ
ແພງວິຫານສຳລັບຫ້ອງທີ່ຂ້າງວິຫານທົ່ວຮອບ ເພື່ອຫ້ອງທັງຫລາຍນັ້ນຈະຕັ້ງຢູ່ທີ່ກຳແພງແຕ່ວ່າບໍ່ແມ່ນພາຍໃນກຳ
ແພງວິຫານ
7 ຫ້ອງທັງຫລາຍນັ້ນຍິ່ງສູງຂຶ້ນກໍຍິ່ງກວ້າງອອກໄປ ຕາມສ່ວນຂຍາຍຂອງທີ່ຕັ້ງຈາກຫ້ອງນຶ່ງຊ້ອນຢູ່ເທິງອີກຫ້ອງນຶ່ງໂດຍ
ຮອບ ທີ່ຂ້າງພຣະວິຫານມີຂັ້ນໄດນຳຂຶ້ນຂ້າງເທິງ ດັ່ງນີ້ແຫລະຜູ້ໃດທີ່ຂຶ້ນໄປຈາກຫ້ອງຕ່ຳທີ່ສຸດເຖິງຫ້ອງເທິງກໍຕ້ອງ
ລອດຜ່ານຫ້ອງກາງ
8 ຂ້າພະເຈົ້າຍັງເຫັນອີກວ່າ ພຣະວິຫານນັ້ນມີຍົກພື້ນຢູ່ໂດຍຮອບ ຖານຂອງຫ້ອງແທກໄດ້ນຶ່ງໄມ້ວັດເຕັມ ຍາວຫົກສອກ
9 ກຳແພງຫ້ອງທັງຫລາຍທີ່ຂ້າງວິຫານດ້ານນອກຂອງຫ້ອງຫນາຫ້າສອກແລະສ່ວນຂອງຍົກພື້ນທີ່ຫວ້າງນັ້ນຫ້າສອກລະ
ຫວ່າງຍົກພື້ນຂອງພຣະວິຫານ
10 ກັບຫ້ອງທັງຫລາຍຮອບວິຫານກໍກວ້າງຊາວສອກທົ່ວຮອບ
11 ແລະທາງປະຕູຂອງຫ້ອງທັງຫລາຍນັ້ນເປີດເຂົ້າໄປທາງເຫນືອ ແລະອີກປະຕູນຶ່ງຫັນໄປທາງໃຕ້ ຄວາມກວ້າງຂອງ
ສ່ວນທີ່ຫວ່າງນັ້ນຄືຫ້າສອກໂດຍຮອບ
12 ອາຄານທີ່ຫັນຫນ້າມາຍັງສນາມຂອງພຣະວິຫານທາງດ້ານຕາເວັນຕົກນັ້ນກວ້າງເຈັດສິບສອກ ແລະກຳແພງຂອງອາ
ຄານຫນ້າຫ້າສອກແລະຍາວເກົ້າສິບສອກ
13 ແລ້ວທ່ານກໍແທກພຣະວິຫານໄດ້ຍາວນຶ່ງຮ້ອຍສອກ ສນາມແລະອາຄານພ້ອມກັບກຳແພງນຶ່ງຮ້ອຍສອກ
14 ຄວາມກວ້າງດ້ານຕາເວັນອອກຂອງດ້ານຫນ້າຂອງພຣະວິຫານທັງຂອງສນາມ ຍາວນຶ່ງຮ້ອຍສອກ
15 ແລ້ວທ່ານກໍແທກຄວາມຍາວຂອງອາຄານຊຶ່ງຫັນຫນ້າໄປສູ່ສນາມອັນຢູ່ທາງທິດຕາເວັນຕົກ ພ້ອມທັງກຳແພງຂ້າງໆ
ຍາວນຶ່ງຮ້ອຍສອກ ຫ້ອງໂຖງຂອງພຣະວິຫານນັ້ນ ແລະຫ້ອງຊັ້ນໃນແລະຫ້ອງສັກສິດທີ່ສຸດ
16 ໄດ້ປູດ້ວຍໄມ້ແລະທັງສາມນັ້ນມີປ່ອງຢ້ຽມຮອບຊຶ່ງມີຂອບປະຕູຝັງເລິກ ກົງຂ້າມປະຕູທີ່ປູດ້ວຍໄມ້ໂດຍຮອບ ຕັ້ງແຕ່
ພື້ນເຖິງປ່ອງຢ້ຽມ (ປ່ອງຢ້ຽມນີ້ມີຜ້າກັ້ງ)

17 ແລະຮອດປະຕູແລະເຖິງວິຫານພາຍໃນແລະທັງນອກ ແລະເທິງກຳແພງທັງສິ້ນທີ່ຫ້ອງຊັ້ນໃນແລະຫ້ອງໂຖງກໍມີຮູບສ
ລັກ
18 ເປັນຮູບເຊຣູບິມ ຮູບຕົ້ນຕານ ແລະຮູບຕົ້ນຕານລະຫວ່າງເຊຣູບິມທຸກຮູບ ເຊຣູບິມທຸກຕົນມີສອງຫນ້າ
19 ຫນ້າຂອງຜູ້ຊາຍໄດ້ປິ່ນໄປທາງຕົ້ນຕານທີ່ຢູ່ດ້ານນຶ່ງແລະຫນ້າຂອງສິງຫນຸ່ມໄດ້ປິ່ນໄປທາງຕົ້ນຕານອີກດ້ານນຶ່ງ ມີຮູບ
ຢ່າງນີ້ແກະໄວ້ຮອບພຣະວິຫານ
20 ຈາກພື້ນເຖິງທີ່ເຫນືອປະຕູ ມີຮູບເຊຣູບິມແລະຮູບຕົ້ນຕານສລັກຢູ່ທີ່ຝາ
21 ຝ່າຍເສົາປະຕູຂອງຫ້ອງໂຖງນັ້ນສີ່ຫລ່ຽມ ຕໍ່ຫນ້າທາງເຂົ້າບ່ອນສັກສິດນັ້ນມີສິ່ງນຶ່ງເຫມືອນກັບ
22 ແທ່ນບູຊາທຳດ້ວຍໄມ້ ສູງສາມສອກຍາວສອງສອກ ແລະກວ້າງສອງສອກ ທີ່ມຸມ ທີ່ຖານ ແລະທີ່ຝາທຳດ້ວຍໄມ້
ທ່ານບອກຂ້າພະເຈົ້າວ່າ "ນີ້ເປັນໂຕະຊຶ່ງຢູ່ຕໍ່ພຣະພັກຂອງພຣະຜູ້ເປັນເຈົ້າ"
23 ຫ້ອງໂຖງຄືບ່ອນສັກສິດ ມີປະຕູຄູ່ແຫ່ງລະຄູ່
24 ປະຕູນັ້ນມີສອງບານ ເປັນບານປະຕູຄູ່ທີ່ເປີດໄປມາໄດ້ທາງກາງ
25 ແລະເທິງປະຕູຂອງຫ້ອງໂຖງ ມີເຊຣູບິມແລະຕົ້ນຕານແກະໄວ້ ເຊັ່ນດຽວກັບທີ່ແກະໄວ້ເທິງຝາ ທາງຍ່າງໄປສູ່ຫ້ອງ
ທາງເຂົ້ານັ້ນແມ່ນໄດ້ປູດ້ວຍໄມ້ທັງນັ້ນ
26 ມີປ່ອງຢ້ຽມທີ່ມີຂອບຝັງເລິກ ແລະມີຕົ້ນຕານຢູ່ທັງສອງຂ້າງທີ່ເທິງຝາດ້ານຂ້າງມຸກ ແລະທັງຫ້ອງລະບຽງພຣະວິຫານ

## 42

The Holy Chambers and the Outer Wall

1 ແລ້ວທ່ານພາຂ້າພະເຈົ້າມາເຖິງລານຊັ້ນໃນ ຊື່ທິດເຫນືອ ແລະທ່ານນຳຂ້າພະເຈົ້າມາເຖິງຫ້ອງ ຊຶ່ງຢູ່ກົງຂ້າມກັບສະ
ຫນາມແລະກົງຂ້າມກັບຕຶກທາງດ້ານທິດເຫນືອ
2 ຄວາມຍາວຂອງຕຶກທີ່ຢູ່ທາງດ້ານເຫນືອນັ້ນເປັນນຶ່ງຮ້ອຍສອກ ແລະກວ້າງຫ້າສິບສອກ
3 ຕິດຕໍ່ກັບສ່ວນຊາວສອກ ຊຶ່ງເປັນສ່ວນຂອງລານຊັ້ນໃນ ທັນຫນ້າເຂົ້າສູ່ພື້ນຫີນຊຶ່ງເປັນສ່ວນຂອງລານຂ້າງນອກເປັນ
ລະບຽງສາມຊັ້ນ
4 ແລະຂ້າງຫນ້າຫ້ອງມີທາງເຂົ້າຂ້າງໃນກວ້າງສິບສອກ ຍາວນຶ່ງຮ້ອຍສອກ ບັນດາປະຕູຫ້ອງເຫລົ່ານີ້ຢູ່ທາງດ້ານເຫນືອ
5 ຫ້ອງຂ້າງເທິງແຄບກວ່າ ເພາະລະບຽງກິນເນື້ອທີ່ໄປຫລາຍກວ່າລະບຽງຫ້ອງຊັ້ນລຸ່ມ ແລະຊັ້ນກາງໃນຕຶກນັ້ນ
6 ເພາະວ່າເປັນຫ້ອງສາມຊັ້ນ ແລະບໍ່ມີເສົາຫ້ອງເຫມືອນເສົາທີ່ລານຂ້າງນອກ ເຫດສັນນັ້ນຫ້ອງຊັ້ນເທິງຈຶ່ງຄັບ
ແຄບກວ່າຫ້ອງທັງຫລາຍຊັ້ນລຸ່ມແລະຊັ້ນກາງ
7 ແລະມີຝາຂ້າງນອກລຽບກັບຫ້ອງໄປຍັງລານຂ້າງນອກກົງຂ້າມກັບຫ້ອງ ຍາວຫ້າສິບສອກ
8 ເພາະວ່າຫ້ອງທີ່ລານຂ້າງນອກຍາວຫ້າສິບສອກ ສ່ວນຫ້ອງເຫລົ່ານັ້ນທີ່ກົງຂ້າມກັບພຣະວິຫານຍາວນຶ່ງຮ້ອຍສອກ
9 ໃຕ້ຫ້ອງເຫລົ່ານັ້ນມີທາງເຂົ້າຢູ່ດ້ານຕາເວັນອອກ ຖ້າເຂົ້າໄປຈາກລານຂ້າງນອກ
10 ທີ່ຝາດ້ານນອກເລີ້ມຕົ້ນ ດ້ານໃຕ້ກໍເຊັ່ນດຽວກັນ ກົງຂ້າມກັບສນາມແລະກົງຂ້າມກັບຕຶກມີຫ້ອງຫລາຍຫ້ອງ
11 (ມີທາງເດີນຢູ່ຫນ້າຫ້ອງ) ເຫມືອນກັບຫ້ອງທາງທິດເຫນືອ ຍາວແລະກວ້າງຂະຫນາດດຽວກັນ ມີທາງອອກ ແຜນຜັງ
ແລະປະຕູຢ່າງດຽວກັນ
12 ຂ້າງລຸ່ມຫ້ອງທິດໃຕ້ມີທາງເຂົ້າຢູ່ດ້ານຕາເວັນອອກບ່ອນທີ່ເຂົ້າມາຕາມທາງເດີນ ກົງຂ້າມມີຝາແບ່ງ
13 ແລ້ວທ່ານກ່າວແກ່ຂ້າພະເຈົ້າວ່າ "ຫ້ອງດ້ານເຫນືອແລະຫ້ອງດ້ານໃຕ້ກົງຂ້າມສນາມເປັນຫ້ອງບໍຣິສຸດທີ່ປະໂຣຫິດຜູ້
ເຂົ້າໃກ້ພຣະຜູ້ເປັນເຈົ້າຈະຮັບປະທານຂອງຖວາຍອັນບໍຣິສຸດທີ່ສຸດ ເຂົາຈະວາງຂອງຖວາຍອັນບໍຣິສຸດທີ່ສຸດນັ້ນໄວ້ທີ່
ນັ້ນ ຄືທັນຍາບູຊາ ເຄື່ອງບູຊາໄຖ່ບາບ ເຄື່ອງບູຊາໄຖ່ຄວາມຜິດ ເພາະວ່າທີ່ນັ້ນບໍຣິສຸດ

14 ເມື່ອປະໂຣຫິດເຂົ້າໄປໃນທີ່ບໍຣິສຸດ ເຂົາຈະບໍ່ອອກໄປຈາກຫ້ອງນີ້ເຂົ້າສູ່ລານຂ້າງນອກ ນອກຈາກຈະແກ້ເຄື່ອງແຕ່ງ
ກາຍທີ່ເຂົາໃສ່ປະຕິບັດໜ້າທີ່ວາງໄວ້ທີ່ນັ້ນ ເພາະສິ່ງເຫລົ່ານີ້ບໍຣິສຸດ ເຂົາຈະຕ້ອງນຸ່ງເຄື່ອງແຕ່ງກາຍອື່ນກ່ອນທີ່ເຂົາ
ຈະເຂົ້າໄປສູ່ສ່ວນທີ່ມີໄວ້ສຳລັບປະຊາຊົນ"
15 ເມື່ອທ່ານໄດ້ແທກຂ້າງໃນບໍຣິເວນພຣະວິຫານເສັດແລ້ວ ທ່ານກໍນຳຂ້າພະເຈົ້າອອກມາທາງປະຕູ ຊຶ່ງປິ່ນໜ້າໄປທາງ
ທິດຕາເວັນອອກ ແລະແທກບໍຣິເວນພຣະວິຫານໂດຍຮອບ
16 ທ່ານແທກດ້ານຕາເວັນອອກດ້ວຍໄມ້ແທກໄດ້ຫ້າຮ້ອຍຕາມໄມ້ແທກ
17 ແລ້ວທ່ານກໍຫັນມາແທກທາງດ້ານເໜືອໄດ້ຫ້າຮ້ອຍສອກຕາມໄມ້ແທກ
18 ແລ້ວທ່ານກໍຫັນມາແທກດ້ານໃຕ້ໄດ້ຫ້າຮ້ອຍສອກຕາມໄມ້ແທກ
19 ແລ້ວທ່ານໄດ້ຫັນມາດ້ານຕາເວັນຕົກແລ້ວແທກໄດ້ຫ້າຮ້ອຍສອກຕາມໄມ້ແທກ
20 ທ່ານແທກທັງສີ່ດ້ານມີກຳແພງລ້ອມຮອບຍາວຫ້າຮ້ອຍສອກ ກວ້າງຫ້າຮ້ອຍສອກ ເປັນທີ່ແບ່ງລະຫວ່າງທີ່ບໍຣິສຸດແລະ
ທີ່ສາທາຣະນະ

## 43 ພຣະສະງ່າຣາສີຂອງພຣະເຈົ້າເຕັມພຣະວິຫານ

The Divine Glory Returns to the Temple

1 ພາຍຫລັງທ່ານນຳຂ້າພະເຈົ້າມາຍັງປະຕູ ຄືປະຕູທີ່ຫັນໜ້າໄປທິດຕາເວັນອອກ
2 ແລະເບິ່ງແມ, ພຣະສະງ່າຣາສີຂອງພຣະເຈົ້າແຫ່ງອິສຣາເອນມາຈາກທິດຕາເວັນອອກ ແລະພຣະສຸຣະສຽງຂອງພຣະ
ອົງກໍເໝືອນສຽງນ້ຳມາກຫລາຍ ແລະພິພົບກໍຮຸ່ງໂຣດດ້ວຍພຣະສະງ່າຣາສີຂອງພຣະອົງ
3 ແລະນິມິດທີ່ຂ້າພະເຈົ້າເຫັນນັ້ນກໍເໝືອນກັບນິມິດຊຶ່ງຂ້າພະເຈົ້າເຫັນເມື່ອພຣະອົງສະເດັດມາທຳລາຍເມືອງນັ້ນ
ແລະເໝືອນກັບນິມິດຊຶ່ງຂ້າພະເຈົ້າໄດ້ເຫັນທີ່ຣິມແມ່ນ້ຳເຄບາ ແລະຂ້າພະເຈົ້າກໍໝູບໜ້າຂອງຂ້າພະເຈົ້າລົງເຖິງ
ດິນ
4 ເມື່ອພຣະສະງ່າຣາສີຂອງພຣະເຈົ້າເຂົ້າໄປໃນພຣະວິຫານທາງປະຕູທີ່ຫັນໄປທາງທິດຕາເວັນອອກ
5 ພຣະວິນຍານກໍຍົກຂ້າພະເຈົ້າຂຶ້ນ ແລະນຳຂ້າພະເຈົ້າມາທີ່ລານຊັ້ນໃນ ແລະເບິ່ງແມ, ພຣະສະງ່າຣາສີຂອງພຣະຜູ້
ເປັນເຈົ້າກໍເຕັມ ພຣະວິຫານ
6 ຂນະທີ່ຊາຍຄົນນັ້ນຍັງຢືນຢູ່ທີ່ຂ້າງຂ້າພະເຈົ້າ ຂ້າພະເຈົ້າໄດ້ຍິນພຣະອົງກ່າວກັບຂ້າພະເຈົ້າດັງອອກມາຈາກພຣະວິ
ຫານ
7 ແລະພຣະອົງກ່າວກັບຂ້າພະເຈົ້າວ່າ, "ບຸດແຫ່ງມະນຸດເອີຍ, ບັນລັງຂອງເຮົາແລະສະຖານທີ່ວາງຕີນຂອງເຮົາຢູ່ທີ່ນີ້
ເປັນບ່ອນທີ່ເຮົາຈະຢູ່ຖ້າມກາງຊົນຊາດອິສຣາເອນເປັນນິດ ແລະເຊື້ອສາຍອິສຣາເອນຈະບໍ່ກະທຳໃຫ້ນາມບໍຣິສຸດ
ຂອງເຮົາເປັນມົນທິນ ໂດຍຕົວຂອງເຂົາທັງຫລາຍເອງຫລືກະສັດຂອງເຂົາທັງຫລາຍ ດ້ວຍການຫລິ້ນຊູ້ຂອງເຂົາທັງ
ຫລາຍແລະດ້ວຍຝັງສົບຂອງພຣະເຈົ້າແຜ່ນດິນຂອງເຂົາທັງຫລາຍເມື່ອສິ້ນພຣະຊົນ
8 ໂດຍການວາງຂອບປະຕູຂອງເຂົາທັງຫລາຍໄວ້ຂ້າງຂອບປະຕູຂອງເຮົາ ແລະໂດຍຕັ້ງເສົາປະຕູຂອງເຂົາທັງຫລາຍ
ໄວ້ຂ້າງເສົາປະຕູຂອງເຮົາ ມີພຽງຝາກັ້ນໄວ້ລະຫວ່າງເຮົາກັບເຂົາທັງຫລາຍເທົ່ານັ້ນ ເຂົາໄດ້ກະທຳນາມບໍຣິສຸດຂອງ
ເຮົາໃຫ້ເປັນມົນທິນໂດຍສິ່ງທີ່ໜ້າກຽດຊັງຂອງເຂົາຊຶ່ງເຂົາທັງຫລາຍໄດ້ກະທຳ ດັ່ງນັ້ນເຮົາຈຶ່ງເຜົາຜານເຂົາເສັຽດ
້ວຍຄວາມກິ້ວຂອງເຮົາ
9 ບັດນີ້ໃຫ້ເຂົາຖິ້ມການຫລິ້ນຊູ້ທັງຫລາຍຂອງເຂົາແລະສົບຂອງກະສັດທັງຫລາຍຂອງເຂົາໃຫ້ຫ່າງໄກຈາກເຮົາ ແລະ
ເຮົາຈະຢູ່ຖ້າມກາງເຂົາທັງຫລາຍເປັນນິດ

**ລະບຽບຂອງພຣະວິຫານແລະແທ່ນບູຊາ**

10 “ເຈົ້າ ບຸດແຫ່ງມະນຸດເອີຍ, ເຈົ້າຈົ່ງບັນລະຍາຍແກ່ເຊື້ອສາຍອິສຣາເອນໃຫ້ຊາບເຖິງພຣະວິຫານແລະສັນຖານແລະ
ແຜນຜັງຂອງ ພຣະວິຫານນັ້ນ ເພື່ອວ່າເຂົາຈະໄດ້ລະອາຍໃນເຣື່ອງຄວາມບາບຊົ່ວຂອງເຂົາ
11 ແລະຖ້າເຂົາລະອາຍໃນສິ່ງທັງຫລາຍທີ່ເຂົາກະທຳມາແລ້ວ ຈົ່ງສຳແດງາພາບ ແຜນຜັງ ທາງອອກທາງເຂົ້າ ແລະລັກ
ສະນະທັງ ສິ້ນຂອງພຣະວິຫານນັ້ ແລະຈົ່ງໃຫ້ເຂົາຊາບເຖິງກົດເກນແລະກົດທັງສິ້ນຂອງພຣະວິຫານ ຈົ່ງຂຽນລົງໄວ້ຕໍ່
ຫນ້າຕໍ່ຕາຂອງເຂົາ ເພື່ອເຂົາຈະໄດ້ຮັກສາກົດແລະກົດເກນທັງສິ້ນຂອງພຣະວິຫານ ແລະປະພຶດຕາມ
12 ຕໍ່ໄປນີ້ເປັນກົດຂອງພຣະວິຫານ ຄືບໍຣິເວນໂດຍຮອບທີ່ຢູ່ເທິງຍອດພູຈະເປັນທີ່ບໍຣິສຸດທີ່ສຸດ ເບິ່ງແມ, ນີ້ເປັນກົດຂອງ
ພຣະວິຫານ

**ແທ່ນບູຊາ**

The Altar

13 ຕໍ່ໄປນີ້ເປັນຂນາດຂອງແທ່ນບູຊາແທກເປັນສອກ (ສອກນຶ່ງຄືຄວາມຍາວນຶ່ງສອກກັບນຶ່ງຄືບ) ຕອນຖານສູງນຶ່ງສອກ
ແລະກວ້າງນຶ່ງສອກ ແລະມີຂອບນອກສູງຄືບນຶ່ງ ແລະຄວາມສູງຂອງແທ່ນບູຊາເປັນດັ່ງນີ້
14 ຈາກຕອນຖານທີ່ຢູ່ເທິງດິນມາເຖິງຂ້າງລຸ່ມສູງສອງສອກ ກວ້າງນຶ່ງສອກ ຈາກຂັ້ນນ້ອຍໄປເຖິງຂັ້ນໃຫຍ່ສູງສີ່ສອກ
ກວ້າງນຶ່ງສອກ
15 ແລະເຕົາຂອງແທ່ນນັ້ນສີ່ສອກ ແລະຈາກເຕົາແທ່ນມີຍອດຍື່ນຂຶ້ນໄປສູງສອກນຶ່ງສີ່ຍອດ
16 ເຕົາແທ່ນນັ້ນເປັນສີ່ຫລ່ຽມມົນທົນຍາວສິບສອງສອກ ກວ້າງສິບສອງສອກ
17 ຂັ້ນຂ້າງເຕົາກໍສີ່ຫລ່ຽມມົນທົນເຫມືອນກັນ ຍາວສິບສີ່ສອກ ກວ້າງສິບສີ່ສອກ ຊຶ່ງແຕ່ລະຂ້າງກວ້າງເຄິ່ງສອກ ຖາ
ນກວ້າງສອກນຶ່ງໂດຍຮອບຂັ້ນໄດແທ່ນບູຊາປິ່ນຫນ້າໄປທາງທິດຕາເວັນອອກ”
18 ແລະທ່ານເວົ້າກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຕໍ່ໄປນີ້ເປັນກົດເກນຂອງແທ່ນ
ບູຊາ ໃນວັນທີ່ສ້າງເສັດແລ້ວເພື່ອຈະຖວາຍເຄື່ອງເຜົາບູຊາ ແລະເພື່ອຈະຊິດດ້ວຍເລືອດ
19 ທ່ານຈົ່ງມອບງົວຫນຸ່ມໂຕນຶ່ງເປັນເຄື່ອງບູຊາໄຖ່ບາບແກ່ປະໂຣຫິດຄົນເລວີຄອບຄົວຊາໂດກ ຜູ້ທີ່ເຂົ້າມາໃກ້ເພື່ອປົນນິ
ບັດເຮົາ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ
20 ເຈົ້າຈົ່ງເອົາເລືອດງົວນັ້ນໃສ່ໄວ້ທີ່ຍອດທັງສີ່ຂອງແທ່ນ ແລະແຈທັງສີ່ຂອງຂັ້ນຂ້າງເຕົາ ແລະທີ່ອ້ອມຮອບທີ່ຂອບທັງ
ຫມົດຂອງແທ່ນດ້ວຍ ທຳດັ່ງນີ້ແຫລະທ່ານຈະໄດ້ຊຳຣະແທ່ນແລະທຳການລົບມົນທົນຂອງແທ່ນນັ້ນໄວ້
21 ທ່ານຈົ່ງເອົາງົວເຖິກຊຶ່ງເປັນເຄື່ອງບູຊາໄຖ່ບາບ ແລະທ່ານຈົ່ງເຜົາມັນເສັຽໃນບ່ອນທີ່ກຳນົດໄວ້ ຊຶ່ງເປັນບ່ອນຂອງພຣະ
ວິຫານພາຍນອກສະຖານນະມັສການ
22 ແລະໃນວັນທີສອງທ່ານຈົ່ງຖວາຍແບ້ໂຕເຖິກທີ່ປາສຈາກຕຳຫນິເປັນເຄື່ອງບູຊາໄຖ່ບາບ ແລະຊຳຣະແທ່ນບູຊາ
ເຫມືອນທີ່ຊຳຣະດ້ວຍງົວເຖິກ
23 ເມື່ອທ່ານໄດ້ຊຳຣະແທ່ນເສັດແລ້ວ ທ່ານຈົ່ງຖວາຍງົວຫນຸ່ມປາສຈາກຕຳຫນິແລະແກະເຖິກທີ່ປາສຈາກຕຳຫນິຈາກ
ຝູງ
24 ທ່ານຈົ່ງນຳມາຖວາຍພຣະຜູ້ເປັນເຈົ້າ ແລະປະໂຣຫິດຈະເອົາເກືອຊິດລົງເທິງນັ້ນ ແລະຖວາຍເປັນເຄື່ອງເຜົາບູຊາແດ່
ພຣະຜູ້ເປັນເຈົ້າ
25 ທ່ານຈົ່ງຖວາຍແບ້ໂຕນຶ່ງເປັນເຄື່ອງບູຊາໄຖ່ບາບທຸກວັນຈົນຄົບເຈັດວັນ ແລະຈົ່ງຖວາຍງົວຫນຸ່ມແລະແກະເຖິກທີ່ປາສ
ຈາກຕຳຫນິຈາກຝູງດ້ວຍ
26 ເຂົາທັງຫລາຍຈະຕ້ອງທຳການລົບມົນທົນແທ່ນບູຊາຢູ່ເຈັດວັນຈຶ່ງຊຳຣະສຳເຣັດ ແລະຖວາຍໃຫ້ເປັນທີ່ສັກສິດ
27 ແລະເມື່ອເຂົາກະທຳຄົບຕາມກຳນົດເຫລົ່ານີ້ແລ້ວ ຕັ້ງແຕ່ວັນທີແປດເປັນຕົ້ນໄປປະໂຣຫິດຈະຕ້ອງຖວາຍເຄື່ອງສານຕິ
ບູຊາຂອງທ່ານທີ່ເທິງແທ່ນນັ້ນ ແລະເຮົາຈະພໍໃຈເຈົ້າທັງຫລາຍ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ແຫລະ

## 44 ງານບົວລະບັດໃນພຣະວິຫານ

The Closed Gate

1 ແລ້ວທ່ານກໍນໍາຂ້າພະເຈົ້າກັບມາທີ່ປະຕູນອກຂອງສະຖານນະມັສການ ຊຶ່ງຫັນຫນ້າໄປທາງຕະເວັນອອກ ແລະປະຕູ
ນັ້ນປິດຢູ່

2 ພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ, “ປະຕູນີ້ຈະປິດຢູ່ເລື້ອຍໄປ ຢ່າໃຫ້ເປີດ ແລະບໍ່ໃຫ້ຜູ້ໃດເຂົ້າໄປທາງນີ້ ເພາະພ
ຣະຜູ້ເປັນເຈົ້າ ພຣະເຈົ້າແຫ່ງອິສຣາເອນໄດ້ສະເດັດເຂົ້າໄປທາງນີ້ ເຫດສັນນັ້ນຈຶ່ງໃຫ້ປິດໄວ້

3 ສະເພາະເຈົ້ານາຍເທົ່ານັ້ນທີ່ຈະປະທັບສເວີຍພຣະກະຍາຫານຕໍ່ພຣະພັກພຣະຜູ້ເປັນເຈົ້າໃນປະຕູນີ້ໄດ້ ທ່ານຈະຕ້ອງ
ເຂົ້າມາທາງມຸກຂອງຫໍປະຕູແລະຕ້ອງອອກໄປຕາມທາງດຽວກັນ”

Admission to the Temple

4 ແລ້ວທ່ານກໍນໍາຂ້າພະເຈົ້າມາຕາມທາງຂອງປະຕູເຫນືອມາທີ່ຂ້າງຫນ້າພຣະວິຫານ ແລະຂ້າພະເຈົ້າຫລຽວເບິ່ງ ແລະ
ເບິ່ງແມ, ພຣະສະງ່າຣາສີຂອງພຣະຜູ້ເປັນເຈົ້າກໍເຕັມພຣະວິຫານຂອງພຣະເຈົ້າ ແລະຂ້າພະເຈົ້າກໍກົ້ມຫນ້າລົງເຖິງ
ດິນ

5 ແລະພຣະຜູ້ເປັນເຈົ້າກ່າວກັບຂ້າພະເຈົ້າວ່າ, “ບຸດແຫ່ງມະນຸດເອີຍ, ຈົ່ງຕັ້ງໃຈໃຫ້ດີ ທຸກສິ່ງທີ່ເຮົາຈະບອກເຈົ້າກ່ຽວກັບ
ກົດເກນທັງສິ້ນຂອງພຣະວິຫານຂອງພຣະຜູ້ເປັນເຈົ້າແລະກົດທັງສິ້ນຂອງພຣະວິຫານນັ້ນ ຈົ່ງເບິ່ງດ້ວຍຕາຂອງເຈົ້າ
ແລະຟັງດ້ວຍຫູຂອງເຈົ້າ ແລະຈົດຈໍາເຣື່ອງທາງເຂົ້າພຣະວິຫານແລະທາງອອກຈາກສະຖານນະມັສການໄວ້ໃຫ້ດີ

6 ແລ້ວຈົ່ງບອກແກ່ເຊື້ອສາຍທີ່ມັກກະບົດ ຄືເຊື້ອສາຍອິສຣາເອນວ່າ ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໂອ ເຊື້ອສາຍອິສຣາ
ເອນເອີຍ, ຂໍໃຫ້ການຖ່ອຍຮ້າຍຂອງເຈົ້າສິ້ນສຸດເຖີດ

7 ຄືການຍິນຍອມໃຫ້ຄົນຕ່າງດ້າວທີ່ບໍ່ໄດ້ເຂົ້າພິທີຕັດທາງຈິດໃຈແລະເນື້ອຫນັງເຂົ້າມາໃນສະຖານນະມັສການຂອງເຮົາ
ກະທໍາໃຫ້ສະຖານນັ້ນມົນທິນ ໃນເມື່ອເຈົ້າຖວາຍອາຫານຂອງເຮົາແກ່ເຮົາ ຄືໄຂມັນແລະເລືອດ ເຈົ້າໄດ້ທໍາລາຍຄໍາ
ສັນຍາຂອງເຮົາດ້ວຍການຫນ້າກຽດຊັງທັງສິ້ນຂອງເຈົ້າ

8 ເຈົ້າບໍ່ໄດ້ບົວລະບັດຮັກສາສິ່ງບໍຣິສຸດຂອງເຮົາ ແຕ່ເຈົ້າໄດ້ຕັ້ງຄົນຕ່າງດ້າວໃຫ້ບົວລະບັດຮັກສາຢູ່ໃນສະຖານນະມັສ
ການຂອງເຮົາ ເພື່ອປໂຍດແກ່ຕົວເຈົ້າເອງ

9 “ພຣະຜູ້ເປັນເຈົ້າຈຶ່ງກ່າວດັ່ງນີ້ວ່າ ຢ່າໃຫ້ຕ່າງດ້າວທີ່ບໍ່ໄດ້ເຂົ້າພິທີຕັດທາງຈິດໃຈຄົນແລະເນື້ອຫນັງ ຄືຊົນຕ່າງດ້າວທັງ
ສິ້ນທີ່ຢູ່ຖ້າມກາງຊົນຊາດອິສຣາເອນເຂົ້າໄປໃນສະຖານນະມັສການຂອງເຮົາ

10 ແຕ່ຄົນເລວີຜູ້ທີ່ໄດ້ໄປໄກຈາກເຮົາ ຫລົງໄປຈາກເຮົາໄປຕິດຕາມຮູບໂຄຣົບຂອງເຂົາເມື່ອຄົນອິສຣາເອນຫລົງໄປນັ້ນ
ຈະຕ້ອງໄດ້ຮັບໂທດຂອງຕົນ

11 ເຂົາທັງຫລາຍຈະຕ້ອງບົວລະບັດຢູ່ໃນສະຖານນະມັສການຂອງເຮົາ ກວດກາເບິ່ງຢູ່ທີ່ປະຕູພຣະວິຫານ ແລະປະຕິບັດ
ຢູ່ໃນພຣະວິຫານ ເຂົາຈະຂ້າເຄື່ອງເຜົາບູຊາແລະເຄື່ອງສັຕບູຊາໃຫ້ປະຊາຊົນ ແລະເຂົາຈະຕ້ອງຄອຍເຝົ້າປະຊາຊົນ
ເພື່ອຈະຮັບໃຊ້ເຂົາທັງຫລາຍ

12 ເພາະເຂົາທັງຫລາຍໄດ້ປົນນິບັດປະຊາຊົນຢູ່ຫນ້າຮູບໂຄຣົບຂອງເຂົາ ຈຶ່ງກາຍເປັນສິ່ງສະດຸດໃຫ້ທໍາບາບຜິດແກ່ເຊື້ອ
ສາຍອິສຣາເອນ ພຣະຜູ້ເປັນເຈົ້າກ່າວວ່າ ເຫດສັນນັ້ນເຮົາຈຶ່ງໄດ້ປະຕິຍານດ້ວຍເຣື່ອງເຂົາທັງຫລາຍວ່າ ເຂົາທັງ
ຫລາຍຈະຕ້ອງໄດ້ຮັບໂທດຂອງເຂົາ

13 ຢ່າໃຫ້ເຂົາທັງຫລາຍເຂົ້າມາໃກ້ເຮົາ ເພື່ອຈະຮັບໃຊ້ເຮົາໃນຕໍາແຫນ່ງປະໂຣຫິດ ຫລືເຂົ້າມາໃກ້ສິ່ງສັກສິດທັງຫລາຍ
ຂອງເຮົາແລະສິ່ງຊຶ່ງສັກສິດທີ່ສຸດນັ້ນ ແຕ່ເຂົາຕ້ອງທົນຮັບຄວາມອັບອາຍຂາຍຫນ້າ ເພາະສິ່ງອັນຫນ້າກຽດຊັງຊຶ່ງເຂົາ
ໄດ້ກະທໍານັ້ນ

14 ແຕ່ເຖິງປານນັ້ນເຮົາຈະກໍານົດໃຫ້ເຂົາເປັນຜູ້ດູແລພຣະວິຫານ ໃຫ້ກະທໍາບໍຣິການທັງສິ້ນແລະກະທໍາສິ່ງທີ່ຕ້ອງກະທໍາ
ໃນພຣະວິຫານນັ້ນທັງສິ້ນ

### The Levitical Priests

15 “ແຕ່ປະໂຣຫິດຄົນເລວີ ບັນດາບຸດຂອງຊາໂດກ ຜູ້ຍັງດູແລສະຖານນະມັສການຂອງເຮົາ ເມື່ອຄົນອິສຣາເອນຫລົງໄປຈາກເຮົານັ້ນ ພຣະຜູ້ເປັນເຈົ້າກ່າວວ່າ ໃຫ້ເຂົາເຂົ້າມາໃກ້ເຮົາເພື່ອບົວລະບັດເຮົາ ແລະໃຫ້ຄອຍຮັບໃຊ້ເຮົາທີ່ຈະຖວາຍໄຂມັນແລະເລືອດ

16 ເຂົາຈະເຂົ້າມາໃນສະຖານນະມັສການຂອງເຮົາໄດ້ ແລະໃຫ້ເຂົາເຂົ້າມາໃກ້ໂຕະຂອງເຮົາເພື່ອຈະບົວລະບັດເຮົາ ແລະໃຫ້ເຂົາຮັກສາຫນ້າທີ່ການທີ່ເຮົາຝາກກັບເຂົາ

17 ເມື່ອເຂົາເຂົ້າປະຕູລານຊັ້ນໃນນັ້ນ ໃຫ້ເຂົາຫົ່ມເສື້ອຜ້າປ່ານເນື້ອລະອຽດ ຢ່າໃຫ້ເຂົາມີສິ່ງໃດທີ່ທຳດ້ວຍຂົນແກະເລີຍຂນະເມື່ອເຂົາທຳການບົວລະບັດຢູ່ທີ່ປະຕູລານຊັ້ນໃນ ແລະຢູ່ຂ້າງໃນ

18 ໃຫ້ເຂົາຄຽນຜ້າປ່ານໄວ້ຫນືອຫົວ ແລະນຸ່ງສົ້ງຜ້າປ່ານພຽງແອວ ຢ່າໃຫ້ເຂົາຫົ່ມຕົວດ້ວຍສິ່ງໃດທີ່ໃຫ້ມີເຫື່ອ

19 ແລະເມື່ອເຂົາອອກໄປຍັງລານນອກເພື່ອໄປຫາປະຊາຊົນ ໃຫ້ເຂົາແກ້ເສື້ອຜ້າຊຸດທີ່ບົວລະບັດງານນັ້ນອອກເສັຽ ແລະວາງໄວ້ເສັຽໃນຫ້ອງບໍຣິສຸດ ແລ້ວຈຶ່ງນຸ່ງຫົ່ມເສື້ອຜ້າອື່ນ ຢ້ານວ່າເຂົາຈະນຳຄວາມ ບໍຣິສຸດສັກສິດໄປຕິດຕໍ່ກັບປະຊາຊົນດ້ວຍເສື້ອຜ້າຂອງເຂົາ

20 ຢ່າໃຫ້ເຂົາແຖຫົວ ຫລືປ່ອຍຜົມຕົນໃຫ້ຍາວ ໃຫ້ເຂົາຮັກສາໄວ້ໃຫ້ຍາວພໍດີພໍງາມ

21 ເມື່ອປະໂຣຫິດເຂົ້າໄປໃນລານຊັ້ນໃນຈະດື່ມເຫລົ້າອະງຸ່ນບໍ່ໄດ້

22 ຢ່າໃຫ້ປະໂຣຫິດແຕ່ງງານກັບຍິງຫມ້າຍຫລືຍິງທີ່ຖືກຢ່າຮ້າງແລ້ວ ແຕ່ໃຫ້ແຕ່ງງານກັບຍິງພົມມະຈາຣີເຊື້ອສາຍຄອບຄົວອິສຣາເອນ ຫລືຍິງຫມ້າຍຊຶ່ງເປັນຍິງຫມ້າຍຂອງປະໂຣຫິດ

23 ເຂົາທັງຫລາຍຈະຕ້ອງສັ່ງສອນໄພ່ພົນຂອງເຮົາເຖິງຄວາມແຕກຕ່າງລະຫວ່າງສິ່ງຂອງບໍຣິສຸດແລະສິ່ງຂອງຖ່ອຍຮ້າຍ ແລະສຳແດງໃຫ້ເຂົາສັງເກດໄດ້ວ່າສິ່ງໃດເປັນມົນທິນແລະສິ່ງໃດບໍ່ເປັນມົນທິນ

24 ຖ້າມີຄະດີ ເຂົາຈະຕ້ອງກະທຳຫນ້າທີ່ຜູ້ພິພາກສາ ແລະເຂົາຈະຕ້ອງພິພາກສາຕາມກົດຫມາຍຂອງເຮົາ ໃນງານເທສການຕາມກຳນົດຂອງເຮົານັ້ນເຂົາຈະຕ້ອງຮັກສາກົດແລະກົດເກນຂອງເຮົາແລະເຂົາຈະຕ້ອງຮັກສາວັນສະບາໂຕຂອງເຮົາໃຫ້ບໍຣິສຸດ

25 ຢ່າໃຫ້ເຂົາກະທຳຕົວໃຫ້ເປັນມົນທິນດ້ວຍເຂົ້າໄປໃກ້ຜູ້ຕາຍເວັ້ນແຕ່ເປັນບິດາຫລືມານດາ ຫລືບຸດຊາຍຫລືບຸດຍິງ ຫລືພີ່ນ້ອງຜູ້ຊາຍ ຫລືພີ່ນ້ອງຜູ້ຍິງທີ່ບໍ່ມີສາມີ ກໍຈະກະທຳຕົວໃຫ້ເປັນມົນທິນໄດ້

26 ຫລັງຈາກທີ່ເຂົາຮັບການຊຳຮະແລ້ວ ມີກຳນົດອີກເຈັດວັນ

27 ພຣະຜູ້ເປັນເຈົ້າກ່າວວ່າ ໃນວັນທີ່ເຂົາເຂົ້າໄປໃນທີ່ນະມັສການ ຄືທີ່ລານຊັ້ນໃນເພື່ອຈະບົວລະບັດຢູ່ໃນທີ່ນະມັສການ ເຂົາຈະຕ້ອງຖວາຍເຄື່ອງບູຊາໄຖ່ບາບເສັຽກ່ອນ

28 “ເຂົາຈະບໍ່ມີມໍຣະດົກຕົກທອດ ເຮົາເປັນມໍຣະດົກຂອງເຂົາ ແລະເຈົ້າບໍ່ຕ້ອງໃຫ້ເຂົາຖືກຳມະສິດໃດໆໃນອິສຣາເອນ ເຮົາເປັນກຳມະສິດຂອງເຂົາ

29 ໃຫ້ເຂົາຮັບປະທານເຄື່ອງທັນຍາບູຊາ ເຄື່ອງບູຊາໄຖ່ບາບ ແລະເຄື່ອງບູຊາໄຖ່ຄວາມຜິດ ແລະທຸກສິ່ງທີ່ຖວາຍໄວ້ໃນອິສຣາເອນເປັນຂອງເຂົາທັງຫລາຍ

30 ແລະຫມາກໄມ້ດີທີ່ສຸດຂອງຫມາກໄມ້ຮຸ່ນແຣກທຸກຊະນິດແລະຂອງຖວາຍທຸກຊະນິດຈາກເຄື່ອງຖວາຍບູຊາທັງສິ້ນຂອງເຈົ້າຈະເປັນຂອງບັນດາປະໂຣຫິດທັງຫລາຍ ເຈົ້າຈົ່ງມອບແປ້ງຜົນແຣກຂອງເຈົ້າໃຫ້ແກ່ປະໂຣຫິດ ເພື່ອວ່າພຣະພອນຈະມີຢູ່ເຫນືອຄົວ ເຮືອນຂອງເຈົ້າ

31 ປະໂຣຫິດຈະຕ້ອງບໍ່ຮັບປະທານສິ່ງໃດໆບໍ່ວ່າຈະເປັນນົກຫລືສັດທີ່ຕາຍເອງຫລືຖືກຈິກກັດຕາຍ

## 45 ການແບ່ງແຜ່ນດິນແລະເຄື່ອງຊັ່ງຕວງທີ່ທ່ຽງຕົງ

The Holy District

1 “ເມື່ອເຈົ້າແບ່ງແຜ່ນດິນໃຫ້ເປັນກຳມະສິດນັ້ນ ເຈົ້າຈົ່ງຖວາຍທີ່ດິນສ່ວນນຶ່ງໄວ້ເພື່ອພຣະຜູ້ເປັນເຈົ້າໃຫ້ເປັນເມືອງບໍລິ
ສຸດຍາວສອງໝື່ນຫ້າພັນສອກ ແລະກວ້າງສອງໝື່ນສອກ ຈະເປັນທີ່ບໍລິສຸດຕລອດບໍຣິເວນນັ້ນ
2 ໃນບໍຣິເວນນີ້ໃຫ້ມີທີ່ສີ່ຫລ່ຽມຕອນນຶ່ງຍາວຫ້າຮ້ອຍ ກວ້າງຫ້າຮ້ອຍສອກສຳລັບສະຖານນະມັສການໃຫ້ມີບໍຣິເວນເປົ່
າຫວ້າງໄວ້ໂດຍຮອບອີກຫ້າສິບສອກ
3 ໃນເມືອງບໍຣິສຸດນັ້ນ ເຈົ້າຈົ່ງແທກສ່ວນນຶ່ງອອກ ຍາວສອງໝື່ນຫ້າພັນສອກ ກວ້າງນຶ່ງໝື່ນສອກ ໃນບໍຣິເວນນີ້ໃຫ້
ເປັນທີ່ຕັ້ງຂອງສະຖານນະມັສການ ຄືທີ່ບໍຣິສຸດທີ່ສຸດ
4 ໃຫ້ເປັນສ່ວນແຜ່ນດິນທີ່ບໍຣິສຸດ ໃຫ້ເປັນຂອງປະໂຣຫິດ ຜູ້ປົວລະບັດຢູ່ໃນສະຖານນະມັສການ ແລະເຂົ້າໃກ້ພຣະຜູ້
ເປັນເຈົ້າເພື່ອຈະປົວລະບັດພຣະອົງ ໃຫ້ເປັນທີ່ສຳລັບສ້າງບ້ານເຮືອນຂອງເຂົາ ແລະເປັນທີ່ບໍຣິສຸດສຳລັບສະຖານນະ
ມັສການ
5 ອີກສ່ວນນຶ່ງຊຶ່ງຍາວສອງໝື່ນຫ້າພັນສອກແລະກວ້າງນຶ່ງໝື່ອນສອກນັ້ນເປັນທີ່ຂອງຄົນເລວີຜູ້ປົວລະບັດຢູ່ທີ່ພຣະວິ
ຫານໃຫ້ເປັນກຳມະສິດຂອງເຂົາ ທີ່ຈະສ້າງເມືອງເພື່ອອາສັຍຢູ່
6 “ໃກ້ງກັບສ່ວນທີ່ຕັ້ງໄວ້ເປັນເມືອງບໍຣິສຸດນັ້ນ ເຈົ້າຈະຕ້ອງກຳນົດທີ່ດິນບ່ອນນຶ່ງກວ້າງຫ້າພັນສອກ ຍາວສອງໝື່ອນ
ຫ້າພັນສອກໃຫ້ເປັນກຳມະສິດຂອງເມືອງ ໃຫ້ເປັນຂອງເຊື້ອສາຍອິສຣາເອນທັງໝົດ
7 “ແຜ່ນດິນທັງສອງຂ້າງຂອງເມືອງບໍຣິສຸດແລະສ່ວນຂອງເມືອງນັ້ນ ໃຫ້ຍົກເປັນທີ່ດິນຂອງເຈົ້ານາຍຄຽງຂ້າງກັບເມືອງບໍ
ຣິສຸດ ແລະສ່ວນຂອງເມືອງດ້ານຕາເວັນຕົກແລະຕາເວັນອອກມີສ່ວນຍາວເທົ່າກັບສ່ວນທີ່ຍົກໃຫ້ຄົນເຜົ່ານຶ່ງ ຍາວອ
ອກໄປຕາມທາງຕາເວັນຕົກແລະທາງຕາເວັນອອກຂອງເຂດແດນແຜ່ນດິນ
8 ໃຫ້ເປັນສ່ວນຂອງເຈົ້ານາຍໃນອິສຣາເອນ ແລະເຈົ້ານາຍຂອງເຮົາຈະບໍ່ບີບຄັ້ນປະຊາຊົນຂອງເຮົາອີກ ແຕ່ເຈົ້ານາຍ
ເຫລົ່ານັ້ນຈະຍອມໃຫ້ເຊື້ອສາຍອິສຣາເອນໄດ້ແຜ່ນດິນຕາມສ່ວນເຜົ່າຂອງຕົນ
9 “ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໂອ ບັນດາເຈົ້ານາຍແຫ່ງອິສຣາເອນເອີຍ, ພໍເຖີດ ຈົ່ງຖິ້ມການທາຣຸນແລະການບີບຄັ້ນ
ເສັຽແລະກະທຳຄວາມຍຸດຕິທັມແລະຄວາມຊອບທັມ ພຣະຜູ້ເປັນເຈົ້າກ່າວ ຈົ່ງເລີກການຂັບໄລ່ປະຊາຊົນຂອງເຮົາໃຫ້
ອອກຈາກທີ່ດິນອັນເປັນ  ກັມມະສິດຂອງເຂົາເສັຽ

Weights and Measures

10 “ເຈົ້າຈົ່ງມີຕາຊັ່ງ ເອຟາແລະບັດທີ່ທ່ຽງຕົງ
11 ເອຟາແລະບັດນັ້ນໃຫ້ເປັນຂນາດດຽວກັນ ນຶ່ງບັດເທົ່າກັບນຶ່ງໃນສິບຂອງໂຮເມີ ແລະເອຟາກໍເທົ່າກັບນຶ່ງໃນສິບຂອງ
ໂຮເມີ ໃຫ້ໂຮເມີເປັນເຄື່ອງວັດມາຕຖານ
12 ເຊເກລນຶ່ງມີຊາວເກຣາ ນ້ຳໜັກຫ້າເຊເກລກໍໃຫ້ເປັນຫ້າເຊເກລ ສິບເຊເກລກໍໃຫ້ເປັນສິບເຊເກລ ແລະມາເນຂອງ
ເຈົ້າກໍໃຫ້ມີຫ້າສິບເຊເກລ

**ບັນດາຂອງຖວາຍ**

Offerings

13 “ຕໍ່ໄປນີ້ເປັນກຳນົດຂອງຖວາຍທີ່ເຈົ້າທັງຫລາຍຈະຕ້ອງຖວາຍ ຄືເຂົ້າບເລໂຮເມີນຶ່ງໃຫ້ຖວາຍນຶ່ງໃນຫົກເອຟາ ເຂົ້າ
ເດືອຍໂຮເມີນຶ່ງໃຫ້ຖວາຍນຶ່ງໃນຫົກຂອງເອຟາ
14 ແລະສ່ວນກຳນົດປະຈຳຂອງນ້ຳມັນ ນ້ຳມັນໂກ ນຶ່ງຖວາຍນຶ່ງໃນສິບຂອງບັດ (ໂກກໍເຫມືອນໂຮເມີ ເທົ່າກັບສິບບັດ)
15 ແກະຝູງສອງຮ້ອຍໂຕກໍໃຫ້ຖວາຍໂຕນຶ່ງ ຈາກບັນດາຄອບຄົວອິສຣາເອນ ພຣະຜູ້ເປັນເຈົ້າກ່າວວ່າ ນີ້ແຫລະເປັນຂອງ
ຖວາຍສຳລັບທັນຍາບູຊາ ເຄື່ອງເຜົາບູຊາ ແລະສານຕິບູຊາ ເພື່ອທຳການລົບມົນທິນໃຫ້ເຂົາທັງຫລາຍ
16 ໃຫ້ປະຊາຊົນທັງສິ້ນແຫ່ງແຜ່ນດິນນີ້ມອບຂອງຖວາຍເຫລົ່ານີ້ແກ່ເຈົ້ານາຍແຫ່ງອິສຣາເອນ

17 ໃຫ້ເປັນໜ້າທີ່ຂອງເຈົ້ານາຍທີ່ຈະຈັດ ເຄື່ອງເຜົາບູຊາ ທັນຍາບູຊາ ເຄື່ອງດື່ມບູຊາ ໃນງານເທສການທັງຫລາຍໃນວັນຂຶ້ນຄ່ຳແລະສະບາໂຕ ໃນງານເທສການທີ່ກຳນົດໄວ້ຂອງເຊື້ອສາຍອິສຣາເອນທັງສິ້ນ ໃຫ້ເຂົາຈັດເຄື່ອງບູຊາໄຖ່ບາບ ທັນຍາບູຊາ ເຄື່ອງເຜົາບູຊາ ແລະສານຕິບູຊາ ເພື່ອກະທຳການລົບບາບໃຫ້ແກ່ເຊື້ອສາຍອິສຣາເອນ

**ສລອງເທສການ**

Festivals

(ອພຍ 12:1-20; ລລວ 23:33-43)

18 "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ໃນວັນທີນຶ່ງຂອງເດືອນທີນຶ່ງ ເຈົ້າຈົ່ງເອົາງົວໜຸ່ມທີ່ປາສຈາກຕຳໜິໂຕນຶ່ງ ແລະເຈົ້າຈົ່ງຊຳຣະສະຖານນະມັສການເສັຽ

19 ໃຫ້ປະໂຣຫິດເອົາເລືອດຂອງເຄື່ອງບູຊາໄຖ່ບາບມາ ແລະຈົ່ງຊິດໃສ່ທີ່ເສົາປະຕູພຣະວິຫານ ທີ່ຂັ້ນສີ່ແຈຂອງແທ່ນບູຊາ ແລະເທິງເສົາປະຕູຂອງລານຊັ້ນໃນ

20 ໃນວັນທີເຈັດຂອງເດືອນນັ້ນເຈົ້າຈົ່ງກະທຳເຊັ່ນດຽວກັນ ເພື່ອຜູ້ນຶ່ງຜູ້ໃດທີ່ກະທຳບາບດ້ວຍຄວາມເຜີພັ້ງຫລືຄວາມຮູ້ເທົ່າບໍ່ເຖິງການ ເພື່ອວ່າເຈົ້າຈະໄດ້ກະທຳການລົບມົນທິນພຣະວິຫານ

21 "ໃນວັນທີສິບສີ່ຂອງເດືອນຕົ້ນ ເຈົ້າຈົ່ງສລອງເທສການປັສຄາ ຈົ່ງຮັບປະທານເຂົ້າຈີ່ທີ່ບໍ່ມີເຊື້ອແປ້ງຕລອດເທສການເຈັດວັນ

22 ໃນວັນນັ້ນໃຫ້ເຈົ້ານາຍຈັດຫາງົວໜຸ່ມໂຕນຶ່ງສຳລັບຕົນເອງແລະປະຊາຊົນທັງສິ້ນ ເພື່ອເປັນເຄື່ອງບູຊາໄຖ່ບາບ

23 ແລະໃນເຈັດວັນທີ່ມີເທສການລ້ຽງໃຫ້ເຈົ້ານາຍຈັດຫາງົວໜຸ່ມເຈັດໂຕກັບແກະເຖິກເຈັດໂຕທີ່ປາສຈາກຕຳໜິ ໃຫ້ເປັນເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າທຸກໆວັນຕລອດເຈັດວັນນັ້ນແລະຈັດຫາແບ້ເຖິກໂຕນຶ່ງທຸກວັນໃຫ້ເປັນເຄື່ອງບູຊາໄຖ່ບາບ

24 ແລະໃຫ້ເຈົ້ານາຍຈັດຫາທັນຍາບູຊາເອຟານຶ່ງຄູ່ກັບງົວເຖິກນຶ່ງ ແລະເອຟານຶ່ງຄູ່ກັບແກະເຖິກນຶ່ງ ແລະນ້ຳມັນນຶ່ງຮິນຕໍ່ແປ້ງທຸກເອຟາ

25 ໃນວັນທີສິບຫ້າຂອງເດືອນທີເຈັດ ແລະໃນເທສການລ້ຽງທັງເຈັດວັນ ໃຫ້ທ່ານຈັດຫາຂອງເຊັ່ນດຽວກັນສຳລັບເປັນເຄື່ອງບູຊາໄຖ່ບາບ ເຄື່ອງເຜົາບູຊາ ທັນຍາບູຊາ ແລະເຄື່ອງນ້ຳມັນ

## 46

Miscellaneous Regulations

1 "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ປະຕູລານຊັ້ນໃນທີ່ຫັນໜ້າໄປທິດຕາເວັນອອກນັ້ນໃຫ້ປິດຢູ່ໃນວັນທຳງານຫົກວັນ ແຕ່ໃນວັນສະບາໂຕນັ້ນໃຫ້ເປີດ ແລະໃນວັນຂຶ້ນຄ່ຳນຶ່ງກໍໃຫ້ເປີດ

2 ຝ່າຍເຈົ້ານາຍນັ້ນໃຫ້ເຂົ້າມາຈາກຂ້າງນອກທາງຫ້ອງໂຖງຂອງທໍປະຕູ ແລະໃຫ້ມາຢືນຢູ່ທີ່ເສົາປະຕູ ໃຫ້ປະໂຣຫິດຖວາຍເຄື່ອງເຜົາບູຊາ ແລະເຄື່ອງສານຕິບູຊາຂອງທ່ານ ແລະທ່ານຈະນະມັສການຢູ່ທີ່ປະຕູໃຫຍ່ ແລ້ວທ່ານຈະອອກໄປ ແຕ່ຢ່າປິດປະຕູນັ້ນຈົນກວ່າຈະເຖິງເວລາຄ່ຳ

3 ປະຊາຊົນຈະນະມັສການຕໍ່ພຣະຜູ້ເປັນເຈົ້າທີ່ທາງເຂົ້າປະຕູນັ້ນ ໃນວັນສະບາໂຕແລະໃນວັນຂຶ້ນຄ່ຳ

4 ເຄື່ອງເຜົາບູຊາທີ່ເຈົ້ານາຍຖວາຍແດ່ພຣະຜູ້ເປັນເຈົ້າໃນວັນສະບາໂຕນັ້ນ ຄືລູກແກະປາສຈາກຕຳໜິຫົກໂຕ ແລະແກະເຖິກປາສຈາກຕຳໜິໂຕນຶ່ງ

5 ແລະທັນຍາບູຊາທີ່ຄູ່ກັບແກະນັ້ນຄືແປ້ງເອຟານຶ່ງ ແລະທັນຍາບູຊາທີ່ຄູ່ກັບລູກແກະນັ້ນກໍສຸດແທ້ແຕ່ທີ່ທ່ານຈະສາມາດຈະຖວາຍໄດ້ ພ້ອມກັບນ້ຳມັນຮິນນຶ່ງຕໍ່ແປ້ງນຶ່ງເອຟາ

6 ໃນວັນຂຶ້ນຄ່ຳທ່ານຈະຖວາຍງົວໜຸ່ມປາສຈາກຕຳໜິໂຕນຶ່ງ ແລະລູກແກະຫົກໂຕກັບແກະເຖິກໂຕນຶ່ງ ຊຶ່ງຕ້ອງປາສຈາກຕຳໜິ

7 ສ່ວນທັນຍາບູຊານັ້ນທ່ານຈະຈັດແປ້ງນຶ່ງເອຟາຄູ່ກັບງົວເຖິກໂຕນຶ່ງນັ້ນ ແລະນຶ່ງເອຟາຄູ່ກັບແກະເຖິກໂຕນຶ່ງ ແລະຄູ່ກັບລູກແກະທ່ານຈະຈັດຕາມທີ່ສາມາດຈັດໄດ້ ພ້ອມກັບນ້ຳມັນນຶ່ງຮິນຕໍ່ແປ້ງນຶ່ງເອຟາ

8 ເມື່ອເຈົ້ານາຍເຂົ້າມາທ່ານຈະເຂົ້າໄປທາງຫ້ອງໂຖງຂອງທໍປະຕູແລະກັບອອກໄປຕາມທາງດຽວກັນນັ້ນ

9 "ເມື່ອປະຊາຊົນເຂົ້າມາຕໍ່ພຣະພັກພຣະຜູ້ເປັນເຈົ້າ ໃນເທສການລ້ຽງຕາມກຳນົດ ຜູ້ທີ່ເຂົ້າມາທາງປະຕູເຫນືອເພື່ອນະມັສການຈະຕ້ອງກັບອອກໄປທາງປະຕູໃຕ້ ແລະຜູ້ທີ່ເຂົ້າມາທາງປະຕູໃຕ້ ຈະຕ້ອງກັບອອກໄປທາງປະຕູເຫນືອ ຢ່າໃຫ້ໃຜກັບທາງປະຕູຕາມທີ່ເຂົາເຂົ້າມາ ແຕ່ໃຫ້ທຸກຄົນອອກຊື່ໄປຂ້າງຫນ້າ

10 ເມື່ອປະຊາຊົນເຂົ້າໄປ ເຈົ້ານາຍຈະເຂົ້າໄປພ້ອມນຳກັນ ແລະເມື່ອປະຊາຊົນອອກໄປ ເຈົ້ານາຍຈະອອກໄປນຳ

11 "ທັນຍາບູຊາທີ່ໃຊ້ໃນເທສການລ້ຽງແລະເທສການທີ່ກຳນົດນັ້ນ ໃຫ້ເປັນເອຟານຶ່ງຄູ່ກັບງົວຫນຸ່ມໂຕນຶ່ງ ແລະຄູ່ກັບແກະເຖິກເອຟານຶ່ງ ແລະຄູ່ກັບລູກແກະກໍຕາມແຕ່ສາມາດຈະຖວາຍໄດ້ ພ້ອມກັບນ້ຳມັນຮິນນຶ່ງຕໍ່ແປ້ງນຶ່ງເອຟານຶ່ງ

12 ເມື່ອເຈົ້ານາຍຖວາຍເຄື່ອງບູຊາຕາມໃຈສມັກ ຈະເປັນເຄື່ອງເຜົາບູຊາ ຫລືສານຕິບູຊາ ເປັນເຄື່ອງບູຊາຕາມໃຈສມັກຖວາຍແດ່ພຣະຜູ້ເປັນເຈົ້າ ໃຫ້ເປີດປະຕູທີ່ປິ່ນຫນ້າໄປທາງທິດຕາເວັນອອກໃຫ້ທ່ານ ແລະທ່ານຈະຖວາຍເຄື່ອງເຜົາບູຊາ ຫລືສານຕິບູຊາຂອງທ່ານຢ່າງທີ່ທ່ານທຳໃນວັນສະບາໂຕແລ້ວທ່ານຈະອອກໄປ ເມື່ອທ່ານອອກໄປແລ້ວກໍໃຫ້ປິດປະຕູເສັຽ

13 "ທ່ານຈະຈັດການຫາລູກແກະໂຕນຶ່ງອາຍຸນຶ່ງປີປາສຈາກຕຳຫນິຖວາຍເປັນເຄື່ອງເຜົາບູຊາແດ່ພຣະຜູ້ເປັນເຈົ້າເປັນປະຈຳວັນ ທ່ານຈະຈັດຫາທຸກໆເຊົ້າ

14 ແລະທ່ານຈະຈັດຫາເຄື່ອງທັນຍາບູຊາຄູ່ກັນທຸກໆເຊົ້ານຶ່ງໃນຫົກຂອງເອຟາ ແລະນ້ຳມັນນຶ່ງໃນສາມຂອງຮິນເພື່ອປົນແປ້ງໃຫ້ຊຸ່ມໃຫ້ເປັນທັນຍາບູຊາແດ່ພຣະຜູ້ເປັນເຈົ້າ ນີ້ເປັນລະບຽບຕລອດໄປເປັນນິດ

15 ດັ່ງນີ້ແຫລະຈະຕ້ອງຈັດຫາລູກແກະແລະເຄື່ອງທັນຍາບູຊາ ພ້ອມກັບນ້ຳມັນທຸກໆເຊົ້າ ເພື່ອເປັນເຄື່ອງເຜົາບູຊາຕລອດໄປເປັນນິດ

16 "ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ ຖ້າເຈົ້ານາຍນຳເອົາສ່ວນນຶ່ງຂອງມໍຣະດົກຂອງທ່ານມາມອບໃຫ້ແກ່ບຸດຊາຍເປັນຂອງຂວັນ ກໍໃຫ້ຂອງນັ້ນຕົກເປັນຂອງບຸດຊາຍຂອງທ່ານໂດຍມໍຣະດົກນັ້ນເປັນຊັບສິນຂອງເຂົາຕາມມໍຣະດົກ

17 ແຕ່ຖ້າທ່ານນຳເອົາສ່ວນນຶ່ງຂອງມໍຣະດົກຂອງທ່ານມາມອບໃຫ້ຄົນໃຊ້ຂອງທ່ານຄົນນຶ່ງເປັນຂອງຂວັນ ຂອງນັ້ນຈະເປັນຂອງຄົນໃຊ້ນັ້ນຈົນເຖິງປີອິສຣະພາບ ແລ້ວຂອງນັ້ນຈະກັບມາເປັນຂອງເຈົ້ານາຍ ສະເພາະບຸດຂອງທ່ານເທົ່ານັ້ນທີ່ຈະເກັບສ່ວນມໍຣະດົກຂອງທ່ານມາເປັນຂອງຂວັນໄດ້

18 ນອກຈາກນັ້ນເຈົ້ານາຍຈະຍຶດສິ່ງໃດອັນເປັນມໍຣະດົກຂອງປະຊາຊົນບໍ່ໄດ້ໂດຍໄລ່ປະຊາຊົນອອກໄປ ຈາກຊັບສິນທີ່ດິນຂອງເຂົາ ທ່ານຈະຕ້ອງມອບຊັບສິນຂອງທ່ານເອງໃຫ້ເປັນມໍຣະດົກແກ່ບຸດຂອງທ່ານ ເພື່ອວ່າຈະບໍ່ມີໄພ່ພົນຂອງເຮົາຈັກຄົນນຶ່ງທີ່ຕ້ອງຖືກຂັບໄລ່ຈາກກັມມະສິດຂອງຕົນ"

19 ແລ້ວທ່ານກໍນຳຂ້າພະເຈົ້າມາຕາມທາງເຂົ້າຊຶ່ງຢູ່ຂ້າງປະຕູ ມາຍັງຫ້ອງບໍຣິສຸດແຖວເຫນືອ ຊຶ່ງເປັນຂອງປະໂຣຫິດໃນທີ່ນັ້ນ ຂ້າພະເຈົ້າເຫັນບ່ອນນຶ່ງ ຢູ່ທາງສຸດປາຍທິດຕາເວັນຕົກ

20 ແລະທ່ານກ່າວແກ່ຂ້າພະເຈົ້າວ່າ, "ນີ້ເປັນສະຖານທີ່ຊຶ່ງປະໂຣຫິດຈະຕ້ອງຕົ້ມເຄື່ອງບູຊາໄຖ່ຄວາມຜິດແລະເຄື່ອງບູຊາໄຖ່ບາບ ແລະເປັນທີ່ຊຶ່ງເຂົາຈະປີ້ງທັນຍາບູຊາ ເພື່ອຈະບໍ່ຕ້ອງນຳອອກໄປໃນລານຊັ້ນນອກ ອັນເປັນການທີ່ຈະນຳຄວາມບໍຣິສຸດສັກສິດໄປເຖິງປະຊາຊົນ"

21 ແລ້ວທ່ານຈຶ່ງນຳຂ້າພະເຈົ້າອອກມາທີ່ລານຊັ້ນນອກ ແລະພາຂ້າພະເຈົ້າໄປທີ່ແຈມຸມທັງສີ່ຂອງລານນັ້ນ ແລະເບິ່ງແມ, ທີ່ແຈລານທຸກແຈກໍມີລານຢູ່ລານນຶ່ງ

22 ຄືທີ່ແຈທັງສີ່ຂອງລານ ມີລານນ້ອຍໆຍາວສີ່ສິບສອກກວ້າງສາມສິບສອກ ລານທັງສີ່ຂນາດດຽວກັນ

23 ພາຍໃນຮອບລານທັງສີ່ນັ້ນມີສິ່ງທີ່ກໍ່ດ້ວຍປູນເປັນແຖວ ມີເຕົາຢູ່ທີ່ກົ້ນຂອງສິ່ງທີ່ກໍ່ນັ້ນໂດຍຮອບ

24 ແລ້ວທ່ານຈຶ່ງກ່າວແກ່ຂ້າພະເຈົ້າວ່າ, "ທີ່ເຫລົ່ານີ້ເປັນຄົວ ຊຶ່ງຜູ້ປົວລະບັດຢູ່ທີ່ພຣະວິຫານຈະຕົ້ມເຄື່ອງສັດບູຊາຂອງ
ປະຊາຊົນ"

## 47 ນ້ຳຈາກພຣະວິຫານຮັກສາໂຣກ

Water Flowing from the Temple

1 ແລ້ວທ່ານກໍນຳຂ້າພະເຈົ້າກັບມາທີ່ປະຕູພຣະວິຫານ ແລະເບິ່ງແມ, ມີນ້ຳໄຫລອອກມາຈາກໃຕ້ທໍຣະນີປະຕູພຣະວິ
ຫານໄປສູ່ທາງ ທິດຕາເວັນອອກ (ເພາະພຣະວິຫານຫັນຫນ້າໄປທາງທິດຕາເວັນອອກ) ແລະນ້ຳໄຫລລົງມາຈາກຂ້າງ
ລຸ່ມ ຜ່ານດ້ານໃຕ້ຂອງປະຕູພຣະວິຫານ ທິດໃຕ້ຂອງແທ່ນບູຊາ
2 ແລ້ວທ່ານຈຶ່ງນຳຂ້າພະເຈົ້າອອກມາທາງປະຕູເຫນືອ ແລະນຳຂ້າພະເຈົ້າອ້ອມໄປພາຍນອກເຖິງປະຕູຊັ້ນນອກ ຊຶ່ງ
ຫັນຫນ້າໄປທາງຕາເວັນອອກ ແລະນ້ຳນັ້ນອອກມາທາງດ້ານໃຕ້
3 ຊາຍຜູ້ນັ້ນໄດ້ເດີນໄປທາງຕາເວັນອອກມີເຊືອກແທກຢູ່ໃນມື ທ່ານແທກໄດ້ນຶ່ງພັນສອກ ແລ້ວນຳຂ້າພະເຈົ້າລຸຍນ້ຳໄປ
ແລະນ້ຳເລິກພຽງແຕ່ຂໍ້ຕີນ
4 ແລ້ວທ່ານກໍແທກໄດ້ອີກນຶ່ງພັນ ແລ້ວນຳຂ້າພະເຈົ້າລຸຍນ້ຳໄປແລະນ້ຳເລິກເຖິງເຂົ່າ ແລ້ວທ່ານກໍແທກໄດ້ອີກນຶ່ງພັນ
ແລ້ວນຳຂ້າພະເຈົ້າລຸຍນ້ຳໄປ ນ້ຳນັ້ນເລິກພຽງແອວ
5 ແລ້ວທ່ານກໍແທກໄດ້ອີກນຶ່ງພັນ ແລະກາຍເປັນແມ່ນ້ຳທີ່ຂ້າພະເຈົ້າລຸຍຂ້າມບໍ່ໄດ້ ເພາະນ້ຳນັ້ນຂຶ້ນແລ້ວເລິກພໍທີ່ຈະ
ລອຍໄດ້ ເປັນແມ່ນ້ຳທີ່ລຸຍຂ້າມບໍ່ໄດ້
6 ແລະທ່ານເວົ້າກັບຂ້າພະເຈົ້າວ່າ, "ບຸດແຫ່ງມະນຸດເອີຍ, ເຈົ້າເຫັນສິ່ງນີ້ຫລື" ແລ້ວທ່ານກໍພາຂ້າພະເຈົ້າກັບມາຕາມຝັ່ງ
ແມ່ນ້ຳ
7 ຂນະທີ່ຂ້າພະເຈົ້າກັບຄືນ ເບິ່ງແມ, ຂ້າພະເຈົ້າເຫັນຕົ້ນໄມ້ຫລວງຫລາຍຢູ່ທີ່ຝັ່ງແມ່ນ້ຳທັງສອງຟາກ
8 ແລະທ່ານເວົ້າກັບຂ້າພະເຈົ້າວ່າ, "ນ້ຳນີ້ໄຫລຊື່ຕົງໄປທາງທ້ອງຖິ່ນຕາເວັນອອກ ແລະໄຫລລົງໄປເຖິງອາຣາບາ ແລະ
ເມື່ອນ້ຳໄຫລອອກມານັ້ນໄປເຖິງແມ່ນ້ຳທະເລ ນ້ຳນັ້ນກໍກັບຈືດດີ
9 ແມ່ນ້ຳນັ້ນໄປເຖິງທີ່ໃດ ສັດມີຊີວິດທີ່ຢູ່ກັນເປັນຝູງກໍຈະມີຊີວິດໄດ້ ແລະທີ່ນັ້ນມີປາຫລວງຫລາຍ ເພາະວ່ານ້ຳນີ້ໄປ
ເຖິງທີ່ນັ້ນນ້ຳທະເລກໍຈືດ ເຫດສັນນັ້ນແມ່ນ້ຳໄປເຖິງທີ່ໃດ ທຸກສິ່ງກໍມີຊີວິດ
10 ຊາວຫາປາກໍຢືນຢູ່ທີ່ຂ້າງທະເລ ຈາກເອນເກດີເຖິງເອນເອກລາອິມ ຈະເປັນທີ່ສຳລັບກາງມອງຕາກໄວ້ ປາໃນທີ່ນັ້ນມີ
ຫລາຍຊະນິດເຫມືອນປາໃນທະເລໃຫຍ່
11 ແຕ່ທີ່ເປັນບຶງແລະຫນອງນ້ຳຈະບໍ່ຈືດ ຕ້ອງຖິ້ມໄວ້ໃຫ້ເປັນເກືອ
12 ຕາມຝັ່ງທັງສອງຟາກແມ່ນ້ຳ ມີຕົ້ນໄມ້ທຸກຊະນິດທີ່ໃຊ້ເປັນອາຫານ ໃບຂອງມັນຈະບໍ່ຫ່ຽວແລະຕົ້ນໄມ້ນັ້ນຈະບໍ່ຢຸດ
ເກີດຫມາກຈັກເທື່ອ ແຕ່ຈະເກີດຫມາກໃຫມ່ທຸກເດືອນ ເພາະວ່ານ້ຳສຳລັບຕົ້ນໄມ້ນັ້ນໄຫລຈາກສະຖານນະມັສການ
ຫມາກໄມ້ນັ້ນໃຊ້ເປັນອາຫານແລະໃບກໍໃຊ້ເປັນຢາ"

### ເຂດແລະການແບ່ງແຜ່ນດິນ

The New Boundaries of the Land

(ຈບຊ 34:1-12)

13 ພຣະຜູ້ເປັນເຈົ້າກ່າວດັ່ງນີ້ວ່າ, "ນີ້ເປັນເຂດແດນຊຶ່ງເຈົ້າຈະໃຊ້ແບ່ງແຜ່ນດິນສຳລັບເປັນມໍຣະດົກຖ້າມກາງອິສຣາເອນ
ທັງສິບສອງເຜົ່າ ໂຢເຊັບໄດ້ສອງສ່ວນ
14 ແລະເຈົ້າຈົ່ງແບ່ງໃຫ້ເທົ່າໆກັນ ເຮົາປະຕິຍານທີ່ຈະມອບໃຫ້ແກ່ບັນພະບຸຣຸດຂອງເຈົ້າ ແລະແຜ່ນດິນນີ້ຈະຕົກແກ່ເຈົ້າ
ເປັນມໍຣະດົກຂອງເຈົ້າ

15 “ຕໍ່ໄປນີ້ເປັນເຂດແດນຂອງແຜ່ນດິນນີ້ ດ້ານທິດເຫນືອຈາກທະເລໃຫຍ່ໄປຕາມທາງເມືອງເຮດໂລນ ເຖິງທາງເຂົ້າ
ເມືອງເລໂບຮາ ມັດ ແລະຕໍ່ໄປເຖິງເມືອງເຊດາດ
16 ເມືອງເບໂຣທາ ເມືອງສິບຣາອິມ (ຊຶ່ງຢູ່ທີ່ເຂດແດນລະຫວ່າງເມືອງດາມັສກັສກັບເມືອງຮາມັດ) ຈົນເຖິງເມືອງຮາເຊີ
ຮັດຕີໂກນ ຊຶ່ງຢູ່ທີ່ເຂດແດນເມືອງຮາອູຣານ (Hauran)
17 ດັ່ງນັ້ນ ເຂດແດນຕັ້ງແຕ່ຈາກທະເລເຖິງເມືອງຮາຊາເຣໂນນ ຊຶ່ງຢູ່ທີ່ເຂດແດນດ້ານເຫນືອຂອງເມືອງດາມັສກັສ ທາງ
ທິດເຫນືອມີເຂດແດນຂອງເມືອງຮາມັດ ນີ້ເປັນແດນດ້ານເຫນືອ
18 “ທາງດ້ານຕາເວັນອອກ ເຂດແດນຕັ້ງແຕ່ຈາກເມືອງຮາຊາເຣໂນນ ລະຫວ່າງເມືອງຮາຣານແລະດາມັສກັສ ລະຫວ່າງ
ກິເລອາດກັບແຜ່ນດິນອິສຣາເອນ ເລື້ອຍໄປຕາມແມ່ນ້ຳຈໍແດນ ໄປເຖິງທະເລດ້ານຕາເວັນອອກ ທ່ານທັງຫລາຍຈົ່ງ
ແທກ ນີ້ເປັນເຂດດ້ານຕາເວັນອອກ
19 “ທາງດ້ານໃຕ້ເຂດແດນຕັ້ງແຕ່ຈາກຕາມາຈົນເຖິງແມ່ນ້ຳເມຣີບັດກາເດສ ແລ້ວອອກໄປຕາມລຳທານເອຢິບເຖິງທະເລ
ໃຫຍ່ນີ້ເປັນເຂດດ້ານໃຕ້
20 “ທາງດ້ານຕາເວັນຕົກ ທະເລໃຫຍ່ເປັນເຂດແດນຖັດໄປຈົນເຖິງເມືອງທີ່ຢູ່ກົງຂ້າມທາງເຂົ້າເມືອງຮາມັດ ນີ້ເປັນເຂດ
ແດນດ້ານຕາເວັນຕົກ
21 “ດັ່ງນັ້ນ ເຈົ້າຈົ່ງແບ່ງແຜ່ນດິນນີ້ຖ້າມກາງເຈົ້າຕາມເຜົ່າອິສຣາເອນ
22 ເຈົ້າທັງຫລາຍຈົ່ງແບ່ງສ່ວນເປັນມໍຣະດົກຂອງຕົວເຈົ້າທັງຫລາຍ ແລະສຳລັບຄົນຕ່າງດ້າວຜູ້ອາສັຍຢູ່ຖ້າມກາງເຈົ້າ
ແລະບັງເກີດລູກຫລານຢູ່ຖ້າມກາງເຈົ້າ ເຂົາທັງຫລາຍຈະມີສັນຊາດອິສຣາເອນ ໃຫ້ເຂົາໄດ້ຮັບສ່ວນມໍຣະດົກຖ້າມ
ກາງເຜົ່າອິສຣາເອນພ້ອມກັບເຈົ້າທັງຫລາຍ
23 ພຣະຜູ້ເປັນເຈົ້າກ່າວວ່າ ຄົນຕ່າງດ້າວຈະຢູ່ໃນເຂດຂອງຄົນເຜົ່າໃດກໍໄດ້ ເຈົ້າຈົ່ງກຳນົດທີ່ດິນໃຫ້ເປັນມໍຣະດົກຂອງ
ເຂົາທີ່ນັ້ນ

## 48

The Tribal Portions

1 ຕໍ່ໄປນີ້ເປັນຊື່ຂອງເຜົ່າຕ່າງໆ ຕັ້ງຕົ້ນທີ່ເຂດແດນດ້ານເຫນືອຈາກທະເລໄປຕາມທາງເຮດໂລນ ເຖິງທາງເຂົ້າເມືອງຮາ
ມັດຈົນເຖິງຮາຊາເຣໂນນ (ຊຶ່ງຢູ່ທາງເຂດແດນດ້ານເຫນືອຂອງດາມັສກັສ ຕິດເມືອງຮາມັດ) ແລະທີ່ຕໍ່ອອກ
ໄປຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າດານ
2 ຕິດກັບເຂດແດນຂອງດານຈາກທິດຕາເວັນອອກໄປເຖິງດ້ານທິດຕາເວັນຕົກ ເປັນສ່ວນຂອງເຜົ່າອາເຊີ
3 ຕິດກັບເຂດແດນຂອງອາເຊີຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າເນັຟທາລີ
4 ຕິດກັບເຂດແດນຂອງເນັຟທາລີຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າມານັສເຊ
5 ຕິດກັບເຂດແດນຂອງມານັສເຊຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າເອຟຣາອິມ
6 ຕິດກັບເຂດແດນເອຟຣາອິມຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າຣູເບນ
7 ຕິດກັບເຂດແດນຣູເບນຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າຢູດາ
8 “ຕິດກັບເຂດແດນຢູດາຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ຈະເປັນສ່ວນຊຶ່ງເຈົ້າຈະຕ້ອງແຍກໄວ້ຕ່າ
ງຫາກກວ້າງສອງຫມື່ນຫ້າພັນສອກ ແລະຍາວເທົ່າກັບສ່ວນຂອງຄົນເຜົ່ານຶ່ງ ຈາກດ້ານຕາເວັນອອກໄປເຖິງດ້ານຕາ
ເວັນຕົກ ເປັນທີ່ມີສະຖານນະມັສການຢູ່ກາງ
9 ສ່ວນຊຶ່ງເຈົ້າທັງຫລາຍຈະແບ່ງໄວ້ເພື່ອພຣະຜູ້ເປັນເຈົ້ານັ້ນ ໃຫ້ມີດ້ານຍາວສອງຫມື່ນຫ້າພັນສອກ ແລະດ້ານກວ້າງ
ສອງຫມື່ນ

10 ນີ້ຈະເປັນສ່ວນແບ່ງຂອງສ່ວນບໍຣິສຸດ ຄືປະໂຣຫິດຈະໄດ້ສ່ວນແບ່ງແທກຈາກທາງດ້ານເໜືອໃຫ້ໄດ້ສອງໝື່ນຫ້າພັນ
ສອກ ທາງດ້ານຕາເວັນຕົກກວ້າງນຶ່ງໝື່ນສອກ ທາງດ້ານຕາເວັນອອກກວ້າງນຶ່ງໝື່ນສອກ ທາງດ້ານຕາເວັນ
ອອກກວ້າງນຶ່ງໝື່ນສອກ ທາງດ້ານໃຕ້ຍາວສອງໝື່ນຫ້າພັນສອກ ມີສະຖານນະມັສການຂອງພຣະຜູ້ເປັນເຈົ້າຢູ່ກາງ
11 ສ່ວນນີ້ໃຫ້ເປັນສ່ວນຂອງປະໂຣຫິດທີ່ຊໍາຣະໄວ້ໃຫ້ບໍຣິສຸດ ບຸດຂອງຊາໂດກ ຜູ້ໄດ້ຮັກສາຄໍາສັ່ງຂອງເຮົາ ຜູ້ທີ່ບໍ່ໄດ້
ຫລົງໄປເມື່ອປະຊາຊົນອິສຣາເອນຫລົງ ດັ່ງທີ່ຄົນເລວີກະທໍານັ້ນ
12 ແລະໃຫ້ທີ່ດິນນີ້ຕົກແກ່ເຂົາທັງຫລາຍເປັນສ່ວນນຶ່ງຈາກສ່ວນຖວາຍຂອງແຜ່ນດິນ ເປັນສະຖານທີ່ບໍຣິສຸດທີ່ສຸດ ຕິດກັບ
ເຂດແດນຂອງຄົນເລວີ
13 ຄຽງຂ້າງກັບເຂດແດນຂອງປະໂຣຫິດນັ້ນໃຫ້ຄົນເລວີມີສ່ວນແບ່ງຍາວສອງໝື່ນຫ້າພັນສອກ ກວ້າງນຶ່ງໝື່ນສອກ
ສ່ວນຍາວທັງສິ້ນຈະເປັນສອງໝື່ນຫ້າພັນສອກ ແລະສ່ວນກວ້າງສອງໝື່ນ
14 ຢ່າໃຫ້ເຂົາຂາຍຫລືແລກປ່ຽນສ່ວນນຶ່ງສ່ວນໃດເລີຍ ຢ່າໃຫ້ເຂົາປ່ຽນກັມມະສິດຂອງທີ່ດິນດີນີ້ ເພາະເປັນສ່ວນບໍຣິສຸດ
ແດ່ພຣະຜູ້ເປັນເຈົ້າ
15 "ສ່ວນທີ່ເຫລືອຢູ່ຊຶ່ງກວ້າງຫ້າພັນສອກແລະຍາວສອງໝື່ນຫ້າພັນສອກນັ້ນ ໃຫ້ເປັນທີ່ສາທາຣະນະປໂຍດຂອງເມືອງ
ຄືໃຊ້ເປັນທີ່ຢູ່ອາສັຍ ແລະໃຊ້ເປັນທົ່ງຫຍ້າ ໃຫ້ຕົວນະຄອນຢູ່ກາງ
16 ຕໍ່ໄປນີ້ເປັນຂນາດຂອງດ້ານຕ່າງໆ ດ້ານເໜືອສີ່ພັນຫ້າຮ້ອຍສອກ ດ້ານໃຕ້ສີ່ພັນຫ້າຮ້ອຍສອກ ດ້ານຕາເວັນອອກສີ່
ພັນຫ້າຮ້ອຍ ແລະດ້ານຕາເວັນຕົກສີ່ພັນຫ້າຮ້ອຍ
17 ນະຄອນນັ້ນຈະຕ້ອງມີທົ່ງຫຍ້າ ທິດເໜືອສອງຮ້ອຍຫ້າສິບສອກ ທິດໃຕ້ສອງຮ້ອຍຫ້າສິບ ແລະທິດຕາເວັນອອກສອງ
ຮ້ອຍຫ້າສິບ ແລະທິດຕາເວັນຕົກສອງຮ້ອຍຫ້າສິບ
18 ດ້ານຍາວສ່ວນທີ່ເຫລືອຢູ່ຄຽງຂ້າງກັບສ່ວນບໍຣິສຸດນັ້ນ ທິດຕາເວັນອອກຍາວນຶ່ງໝື່ນສອກ ແລະທິດຕາເວັນຕົກຍາວ
ນຶ່ງໝື່ນແລະໃຫ້ຢູ່ຄຽງຂ້າງກັບສ່ວນບໍຣິສຸດ ພືດຜົນທີ່ໄດ້ໃນສ່ວນນີ້ໃຫ້ເປັນອາຫານຂອງຄົນງານໃນນະຄອນນັ້ນ
19 ຄົນງານຂອງນະຄອນນັ້ນຊຶ່ງມາຈາກອິສຣາເອນທຸກເຜົ່າໃຫ້ເຂົາເປັນຄົນໄຖທີ່ດິນຕອນນີ້
20 ສ່ວນເຕັມຊຶ່ງເຈົ້າຈະຕ້ອງແບ່ງອອກໄວ້ນັ້ນໃຫ້ເປັນສີ່ຫລ່ຽມດ້ານລະສອງໝື່ນຫ້າພັນສອກ ນັ້ນຄືສ່ວນບໍຣິສຸດຮວມ
ກັບສ່ວນຂອງຕົວນະຄອນ
21 "ສ່ວນທີ່ເຫລືອຢູ່ທັງສອງຂ້າງຂອງສ່ວນບໍຣິສຸດແລະສ່ວນຂອງຕົວນະຄອນ ໃຫ້ຕົກເປັນຂອງເຈົ້ານາຍ ຕໍ່ຈາກສ່ວນບໍຣິ
ສຸດຊຶ່ງຍາວສອງໝື່ນຫ້າພັນສອກໄປຍັງເຂດແດນຕາເວັນອອກ ແລະທາງດ້ານຕາເວັນຕົກຈາກສອງໝື່ນຫ້າພັນສ
ອກໄປຍັງເຂດແດນຕາເວັນຕົກ ລຽບໄປກັບສ່ວນຂອງເຜົ່າ ສ່ວນນີ້ໃຫ້ຕົກເປັນຂອງເຈົ້ານາຍ ສ່ວນບໍຣິສຸດພ້ອມກັບສະ
ຖານນະມັສການຂອງພຣະວິຫານນັ້ນຢູ່ຖ້າມກາງ
22 ນອກຈາກສ່ວນທີ່ຕົກເປັນຂອງຄົນເລວີ ແລະສ່ວນຂອງນະຄອນນັ້ນ ຊຶ່ງຢູ່ກາງສ່ວນທີ່ຕົກເປັນຂອງເຈົ້ານາຍ ລະຫວ່າງ
ເຂດແດນຢູດາແລະເຂດແດນເບັນຢາມິນ ໃຫ້ເປັນສ່ວນຂອງເຈົ້ານາຍທັງໝົດ
23 ເຜົ່າຄົນທີ່ເຫລືອຢູ່ນັ້ນ ຈາກດ້ານຕາເວັນອອກໄປດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າເບັນຢາມິນ
24 ຕິດກັບເຂດແດນຂອງເບັນຢາມິນຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າຊີເມໂອນ
25 ຕິດກັບເຂດແດນຂອງຊີເມໂອນ ຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າອິສຊາຄາ
26 ຕິດກັບເຂດແດນຂອງອິສຊາຄາຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າເຊບູລຸນ
27 ຕິດກັບເຂດແດນຂອງເຊບູລຸນ ຈາກດ້ານຕາເວັນອອກໄປເຖິງດ້ານຕາເວັນຕົກ ເປັນສ່ວນຂອງເຜົ່າກາດ
28 ຕິດກັບເຂດແດນຂອງກາດທາງທິດໃຕ້ເຂດແດນນັ້ນຈະຕໍ່ອອກຈາກເມືອງຕາມາ ຈາກເຂດນໍ້າເມຣິບັທກາເດສ
ແລ້ວເລີຍໄປຕາມລໍາຫ້ວຍເອຢິບເຖິງທະເລໃຫຍ່
29 ນີ້ເປັນບ່ອນຊຶ່ງເຈົ້າຈະແບ່ງໃຫ້ເປັນມໍຣະດົກຖ້າມກາງເຜົ່າຕ່າງໆຂອງອິສຣາເອນ ນີ້ເປັນສ່ວນຕ່າງໆຂອງເຂົາທັງ
ຫລາຍ ພຣະຜູ້ ເປັນເຈົ້າກ່າວດັ່ງນີ້ແຫລະ

30 “ຕໍ່ໄປນີ້ເປັນທາງອອກຂອງນະຄອນທາງດ້ານເຫນືອຊຶ່ງແທກໄດ້ສີ່ພັນຫ້າຮ້ອຍສອກ
31 ມີປະຕູສາມປະຕູ ປະຕູຂອງຣູເບນ ປະຕູຂອງຢູດາ ປະຕູຂອງເລວີ ປະຕູນະຄອນນັ້ນຕັ້ງຊື່ຕາມຊື່ເຜົ່າຄົນອິສຣາເອນ
32 ທາງດ້ານຕາເວັນອອກຊຶ່ງຍາວສີ່ພັນຫ້າຮ້ອຍສອກ ມີປະຕູສາມປະຕູ ຄືປະຕູຂອງຊີເມໂອນ ປະຕູຂອງອິສຊາຄາ ປະຕູຂອງເຊບູລູນ
33 ທາງດ້ານໃຕ້ຊຶ່ງແທກໄດ້ສີ່ພັນຫ້າຮ້ອຍສອກ ມີປະຕູສາມປະຕູ ຄືປະຕູຂອງຊີເມໂອນ ປະຕູຂອງອິສຊາຄາ ປະຕູຂອງເຊບູລູນ
34 ທາງດ້ານຕາເວັນຕົກຊຶ່ງຍາວສີ່ພັນຮ້ອຍສອກ ມີປະຕູສາມປະຕູ ຄື ປະຕູຂອງກາດ ປະຕູຂອງເນັຟທາລີ
35 ແທກຮອບນະຄອນນັ້ນໄດ້ນຶ່ງຫມື່ນແປດພັນສອກ ຕັ້ງແຕ່ນີ້ໄປນະຄອນມີຊື່ວ່າ ພຣະຜູ້ເປັນເຈົ້າສະຖິດທີ່ນັ້ນ”